9-11-95

# ບົດທີ 1

## ຄວາມມຸ່ງໝາຍແລະຄວາມສຳຄັນ ຂອງຄຣິສຕຽນສຶກສາ

ຄຳວ່າ "**ຄຣິສຕຽນສຶກສາ**" ມາຈາກຄວາມສອງຄວາມ ຄື "**ຄຣິສຕຽນ**" ແລະ "**ສຶກສາ**" ຫລືຈະກ່າວເປັນຄວາມທົ່ວໄປກໍຄື *"ການສຶກສາຫລືການຮຽນການສອນຂອງພວກຄຣິສຕຽນ"* ດັ່ງນີ້ແລ້ວຈະເຫັນໄດ້ວ່າ ຄຣິສຕຽນມັກມີການຮຽນການສອນຢູ່ເປັນປະຈຳ

ຄຣິສຕຽນສອນເຣື່ອງຫຍັງ? ຮຽນເຣື່ອງຫຍັງ? ສິ່ງທີ່ສຳຄັນທີ່ສຸດທີ່ຄຣິສຕຽນທຸກຄົນຕ້ອງຮຽນຮູ້ຈັກ ຄື

1. ຮຽນຮູ້ຈັກແລະສຳນຶກກ່ຽວກັບຕົວເອງ ແລະຮຽນຮູ້ຈັກເຣື່ອງຄວາມເຊື່ອໃນພຣະເຈົ້າ
2. ຮຽນຮູ້ຈາກພຣະຄັມພີ ໃຫ້ຮູ້ຄັກແນ່ວ່າ ພຣະຄຳຂອງພຣະເຈົ້າສອນເຮົາແນວໃດ ຕົວເຮົາຈະຮູ້ຈັກດຳເນີນຊີວິດແນວໃດຈຶ່ງຈະຖືກຕ້ອງຕາມຄຳສອນຂອງອົງພຣະຜູ້ເປັນເຈົ້າ
3. ຮຽນຮູ້ຈັກການຮັບໃຊ້ ການເປັນພຍານ ຮຽນໃຫ້ຮູ້ວ່າໃນຖານະທີ່ຕົນເອງໄດ້ກັບໃຈມາເປັນຄຣິສຕຽນນັ້ນ ຕ້ອງຮູ້ຈັກປະຕິບັດຕົວແລະບົວລະບັດຜູ້ອື່ນແນວໃດ
4. ຮຽນຮູ້ຈັກພັນທະກິຈວຽກການຂອງພຣະເຈົ້າ ວ່າໃນຄຣິສຈັກມີວຽກຫຍັງແດ່ ທີ່ຕ້ອງຊ່ວຍກັນເຮັດ ຊ່ວຍກັນຮັບພາຣະໜ້າທີ່ ຮູ້ຈັກເບິ່ງແຍງຈັດແຈງຮັກສາແລະນຳພາ
5. ຮຽນຮູ້ຈັກການປະກາດເຜີຍແຜ່ ການສົ່ງເສີມອຸ້ມຊູໃຫ້ຜູ້ອື່ນມີຄວາມເຊື່ອ ໃຫ້ຜູ້ອື່ນໄດ້ອອກໄປປະຕິບັດໜ້າທີ່ຮັບໃຊ້ ເພື່ອຣາຊອານາຈັກຂອງພຣະເຈົ້າຈະໄດ້ແຜ່ຂຍາຍອອກໄປ

ຖ້າວ່າຄຣິສຈັກໃດບໍ່ໄດ້ສົນໃຈສັ່ງສອນ ຫລືສມາຊິກບໍ່ສົນໃຈຮຽນຮູ້ແລ້ວ ຄຣິສຈັກນັ້ນກໍຈະບໍ່ກ້າວໜ້າ ສມາຊິກກໍຈະພາກັນຫລົງ ອາດເກີດບັນຫາຜິດຖຽງກັນ ເພາະຕ່າງຄົນຕ່າງເຂົ້າໃຈພຣະເຈົ້າໄປຄົນລະແນວ ຄຳສອນຜິດ ໆ ຈະຖືກຮັບເຂົ້າມາໃນຄຣິສຈັກໄດ້ງ່າຍ ຈະກໍ່ໃຫ້ເກີດບັນຫາຍຸ່ງຍາກໃນການປົກຄອງຄຣິສຈັກ ອາຈມີການຊິງດີຊິງເດັ່ນກັນເພື່ອຄວາມເປັນໃຫຍ່ ໂດຍບໍ່ເຂົ້າໃຈເຖິງຈຸດປະສົງແທ້ຂອງພຣະເຈົ້າໃນເຣື່ອງການກໍ່ຕັ້ງຄຣິສຈັກ ບັນຫາເຫລົ່ານີ້ເກີດຂຶ້ນຍ້ອນສມາຊິກບໍ່ມີພື້ນຖານຄວາມເຂົ້າໃຈ ດັ່ງນັ້ນຄຣິສຈັກຈຶ່ງຕ້ອງຫາຜູ້ທີ່ມີຄວາມເສັຽສລະແລະກລ້າຫານຍອມເຂົ້າຮັບການອົບຮົມ ເພື່ອທີ່ຈະເປັນຜູ້ສິດສອນສມາຊິກອື່ນ ໆ ຂອງຄຣິສຈັກ ຜູ້ນັ້ນຕ້ອງເປັນຜູ້ກະຫາຍຢາກຮຽນຢາກຮູ້ ດັ່ງນີ້ແລ້ວຜູ້ສອນແລະຜູ້ຮຽນຮ່ວມມືກັນ ອົດທົນຮ່ວມກັນ ແລະອົມສ່າພຍາຍາມສຶກສາຮ່ຳຮຽນຮ່ວມກັນ ທັງຜູ້ສອນແລະຜູ້ຮຽນກໍຈະເກີດຄວາມຮູ້ຄວາມເຂົ້າໃຈນຳກັນ ແລະສາມາດເຮັດການຮ່ວມກັນໄດ້

## I. ຄວາມມຸ່ງໝາຍຂອງຄຣິສຕຽນສຶກສາ

ການສຶກສາເກີດຂຶ້ນໄດ້ເນື່ອງຈາກຂະບວນການເກັບສະສົມສິ່ງທີ່ຮູ້ສິ່ງທີ່ເຂົ້າໃຈ ຄືຄວາມຮູ້ທັງມວລ ຣວມເຂົ້າໄວ້ເປັນໜ່ວຍເປັນອັນ ແລ້ວນຳເອົາມາເຜີຍແຜ່ຖ່າຍທອດສູ່ຜູ້ອື່ນ ໆ ໃຫ້ເກີດຄວາມຮູ້ຄວາມເຂົ້າໃຈນຳ ໂດຍອາການນີ້ແຫລະທັງຜູ້ເກັບສະສົມຄວາມຮູ້ (ຜູ້ຮຽນ) ໄດ້ຖ່າຍທອດຄວາມຮູ້ອອກໄປ (ກາຍເປັນຜູ້ສອນ) ສູ່ຜູ້ອື່ນ (ຜູ້ຮຽນອີກຜູ້ນຶ່ງ) ທັງຜູ້ຮຽນແລະຜູ້ສອນກໍຈະໄດ້ຄວາມຮູ້ນຳກັນ ອັນນີ້ແຫລະເອີ້ນວ່າ "ຂະບວນການສຶກສາ"

ທ່ານ ພລາໂຕ (Plato, ກຄສ 427-347) ເປັນນັກປຣາດຜູ້ຍິ່ງໃຫຍ່ຂອງໂລກ ທ່ານໄດ້ກ່າວວ່າ *"ຄວາມສົມດຸລຍ໌ທາງຈິດໃຈຂອງມະນຸດນັ້ນ ເກີດຂຶ້ນໄດ້ເມື່ອມະນຸດຮູ້ຈັກຕັ້ງໃຈສຶກສາຫາຄວາມຮູ້"* ທ່ານໄດ້ໄຂຄວາມຈິງນີ້ຕໍ່ໄປອີກວ່າ *"ເດັກນ້ອຍທີ່ໄດ້ຮັບການອົບຮົມສັ່ງສອນ ອັນຖືກຕ້ອງແຕ່ວັຍເດັກ ຈະກໍ່ໃຫ້ເກີດຄຸນທັມຊາບຊ່ວານໃນຊີວິດຈິດໃຈຂອງເຂົາ"* ອັນເປັນການປູກຝັງຄຸນທັມໃນຕົວເດັກກ່ອນທີ່ເຂົາຈະຮຽນຮູ້ຈັກສິ່ງອື່ນ ໆ [1]

ຕາມຄວາມຄິດຂອງຊາວກຣີກນັ້ນ ຖືວ່າມະນຸດສາມາດເຂົ້າເຖິງຄຸນທັມອັນແທ້ຈິງໄດ້ໂດຍອາສັຍການສຶກສາ ຫລາຍກວ່ານັ້ນອີກ ຄຣິສຕຽນເຊື່ອວ່າຄຸນທັມອັນຍິ່ງໃຫຍ່ນັ້ນເປັນພຣະຄຸນຂອງພຣະເຈົ້າທີ່ໄດ້ສຳແດງໃນພຣະຄຣິສທັມຄັມພີ ຊຶ່ງພຣະເຈົ້າໄດ້ສັ່ງໄວ້ແລ້ວຕັ້ງແຕ່ສມັຍບັນພະບຸຣຸດ ໃຫ້ທຳການຖ່າຍທອດພຣະຄຳຂອງພຣະເຈົ້າສອນໃຫ້ແຜ່ຫລາຍອອກໄປ ດັ່ງນັ້ນຄຣິສຈັກໃນທຸກຍຸກທຸກສມັຍຈຶ່ງໄດ້ຖືປະຕິບັດໃນເຣື່ອງການຮຽນການສອນ ຊຶ່ງເຮົາເອີ້ນວ່າ **"ຄຣິສຕຽນສຶກສາ"** ເພາະວ່າ ໂດຍການຮຽນການສອນນີ້ເອງ ຄຣິສຈັກໄດ້ເປັນຜູ້ນຳພາເອົາມະນຸດ ຜູ້ເປັນຄົນບາບທັນມາພົບກັບພຣະຄຸນຂອງພຣະເຈົ້າ ໂດຍພຣະກະຣຸນາຄຸນຂອງພຣະເຈົ້າທີ່ໄດ້ສຳແດງພຣະອົງໄວ້ໃນພຣະຄັມພີ ເພື່ອໃຫ້ມະນຸດໄດ້ຮູ້ຈັກ ຊຶ່ງການສຳແດງທາງພຣະຄັມພີນີ້ເອງເປັນຄວາມຮູ້ຄວາມເຂົ້າໃຈອັນສູງສຸດ ທີ່ນຳພາໃຫ້ມະນຸດໄດ້ເຂົ້າເຖິງພຣະເຈົ້າ *ດັ່ງນີ້ແລ້ວ ພຣະຄຳຂອງພຣະເຈົ້າຈຶ່ງເປັນສິ່ງສູງສຸດທີ່ມະນຸດສົມຄວນຈະຮຽນຮູ້ຈັກ ເຂົ້າໃຈແລະສະສົມເກັບເອົາໄວ້ໃນຈິດໃຈ ໃນວິນຍານຂອງຕົນ ແລ້ວຖ່າຍທອດສອນຜູ້ອື່ນຕໍ່ ໆ ໄປ ໂດຍຂະບວນການຖ່າຍທອດຄວາມເຊື່ອຄວາມຮູ້ຄວາມເຂົ້າໃຈຕໍ່ ໆ ກັນໄປນີ້ ພຣະຄຸນການຊ່ວຍໃຫ້ຣອດພົ້ນຂອງພຣະເຈົ້າຈຶ່ງຖືກສົ່ງຕໍ່ ໆ ໄປ ເພື່ອຊ່ວຍໃຫ້ມະນຸດຜູ້ອື່ນ ໆ ໄດ້ຫລຸດພົ້ນບາບຮັບຄວາມຣອດຈາກອົງພຣະເຢຊູຄຣິສ"* ແລະນີ້ແຫລະຄືຄວາມສຳຄັນອັນສູງສຸດ

**ຄຣິສຕຽນສຶກສາກໍ່ໃຫ້ເກີດຄຸນປະໂຍດດັ່ງນີ້**

1. ເຮັດໃຫ້ເກີດຄວາມເຊື່ອ ເກີດສຕິປັນຍາຮູ້ຈັກເຣື່ອງຊີວິດ
2. ເຮັດໃຫ້ຮູ້ຈັກສະແວງຫາທີ່ພຶ່ງພິງອາສັຍໃນພຣະພຣະເຈົ້າ
3. ເຮັດໃຫ້ຮູ້ຈັກແກ້ບັນຫາ ຮູ້ຈັກບັນເທົາທຸກ ຮູ້ຈັກຕໍ່ສູ້
4. ເຮັດໃຫ້ຮູ້ຈັກແນວທາງການດຳເນີນຊີວິດທີ່ຖືກຕ້ອງ
5. ເຮັດໃຫ້ຮູ້ຈັກຂໍ້ມູລ ຂໍ້ເທັດຈິງ
6. ເຮັດໃຫ້ຮູ້ຈັກເສີມສ້າງ ແລະບຸກເບີກຮຽນຮູ້ໃນສິ່ງທີ່ບໍ່ຮູ້ຈັກມາກ່ອນ
7. ເຮັດໃຫ້ຊີວິດມີຄວາມໝາຍ ມີກຳລັງໃຈເຮັດໃຫ້ເກີດພລັງໃໝ່
8. ເຮັດໃຫ້ເກີດຄວາມໝັ້ນໃຈ ຮູ້ຈັກສ້າງຄວາມສົມດຸລຍ໌ໃນຊີວິດ ບໍ່ຕົກເປັນທາສຂອງຄວາມບໍ່ຮູ້

9. ເຮັດໃຫ້ສາມາດສອນຜູ້ອື່ນ ແລະເປັນທີ່ເພິ່ງພິງອາສັຍແກ່ຜູ້ອື່ນໄດ້
10. ເຮັດໃຫ້ເກີດຄຸນປະໂຍດເຣື່ອງການສຶກສາໄດ້ຖືກຖ່າຍທອດອອກຕໍ່ ໆ ໄປ

ພຣະເຢຊູຄຣິສຊົງສອນຢ່າງມີຈຸດມຸ່ງໝາຍ ຈຸດມຸ່ງໝາຍຂອງພຣະອົງເພື່ອໃຫ້ມະນຸດໄດ້ຮັບຊີວິດໃໝ່ຈາກພຣະອົງໃນການປ່ຽນແປງຄວາມປະພຶດ ໃຫ້ມີຊີວິດທີ່ມີສັມພັນທະພາບໃໝ່ກັບພຣະເຈົ້າ ພຣະອົງຊົງໃຊ້ວິທີການສອນໃນຮູບແບບຕ່າງ ໆ ທີ່ສາມາດສື່ຄວາມໝາຍໃຫ້ປະຊາຊົນເກີດຄວາມເຂົ້າໃຈຮູ້ຈັກຕັດສິນໃຈແລະມີຄວາມເຊື່ອໝັ້ນໃນການຕັ້ງຕົ້ນຊີວິດໃໝ່ທີ່ຈະມີສັມພັນທະພາບອັນຖືກຕ້ອງກັບພຣະເຈົ້າ ພຣະອົງຊົງສົນພຣະທັຍວ່າຄວາມມຸ່ງຫວັງຂອງພຣະເຈົ້າຈະສຳເຣັດໃນຕົວຜູ້ເຊື່ອ ມີຫລາຍເທື່ອທີ່ພຣະອົງຊົງເນັ້ນເຖິງຄວາມສຳຄັນອັນນີ້ ທີ່ພຣະອົງຊົງເຫັນວ່າມີຄວາມຈຳເປັນທີ່ຜູ້ຕິດຕາມພຣະອົງຈະສຳແດງຄວາມປະພຶດອອກມາໃນການປະຕິບັດສາສນາຂອງເຂົາ ຄືທີ່ຈະມີສັມພັນທະພາບກັບພຣະເຈົ້າໃນແຕ່ລະວັນ "ເຫດສະນັ້ນທຸກຄົນທີ່ຟັງຄຳເຫລົ່ານີ້ຂອງເຮົາແລະປະຕິບັດຕາມ ຄົນນັ້ນກໍປຽບເໝືອນຄົນສະລາດ" (ມທ 7:24) "ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ" (ຢຮ 14:15) "ເຫດສະນັ້ນພວກທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ" (ມທ 7:20) *"ແຕ່ວ່ານີ້ຄືຈຸດທີ່ເຮົາຕ້ອງການເນັ້ນ ພຣະເຢຊູຊົງສະແວງຫາແລະນຳມະນຸດໃຫ້ມີຄວາມສັມພັນທະພາບກັບພຣະເຈົ້າ ດັ່ງນັ້ນຜົນຈຶ່ງເກີດຂຶ້ນໂດຍສັມພັນທະພາບໃໝ່ທີ່ສຳແດງອອກໃນຄວາມປະພຶດທີ່ດຳເນີນຊີວິດ" [2]*

ການທີ່ພຣະເຢຊູສລະຊີວິດເພື່ອການສອນນັ້ນ ເປັນສິ່ງທີ່ເກີດຜົນຫລວງຫລາຍໂດຍສະເພາະ *"ຄຳສັ່ງສອນຂອງພຣະອົງເປັນສິ່ງທີ່ໜ້າສົນໃຈແກ່ພວກຄຣິສຕຽນໃນສມັຍນັ້ນ ເພາະວ່າພຣະອົງຊົງເປັນພຣະເມຊີອາແລະເຂົາຖືວ່າຄຳສອນຂອງພຣະອົງເປັນສິ່ງທີ່ມີຄຸນຄ່າ ເພາະສະແດງເຖິງຄວາມໝາຍອັນແທ້ຈິງທີ່ກ່ຽວກັບແຜ່ນດິນຂອງພຣະເຈົ້າ ຄວາມຣອດພົ້ນແລະນ້ຳພຣະທັຍຂອງພຣະເຈົ້າທີ່ມີຕໍ່ສັງຄົມຄຣິສຕຽນ ແລະມວລມະນຸດສະຍະໂລກນີ້ດ້ວຍ" [3]*

## II. ຄວາມສຳຄັນຂອງຄຣິສຕຽນສຶກສາ

ຕາມຄວາມຈິງທີ່ປາກົດໃນພຣະຄຣິສທັມຄັມພີແລ້ວ ການໃຫ້ການສຶກສາແລະສິດສອນພຣະຄຳຂອງພຣະເຈົ້າເປັນສິ່ງທີ່ມີບົດບາດຄວາມສຳຄັນ ທັງໃນພຣະຄຣິສທັມຄັມພີພາກພັນທສັນຍາເດີມແລະໃໝ່ ເຫດທີ່ຊາວອິສຣາເອລໃຫ້ການສຶກສາພຣະຄຳຂອງພຣະເຈົ້າກັບລູກຫລານ ຕາມຄຳສັ່ງແລະຄຳສິດສອນຂອງພຣະເຈົ້າ ເຮັດໃຫ້ອິສຣາເອລສາມາດສືບທອດຄວາມເຊື່ອສັດທາໃນພຣະເຈົ້າອົງດຽວຢ່າງໝັ້ນຄົງມາເຖິງລູກຫລານໃນຍຸດຕໍ່ ໆ ມາ ຈົນຮອດປັຈຈຸບັນນີ້ ທັງ ໆ ທີ່ສາສນາຫລາຍສາສນາທີ່ເກີດຂຶ້ນໃນຍຸກດຽວກັນໄດ້ເສື່ອມຫາຍສາບສູນໄປ ຂໍ້ພຣະທັມທີ່ອິສຣາເອລຍຶດຖືກ ແລະເປັນຫລັກປະຕິບັດຢ່າງເຄັ່ງຄັດ ຄື

> *"ອິສຣາເອລເອີຍ ຈົ່ງຟັງເຖີ້ນ ພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງເຮົາທັງຫລາຍຊົງເປັນພຣະເຈົ້າດຽວ ຈົ່ງຮັກພຣະຜູ້ເປັນເຈົ້າຂອງທ່ານດ້ວຍສຸດຈິດສຸດໃຈແລະສຸດສະຕິກຳລັງຂອງທ່ານ ແລະໃຫ້ຄຳສອນທີ່ຂ້າພເຈົ້າໄດ້ສັ່ງພວກທ່ານໃນມື້ນີ້ຢູ່ໃນຈິດໃຈຂອງທ່ານ ແລະພວກທ່ານຈົ່ງສິດສອນລູກຫລານດ້ວຍຄຳສອນເຫລົ່ານີ້ແກ່ລູກຫລານ*

*ຂອງທ່ານ ເມື່ອພວກທ່ານນັ່ງຢູ່ໃນເຮືອນ ເມື່ອພວກທ່ານເດີນຕາມທາງ ເມື່ອພວກທ່ານນອນລົງຫລືລຸກຂຶ້ນກໍດີ ຈົ່ງເອົາຄຳສອນເຫລົ່ານີ້ພັນໄວ້ທີ່ມືຂອງທ່ານເປັນໝາຍສຳຄັນ ແລະຈົ່ງຈາຣຶກໄວ້ທີ່ຫວ່າງຄິ້ວຂອງທ່ານ ແລະຂຽນໄວ້ທີ່ເສົາປະຕູເຮືອນ ແລະທີ່ປະຕູຂອງທ່ານ" (ພຣະບັນຍັດສອງ 6:4-9 ແປຕາມສະບັບ Revised Standard Version)*

ກ່ອນທີ່ພຣະເຢຊູຄຣິສສະເດັດຂຶ້ນສູ່ສວັນພຣະອົງໄດ້ປະທານ ພຣະມຫາບັນຊາສຸດທ້າຍທີ່ມີຄວາມສຳຄັນຫລາຍໄວ້ໃຫ້ເຫລົ່າສາວົກຂອງພຣະອົງ ເພື່ອຖືປະຕິບັດ

*"ອຳນາດທັງໝົດໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ ເຫດສັນນັ້ນ ພວກທ່ານຈົ່ງອອກໄປ ແລະເຮັດໃຫ້ຄົນທຸກຊາດເປັນສາວົກ ໃຫ້ເຂົ້າບັພຕິສມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດສິ່ງຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ ເຮົາຢູ່ກັບທ່ານທັງຫລາຍທຸກ ໆ ວັນຈົນໝົດກັບ" (ມັດທາຍ 28:18-20)*

ຫລັງຈາກນີ້ ພວກສາວົກໄດ້ອອກໄປປະຕິບັດຕາມພຣະມຫາບັນຊາຂອງພຣະເຢຊູຄຣິສ ໄດ້ທຳການປະກາດຂ່າວປະເສີດແລະສັ່ງສອນຕາມຄຳຂອງພຣະອົງຈາກກຸງເຢຣູຊາເລັມ ຂຍາຍທົ່ວຊະມາເຣັຽ ແລະເຜີຍແຜ່ໄປຍັງໂລກກວ້າງໃນສມັຍນັ້ນ

ຊີວິດຄຣິສຕຽນເປັນຊີວິດທີ່ຕ້ອງຈະເຣີນເຕີບໂຕຢູ່ສເມີ ພຣະທັມເອເຟໂຊ 4:1-13 ໄດ້ກ່າວໄວ້ວ່າ ຊີວິດຄຣິສຕຽນຈະເຣີນເຕີບໂຕຈົນກວ່າເຮົາຈະເປັນຄົນໃຫຽ່ເຕັມສ່ວນ ຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິສ ນັ່ນຫມາຍຄວາມວ່າບໍ່ວ່າເດັກນ້ອຍຫລືຜູ້ໃຫຽ່ກໍສາມາດຈະເຣີນເຕີບໂຕໄດ້ສເມີເທົ່າກັບຜູ້ອື່ນ ແລະໃນພຣະທັມເອເຟໂຊ 4:11, 12 ຍັງໄດ້ກ່າວເຖິງຂອງພຣະຣາຊທານຂອງພຣະເຈົ້າວ່າ ໃຫ້ລາງຄົນເປັນອັຄສາວົກ ລາງຄົນເປັນຜູ້ປະກາດພຣະທັມ ລາງຄົນເປັນຜູ້ປະກາດຂ່າວປະເສີດ ລາງຄົນເປັນສິດຍາພິບາລແລະອາຈານ ເພື່ອໃຫ້ຄົນເຫລົ່ານັ້ນຊ່ວຍຕຽມສະມາຊິກຄຣິສຈັກ (ຄືການສອນການອົບຮົມ) ໃຫ້ເປັນຄົນທີ່ຈະຮັບໃຊ້ພຣະເຈົ້າ ເພາະສະນັ້ນການສອນຈຶ່ງເປັນງານສຳຄັນຍິ່ງ ແລະຕ້ອງເຮັດຢ່າງເຣັ່ງດ່ວນໃນຄຣິສຈັກ ເພື່ອຊ່ວຍຄຣິສຕຽນໃນຄຣິສຈັກໃຫ້ຈະເຣີນເຕີບໂຕຂຶ້ນ ແລະພ້ອມຈະຮັບໃຊ້ພຣະເຈົ້າໃນວຽກການຕ່າງ ໆ ທີ່ພຣະອົງນຳພາຕາມແຜນການແລະນ້ຳພຣະທັຍຂອງພຣະອົງ

---

## ຂໍ້ອ້າງອີງ


[1] Plato, Laws, II sec 653

[2] Findley B. Edge, Teaching for Results, (Nashville: Broadman Press, 1956), p.12.

[3] Howard Clark Kee, Franklin w. Young, Karlfied Frochlich, Understanding the New Testament, ແປໂດຍວິທຍາລັຍພຣະຄຣິສທັມ, ຊຽງໃຫມ່: ວິທຍາລັຍພຣະຄຣິສທັມແຫ່ງສພາຄຣິສຈັກໃນປະເທດໄທຍ 1965), ຫນ້າ 190.

5 10-17-95

# ບົດທີ 2

## ຄຣິສຕຽນສຶກສາ ໃນພຣະຄຣິສທັມຄັມພີ ພາກພັນທະສັນຍາເດີມ

ພຣະຄຣິສທັມຄັມພີເປັນພຣະຄຳຂອງພຣະເຈົ້າ ຊຶ່ງມີຄວາມສຳຄັນຕໍ່ຄຣິສຕຽນແລະຄຣິສຈັກທັງຫລາຍ ນອກຈາກຈະຊ່ວຍໃຫ້ຮູ້ຄວາມຈິງໃນດ້ານສາສນາສາດແລ້ວ *"ພຣະຄຣິສທັມຄັມພີໃຫ້ຄວາມຊັດແຈ້ງແລະມີສິດທິອຳນາດສົມບູນສຳລັບໃຊ້ໃນຣາຍການຂອງສາສນາສຶກສາ ໃນພຣະຄັມພີພາກພັນທະສັນຍາເດີມແລະໃຫມ່ຈະພົບການກຳຫນົດຂອບເຂດແລະພຣະບັນຊາໃຫ້ສັ່ງສອນ ມີທັງແບບຢ່າງທີ່ຄຣິສຕຽນຈະຕ້ອງປະຕິບັດຕາມໃນການໃຫ້ການສຶກສາດ້ວຍ" [1]*

ບົດນີ້ເປັນການສຶກສາພຣະຄຣິສທັມຄັມພີ ພາກພັນທະສັນຍາເດີມ ເພື່ອຄົ້ນຫາຫລັກຄວາມຈິງໃນການສຶກສາທາງສາສນາຂອງຊາວຢິວໃນດ້ານຕ່າງ ໆ ຕໍ່ໄປນີ້

1. ຄວາມສຳຄັນຂອງການສຶກສາ
2. ຈຸດປະສົງຂອງການສຶກສາ
3. ເນື້ອຫາ ແລະວິທີການສອນ

### 1. <u>ຄວາມສຳຄັນຂອງການສຶກສາ</u>

ໃນພຣະທັມປຖົມການ ບົດທີ 12 ພຣະເຈົ້າໄດ້ຊົງເລືອກເອົາທ່ານອັບຣາຮັມໃຫ້ເປັນຜູ້ນຳຂອງຊົນຊາດນຶ່ງ ຊຶ່ງຈະເກີດມາພາຍຫລັງຄື ປະເທດອິສຣາເອລ ພຣະເຈົ້າໄດ້ຊົງສັ່ງໃຫ້ເຂົາມີຄວາມຮັບຜິດຊອບໃຫ້ການສຶກສາແກ່ລູກຫລານ "ເພື່ອວ່າລາວຈະໄດ້ສັ່ງສອນພວກລູກຫລານ ແລະຄອບຄົວທີ່ສືບມາໃຫ້ຮັກສາແນວທາງຂອງພຣະເຈົ້າໂດຍປະພຶດໃນສິ່ງທີ່ຊອບທັມແລະທຽງທັມ ເພື່ອວ່າພຣະເຈົ້າຈະໄດ້ຊົງປະທານສິ່ງຊຶ່ງພຣະອົງສັນຍາໄວ້ແລ້ວໃຫ້ແກ່ອັບຣາຮັມ" (ປຖກ 18:19) ການທີ່ພຣະເຈົ້າຊົງເອີ້ນອັບຣາຮັມ ພຣະອົງບໍ່ໄດ້ມີພຣະປະສົງແຕ່ພຽງໃຫ້ລາວແຍກອອກຈາກຄົນອື່ນເທົ່ານັ້ນ ແຕ່ພຣະອົງຍັງຊົງຕ້ອງການໃຫ້ອັບຣາຮັບມີການສິດສອນໃນຄອບຄົວດ້ວຍ ເພື່ອລູກຫລານຂອງລາວຈະໄດ້ຮັບມໍຣະດົກແຫ່ງພຣະສັນຍາ

ຄົນບາງຄົນຄິດວ່າການສຶກສາໃນຄອບຄົວເປັນເຣື້ອງທີ່ບໍ່ມີຄວາມສຳຄັນຫຍັງ ເພາະຄອບຄົວເປັນພຽງນ້ອຍ ໆ ຫນ່ວຍຂອງສັງຄົມ ຄວາມຄິດນີ້ບໍ່ເປັນຄວາມຈິງ ທ່ານມິວເລີຣ໌ໄດ້ຊີ້ໃຫ້ເຫັນຄວາມສຳຄັນຂອງເຣື້ອງນີ້ໂດຍກ່າວວ່າ

> *"ໃນສັງຄົມທຸກສັງຄົມ ຜູ້ໃຫຍ່ໄດ້ທຳການຊັກຈູງແລະອົບຮົມສັ່ງສອນລູກຫລານກ່ຽວກັບຮີດຄອງປະເພນີທາງສາສນາ ເມື່ອລູກຫລານໃຫຍ່ຂຶ້ນພໍທີ່ຈະຮຽນຮູ້ໃນສິ່ງຕ່າງ ໆ ເຂົາຈະໄດ້ຮັບການສັ່ງສອນໃຫ້ມີຄວາມເຂົ້າໃຈກ່ຽວກັບເຣື້ອງຄວາມເຊື່ອ ພິທີກັມ ແລະຫນ້າທີ່ທີ່ຈະຕ້ອງປະຕິບັດ ສາສນາສຶກສາທີ່ລູກຫລານໄດ້ຮັບເປັນເຣື້ອງກ່ຽວຂ້ອງຮວມເຖິງການ*

*ອົບຮົມໃຫ້ເຂົ້າໃຈ ໃນເຣື້ອງຂອງສິນທັມຂອງຄອບຄົວ ຂອງເຜົ່າ ຂອງປະເທດ ຊຶ່ງຈະນຳພາໃຫ້ລູກຫລານເຫລົ່ານັ້ນກາຍເປັນສ່ວນທີ່ສຳຄັນຂອງສັງຄົມ" [2]*

ທ່ານຣາເວຣຄ໌ ພິ. ໂຄລສັນ ໄດ້ຊີ້ໃຫ້ເຫັນວ່າການໃຫ້ການສຶກສາດ້ານສາສນາແກ່ລູກຫລານເປັນຫນ້າທີ່ຄວາມຮັບຜິດຊອບສຳຄັນທີ່ພຣະເຈົ້າຊົງສັ່ງແກ່ປະຊາຊົນອິສຣາເອລໄວ້ໃນພັນທະສັນຍາເດີມ ແລະພັນທະສັນຍາໃຫມ່ ທ່ານກ່າວວ່າ

*ເຣື້ອງສຳຄັນທີ່ຄວນຈະຮູ້ຈັກກໍຄື ພຣະຄັມພີພາກພັນທະສັນຍາເດີມແລະໃຫມ່ປະກອບໄປດ້ວຍເງື່ອນໄຂທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງປະຊາກອນຂອງພຣະເຈົ້າ ໃນເຣື້ອງທີ່ກ່ຽວກັບການສຶກສາ ຂໍ້ໄຂໃນຫນັງສືພັນທະສັນຍາເດີມກໍຄື ເຊມາ (Shema, ພບຍ 6:4-6) ຊາວອິສຣາເອລໄດ້ຮັບພຣະບັນຊາຂອງພຣະເຈົ້າ ໃຫ້ສອນພຣະຄຳແລະພຣະບັນຍັດຂອງພຣະເຈົ້າແກ່ລູກຫລານທີ່ເກີດມາພາຍຫລັງ (ສຶກສາທຽບກັບ ພບຍ 11:19) [3]*

ທ່ານອັລເຟຣດ ເອັດເດີຊາມ ໄດ້ສະແດງຄວາມເຫັນວ່າ ການສອນເປັນວຽກສຳຄັນທີ່ສຸດ ທຸກຄົນໃນສັງຄົມຢິວຈະຕ້ອງຖືປະຕິບັດ ທ່ານໄດ້ກ່າວວ່າ

*"ການສອນເຣື້ອງໂທຣາຫ໌ (ພຣະທັມ 5 ເຫລັ້ມແຣກໃນພຣະຄັມພີເດີມ) ແກ່ເດັກນ້ອຍອຸປມາຄືກັບການໃຫ້ສິ່ງທີ່ປະເສີດທີ່ສຸດໃນດ້ານຈິດວິນຍານແກ່ເຂົາ ຄືກັບວ່າເດັກຜູ້ນັ້ນໄດ້ຮັບພຣະບັນຍັດຈາກພຣະເຈົ້າທີ່ພູເຂົາໂຮເຣັບດ້ວຍຕົວເອງ ເຣື້ອງຕ່າງ ໆ ໃນຊີວິດຂອງຊາວຢິວບໍ່ວ່າຈະເປັນເຣື້ອງນ້ອຍ ໆ ເຊັ່ນການຮັບປະທານອາຫານ ຫລືເຣື້ອງໃຫຽ່ ເຊັ່ນການເຮັດວຽກທີ່ຈະຕ້ອງມີຄວາມມານະອົດທົນ ລ້ວນແຕ່ເປັນເຣື້ອງທີ່ກ່ຽວກັບຄຳສອນມາຈາກໂທຣາຫ໌ທັງສິ້ນ ເພາະສະນັ້ນຄົນທີ່ບໍ່ມັກສອນລູກໃຫ້ຮູ້ເຣື້ອງພຣະບັນຍັດຈຶ່ງນັບວ່າເປັນຄົນທີ່ຫຍາບຊ້າ (Amha-arets)" [4]*

ໃນພິທີປັສຄາ ເມື່ອການຮັບປະທານເຂົ້າຈີ່ບໍ່ມີເຊື້ອ ຫາກລູກຫລານຈະຖາມຜູ້ໃຫຽ່ເຖິງຄວາມຫມາຍຂອງພິທີນີ້ ຊາວອິສຣາເອລຜູ້ເປັນບິດາໄດ້ຮັບຄຳບັນຊາຈາກພຣະເຈົ້າໃຫ້ສອນລູກຫລານຂອງເຂົາໃຫ້ເຂົ້າໃຈກ່ຽວກັບສັນຍາລັກຄວາມຫມາຍທາງປວັດສາດ ແລະທາງສາສນາ (ເບິ່ງ ອພຍ 12:26-27, 13:7-8, 14) ເຣື້ອງພິທີປັສຄາເປັນເຣື້ອງການທີ່ພຣະເຈົ້າໄດ້ໄຖ່ຊາວອິສຣາເອລຈາກການເປັນທາດໃນອີຍິປຕ໌ ຜູ້ທີ່ເປັນບິດາກໍຈະຕ້ອງສາມາດສອນໃຫ້ລູກຫລານໄດ້ເຂົ້າໃຈ ແລະຍັງຈະຕ້ອງສອນໃຫ້ເດັກນ້ອຍໄດ້ເຂົ້າໃຈເຖິງພຣະບັນຊາຂອງພຣະເຈົ້າທີ່ຊົງມີຕໍ່ບັນພຣະບຸຣຸດຂອງເຂົາດ້ວຍ (ເບິ່ງ ພບຍ 4:9-10, 6:20-21, 7:17-19, 32:7) ເພື່ອເປັນການສັ່ງສອນລູກຫລານໃຫ້ສືບທອດເຈຕນາຣົມຂອງບັນພຣະບຸຣຸດ ການໃຫ້ການສຶກສາໂດຍວິທີການໃຊ້ຄຳຖາມຄຳຕອບ ນັບວ່າເປັນຫລັກການສອນທີ່ສຳຄັນໃນການສຶກສາຂອງຄົນໃນຄອບຄົວ

ພຣະທັມສຸພາສິດ ເປັນພຣະທັມທີ່ສອນໃຫ້ຮູ້ຈັກໃຊ້ປັນຍາໃນການດຳເນີນຊີວິດ ປັນຍາໃນພຣະທັມສຸພາສິດ ເປັນປັນຍາທີ່ກ່ຽວກັບຫລັກຈາຣິຍະທັມ ທີ່ຈະນຳມະນຸດໄປສູ່ຄວາມຊອບທັມ ແລະເປັນປັນຍາທີ່ຊ່ວຍໃຫ້ມະນຸດແກ້ໄຂປັນຫາຕ່າງ ໆ ໃນສັງຄົມໃຫ້ດີຂຶ້ນ (ເບິ່ງ ສພສ 4:10, 13, 20-23, 10, 16, 11:30, 12:28, 14:27) ຈຸດປະສົງສຳຄັນຂອງພຣະທັມສຸພາສິດຢູ່ທີ່ 1:2-4 ເນື້ອນັຍທີ່ສຳຄັນຄືວ່າ "ຄວາມຢຳເກງພຣະເຈົ້າເປັນບໍເກີດແຫ່ງຄວາມຮູ້" (ສພສ 1:7, 9:10) ພຣະທັມ

ເຫລົ່ານີ້ຊີ້ໃຫ້ເຫັນວ່າ ໃນການທີ່ຈະດຳເນີນຊີວິດຢູ່ໃນໂລກນີ້ຈຳເປັນທີ່ຈະຕ້ອງມີການຮຽນຮູ້ຈາກປະສົບການ ຈາກປັນຍາ ແລະສິ່ງທີ່ນັກປຣາດໄດ້ສຶກສາຄົ້ນຄວ້າໄວ້ແລ້ວ

ທ່ານເຈມສ໌ ດີ. ສມາຣ໌ທ ໄດ້ຂຽນເຣື້ອງກ່ຽວກັບການສຶກສາ ແລະໃຫ້ສລູບຄວາມສຳຄັນຂອງການສຶກສາສາສນາສຶກດັ່ງນີ້

*"ຄວາມຮັກພຣະເຈົ້າແລະການສອນເຣື້ອງພຣະເຈົ້າເປັນສິ່ງທີ່ຈະແຍກອອກຈາກກັນບໍ່ໄດ້ ຊາວອິສຣາເອລເປັນປະຊາກອນເປັນຊຸມຊົນທີ່ມີພັນທະສັນຍາກັບພຣະເຈົ້າ ຊີວິດຂອງເຂົາດຳເນີນໄປໄດ້ດີ ຍ້ອນຄວາມເຊື່ອໃນພຣະເຈົ້າ ພຣະອົງຊົງຄອບຄອງທຸກສິ່ງໃນຊີວິດຂອງເຂົາ ແລະພຣະອົງໄດ້ຊົງສຳແດງພຣະປະສົງຂອງພຣະອົງອອກມາໃນພຣະບັນຍັດ ການທີ່ຊາວອິສຣາເອລມີຊີວິດດຳເນີນຢູ່ນີ້ ເປັນຊີວິດທີ່ຊາວອິສຣາເອລຈຳເປັນຕ້ອງມີການສອນໃຫ້ລູກຫລານຣຸ້ນຫລັງໄດ້ຮູ້ຈັກ ແລະໃຫ້ການສຶກສາແກ່ອິສຣາເອລຣຸ້ນຕໍ່ ໆ ມາ ບໍ່ແມ່ນວ່າເປັນພຽງແຕ່ການຖ່າຍທອດເຣື່ອງພຣະບັນຍັດ ແລະຄວາມຄິດເຫັນຕ່າງ ໆ ເທົ່ານັ້ນ ແຕ່ຍັງເປັນການຂຍາຍສັມພັນທພາບຂອງພັນທສັນຍາໃຫ້ກວ້າງຂວາງຂຶ້ນ ການສຶກສາທີ່ກ່າວນີ້ເປັນການຮວບຮວມຊາວອິສຣາເອລໃໝ່ໃຫ້ເຂົ້າຢູ່ໃນສິດທິພິເສດ ແລະມີຄວາມຮັບຜິດຊອບດ້ວຍ" [5]*

ການໃຫ້ການສຶກສາແກ່ລູກຫລານເພື່ອສືບທອດເຈຕນາຣົມຂອງພັນທະສັນຍາເປັນສິ່ງທີ່ຈຳເປັນ ເຣື້ອງນີ້ບໍ່ແມ່ນພຽງແຕ່ເປັນພຣະບັນຍັດຂອງພຣະເຈົ້າເທົ່ານັ້ນ ແຕ່ເປັນສິ່ງທີ່ຈຳເປັນໃນການດຳເນີນຊີວິດຂອງມະນຸດ ເພາະພາໃຫ້ມະນຸດມີສັມພັນທະພາບກັບພຣະເຈົ້າຢ່າງຖືກຕ້ອງ ການໃຫ້ການສຶກສາບໍ່ໄດ້ຈັດໃຫ້ຄົນແຕ່ຣຸ້ນດຽວເທົ່ານັ້ນ ແຕ່ຈະຕ້ອງຈັດໃຫ້ກັບຄົນທຸກຣຸ້ນທຸກຍຸກ ແລະການຈັດການສຶກສາເຊັ່ນນັ້ນ ບໍ່ໄດ້ຈຳກັດໃຫ້ສະເພາະປະຊາຊົນຊາວອິສຣາເອລເທົ່ານັ້ນ ແຕ່ພຣະປະສົງຂອງພຣະເຈົ້າຕ້ອງການໃຫ້ຂຍາຍໃຫ້ກວ້າງຂວາງອອກໄປທົ່ວໂລກ

## 2. ຈຸດປະສົງຂອງການສຶກສາ

ທ່ານ ເອ. ດັບບິວ ມອຣ໌ຕັນ ໄດ້ສະແດງຄວາມຄິດເຫັນໄວ້ວ່າ ຈຸດປະສົງທາງການສຶກສາຂອງປະເທດອິສຣາເອລໄດ້ເກີດມີຂຶ້ນພ້ອມກັບການກໍ່ຕັ້ງປະເທດ ທ່ານໄດ້ກ່າວວ່າ

*"ທັສນະແລະການປະຕິບັດທາງການສຶກສາຂອງອິສຣາເອລ ໄດ້ເລີ້ມມີຂຶ້ນຕັ້ງແຕ່ປະເທດອິສຣາເອລໄດ້ກໍ່ກຳເນີດ... ຊາວອິສຣາເອລໄດ້ຮັບການຊົງເອີ້ນຈາກພຣະເຈົ້າ ພວກເຂົາມີຄວາມເຂົ້າໃຈດີວ່າ ເຂົາເປັນປະຊາກອນຂອງພຣະເຈົ້າ ແລະພຣະເຈົ້າມີພຣະປະສົງໃຫ້ເຂົາຮັບໃຊ້ພຣະອົງ ເພາະສະນັ້ນຈຸດປະສົງຂ້າງຕົ້ນຂອງກິຈການທາງການສຶກສາກໍຄື ສາສນາ (ປຖກ 18:19) ຈຸດປະສົງທີ່ກ່າວນີ້ກໍຄື ການອົບຮົມຄົນໜຸ່ມໃຫ້ຮູ້ຈັກແລະບົວລະບັດພຣະເຈົ້າ (ພບຍ 6:7, ສພສ 1:7) ໂດຍເຫດນີ້ ເມື່ອຍາມເຂົາເປັນຜູ້ໃຫຍ່ ແລະຕລອດຊີວິດຂອງເຂົາ ເຂົາຈະບໍ່ພາກຈາກທາງຂອງພຣະເຈົ້າ (ສພສ 22:6) ສາສນາສຶກສາຈຶ່ງມີຈຸດຮວມຢູ່ທີ່ໂທຣາຫ໌ ຈຸດປະສົງທີ່ສຳຄັນກໍຄື ເພື່ອໃຫ້ຊາວຢິວດຳເນີນຊີວິດຢູ່ຢ່າງຖືກຕ້ອງ" [6]*

*ທ່ານ ເຈ. ແຄສເຕີຣ໌ ເຫັນວ່າ "ຈຸດປະສົງໂດຍທົ່ວໄປຂອງການສຶກສາຂອງອິສຣາເອລໃນສະໄໝໂບຮານມີສອງປະການຄື (ກ) ເພື່ອຖ່າຍທອດມໍຣະດົກທາງປວັດສາດຂອງປະເທດເຮັບບຣູ ຊຶ່ງເປັນເຣື່ອງທີ່ກ່ຽວຂ້ອງກັບພຣະເຈົ້າກັບປະຊາກອນຂອງພຣະອົງ ແລະເຣື່ອງວິຣະກັມຂອງວິຣະບຸຣຸດແຫ່ງພັນທະສັນຍາໃນປະວັດສາດສະໄໝຕໍ່ມາ ແລະ (ຂ) ເພື່ອສອນກ່ຽວກັບຈະຣິຍະທັມ ໃຫ້ຜູ້ຮຽນຮູ້ວ່າ ມະນຸດຄວນທີ່ຈະດຳເນີນຊີວິດແນວໃດຈຶ່ງຈະມີຄວາມສຸກຈົນເຖິງສຸດປາຍຊີວິດ" [7]*

ທ່ານແຄສເຕີຣ໌ ຍັງໄດ້ກ່າວຕໍ່ໄປວ່າ ຈຸດປະສົງທາງການສຶກສາສອງປະການນີ້ ກ່ຽວຂ້ອງກັບປວັດສາດຂອງອິສຣາເອລໃນແຕ່ລະສະໄໝ ຈຸດປະສົງຂໍ້ທຳອິດກ່ຽວຂ້ອງກັບປວັດສາດຕອນແຣກຂອງປະເທດຊຶ່ງຫາກໍເລີ້ມຕົ້ນກໍ່ຕັ້ງ ໃນສະໄໝນັ້ນການໃຫ້ການສຶກສາຈຳເປັນຕ້ອງໃຫ້ປະຊາຊົນມີຄວາມໝັ້ນໃຈໃນພັນທະສັນຍາຂອງພຣະເຈົ້າ ຊຶ່ງຈະຊ່ວຍໃຫ້ປະເທດໄດ້ຕັ້ງເປັນປະເທດໝັ້ນຄົງ ໃນຣະຍະເວລານັ້ນປະຊາຊົນນອກຈາກຈະມີຄວາມເຂົ້າໃຈໃນພັນທະສັນຍາຂອງພຣະເຈົ້າຢ່າງດີແລ້ວ ເຂົາຈະຕ້ອງດຳເນີນຊີວິດໃຫ້ສອດຄ້ອງກັບຈະຣິຍະທັມແຫ່ງພັນທະສັນຍາດ້ວຍ ການດຳເນີນຊີວິດປະຈຳວັນຢ່າງຖືກຕ້ອງຈະພາໃຫ້ເຂົາມີສັມພັນທພາບກັບພຣະເຈົ້າຢ່າງຖືກຕ້ອງຕລອດໄປ

ທ່ານ ຣາເວຣ໌ດ ພີ. ໂຄລສັນ ໄດ້ກ່າວວ່າ *"ຈຸດປະສົງຂອງການສຶກສາມີຢູ່ 3 ປະການຄື (1) ຖ່າຍທອດມໍຣະດົກທາງປວັດສາດ (ອພຍ 12:26-27, 13:7-8, 14, ພບຍ 4:9-10, 6:20-21, 7:6-29, 32:7) (2) ສອນກ່ຽວກັບພິທີກັມທາງສາສນາ (3) ຖ່າຍທອດມໍຣະດົກທາງຈະຣິຍະທັມ (ອພຍ 20:1-17) ສູນຣວມຂອງສິ່ງຕ່າງ ໆ ຢູ່ໃນຄວາມຈິງທີ່ວ່າ ພຣະເຈົ້າໄດ້ເຮັດພັນທະສັນຍາທີ່ໝັ້ນໝາຍກັບປະຊາຊົນ ເພາະສະນັ້ນປະຊາຊົນຈຶ່ງຢູ່ໃນພາຍໃຕ້ຂໍ້ຜູກມັດຢ່າງແນ່ນໜາກັບພຣະອົງ [8]*

ຈາກຄວາມຄິດເຫັນແລະຂໍ້ພຣະຄັມພີຕ່າງ ໆ ທີ່ໄດ້ສຶກສາມາແລ້ວ ຈຸດປະສົງຂອງສາສນາສຶກສາພາກພັນທະສັນຍາເດີມພໍສລູບໄດ້ດັ່ງນີ້ ຄື

1. ເພື່ອຖ່າຍທອດປວັດສາດແຫ່ງພັນທະສັນຍາ ໂດຍມີຈຸດປະສົງທີ່ຈະໃຫ້ລູກຫລານອິສຣາເອລເຂົ້າໃຈເຖິງສັມພັນທະພາບທີ່ບັນພະບຸຣຸດ ແລະຕົວເຂົາທີ່ມີຕໍ່ພຣະເຈົ້າ

2. ເພື່ອໃຫ້ປະຊາຊົນໄດ້ຣະລຶກເຖິງພຣະມະຫາກະຣຸນາທິຄຸນຂອງພຣະເຈົ້າ ທີ່ມີຕໍ່ເຂົາແລະປະເທດຊາດຂອງເຂົາໃນປະວັດສາດ ຈົນພາໃຫ້ເຂົາເກີດຄວາມສຳນຶກວ່າຈະຕ້ອງບົວລະບັດພຣະອົງແລະຕອບສນອງພຣະອົງໂດຍດຳເນີນຊີວິດຕາມທີ່ພຣະອົງຮຽກຮ້ອງ

3. ເພື່ອການຖ່າຍທອດຄວາມເຊື່ອແຫ່ງພັນທະສັນຍາ ເຣື່ອງນີ້ບໍ່ແມ່ນເປັນການຮັກສາຄວາມເຊື່ອໄວ້ສຳລັບຍຸກນຶ່ງເທົ່ານັ້ນ ແຕ່ໃຫ້ຄວາມເຊື່ອແຫ່ງພຣະສັນຍາຂຍາຍໄປຍັງທຸກຄົນທຸກຍຸກທຸກສະໄໝທັງນີ້ ເພື່ອໃຫ້ພັນທະສັນຍາຂອງພຣະເຈົ້າທີ່ມີຕໍ່ບັນພະບຸຣຸດເກີດຜົນສຳເຣັດອີກດ້ວຍ

4. ໃນການປະຕິບັດສາສນາກິຈ ພຣະເຈົ້າໄດ້ກຳຊັບໃຫ້ຊົນຊາດອິສຣາເອລສອນລູກຫລານໃຫ້ເຂົ້າໃຈສັນຍາລັກຕ່າງ ໆ ທີ່ໃຊ້ໃນສາສນາພິທີ ເພື່ອໃຫ້ລູກຫລານມີຄວາມເຊື່ອຢ່າງຖືກຕ້ອງ ບໍ່ຜູກພັນຢູ່ຕິດກັບພິທີກັມທາງສາສນາເທົ່ານັ້ນ ການທີ່ກຳຊັບເຊັ່ນນັ້ນເປັນການເນັ້ນໜັກໃຫ້ມີຄວາມເຊື່ອທີ່ຖືກຕ້ອງ

ຕໍ່ພຣະເຈົ້າຫລາຍກວ່າພິທີກັມທາງສາສນາ

5. ເພື່ອໃຫ້ລູກຫລານດຳເນີນຊີວິດຢ່າງຖືກຕ້ອງຕາມຄວາມເຊື່ອ ມີຊີວິດທີ່ປະກອບໄປດ້ວຍປັນຍາ ແລະມີຄວາມສຸຂຢ່າງແທ້ຈິງຈົນເຖິງສຸດປາຍຂອງຊີວິດ

## 3. ເນື້ອຫາແລະວິທີການສອນ

ຊາວຢິວຖືວ່າ *"ພັນທະສັນຍາເດີມເປັນຕຳຣາຣຽນເຫລັ້ມແຣກທີ່ສອນໃຫ້ຄົນຢິວຮູ້ເຖິງປະວັດສາດ ພູມີສາດ ວັນຄະດີ ແລະກົດຫມາຍຕ່າງ ໆ ຂອງເຂົາ" [9]* ໃນສມັຍຫລັງຈາກການເປັນສະເລີຍເສິກ *"ຫນັງສືເປັນສິ່ງທີ່ຫາໄດ້ຍາກ ແຕ່ຊາວຢິວໄດ້ຮັບການຝຶກແອບໃຫ້ທົບທວນສາຣະສຳຄັນຂອງພຣະບັນຍັດ ແລະຄຳສອນຂອງຜູ້ເຜີຍພຣະຄຳ" [10]* ຕໍ່ມາໄດ້ມີການຮຽບຮຽງຫນັງສືພຣະບັນຍັດຂອງໂມເຊຂຶ້ນ ໂດຍມີຄວາມມຸ້ງຫມາຍທີ່ຈະຮວບຮວມຄຳສອນ ເນື້ອຫາຂອງພັນທະສັນຍາຊຶ່ງເປັນຫລັກຂໍ້ເຊື່ອຂຶ້ນເປັນຮູບເຫລັ້ມ

ໃນຊ່ວງຣະຍະເວລາຂອງການເດີນທາງຈາກອີຢິປຕ໌ເຖິງປາເລສໄຕນ໌ ໂມເຊໄດ້ຮັບພາຣະໃນການຈັດການສຶກສາແບບຮີບດ່ວນໃຫ້ກັບຊາວຢິວ ໃນການຈັດການສຶກສາຄັ້ງນີ້ໂມເຊເຫັນວ່າ ສິ່ງສຳຄັນທີ່ຈະຕ້ອງເຮັດກໍຄື ການຊ່ວຍເຫລືອຊາວຢິວໃຫ້ພົ້ນຈາກອິດທິພົນຂອງສາສນາເດີມ ຊຶ່ງບຸກຄົນພວກນີ້ເຄີຍໄດ້ຮັບອິດທິພົນເມື່ອຢູ່ໃນອີຢິປຕ໌ ແລະເປັນການຕຽມປະຊາຊົນແລະຜູ້ນຳທີ່ຈະຢູ່ໃນແຜ່ນດິນໃຫມ່ທີ່ພຣະເຈົ້າປະທານໃຫ້ຕາມພັນທະສັນຍາ

> *"ກິຈການທີ່ໄດ້ຈັດຂຶ້ນສ່ວນຫລາຍເປັນການສອນກຸ່ມຊົນ ເຊັ່ນສອນເຣື້ອງພຣະບັນຍັດສິບປະການ ເຣື້ອງຮູບເຄົາຣົບ ເຣື້ອງການນມັສການ ມີການທ່ອງຈຳພຣະບັນຍັດ ການສອນເຣື້ອງພິທີກັມຕ່າງ ໆ ທີ່ມີຢູ່ໃນພຣະທັມພຣະບັນຍັດ ມີການສອນເຣື້ອງການພິຈາຣະນາຂໍ້ໂຕ້ແຍ້ງ (ການຕັດສິນຄດີຄວາມ) ແລະການອະທິບາຍເຖິງການດຳເນີນຊີວິດຢ່າງຖືກຕ້ອງໃນເຣື້ອງຕ່າງ ໆ ເຫລົ່ານັ້ນ ນອກຈາກນີ້ມີການຂຽນຄຳສອນທີ່ສຳຄັນຂອງພຣະເຢໂຮວາຫ໌ດ້ວຍ" [11]*

ດັ່ງນັ້ນ *"ເດັກນ້ອຍຊາວເຮັບເຣີເຕີບໃຫຍ່ຂຶ້ນດ້ວຍການຊາບຊຶ້ມຄວາມຫມາຍຂອງຊີວິດໃນສັງຄົມຂອງເຂົາ ພິທີກັມ ການອະທິບາຍ ແລະການອະທິຖານໃນຄອບຄົວຊ່ວຍເຂົາທັງໃນຍາມທີ່ເຂົາຮູ້ສຶກຕົວແລະໃນຍາມທີ່ບໍ່ຮູ້ສຶກຕົວ ໃນຄວາມສຳນຶກເຖິງສາສນາສຳລັບຊີວິດທີ່ເຂົາເຄົາຣົບ" [12]* ການສຶກສາທີ່ໂມເຊຈັດຂຶ້ນນີ້ ແກ້ບັນຫາສ່ວນໃຫຍ່ຂອງຊາວຢິວ ເຊັ່ນບັນຫາສ່ວນຕົວ ບັນຫາຄອບຄົວ ທຸຣະກິຈ ການເປັນພົລເມືອງ ແລະຄວາມສັມພັນຂອງຊາວອິສຣາເອລກັບພຣະເຈົ້າ *"ໂທຣາຫ໌ເປັນພຣະທັມທີ່ຂຽນຂຶ້ນຈາກຄຳສອນຂອງໂມເຊ ເປັນຄຳສອນທີ່ຊ່ວຍຕຽມຊົນຊາດອິສຣາເອລໃຫ້ພ້ອມທີ່ຈະເຂົ້າໄປຢູ່ໃນແຜ່ນດິນໃຫມ່ ເປັນພຣະທັມທີ່ກ່ຽວຂ້ອງກັບຊີວິດມະນຸດທຸກແງ່ມຸມຕັ້ງແຕ່ເກີດຈົນຕາຍ" [13]* ຊາວຢິວເປັນຊົນຊາດຂອງພຣະເຈົ້າ ການດຳເນີນຊີວິດຂອງເຂົາຈຶ່ງເປັນເຣື້ອງສຳຄັນ ເຂົາຈະຕ້ອງມີຊີວິດທີ່ສົມກັບການເປັນປະຊາກອນຂອງພຣະເຈົ້າ ເພາະສະນັ້ນ *"ສິ່ງທີ່ຈຳເປັນໃນການຈັດການສຶກສາໃຫ້ຊາວຢິວກໍຄື ການເຮັດໃຫ້ຊາວຢິວເປັນຄົນບໍຣິສຸດ ແຕກຕ່າງຈາກເພື່ອນບ້ານຂອງເຂົາ ແລະເປັນການຖ່າຍທອດສາສນາທາງດ້ານປະຕິບັດ" [14]*

ເມື່ອອ່ານພຣະທັມພັນທະສັນຍາເດີມຈະພົບວ່າ ສາສນາສຶກສາເປັນສິ່ງທີ່ດຳເນີນຢູ່ຄູ່ກັບຊາດອິສຣາເອລ ເມື່ອພຣະເຈົ້າເລືອກອັບຣາຮາມ ພຣະອົງຊົງຫວັງວ່າອັບຣາຮາມຈະສັ່ງສອນລູກຫລານ ແລະຄົນຣຸ່ນຫລັງໃຫ້ຮັກສາຫົນທາງຂອງພຣະເຈົ້າ ໂດຍເຮັດຄວາມຊອບທັມແລະຄວາມຍຸຕິທັມ ເພື່ອພຣະອົງຈະປະທານສິ່ງທີ່ພຣະອົງໄດ້ສັນຍາໄວ້ແລ້ວແກ່ເຂົາ (ປຖກ 18:19) ບໍ່ແມ່ນວ່າອັບຣາຮັມຕ້ອງໄດ້ຮັບພາຣະໃນການສອນລູກຫລານເທົ່ານັ້ນ ທ່ານຍັງໄດ້ທຳການສອນຄົນໃນຄອບຄົວຂອງທ່ານດ້ວຍ ການສອນຄົນໃນຄອບຄົວເປັນສິ່ງທີ່ຈຳເປັນ ເພາະ *"ໃນສມັຍຂອງບັນພະບຸຣຸດບໍ່ມີອົງການທີ່ມີຣະບົບການສອນ ແຕ່ວ່າຄອບຄົວເປັນໂຮງຮຽນແຫ່ງດຽວ ແລະມີບິດາມານດາເປັນເໝືອນຄຣູ ການສອນໃນຄອບຄົວໄດ້ເຮັດກັນຢ່າງເອົາຈິງເອົາຈັງ ເພາະຖືວ່າເປັນເຣື່ອງສຳຄັນ ແລະໄດ້ກາຍເປັນປະເພນີອັນສັກສິດຂອງພວກຢິວ" [15]*

ເມື່ອພຣະເຈົ້າຊ່ວຍພວກອິສຣາເອລອອກຈາກການເປັນທາສໃນປະເທດອີຢິປຕ໌ ພຣະອົງໄດ້ຕັ້ງພິທີປັສຄາຂຶ້ນ ມີການຖວາຍບູຊາແລະການກິນເຂົ້າຈີ່ບໍ່ມີເຊື້ອ ຊາວອິສຣາເອລຜູ້ທີ່ເປັນບິດາຈະຕ້ອງສາມາດອະທິບາຍຄວາມຫມາຍຂອງສັນຍາລັກທາງປວັດສາດ ແລະທາງສາສນາແກ່ລູກຫລານໄດ້ (ອພຍ 12:26, 27, 13:7-8:14) ການສອນນີ້ມີການປູກໃຈໃຫ້ເດັກນ້ອຍຢາກຮູ້ຢາກເຫັນ ແລະຜູ້ໃຫຍ່ຕອບຄຳຖາມຂອງເດັກນ້ອຍ (ອພຍ 12:26, 27, ຍຊວ 4:21-22)

ໃນຊ່ວງຣະຍະເວລາຂອງການກໍ່ຕັ້ງປະເທດ ຜູ້ເປັນບິດາໄດ້ຮັບການຄຳສັ່ງໃຫ້ສອນລູກຫລານສເມີ ເຖິງເຫດການທີ່ເຂົາໄດ້ປະສົບມາກ່ຽວກັບການທີ່ພຣະເຈົ້າຊ່ວຍໄຖ່ເຂົາຈາກການເປັນທາດໃນອີຢິປຕ໌ (ອພຍ 10:2, 12:26-27 ພບຍ 4:9-10, 6:20-21, 7:17-18, 32:7) *"ຊາວເຮັບຣູມີຄວາມຊົມຊື່ນຍິນດີຫລາຍໃນການທີ່ຈະສອນໃຫ້ເດັກນ້ອຍໄດ້ຮູ້ຈັກ ແລະຈື່ຈຳເຣື່ອງທີ່ພຣະເຈົ້າໄດ້ໄຖ່ພວກເຂົາອອກຈາກການເປັນທາດໃນອີຢິປຕ໌ ແລະການຊົງນຳພາພວກເຂົາມາຢູ່ໃນແຜ່ນດິນຄານາອັນ" [16]* ນີ້ຄື *"ປະຈັກພະຍານຂອງການສອນຢ່າງມີປະສິດທິພາບໃນບ້ານກ່ຽວກັບປວັດສາດຄວາມເຊື່ອຂອງຊາວອິສຣາເອລ" [17]*

ພຣະເຈົ້າໄດ້ຊົງເຮັດພັນທະສັນຍາກັບຊາວອິສຣາເອລ ແລະໄດ້ປະທານພຣະບັນຍັດໃຫ້ພວກເຂົາປະຕິບັດ **"ເຊມາ"** (Shama, ພບຍ 6:4-9) ເປັນສ່ວນຂອງພຣະບັນຍັດທີ່ສຳຄັນຫລາຍ ເປັນຂໍ້ພຣະຄັມພີທີ່ສອນໃຫ້ຊາວອິສຣາເອລຕອບສນອງພຣະຄຸນພຣະເຈົ້າດ້ວຍຄວາມຮັກຕໍ່ພຣະອົງຢ່າງສິ້ນສຸດຊີວິດ ໂດຍເຫດທີ່ຊາວອິສຣາເອລເປັນປະຊາກອນຂອງພຣະເຈົ້າແລະເປັນຜູ້ທີ່ພຣະເຈົ້າຊົງໄຖ່ ເຂົາຈຶ່ງຕ້ອງໃຊ້ຄວາມພຍາຍາມທຸກທາງທີ່ຈະສອນລູກຫລານຂອງເຂົາ ຫນ້າທີ່ນີ້ບິດາຄົນນຶ່ງ ຈະຕ້ອງຖ່າຍທອດໃຫ້ບິດາອີກຄົນນຶ່ງ ຄົນຣຸ່ນນຶ່ງໃຫ້ກັບຄົນອີກຣຸ່ນນຶ່ງ *"ທັສນະໃນການຈັດການສຶກສາມີປາກົດຊັດໃນພັນທະສັນຍາເດີມ ບົດເພງສັນລະເສີນ 78:3-7 ຊຶ່ງກ່າວວ່າ ປະຊາກອນຂອງພຣະເຈົ້າໄດ້ສັນຍາກັບພຣະເຈົ້າວ່າ ເຂົາຈະສອນລູກຫລານຂອງເຂົາທຸກຣຸ່ນດ້ວຍຄວາມສັດຊື່ທ່ຽງທັມໃຫ້ຮູ້ຈັກເຖິງພຣະຣາຊກິຈອັນຄວນສັນລະເສີນຂອງພຣະເຈົ້າ" [18]* ໃນຊ່ວງຣະຍະເວລາທຳອິດທີ່ປະເທດກຳລັງກໍ່ຮ່າງສ້າງຕົວຂຶ້ນນີ້ ປະເພນີການຖ່າຍທອດການສຶກສານັບວ່າເປັນສິ່ງສຳຄັນ ແມ່ນໃນສມັຍຕໍ່ມາຄົນໜຸ່ມກໍໄດ້ຮັບຄຳສອນເຊັ່ນດຽວກັບຊາວອິສຣາເອລສມັຍແຣກ ແລະຄົນເຫລົ່ານັ້ນກໍໄດ້ໃຫ້ຄວາມເຄົາຣົບຕໍ່ສຸພາສິດຂອງບັນດານັກ

ປຣາດທີ່ເຂົາໄດ້ຟັງຈາກບິດາຂອງເຂົາ (ສພສ 4:3-5)

ການຮັບຮູ້ໃນເຣື້ອງຈຣິຍະທັມ ແລະສິນລະທັມທີ່ຕັດຕາມມາຄື ການຢຳເກງພຣະເຈົ້າເປັນຕົ້ນກຳເນີດຂອງຄວາມຮູ້ (ສພສ 1:7, 9:10) *"ພຣະທັມສຸພາສິດເປັນພຣະທັມທີ່ເກົ່າແກ່ທີ່ສຸດຕໍ່ຈາກໂທຣາຫ໌ ຊຶ່ງຊາວຢິວໃຊ້ໃນການຈັດການສຶກສາ... ສຸພາສິດເປັນພຣະທັມທີ່ແນະນຳໃຫ້ຮູ້ວ່າ ຈະດຳເນີນຊີວິດຢ່າງໃດຈຶ່ງຈະປະສົບຜົນສຳເຣັດ" [19] "ຈຸດປະສົງຂອງການສຶກສາຊຶ່ງຂຽນໄວ້ໃນສຸພາສິດ 1:2-4 ກ່າວວ່າມະນຸດສາມາດທີ່ຈະຮຽນຮູ້ເຣື້ອງຊອບທັມ ຄວາມຍຸຕິທັມ ແລະສາມາດທີ່ຈະຮຽນຮູ້ສິ່ງໃຫມ່ ໆ ແລະທຳໃຫ້ສະລາດຂຶ້ນໄດ້" [20]*

ຕາມປວັດສາດຂອງອິສຣາເອລສມັຍແຣກ ໆ ລູກຫລານໄດ້ຮັບການອົບຮົມໃຫ້ສາມາດທຳຫນ້າທີ່ຕ່າງ ໆ ທີ່ເດັກນ້ອຍຈະຕ້ອງປະຕິບັດເປັນປະຈຳວັນໃນຄອບຄົວ ເຊັ່ນການລ້ຽງແກະ (ຕົວຢ່າງ 1 ຊມອ 16:11) ແລະການເຮັດວຽກໃນນາ (2 ພສດ 4:18) ນອກຈາກນີ້ຈະມີການສອນແລະການຝຶກແອບອາຊີບໃນຄອບຄົວ ເດັກນ້ອຍກໍຍັງໄດ້ຮຽນກ່ຽວກັບສິລປະອີກດ້ວຍ ດາວິດສາມາດຈະເສບພິນດ້ວຍຄວາມຊຳນານຕັ້ງແຕ່ຍັງເປັນເດັກນ້ອຍ (1 ຊມອ 16:15-18) *"ມີການສອນດົນຕຣີແລະການເຕັ້ນລຳດ້ວຍ ແລະໃນປວັດສາດຂອງຊາວຢິວທຸກຍຸກ ຈະເຫັນໄດ້ວ່າຊາວຢິວຮັກສິລປະນີ້ຫລາຍ" [21] (1 ຊມອ 16:18ຟ ຜປຄ 21:21 ພສສ 137 ຢຣມ 31:13 ພສກ 5:14)*

ຊາວຢິວບໍ່ແມ່ນໃຫ້ການສຶກສາແກ່ເດັກນ້ອຍເທົ່ານັ້ນ ມີການຈັດການສຶກສາໃຫ້ຜູ້ໃຫຍ່ດ້ວຍ ພວກປຸໂຣຫິດ ແລະເລວີເປັນຜູ້ຮັບຜິດຊອບເຣື້ອງນີ້ ເຂົາເປັນຜູ້ສອນໃຫ້ຊາວອິສຣາເອລເຂົ້າໃຈພຣະບັນຍັດ (ລວນ 10:11 ພບຍ 33:10) ເຢໂຣຊາຟັທເປັນກະສັດທີ່ຊົງເຫັນຄວາມສຳຄັນຂອງການປະຕິຮູບບ້ານເມືອງແລະສິນທັມ *"ປະຊາຊົນມີແນວໂນ້ມທີ່ຈະດຳເນີນຊີວິດຢູ່ໃນຄວາມຜິດບາບ ກະສັດເຢໂຣຊາຟັທ ໄດ້ຊົງຕຽມການປະຕິຮູບໂດຍຈັດແຜນການສອນສາສນາຢ່າງກວ້າງຂວາງ ແລະການຈັດຣະບຽບໃນການອົບຮົມ" [22]* ພຣະອົງໄດ້ສົ່ງປຸໂຣຫິດແລະເລວີ 16 ຄົນອອກໄປເປັນຫມູ່ ໄປສອນສາສນາແກ່ປະຊາຊົນເປັນເວລາສັ້ນ ໆ ຈາກເມືອງນຶ່ງໄປຍັງອີກເມືອງນຶ່ງທົ່ວປະເທດ (2 ພສດ 17:7-9) ພໍເຖິງສມັຍຂອງກະສັດໂຢສີຢາຫ໌ ຄົນເລວີກໍຍັງທຳຫນ້າທີ່ສອນປະຊາຊົນເຊັ່ນເຄີຍ (2 ພສດ 35:3) ໃນຣະຍະເວລານີ້ແລະເວລາຕໍ່ມາ ການປະຕິບັດວຽກງານຂອງເລວີເປັນທີ່ຍອມຮັບຂອງພວກຜູ້ເຜີຍພຣະຄຳ (ມລຄ 2:6-7) *"ພວກເລວີທຳການສອນໂດຍການອອກໄປຢ້ຽມຢາມເມືອງຕ່າງ ໆ ເມື່ອໄປເຖິງເມືອງເຫລົ່ານັ້ນກໍຈະໃຫ້ປະຊາຊົນທັງພວກທີ່ເປັນຊາວອິສຣາເອລ ແລະຄົນຕ່າງປະເທດໃຫ້ມາຢູ່ຮວມກັນແລ້ວອະທິບາຍໂທຣາຫ໌ໃຫ້ຄົນເຫລົ່ານັ້ນຟັງ" [23]* (ພບຍ 31:10-13, 2 ພສດ 17:8-9) ການເຮັດວຽກຂອງພວກເລວີເຊັ່ນນີ້ ເປັນການປະຕິບັດຕາມພຣະບັນຊາຂອງພຣະເຈົ້າທີ່ຂຽນໄວ້ໃນພຣະທັມພຣະບັນຍັດວ່າ ທຸກເຈັດປີໃນເທສກາລຢູ່ເພີງໃຫ້ມີການອ່ານພຣະບັນຍັດຂອງພຣະເຈົ້າໃຫ້ປະຊາຊົນອິສຣາເອລຟັງ *"ຫລັງຈາກການກັບຄືນຖິ່ນ ພວກເລວີກໍຍັງທຳຫນ້າທີ່ການສອນນີ້ຢູ່ (ນຫມ 8:7-9) ພວກເລວີມີຄວາມຊຳນານໃນການແປຄວາມຫມາຍແລະການອະທິບາຍ (ຂໍ້ 8) ຄົນເອີ້ນເຂົາວ່າ "ເປັນຄົນມີຄວາມຮອບຮູ້" [24] (ເນຫະມີຢ໌ 8:7, 9, ອສຣ 8:16)*

(9) ການຟື້ນຟູອິສຣາເອລຄັ້ງໃຫຍ່ ທັງທາງດ້ານປະເທດຊາດ ແລະວັທນທັມເລີ້ມຕົ້ນໂດຍທ່ານເອສຣາ

ແລະທ່ານເນຫະມີ ທ່ານເອສຣາເປັນປຸໂຣຫິດ ຊຶ່ງເປັນພວກທີ່ມີຄວາມຮູ້ພິເສດໃນພຣະທັມໂຫຣາຫ໌ ແລະມີຄວາມສາມາດໃນການສອນພຣະທັມໂຫຣາຫ໌ (ອສຣ 7:1-5, ນຫມ 8:2) ເປັນທີ່ແນ່ນອນວ່າທ່ານເອຣາເປັນສມາຊິກຂອງຄນະປຸໂຣຫິດ ຊຶ່ງເປັນພວກທີ່ມີຄວາມຮູ້ພິເສດໃນພຣະທັມໂຫຣາຫ໌ແລະການສອນພຣະທັມໂຫຣາຫ໌ (ອສຣ 7:6, 10) ທ່ານໄດ້ຮັບພາຣະທີ່ຈະປະຕິບັດງານປຸໂຣຫິດຕໍ່ຈາກຄົນອື່ນໃນເຣື້ອງການສອນປະຊາຊົນ ທ່ານໄດ້ນຳສຳເນົາພຣະທັມໂຫຣາຫ໌ຈາກບາບີໂລນມາພ້ອມ ແລະທ່ານໄດ້ອະທິບາຍພຣະທັມນັ້ນໃຫ້ປະຊາຊົນທີ່ຄືນມາຈາກການເປັນສເລີຍເສິກຟັງ ທ່ານຢືນເທິງແທ່ນໄມ້ (ນຫມ 8:4) ຕໍ່ຫນ້າປະຊາຊົນ ແລະອ່ານພຣະຄຳໃຫ້ເຂົາຟັງ ພວກເລວີຢືນຢູ່ລ້ອມຮອບທ່ານເປັນຜູ້ຊ່ວຍແປຄວາມຫມາຍ ແລະອະທິບາຍຢ່າງລະອຽດແລະແຈ່ມແຈ້ງ ພາໃຫ້ທຸກຄົນເກີດຄວາມເຂົ້າໃຈ

ຫນ້າທີ່ທາງການສຶກສາຂອງຜູ້ເຜີຍພຣະຄຳເປັນສິ່ງທີ່ເຮົາບໍ່ຄວນຈະເບິ່ງຂ້າມໄປ *"ເປັນການດີທີ່ຈະເອີ້ນຜູ້ເຜີຍພຣະຄຳວ່າເປັນຜູ້ປະກາດພຣະຄຳດີກວ່າເອີ້ນວ່າເປັນຜູ້ທຳນວຍ ເພາະພາຣະຫນ້າທີ່ສ່ວນໃຫຍ່ຂອງພວກເຂົາ ຄືການແປຄວາມຫມາຍຂອງສພາບເຫດການສຳຄັນທາງດ້ານສິນທັມແລະສາສນາ" [25] "ຄົນຢ່າງທ່ານເອລີຢາຫ໌ ທ່ານອາໂມດ ແລະທ່ານເອຊາຢາ ບໍ່ເປັນພຽງນັກເທສ ແຕ່ເປັນຄຣູທີ່ຊ່ວຍຊາວເຮັບເຣີກ່ຽວກັບທັສນະໃນເຣື້ອງຄວາມຊອບທັມຂອງປະຊາຊົນ" [26]* ຜູ້ເຜີຍພຣະຄຳໃຊ້ວິທີສອນຫລາຍວິທີ ເຊັ່ນ ການຕັ້ງຊື່ລູກ ເປັນການສະເນີປັນຫາໃຫ້ປະຊາຊົນຄິດ ທ່ານໂຮເຊອາຕັ້ງຊື່ລູກສາວຂອງທ່ານວ່າ "ຜູ້ທີ່ບໍ່ໄດ້ຮັບຄວາມສົງສານ" (ຮຊອ 1:6) ທ່ານເອຊາຢາຕັ້ງຊື່ລູກຂອງທ່ານວ່າ "ນ້ອຍຄົນຈະໄດ້ກັບຄືນມາ" (ອຊຢ 7.3) ຜູ້ເຜີຍພຣະຄຳບາງຄົນໃຊ້ການສະແດງລະຄອນ ເພື່ອສະແດງໃຫ້ເຫັນຄວາມຫມາຍຂອງເຫດການທີ່ຈະເກີດຂຶ້ນໃນອນາຄົດ ເຊັ່ນທ່ານເຢເຣມີ ເອົາແອກສວມຄໍ (ຢຣມ 27:2) ທ່ານເອເສຄຽນແຖຫົວ ແລະໃຫ້ລົມພັດພົມກະຈາຍໄປ (ອສຄ 5:1-4)

ທ່ານ ເອຊ. ເອ. ເຣສເຕີຣ໌ ໄດ້ກ່າວເຖິງການເຮັດວຽກຂອງຜູ້ເຜີຍພຣະຄຳວ່າ *"ໂດຍທົ່ວໄປຜູ້ເຜີຍພຣະຄຳເປັນຜູ້ທີ່ໄດ້ຮັບການຊົງເອີ້ນ ເມື່ອມີວິກິດຕິການຫລືເຫດສຸກເສີນ ເພື່ອປະກາດພຣະປະສົງຂອງພຣະເຈົ້າ ຜູ້ເຜີຍພຣະຄຳເປັນຜູ້ທີ່ມີຄວາມສາມາດພິເສດດ້ານການເມືອງ ທ່ານເປັນຜູ້ທີ່ໄດ້ຮັບການສຶກສາຢ່າງດີໃນເຣື້ອງທົ່ວ ໆ ໄປທັງໃນເຣື້ອງພາຍໃນປະເທດ ແລະຕ່າງປະເທດ ໃນສມັຍຂອງທ່ານ ທ່ານສາມາດທີ່ຈະໃຫ້ຄວາມຮູ້ແລະຄຳແນະນຳຕໍ່ກະສັດແລະຣັຖບຸຣຸດໃນສມັຍຂອງເຂົາຢ່າງດີ ແລະທ່ານຫວັງວ່າບຸຄຄົນເຫລົ່ານັ້ນຈະເອົາໃຈໃສ່ໃນສິ່ງທີ່ເຂົາໄດ້ກ່າວ ເພາະເຫດທີ່ເປັນພຣະຄຳຂອງພຣະເຢໂຮວາຫ໌ ເຂົາຈະຢືນຂຶ້ນກ່າວໃນຖານະເປັນຜູ້ທີ່ເປີດເຜີຍໃຫ້ເຫັນພຣະປະສົງຂອງພຣະເຈົ້າ ເມື່ອມີວິກິດຕິການທີ່ສຳຄັນຂອງປະວັດສາດອິສຣາເອລ... ຜູ້ເຜີຍພຣະຄຳເປັນຜູ້ທີ່ມີເສຣີພາບ ແລະສິດທິອຳນາດທີ່ຈະສະແດງອອກເຖິງເຣື້ອງຣາວສມັຍນັ້ນ [27]*

ດັ່ງນັ້ນຈະເຫັນໄດ້ວ່າ ການກ່າວຂອງຜູ້ເຜີຍພຣະຄຳທຸກຄັ້ງ ເປັນທັງການເທສນາແລະການສອນເປັນສິ່ງທີ່ມີຄວາມສຳຄັນຕໍ່ຜູ້ຟັງຫລາຍ ຂ່າວສານຫລືສາຣະທີ່ກ່າວມັກຈະເປັນສິ່ງສຳຄັນ ທີ່ຜູ້ຟັງຕ້ອງຖືປະຕິບັດປ່ຽນແປງຫລືແກ້ໄຂທັນທີ ຖ້າຜູ້ຟັງຍອມແກ້ໄຂກໍຈະຣອດພົ້ນຈາກວິກິດຕິການທີ່ກຳລັງເກີດຂຶ້ນ ຄຳສອນຈຶ່ງເປັນຂໍ້ຊີ້ແນະໃຫ້ຜູ້ຟັງປະຕິບັດຕາມພຣະປະສົງຂອງພຣະເຈົ້າ

ໃນສມັຍທີ່ກັບຄືນຈາກການເປັນສະເລີຍໃນບາບີໂລນ ໄດ້ໃຊ້ທັມສາລາ (ຫລືໂຮງທັມ, Synagogue) ເປັນສຖານທີ່ສຶກສາພຣະທັມອີກແຫ່ງນຶ່ງທີ່ມີຄວາມສຳຄັນຫລາຍ ທັມສາລາເປັນບ່ອນທີ່ຜູກພັນປະຊາຊົນເຂົ້າກັບພຣະບັນຍັດຂອງພຣະເຈົ້າຫລືໂທຣາທ໌

> *"ຄວາມເຊື່ອແລະຄວາມປະພຶດຂອງພວກຢິວ ມີຮາກຖານມາຈາກພຣະທັມໂທຣາທ໌ ພຣະທັມໂທຣາທ໌ເຮັດໃຫ້ຊາວຢິວມີລັກສນະແຕກຕ່າງກວ່າຊົນຊາດອື່ນ ແລະເປັນເຄື່ອງຜູກພັນຊາວຢິວເຂົ້າໄວ້ດ້ວຍກັນ ບໍ່ວ່າຈະຢູ່ບ່ອນໃດ ທັມສາລາ (ຕາມຄວາມໝາຍພາສາກຣີກໝາຍເຖິງທີ່ປະຊຸມ) ເປັນສຖາບັນໃນລັດທິຢູດານິຍົມ ທັມສາລາຈັດວ່າເປັນສຖາບັນທີ່ສຳຄັນເພາະພາໃຫ້ຄົນຮູ້ຈັກພຣະທັມໂທຣາທ໌ ແລະມີຄວາມນັບຖືພຣະທັມໂທຣາທ໌ຢ່າງເລິກຊຶ້ງໃນຈິດໃຈ ຄຳວ່າ "ທັມສາລາ" ມີຄວາມໝາຍເຖິງການປະຊຸມເຕົ້າໂຮມຂອງຢິວຕາມທ້ອງຖິ່ນຕ່າງ ໆ ຫລາຍກວ່າສຖານທີ່ປະຊຸມ" [28]*

ຕົ້ນກຳເນີດຂອງທັມສາລາເປັນສິ່ງທີ່ບໍ່ອາດຈະກ່າວເຖິງໄດ້ຢ່າງແນ່ນອນ ທັມສາລາອາດຈະເກີດມີຂຶ້ນໃນສມັຍທີ່ຊາວຢິວໄດ້ໄປເປັນສເລີຍເສິກໃນບາບີໂລນ ຊຶ່ງທີ່ນັ້ນບໍ່ມີພຣະວິຫານ ແຕ່ມີສາສນາກິຈທີ່ຈຳເປັນຈະຕ້ອງເຮັດຫລາຍປະການ ແລະເດັກນ້ອຍຮຸ່ນໃຫມ່ບໍ່ໄດ້ຮັບການອົບຮົມສັ່ງສອນກ່ຽວກັບສາສນາທີ່ພຣະເຈົ້າຊົງບັນຊາໄວ້ ໃນເວລານັ້ນເປັນສິ່ງທີ່ເປັນໄປບໍ່ໄດ້ໃຫ້ຊາວຢິວຈະເດີນທາງໄປນມັສການທີ່ພຣະວິຫານໃນກຸງເຢຣູຊາເລັມ ດັ່ງນັ້ນເພື່ອເປັນການຮັກສາມໍຣະດົກທີ່ຕົກທອດມາຈາກບັນພະບຸຣຸດຈຶ່ງມີການພັທນາທັມສາລາຂຶ້ນ ສິ່ງທີ່ໄດ້ປາກົດແຈ້ງຄື ຫລັງຈາກການເປັນສເລີຍເສິກ *"ທັມສາລາໄດ້ເພີ່ມຈຳນວນຂຶ້ນຢ່າງວ່ອງໄວ ໃນເມືອງໃຫຍ່ຂອງຢູເດັຽ ແລະໃນສັງຄົມຂອງຄົນຕ່າງຊາດທີ່ຄົນຢິວມັກອາສັຍຢູ່" [29]*

> *"ທັມສາລາ ນອກຈາກຈະເປັນທີ່ປະກອບສາສນາກິຈ ເຊັ່ນການນມັສການແລ້ວກໍຍັງເປັນບ່ອນສຳລັບການສັ່ງສອນຕ່າງ ໆ ອີກດ້ວຍ ເປັນທີ່ຮຽນທັມບັນຍັດສຳລັບຜູ້ໃຫຍ່ແລະເດັກນ້ອຍ ເປັນສູນກາງຂອງກິຈກັມຕ່າງ ໆ ສຳລັບຊຸມຊົນອີກດ້ວຍ ເປັນບ່ອນອະພິປາຍບັນຫາຕ່າງ ໆ ເປັນບ່ອນຈັດງານສົບ ໃນທັມສາລາຈະມີໂຕະສຳຫັບອ່ານພຣະທັມ ແລະມີຕູ້ສຳລັບເກັບຮັກສາພຣະຄັມພີ" [30]*

ການນມັສການທີ່ທັມສາລາປະກອບດ້ວຍສ່ວນທີ່ສຳຄັນ ຄື ການອະທິຖານ ການອ່ານພຣະຄັມພີ ການເທສນາແລະການຂໍພຣະພອນ *"ຫລັກການສອນໃນການນມັສການໂດຍທົ່ວໄປປະກອບດ້ວຍການທ່ອງຈຳ ຂໍ້ພຣະຄັມພີຕອນທີ່ໄດ້ເລືອກໄວ້ ມີການອ່ານແລະແປພຣະບັນຍັດຄັ້ງລະນຶ່ງຂໍ້ ຊຶ່ງຈະອ່ານໄດ້ຄົບພາຍໃນສາມປີ ນອກນັ້ນຍັງມີການອ່ານແລະແປພຣະທັມຂອງຜູ້ເຜີຍພຣະຄຳເໝືອນພຣະບັນຍັດ ໂດຍອ່ານສາມຂໍ້ເປັນນຶ່ງຫນ່ວຍ" [31]* ການວາງແຜນການສຶກສາແບບນີ້ເຮັດໃຫ້ຜູ້ຮຽນໄດ້ຮຽນຮູ້ໃນທຸກສິ່ງທີ່ເຂົາຄວນຈະໄດ້ຮຽນ ບໍ່ມີການຮຽນເຣື້ອງໃດຊ້ຳ ນີ້ເປັນຂໍ້ຄິດແກ່ເຮົາໃນການຈັດສຶກສາແບບນີ້

ການສຶກສາໃນບົດນີ້ເປັນການພະຍາຍາມນຳເອົາສາສນາສຶກສາໃນພັນທະສັນຍາເດີມ ທີ່ມີຄວາມສຳຄັນ ແລະເປັນປະໂຍດຕໍ່ການຈັດຄຣິສຕຽນສຶກສາໃນປັດຈຸບັນອອກມາກ່າວ ໃນພັນທະສັນຍາເດີມມີ

ການກ່າວເຖິງການສຶກສາ ແລະການເຄື່ອນໄຫວທາງການສຶກສາຫລາຍ ແຕ່ໃນບົດນີ້ໄດ້ຫຍິບຍົກເອົາ ແຕ່ສິ່ງທີ່ຄິດວ່າເປັນແບບຢ່າງທີ່ດີ ແລະເປັນປະໂຍດຕໍ່ການພັທນາຄຣິສຕຽນສຶກສາໃນປັຈຈຸບັນມາສະເນີເທົ່ານັ້ນ

---

## ຂໍ້ອ້າງອີງ


[1] Howard P. Colson,"The Biblical Precendent "in <u>The Ministry of Religious Education</u>, ed. by John T. Sisemore (Nashville: Broadman Press, 1978, p.13.

[2] Randolph Crump Miller, <u>Education for Christian Living</u>, (2nd ed., Englewood Cliffs: Prentice-Hall, Inc., 1963), p. 3.

[3] Howard P. Colson, Loc. cit.

[4] Alfred Edersheim, <u>The Life and Times of Jesus The Messiah</u>, (Michigan: Wm. B. Eerdmans Publishing Co., 1977), Vol. I., p. 230.

[5] James D. Smert, <u>The Teaching Ministry of the Church</u>, 4th ed., (Philadelphia: The Westminister Press, 1976), p. 14.

[6] A. W. Morton, "Education in Biblical Times," in the <u>Zondervan Pictorical Encyclopedia of the Bible</u>, ed. by Merrill C. Tenny, (Grand Rapids: The Zondervan Corporation, 1977), p. 207.

[7] J. Kaster, "Education, OT." in <u>The Interpreter's Dictionary of the Bible</u>, ed. by George Arttrick (New York: Abingdon Press, 1962), p. 29.

[8] Woward P. Colson, op. cit., p.15.

[9] Ralph Gower, "Everyday Life in Bible Times," in the <u>Eerdmans' Handbook tothe Bible</u>, (Michigan: William B. Eermans Publishing Company, 1967), p. 94.

[10] Randolph Crump Miller, op. cit., p. 19.

[11] J. M. Price, et. al., A Survery of Rigigious Education, (2nd ed., New York: The Ronald Press Company, 1940), p. 31-32.

[12] William Bean Kennedy, "Christian Education Through History," in An Introducation to Christian Education, ed. by Marvin J. Taylor, (New York: Abingdon Press, 1966), p.21.

[13] A. W. Morton, Loc. cit.

[14] D. F. Payne, "Education", in the New Bible Dictionary, ed. by J. D. Duglas (London: The Inter-varsity Fellowship, 1962), p. 337.

[15] Howard P. Colson, op. cit., p.14.

[16] J.Kaster, loc. cit.

[17] William W. Graves, The Church Teaching and Training, second course, (Texas: Carib Baptist Publications, 1974), p.12.

[18] Howard P. Colson, loc. cit.

[19] Howard P. Colson, op. cit., p. 16.

[20] J. Kaster, op. cit., p. 30.

[21] J. Kaster, loc. cit.

[22] J. M. Pric3e. loc. cit.

[23] J. Kaster, op. cit., p.31.

[24] J. Kaster, loc. cit.

[25] J. M. Price, op. cit. p. 33.

[26] Howard P. Colson, op. cit., p. 17.

[27] H. I. Hester, The Heart of Hebrew History, (2nd ed., Liberty: The William Jewell Press, 1950), p. 264.

[28] Howard Clark Kee, Franklin W. Young, Karlfied Frochlich, Understanding the New Testament, (2nd ed., Englewook Cliffs: Prentce-Hall Inc., 1965), pp. 32-33.

[29] J. M. Price, op. cit., p. 28.

[30] ພິສນຸ ອັດຂພິນ, ສັພທານຸກັມພຣະຄັມພີ ເຫຼັ້ມ 2, (ກຸງເທພຯ: ສໍານັກພິມສຸຣິຍບັນ, 1977), ຫນ້າ 121.

[31] J. M. Price, op. cit., p.19.

# ບົດທີ 3

## ຄຣິສຕຽນສຶກສາ
## ໃນພຣະຄຣິສທັມຄັມພີ ພາກພັນທະສັນຍາໃຫມ່

ພຣະຄັມພີພາກພັນທະສັນຍາເດີມແລະພາກພັນທະສັນຍາໃຫມ່ແມ່ນວ່າຈະຖືກແບ່ງອອກເປັນສອງພາກ ແຕ່ກໍມີຄວາມກ່ຽວຂ້ອງສັມພັນກັນໂດຍສະເພາະຢ່າງຍິ່ງດ້ານສາສນາສຶກສາ *"ເປັນຄວາມຈິງທີ່ເຫັນໄດ້ຊັດວ່າ ການສຶກສາໃນພັນທະສັນຍາເດີມເປັນການຕຽມທາງສຳຫຼັບຣາຍການສອນໃນພາກພັນທະສັນຍາໃຫມ່ ແນວຄວາມຄິດຂອງຄຣິສຕຽນໃນເຣື້ອງພຣະເຈົ້າເປັນແນວຄວາມຄິດດັ້ງເດີມທີ່ມາຈາກຊາວຢິວອັນເດັ່ນຊັດຂຶ້ນໃນຄວາມເຊື່ອເຣື້ອງພຣະເຈົ້າອົງດຽວ (Monotheism ລັດທິທີ່ເຊື່ອວ່າມີພຣະເຈົ້າແຕ່ອົງດຽວ) ມີການເນັ້ນເຖິງຄວາມຊອບທັມ ແລະຄວາມບໍຣິສຸດຂອງຊີວິດ" [1] "ຫລັກວິທີການສຶກສາໃນພາກພັນທະສັນຍາເດີມໄດ້ຖືກເນັ້ນໃຫ້ເຫັນໄດ້ຢ່າງແຈ່ມແຈ້ງ ແຕ່ໃນພາກພັນທະສັນຍາໃຫມ່ມີການເນັ້ນຫລັກວິທີການສຶກສາທີ່ເດັ່ນຊັດຫລາຍກວ່າ ຄວາມຈິງອັນນີ້ເບິ່ງໄດ້ຈາກພຣະເຢຊູຜູ້ເປັນພຣະບໍຣົມມະຄຣູ ພຣະເຢຊູໄດ້ທຸ່ມເທຊີວິດຂອງພຣະອົງເອງໃນການສອນ ພຣະອົງໄດ້ຊອກຫາທັງຄຳສອນ ແລະຕົວຢ່າງທີ່ໃຊ້ປະກອບໃນການສອນທີ່ເຮັດໃຫ້ເກີດຄວາມເຂົ້າໃຈທີ່ຊັດແຈ້ງ" [2]* ໃນພາກພັນທະສັນຍາເດີມມີການເນັ້ນເຖິງຄວາມສຳຄັນຂອງການສອນໂດຍຕລອດ ຊຶ່ງເປັນພື້ນຖານຂອງສາສນາສຶກສາ *"ຕລອດພາກພັນທະສັນຍາໃຫມ່ກໍມີການເນັ້ນການສອນ ໃນຕອນແຣກທີ່ຄຣິສຈັກໄດ້ເຣີ່ມກໍ່ຕັ້ງຂຶ້ນ ການສອນເປັນສິ່ງທີ່ຈຳເປັນສຳລັບຄວາມເປັນຢູ່ຂອງຄຣິສຈັກ ການສອນກ່ຽວຂ້ອງກັບການນະມັສການຫລາຍທີ່ສຸດ ເມື່ອພິຈາຣະນາດູແລ້ວຈະເຫັນວ່າທັງການສອນແລະການເທສນາມີຄວາມສຳຄັນທັງຄູ່ຈະຂາດກັນບໍ່ໄດ້" [3]* ໃນການແນະນຳຂ່າວປະເສີດເຣື້ອງການທົນທຸກທໍຣະມານ ການສິ້ນພຣະຊົນ ແລະການເປັນຂຶ້ນຈາກຄວາມຕາຍຂອງພຣະຄຣິສຈຳເປັນຕ້ອງມີການສອນນຳດ້ວຍ ເພື່ອໃຫ້ຜູ້ຮຽນມີຄວາມເຂົ້າເພີ່ມຂຶ້ນແລະຄົບຖ້ວນສົມບູນ ແຕ່ການປະກາດເຜີຍແຜ່ຍັງດຳເນີນຕໍ່ໄປດ້ວຍການເທສນາ

### ນຶ່ງ. ການສອນຂອງພຣະເຢຊູຄຣິສ

### 1.1 ພຣະເຢຊູຄຣິສຜູ້ເປັນພຣະບໍຣົມມະຄຣູ

ວຽກການອັນໃຫຍ່ທີ່ພຣະເຢຊູຄຣິສເຮັດຄື **"ການສອນ"** *"ບໍ່ວ່າພຣະອົງຈະສະເດັດໄປເທິງພູ (ມກ 5:1) ຫລືແຄມທະເລ ພຣະອົງຊົງສິດສອນ (ມກ 2:13, 4:1) ປະຊາຊົນມັກອ້ອມລ້ອມພຣະອົງ ມີເທື່ອນຶ່ງທີ່ແຄມທະເລປະຊາຊົນມາອ້ອມລ້ອມພຣະອົງຢ່າງຫລວງຫລາຍ ຈົນພຣະອົງຕ້ອງສະເດັດລົງໄປປະທັບຢູ່ໃນເຮືອທີ່ທະເລແລະຊົງສິດສອນເຂົາ (ມກ 4:1)" [4]* ການກະທຳຂອງພຣະອົງເຮັດໃຫ້ປະຊາຊົນຮ້ອງວ່າ **"ການນີ້ເປັນຢ່າງໃດຫນໍ ຄືງເປັນຄວາມສິດສອນໃຫມ່ແທ້"** (ມກ 1:27)

*"ບາງຄົນເອີ້ນພຣະເຢຊູວ່າ ຣັບບີ (ແປວ່າພຣະອາຈານ, ມກ 9:5, 10:51, 11:21) ຊຶ່ງເປັນຄຳທີ່ຊາວຢິວໃຊ້ເອີ້ນຜູ້ທີ່ໄດ້ຮັບການຍ້ອງຍໍ.. ຄຳສອນຂອງພຣະເຢຊູເປັນທີ່ພໍໃຈຂອງຊາວເມືອງ ເຂົາຈຶ່ງເອີ້ນພຣະອົງວ່າ ຣັບບີ" [5]* ການທີ່ຜູ້ຂຽນແລະປະຊາຊົນພາກັນຮ້ອງພຣະນາມວ່າພຣະອາຈານ ແລະຣັບບີ ເຮັດໃຫ້ເຮົາມີຄວາມຄິດເຫັນເໝືອນກັບທ່ານນີໂກເດມວ່າ "ທ່ານອາຈານເຈົ້າຂ້າ ພວກຂ້າ ພະເຈົ້າຊາບຢູ່ວ່າທ່ານເປັນຄຣູທີ່ມາຈາກພຣະເຈົ້າ (ຢຮ 3:2) *"ຜູ້ຂຽນຂ່າວປະເສີດຂອງພຣະເຢຊູ ທັງ ສີ່ເຫລັ້ມບໍ່ໄດ້ຮ້ອງພຣະນາມຂອງພຣະອົງວ່າ "ນັກເທສ" ເລີຍສັກເທື່ອດຽວ" [5]* ໃນປັດຈຸບັນ *"ເຮົາ ຜູ້ຢູ່ໃນຄຣິສສາສນາມອງດູພຣະເຢຊູວ່າ ເປັນບຸດມະນຸດທີ່ແທ້ຈິງ ແລະເປັນພຣະບຸດຂອງພຣະເຈົ້າທີ່ແທ້ ຈິງ ເປັນຜູ້ຊ່ວຍໃຫ້ຣອດພົ້ນແລະເຈົ້າເໜືອຫົວແຫ່ງຊີວິດ ແຕ່ພຣະອົງຊົງຮັບພາຣະໜ້າທີ່ຂອງຄຣູ" [7]*

ທ່ານ ຣາວາຣ໌ດ ພີ ໂຄລສັນ ໄດ້ເນັ້ນເຖິງການເປັນພຣະບໍຣົມມະຄູຂອງພຣະເຢຊູວ່າ

> *"ພຣະເຢຊູໄດ້ເນັ້ນຄວາມສຳຄັນຂອງພຣະຣາຊກິຈການສອນທັງໂດຍຕົວຢ່າງແລະພຣະບັນຊາ ພຣະອົງເອງເປັນພຣະອາຈານທີ່ດີເຍັ່ມ... ແມ່ນແທ້ທີ່ສຸດການສອນແລະການເທສນາຫລາຍເທື່ອ ເປັນສິ່ງທີ່ຄວບຄູ່ກັນໄປ ແຕ່ວ່າການສອນຂອງພຣະອົງເປັນພື້ນຖານແລະສູນການໃນທຸກສິ່ງທີ່ພຣະ ອົງຊົງເຮັດ ພຣະອົງໄດ້ຊົງຕັ້ງໂຮງຮຽນທີ່ໃຫຍ່ທີ່ສຸດ ພຣະອົງຊົງເປັນຄຣູແລະສາວົກສິບສອງ ຄົນເປັນຜູ້ຮຽນ ພຣະອົງຍັງໄດ້ສອນປະຊາຊົນເປັນຈຳນວນຫລວງຫລາຍ ຫລັກການແລະວິທີການ ທີ່ພຣະເຢຊູຊົງຕັ້ງຂຶ້ນເປັນແນວຄິດທີ່ລ້ຳໜ້າ ຊຶ່ງບັນດານັກຄຣິສຕຽນສຶກສາຈະຕ້ອງຮຽນຮູ້" [8]*

ການເປັນພຣະຄຣູຂອງພຣະເຢຊູຄຣິສ ເປັນຄວາມຈິງທີ່ບໍ່ມີຜູ້ໃດສາມາດປະຕິເສດໄດ້ ແມ່ນວ່າ ພຣະອົງຈະບໍ່ໄດ້ຂຽນຕຳຣາຫລືຣວບຣວມຄຳສອນໄວ້ດ້ວຍຕົວຂອງພຣະອົງເອງ ແຕ່ຄົນເປັນຈຳນວນຫລາຍ ໄດ້ເຫັນວ່າ ການກະທຳແລະຄຳສອນຂອງພຣະອົງ ມີຄຸນຄ່າສົມຄວນຢ່າງຍິ່ງທີ່ທຸກຄົນສົມຄວນໄດ້ຮຽນຮູ້ຈັກ ພຣະເຈົ້າແລະຄວາມຈິງແຫ່ງຊີວິດ ຈຶ່ງເຮັດໃຫ້ມີການຣວບຣວມໜັງສືຂ່າວປະເສີດພຣະເຢຊູຄຣິສຂຶ້ນ

## 1.2 ພື້ນຖານການສອນຂອງພຣະເຢຊູຄຣິສ

*"ໃນການສິດສອນພຣະເຢຊູບໍ່ພຽງແຕ່ໃຊ້ພຣະຄັມພີຂອງຊາວເຮັບເຣີຢ່າງຫລວງຫລາຍ ແຕ່ພຣະ ອົງໄດ້ຊົງສະແດງໃຫ້ເຫັນວ່າພຣະອົງຊົງເຂົ້າໃຈຄວາມໝາຍຂອງພຣະຄັມພີຢ່າງລຶກຊຶ້ງ" [9]* ການທີ່ ພຣະເຢຊູຊົງມີຄວາມຮູ້ຄວາມເຂົ້າໃຈໃນພຣະຄຳຂອງພຣະເຈົ້າຢ່າງຫລວງຫລາຍ ບໍ່ແມ່ນເນື່ອງຈາກວ່າ ພຣະອົງຊົງເປັນພຣະບຸດຂອງພຣະເຈົ້າແຕ່ຢ່າງດຽວ ລູກາໄດ້ບັນທຶກວ່າ "ພຣະເຢຊູກໍໄດ້ຈະເຣີນຂຶ້ນ ໃນດ້ານສະຕິປັນຍາ ໃນດ້ານຮ່າງກາຍ ເປັນທີ່ຊອບຕໍ່ພຣະເຈົ້າແລະຕໍ່ມະນຸດເໝືອນກັນ" (ລກ 2:52) *ສະແດງວ່າຄວາມຮູ້ຄວາມເຂົ້າໃຈຂອງພຣະອົງເນື່ອງມາຈາກການສຶກສາດ້ວຍ ແມ່ນວ່າ "ທຸກຄົນຈະບໍ່ມີ ມ້ວນພຣະຄັມພີໃນເຮືອນ ແຕ່ທຸກໂຮງທັມຈະມີມ້ວນພຣະຄັມພີຢ່າງນ້ອຍກໍນຶ່ງມ້ວນບາງເທື່ອກໍຫລາຍມ້ວນ" [10]* ພຣະເຢຊູຊົງລຶ້ງເຄີຍກັບໂຮງທັມຕັ້ງແຕ່ພຣະອົງຍັງຊົງພຣະເຍົາ ແລະແມ່ນພຣະອົງຈະຊົງໃຫຍ່ ຂຶ້ນແລະອອກຮັບໃຊ້ພຣະເຈົ້າແລ້ວ ພຣະອົງກໍຍັງຊົງມີສ່ວນຮ່ວມໃນໂຮງທັມຢູ່ສເມີ

ທ່ານວິລຽມ ບີນ ເຄນນາດີ້ ໄດ້ບັນຍາຍເຖິງຄວາມສຳຄັນຂອງໂຮງທັມໃນສະມັຍຂອງພຣະ ເຢຊູວ່າ *"ໂຮງທັມໄດ້ຮັບການພັດທນາໃຫ້ເປັນສູນກາງທ້ອງຖິ່ນຂອງການນັສການແລະການສອນ ເປັນສຖານທີ່ທີ່ປະຊາຊົນຊາວຢິວທີ່ເປັນຜູ້ໃຫຍ່ໄດ້ຮຽນພຣະບັນຍັດ (ໂທຣາຫ໌) ແລະຕີຄວາມ*

*ໝາຍ ພຣະທັມບັນຍັດສຳລັບຊີວິດຂອງເຂົາ ການອົບຮົມໃນໂຮງທັມສອນໃຫ້ຜູ້ເປັນພໍ່ແມ່ຮູ້ຈັກລ້ຽງດູລູກຫລານຂອງເຂົາໃນຄອບຄົວ ສມັຍຫລັງຈາກພວກຣັບບີຫລືຄຣູໄດ້ເພີ່ມໂຮງຮຽນເຂົ້າກັບໂຮງທັມເປັນບ່ອນທີ່ເຂົາສອນເດັກຊາຍໃຫ້ມີຄວາມຮູ້ພາສາເຮັບບຣູ ແລະຄຳສອນທີ່ສືບມາດ້ວຍປາກປາກົດວ່າ ມີການຜະລິດພຣະຄັມພີເພີ່ມຂຶ້ນຫລາຍເທົ່າ... ໃນໂຮງຮຽນບຸດຫລານໄດ້ຮຽນຢ່າງເປັນຫລັກການຫລາຍກວ່າຮຽນໃນຄອບຄົວ ໃນສມັຍທຳອິດໄດ້ສອນໃນເຣື່ອງການດຳເນີນຊີວິດທີ່ຊາວຢິວມີຄວາມແຕກຕ່າງຈາກຜູ້ອື່ນ ໃນຖານະທີ່ຊາວຢິວເປັນປະຊາກອນຂອງພຣະເຈົ້າ ແລະຕ້ອງຢູ່ພາຍໃຕ້ພຣະທັມບັນຍັດຂອງພຣະເຈົ້າ ການອະທິບາຍເຖິງມໍຣະດົກຕົກທອດທີ່ໄດ້ຮັບມາຕັ້ງແຕ່ອັບຣາຮັມແລະໂມເຊແລະດາວິດຈົນເຖິງສມັຍນັ້ນ ພຣະເຢຊູຜູ້ເປັນເດັກຊາຍຊາວຢິວໄດ້ໃຫຍ່ຂຶ້ນມາພາຍໃຕ້ຣະບົບຂອງໂຮງຮຽນຊະນິດນີ້ [11]*

*"ຄັ້ງແລ້ວຄັ້ງເລົ່າພຣະເຢຊູໄດ້ສິດສອນໃນໂຮງທັມຕາມປະເພນີຢິວ ໂຮງທັມມີການນມັສການສອງເທື່ອວັນສະບາໂຕ ຕອນເຊົ້າເທື່ອນຶ່ງເປັນການນມັສການເທສນາ ອີກເທື່ອນຶ່ງໃນຕອນບ່າຍເປັນການນມັສການທີ່ເນັ້ນການສອນເປັນສຳຄັນ" [12]* ໂຮງທັມບໍ່ເປັນພຽງບ່ອນທີ່ໃຫ້ຄວາມຮູ້ເທົ່ານັ້ນ ແຕ່ຍັງເປັນປະໂຍດໃນການປະກອບພຣະຣາຊກິຈຂອງພຣະເຢຊູ ຊຶ່ງອັກສາວົກໄດ້ໃຊ້ໃນການປ່າວປະກາດຂ່າວປະເສີດໃນຕອນທຳອິດອີກດ້ວຍ

ນອກຈາກໂຮງທັມແລ້ວ ພຣະວິຫານກໍເປີດໂອກາສ ໃຫ້ມີການສຶກສາພຣະຄຳຂອງພຣະເຈົ້າຄືກັນ ເມື່ອພຣະເຢຊູອາຍຸ 12 ພັນສາ ພຣະອົງນັ່ງຢູ່ໃນພຣະວິຫານຖ້າມກາງພວກອາຈານ ໄດ້ຟັງແລະໄຕ່ຖາມພວກອາຈານ ຄົນທັງປວງໄດ້ຍິນກໍປະຫລາດໃຈໃນສຕິປັນຍາ ແລະຄຳຕອບຂອງພຣະອົງນັ້ນ (ລກ 2:46, 47) ພຣະອົງໄດ້ຕອບກັບບິດາມາຣດາທີ່ຫຽວຊອກຫາພຣະອົງວ່າ "ເຈົ້າທັງສອງຊອກຫາເຮົາເຮັດຫຽັງ ຍັງບໍ່ຮູ້ຫລືວ່າເຮົາຕ້ອງຢູ່ໃນທີ່ສະຖິດແຫ່ງພຣະບິດາຂອງເຮົາ" (ລກ 2:49) *"ການທີ່ພຣະອົງຢູ່ຖ້າມກາງເຂົາ ຟັງເຂົາ ໄຕ່ຖາມ ແລະການໂຕ້ຕອບປັນຫາຕ່າງ ໆ ເປັນວິທີການສຶກສາທີ່ໄດ້ຮັກສາຕັ້ງແຕ່ສມັຍໂບຮານ" [13]*

ຈະເຫັນໄດ້ວ່າຮີດຄອງແລະວັທນະທັມຂອງພວກຢິວໄດ້ສິ່ງເສີມຊຸກຢູ້ສາສນາສຶກສາເປັນຢ່າງຫລາຍພາຍໃຕ້ຣະບົບການສຶກສາແນວນີ້ເຮັດໃຫ້ພຣະຄຳຂອງພຣະເຈົ້າຝັງແໜ້ນຢູ່ໃນຫົວໃຈຂອງຊາວຢິວ ແລະເປັນພື້ນຖານທີ່ດີ ທີ່ພຣະເຈົ້າຈະປະທານໃຫ້ພຣະເຢຊູບັງເກີດມາໃນສັງຄົມແນວນີ້ຂອງຊາວຢິວ

ທ່ານເຈ.ເອນ. ໄພຣ ບັນລະຍາຍເຖິງພຣະລັກສນະຂອງພຣະອົງໄວ້ວ່າ

3(ສາມ) → *"ພຣະລັກສນະອັນສົມບູນຂອງພຣະເຢຊູເຮັດໃຫ້ເກີດຄວາມແຈ້ງເຖິງລັກສນະຂອງການເປັນຄຣູ ພຣະອົງມີຄວາມຕັ້ງພຣະທັຍຈະຮັບໃຊ້ມະນຸດ ມີຄວາມເຊື່ອໝັ້ນໃນການສອນ ມີຄວາມຮູ້ພຣະຄັມພີແລະທັມມະຊາດຂອງມະນຸດ ແລະມີຄວາມຫຍັ່ງຮູ້ເຣື່ອງວິທີສອນແລະກະບວນການຕ່າງ ໆ ພຣະອົງເປັນພຣະບໍຣົມມະຄຣູທີ່ມີລັກສນະອັນສູງສຸດທີ່ໂລກໄດ້ເຄີຍຮູ້ຈັກມາ" [14]*

## 1.3 ຄວາມມຸ່ງໝາຍໃນການສອນຂອງພຣະເຢຊູຄຣິສ

ການທີ່ພຣະເຢຊູສລະຊີວິດຂອງພຣະອົງເພື່ອການສອນນັ້ນ ຍ່ອມຈະມີຈຸດມຸ່ງໝາຍທີ່ແນ່ນອນ ພຣະຕັສວ່າ **"ເຮົາໄດ້ມາເພື່ອເຂົາທັງຫລາຍຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍຣິບູນ"** (ຢຮ 10:10) ພຣະອົງຊົງຊອກຫາທາງທີ່ຈະໃຫ້ສາວົກໄດ້ຊີວິດໃໝ່ຈາກພຣະອົງໃນການປ່ຽນແປງຊີວິດ ເພື່ອວ່າສາວົກ

ຈະໄດ້ມີປະສົບການໃນຊີວິດອັນສົມບໍຣິບູນທີ່ພຣະເຢຊູປະທານໃຫ້ ແລະແບ່ງປັນໃຫ້ກັບຜູ້ອື່ນໃນການກໍ່ຕັ້ງສັງຄົມມະນຸດໃຫມ່ຂຶ້ນ *"ພຣະເຢຊູຊົງສອນຈາກແງ່ມຸມຂອງສາສນາສາດ ອັນເປັນສິ່ງທີ່ກຽວກັບບັນຫາແລະຄວາມຕ້ອງການຂອງກຸ່ມຊົນຊຶ່ງພຣະອົງໄດ້ພະເຊີນ ພຣະອົງໄດ້ພົບວ່າການເຕີບໃຫຍ່ກ້າວຫນ້າຂຶ້ນຂອງຜູ້ຟັງຂອງພຣະອົງ ນໍາໃຫ້ເຂົາມີຄວາມຈິງຮັກພັກດີຕໍ່ພຣະບິດາຫລາຍຂຶ້ນ ແລະລຶກຊຶ້ງຂຶ້ນ" [15]* ດັ່ງນັ້ນເຮົາຈະເຫັນໄດ້ວ່າຄວາມມຸ່ງຫມາຍຂອງພຣະອົງບໍ່ໄດ້ຢຸດຢູ່ທີ່ການສອນພຽງຢ່າງດຽວ ແຕ່ຍັງຕ້ອງການນໍາໃຫ້ຄົນມີຄວາມສັມພັນກັບພຣະບິດາ ໂດຍມີຊີວິດໃຫມ່ໃນການກັບຄືນດີກັນກັບພຣະເຈົ້າ

ທ່ານຟັນດ໌ລີ່ ບີ. ເອຈ ບັນລະຍາຍເຖິງການສອນຂອງພຣະເຢຊູທີ່ເກີດຜົນວ່າ

> *"ພຣະເຢຊູຊົງສອນແລະຊີວິດຂອງມະນຸດກໍຮັບການປ່ຽນແປງ ນິສັຍຂອງເຂົາໄດ້ຮັບການປ່ຽນແປງ ຄວາມເປັນຢູ່ຂອງເຂົາໄດ້ຮັບການປ່ຽນແປງ ແລະດໍາເນີນຊີວິດຕາມພຣະປະສົງຂອງພຣະເຈົ້າ ນີ້ຄືຄວາມດີອັນປະເສີດຂອງຄຣິສຕຽນສຶກສາທີ່ຍັງເກີດຜົນ ຊຶ່ງເຮົາຜູ້ເປັນຄຣູຄຣິສຕຽນໃນສມັຍນີ້ຕ້ອງຊອກຫາ" [16]*

ເຮົາເຫັນໄດ້ວ່າຄວາມມຸ່ງຫມາຍຂອງພຣະເຢຊູຄຣິສບໍ່ໄດ້ຢຸດຢູ່ທີ່ການສອນສາວົກພຽງກຸ່ມໃດກຸ່ມນຶ່ງຫລືຣຸ້ນນຶ່ງຣຸ້ນໃດ ພຣະອົງມີຄວາມມຸ່ງຫວັງວ່າ ສາວົກຂອງພຣະອົງຈະສືບທອດແນວຄວາມຄິດຂອງພຣະອົງໃນການສອນຄົນອື່ນໃຫ້ໄດ້ຮັບຊີວິດຢ່າງດຽວກັບທີ່ພວກເຂົາໄດ້ຮັບຈາກພຣະອົງ ຄວາມມຸ່ງຫມາຍນີ້ເຫັນໄດ້ແຈ້ງຈາກພຣະມະຫາບັນຊາຂອງພຣະເຢຊູ ໃນເວລາທີ່ພຣະອົງມີອໍານາດຊະນະຄວາມບາບກ່ອນທີ່ຈະຈາກໂລກນີ້ໄປ ພຣະອົງໄດ້ໃຫ້ພຣະທັນຊາເທື່ອສຸດທ້າຍໄວ້ວ່າ

> "ເຫດສະນັ້ນພວກທ່ານຈົ່ງອອກໄປ ສັ່ງສອນຊົນທຸກຊາດໃຫ້ເປັນສາວົກຂອງເຮົາ ໃຫ້ຮັບບັພຕິສມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສອນເຂົາໃຫ້ຖືຮັກສາສິ່ງສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ ນີ້ແຫລະ ເຮົາຈະຢູ່ກັບເຈົ້າທັງຫລາຍສະເມີໄປຈົນວ່າຈະຫມົດກັບ" (ມທ 28:19-20)

## 1.4 ວິທີການສອນຂອງພຣະເຢຊູຄຣິສ

*"ຖ້າຄົນນຶ່ງຄົນໃດພົບພຣະຄຣິສ ຈະບໍ່ພຽງພົບວ່າພຣະອົງຊົງສອນຄວາມຈິງອັນມີຄ່າເທົ່ານັ້ນ ແຕ່ພຣະອົງຍັງໃຊ້ວິທີການສອນທີ່ດີທີ່ສຸດດ້ວຍ" [17]* ໃນສມັຍຂອງພຣະເຢຊູບໍ່ມີເທຄໂນໂລຍີຊ່ວຍໃນການສອນ ແຕ່ເມື່ອອ່ານພຣະຄັມພີຈະພົບວ່າວິທີຕ່າງ ໆ ທີ່ພຣະອົງໃຊ້ນັ້ນໄດ້ຮັບການຕອບສນອງຈາກຜູ້ຟັງສເມີ ແມ່ນວ່າການຕອບສນອງຈະເປັນການຕອບຮັບຫລືປະຕິເສດກໍຕາມ ໄດ້ມີການສະແດງອອກໃຫ້ເຮົາເຫັນວ່າ ຜູ້ທີ່ຟັງຄໍາສອນຂອງພຣະອົງມີຄວາມເຂົ້າໃຈ ພຣະຄັມພີບໍ່ໄດ້ບັນຍາຍວ່າ ພຣະອົງໃຊ້ເວລາຕຽມອຸປກອນການສອນແນວໃດ ແຕ່ເຮົາສັງເກດເຫັນໄດ້ວ່າ *"ວິທີການສອນຂອງພຣະເຢຊູເປັນການເລີ້ມຕົ້ນທີ່ຕົວບຸກຄົນຜູ້ ມີຊີວິດຢູ່ໃນບ່ອນທີ່ເຂົາມີປະສົບການໃນຊີວິດປະຈໍາວັນ ຫລັງຈາກນັ້ນພຣະອົງໄດ້ໃຊ້ພຣະພຣະຄັມພີຊ່ວຍເຂົາໃຫ້ເຂົ້າໃຈວ່າ ເຂົາຈະດໍາເນີນຊີວິດທີ່ດີແນວໃດ" [18]*

ນອກຈາກນີ້ຍັງສັງເກດເຫັນໄດ້ວ່າ *"ວິທີການສອນຂອງພຣະເຢຊູເປັນຄໍາປຽບທຽບອຸປມາ ພຣະອົງໃຊ້ວິທີນີ້ກະຕຸ້ນໃຫ້ຜູ້ຟັງເກີດມໂນພາບປຽບທຽບຊຶ່ງທຸກຄົນເຫັນວ່າເປັນຄວາມຈິງແລະທຽບກັບຄວາມຈິງອີກແບບນຶ່ງທີ່ລຶກຊຶ້ງກວ່າ ຄໍາອຸປມາມັກໃຫ້ຜົນແນວນີ້ໄດ້ຢ່າງເຕັມທີ່" [19]*

ທ່ານໄພຣຊ໌ກ່າວເຖິງການໃຊ້ຄຳອຸປມາຂອງພຣະເຢຊູຄຣິສວ່າ

*"ຂໍ້ທີ່ໜ້າສັງເກດຄື ພຣະບໍຣິມມະຄຣູຊົງໃຊ້ການສອນໂດຍການເລົ່າເຣື່ອງຫລືເຣື່ອງປຽບທຽບເປັນສ່ວນຫລາຍ ວິທີນີ້ເຂົາເອີ້ນວ່າ ການເຮັດໃຫ້ສິລປະການສອນຂອງພຣະເຢຊູຄຣິສບໍຣິບູນ ພຣະຄຳຂອງພຣະເຢຊູທີ່ທ່ານມາຣະໂກໄດ້ບັນທຶກໄວ້ປະມານນຶ່ງໃນສີ່ເປັນແນວສອນແບບປຽບທຽບ ໃນພຣະຄຳຈຳນວນນີ້ທີ່ທ່ານມາຣະໂກໄດ້ບັນທຶກໄວ້ປະມານນຶ່ງໃນສອງນັ້ນເປັນເຣື່ອງອຸປມາທັງສິ້ນ ຄຳວ່າ "ອຸປມາ" ມີໃຊ້ປະມານຫ້າສິບເທື່ອໃນພັນທະສັນຍາໃໝ່ ຖ້າຮວມທັງຄຳເຕືອນສຕິຫລືຄຳອຸປມາ ອຸປມັຍແລະການບັນຍາຍສະແດງພາບອື່ນ ໆ ເຂົ້າດ້ວຍກັນກໍມີທັງໝົດປະມານນຶ່ງຮ້ອຍເຣື່ອງ... ຖ້າເຮົາເອົາເຣື່ອງອຸປມາຂອງພຣະຄຣິສຕັດອອກທັງໝົດຄຳສອນຂອງພຣະອົງກໍຈະມີເຫລືອຢູ່ພຽງເລັກນ້ອຍເທົ່ານັ້ນ ແລະຖ້າພຣະຄຣິສບໍ່ໄດ້ສອນໂດຍວິທີນີ້ຄຳສອນຂອງພຣະອົງກໍຈະບໍ່ເກີດຜົນຫລາຍປານນີ້" [20]*

ຄຳອຸປມາຂອງພຣະເຢຊູເປັນສະພາບການຊີວິດຢ່າງດຽວກັບຊີວິດຂອງປະຊາຊົນ ທີ່ເຂົາເຄີຍມີປະສົບການໃນຊີວິດປະຈຳວັນ ພຣະອົງຍັງສລຸບໂດຍການຮຽກຮ້ອງໃຫ້ກະທຳຕາມຄຳສອນ ສິ່ງທີ່ສຳຄັນເໜືອສິ່ງອື່ນໃດ *"ພຣະອົງຊົງຢູ່ນຳ "ສາວົກ" (ຫລືຜູ້ຮຽນ) ຊຶ່ງໄດ້ຮັບການຮຽນຮູ້ບໍ່ພຽງແຕ່ຈາກພຣະຄຳຂອງພຣະອົງ ແຕ່ຈາກຄວາມເຊື່ອຂອງພຣະອົງທີ່ສຳແດງອອກມາດ້ວຍ ໃນເວລາດຽວກັນພຣະອົງໄດ້ນຳໃຫ້ເຂົາຮັບຊີວິດໃໝ່" [21]*

ທ່ານໄພຣຊ໌ໄດ້ກ່າວສລຸບວິທີການສອນຂອງພຣະເຢຊູໄວ້ດັ່ງນີ້ *"ພຣະເຢຊູຄຣິສຊົງເປັນພຣະບໍຣິມມະຄຣູໂດຍການໃຊ້ສິ່ງຂອງທີ່ເບິ່ງເຫັນໄດ້ເປັນອຸປກອນໃນການສອນ ການສະແດງລະຄອນການເລົ່າເຣື່ອງ ຫລືຄຳອຸປມາຢູ່ໃນການສອນພຣະອົງ ພຣະອົງໃຊ້ວິທີສອນເຫລົ່ານີ້ປະກອບກັບລັກສນະທ່າທາງອັນນ່າອັສຈັນຂອງພຣະອົງ ເຮັດໃຫ້ປະຊາຊົນບັງເກີດຄວາມສັດທາເລື່ອມໃສ ແລະເຮັດໃຫ້ປະຊາຊົນຈື່ຈຳຄວາມຈິງທີ່ພຣະອົງຊົງສອນ ແລະໄດ້ນຳໄປສອນກັນຕໍ່ ໆ ຊ້ຳແລ້ວຊ້ຳເລົ່າເປັນເວລາຫລາຍຮ້ອຍປີ" [22]*

## ສອງ. ພຣະມຫາບັນຊາ

*"ພຣະເຢຊູມີຄວາມມຸ່ງໝາຍວ່າ ຄຣິສຈັກຂອງພຣະອົງຈະຕ້ອງເປັນຄຣິສຈັກທີ່ມີການສອນ... ຄວາມຈິງນີ້ເປັນທີ່ແຈ່ມແຈ້ງໃນພຣະມຫາບັນຊາ (ຫລືຄຳສັ່ງສຸດທ້າຍຂອງພຣະອົງ) ທຸກສ່ວນຂອງພຣະມຫາບັນຊາຮຽກຮ້ອງໃຫ້ມີລາຍການສອນແລະການອົບຮົມ" [23]* ແລະເປັນຫລັກການທີ່ອັຄສາວົກຍຶດໝັ້ນໃນການກໍ່ຕັ້ງຄຣິສຈັກໃນສມັຍແຣກ

ດ້ວຍເຫດທີ່ພຣະເຢຊູຕັດວ່າ **"ອຳນາດທັງໝົດໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ"** (ມັດທາຍ 28:18) ເປັນສິ່ງທີ່ສາວົກໄດ້ເຫັນປະຈັກແກ່ຕາໃນການເປັນຂຶ້ນຈາກຄວາມຕາຍຂອງພຣະເຢຊູຄຣິສເຈົ້າ ເຮັດໃຫ້ພວກເຂົາມີຄວາມຈຳເປັນຕ້ອງສັ່ງສອນຊົນທຸກຊາດໃຫ້ເປັນສາວົກຂອງພຣະເຢຊູຄຣິສ ຄຳວ່າ **"ສາວົກ" ມີຄວາມໝາຍເຖິງຜູ້ຮຽນ** ດັ່ງນັ້ນຂະບວນການທີ່ປະຊາຊົນຈະເປັນສາວົກຂອງພຣະເຢຊູ ຄືການຮຽນຮູ້ຄວາມຈິງໃນພຣະເຢຊູຄຣິສ ຊຶ່ງເປັນການຮຽນໃນຂັ້ນທຳອິດ

ໃນຂັ້ນທີ່ສອງ ຄືການຮັບບັພຕິສມາ ການບັພຕິສມາເປັນພາບທີ່ປະຈັກແກ່ຕາແລະສອນເຖິງຣິດອຳນາດແຫ່ງຄວາມຣອດພົ້ນຂອງພຣະຄຣິສ ໃນເຣື່ອງການສິ້ນພຣະຊົນ ການຖືກຝັງໄວ້ ແລະການເປັນຂຶ້ນມາຈາກຄວາມຕາຍ *"ສິລປະແຫ່ງສັນຍາລັກນີ້ຈຳເປັນຕ້ອງອະທິບາຍແລະສອນໃຫ້ຜູ້ຮັບບັພຕິສມາເຂົ້າໃຈຊັດແຈ້ງ" [24]*

ໃນຕອນສຸດທ້າຍຂອງລາຍການສອນແລະອົບຮົມຄືຂະບວນການສອນອັນຕໍ່ເນື່ອງມາ ໄດ້ແກ່ສິດສອນສາວົກໃຫ້ຝຶກແອບທຸກສິ່ງທີ່ພຣະເຢຊູຄຣິສຊົງບັນຊາ ການຊົງຮຽກນີ້ເປັນເຣື່ອງທີ່ກ່ຽວຂ້ອງກັບສມາຊິກທຸກຄົນຂອງຄຣິສຈັກ *"ການບັງເກີດໃຫມ່ແລະການຮັບບັພຕິສມາບໍ່ແມ່ນທີ່ສິ້ນສຸດຂອງຂະບວນການ ແຕ່ເປັນການເລີ້ມຕົ້ນ ຫລັງຈາກບັພຕິສມາຈະຕ້ອງຕິດຕາມຕໍ່ເນື່ອງກັນໄປອີກຄືການສຶກສາຕໍ່ໄປ ບໍ່ຢ່າງນັ້ນແລ້ວຜູ້ບັງເກີດໃຫມ່ຍັງຄົງເປັນເດັກນ້ອຍໃນພຣະເຢຊູຄຣິສ ແຕ່ວ່າການຈະເຣີນເຕີບໂຕເປັນສິ່ງສຳຄັນຫລາຍສຳລັບຕົວຜູ້ກ່ຽວ ສຳລັບຄຣິສຈັກແລະພຣະຄຣິສ" [25]*

---

## ຂໍ້ອ້າງອີງ


[1] Howard P. Colson, "The Biblical Precedent" in The Ministry of Religious Education, ed. by John T. Sisomore, (Nashville: Broadman Press, 1978). pp. 18-19.

[2] J. M. Price, et. al, A Survey of Religious Education, (2nd ed., New York: The Ronald Press Company 1940), p.38.

[3] C. B. Eavey, History of Christian Education, (Chicago: Moody Press, 1975), p.77.

[4] Howard Clark, Kee, Franklin W. Young, Karlfied Frochlich, Understanding the New Textament, ແປໂດຍວິທຍາລັຍພຣະຄຣິສທັມ (ຊຽງໃຫມ່: ວິທຍາລັຍພຣະຄຣິສທັມແຫ່ງສພາຄຣິສຈັກໃນປະເທດໄທຍ, 1964)

[5] Howard Clark Kee, loc, cit.

[6] J. M. Price, Jesus the Teacher, (Nashville: Broadman, 1946) p. 6.

[7] Robert E. Bingham, "Bulding on Biblicl Concenpts" in the Vital Priciples in Religious Education, ed. by John T. Sisemore, (Nashville,: Broadman Press, 1966), p. 14.

[8] Howard P. Colson, loc. cit.

[9] Howard P. Colson, loc. cit.

[10] Paul P. Levertoff, "The Jewish Elementary School in the First Century" in Twentieth Century Bible Commentary, ແປໂດຍວິທຍາລັຍພຣະຄຣິສທັມ, (ຊຽງໃຫມ່: ວິທຍາລັຍພຣະຄຣິສທັມແຫ່ງສພາຄຣິສຈັກໃນປະເທດໄທຍ, 1964), ຫນ້າ 258.

[11] William Bean Kennedy, "Chirstian Education Through History" in An Introducation to Christian Education, ed. by Marvin J. Taylor, (New York: Abingdon Press, 1966). pp. 21-22.

[12] C. B. Eavey op. cit., p. 87

[13] Paul P. Levertoff, loc. cit.

[14] J. M. Price, op. cit., p. 14.

[15] Randolph Crump Miller, Eaducation for Christian Living, (2nd ed., Englewood Cliffs: Prentice-Hall Inc., 1963), p. 20.

[16] Findley B. Edge, Teaching for Results, (Nashville: Broadman Press, 1956), p. 13.

[17] J. M. Price, et. al., A Survey of Religious Education, P. 39.

[18] C. B. Evey, op. cit., p. 80.

[19] Howard Clark, Kee, op. cit., p. 190.

[20] J. M. Price, <u>Jesus the Teacher</u>, p. 101.

[21] Randolph Crump Miller, loc. cit.

[22] J. M. Price, op. cit., p. 104.

[23] Howard P. Colson, op. cit., p. 19.

[24] Howard P. Colson, loc. cit.

[25] Howard P. Colson, op. cit., 20.

ສະບັບແກ້ໄຂໃໝ່

ວັ 12-18-95

# ບົດທີ 4

# ຄຣິສຈັກສມັຍທຳອິດແລະຄຣິສຕຽນສຶກສາ

## 1. ຄຣິສຕຽນສຶກສາໃນຄຣິສຈັກສມັຍທຳອິດ

*"ສາວົກຂອງພຣະເຢຊູຄຣິສໄດ້ນຳພາພຣະຣາຊກິຈການສິດສອນຂອງພຣະເຢຊູຄຣິສສືບທອດຕໍ່ ໆ ໄປຕາມພຣະມຫາບັນຊາຂອງພຣະອົງ ຄຣິສຈັກໃນພັນທະສັນຍາໃໝ່ກາຍເປັນກຸ່ມຊົນທີ່ດຸໝັ່ນໃນການຮຽນການສອນ" [1]* ທ່ານລູກາບັນທຶກວ່າຫລັງຈາກທີ່ມີການຊຸມນຸມກັນຄັ້ງໃຫຽ່ໃນວັນເພັນເຕຄໍສະເຕ ສມາຊິກຂອງຊຸມຊົນໃໝ່ຍັງຄົງດຳເນີນຕໍ່ໄປໃນການນມັສການ ພວກເຂົາໄດ້ມີການສິດສອນໂດຍພວກອັຄສາວົກ (ກຈ 2:42) ການສິດສອນນີ້ເປັນສິ່ງທີ່ຈຳເປັນສຳລັບຜູ້ທີ່ກັບໃຈໃໝ່ທີ່ຈະຍອມຮັບແລະໃຫ້ຄຳສອນຂອງພຣະເຢຊູຄຣິສປ່ຽນແປງຊີວິດຂອງເຂົາ

ທ່ານ ແຣນດອລຟ໌ ຄຣັມຟ໌ ມິລເລີຣ໌ ກ່າວເຖິງການສອນຂອງຄຣິສຈັກໃນສມັຍທຳອິດວ່າ

*"ຕັ້ງແຕ່ເລີ້ມຕົ້ນຂອງຄຣິສຈັກໃນວັນເພັນເຕຄໍສະເຕກໍມີການສິດສອນ ຫລັງຈາກທີ່ສາມພັນຄົນຮັບບັພຕິສມາ ເຮົາໄດ້ອ່ານພົບວ່າ "ເຂົາທັງຫລາຍໄດ້ຕັ້ງໝັ້ນຄົງຢູ່ໃນຄຳສອນຂອງພວກອັຄສາວົກ ໃນການຮ່ວມໃຈກັນ ໃນການຫັກເຂົ້າຈີ່ແລະໃນການໄຫວ້ວອນ" (ກິຈການ 2:42) ຂ່າວປະເສີດໄດ້ຂຍາຍແຜ່ຫລາຍຂື້ນໃນຕົວຂອງມັນເອງເປັນກຸ່ມຊົນແຫ່ງການສອນແລະການເທສນາ ມີຄວາມຈຳເປັນຕ້ອງອະທິບາຍພຣະຄັມພີເຮັບເຣີເພີ່ມຂື້ນອີກສຳລັບພວກຢິວທີ່ກັບໃຈໃໝ່ ແລະສະແດງໃຫ້ເຫັນເຖິງຄວາມໝາຍຂອງຂ່າວປະເສີດສຳລັບຄົນທີ່ຢູ່ໃນວັທນະທັມກຣີກ" [2]*

ໃນຣະຍະເວລານັ້ນ ພວກສາວົກໄດ້ເຮັດການຢ່າງສລາດໃນການຮວບຮວມຄົນເຂົ້າດ້ວຍກັນ ເພື່ອທີ່ຈະປະກາດຂ່າວປະເສີດແລະສິດສອນ ພຣະທັມກິຈການ 5:42 ບັນທຶກວ່າ *"ທຸກ ໆ ວັນໃນບໍຣິເວນພຣະວິຫານແລະຕາມບ້ານເຮືອນ ພວກອັຄສາວົກໄດ້ສັ່ງສອນແລະປະກາດຂ່າວປະເສີດບໍ່ໄດ້ຂາດ ວ່າພຣະເຢຊູຊົງເປັນພຣະຄຣິສ"* ພາຣະກິຈແລະການເຜີຍແຜ່ຂອງຄຣິສຈັກສມັຍອັຄສາວົກ ມີລັກສນະເນັ້ນໃນດ້ານການສຶກສາເປັນສິ່ງສຳຄັນ *"ໃນຣະຍະເວລາອັນສຳຄັນນີ້ ວຽກຂອງອັຄສາວົກ ຜູ້ປະກາດພຣະຄຳ ສິດຍາພິບາລ ແລະຜູ້ທີ່ມີອາຊີພຄຣູ ມີສ່ວນໃນຣະບົບການສິດສອນຝ່າຍວິນຍານຢ່າງຫລວງຫລາຍ ນີ້ເປັນຄວາມຈິງບໍ່ວ່າຜູ້ຮຽນຈະເປັນຊາວຢິວ ຄົນຕ່າງຊາດ ຫລືຊາດຜສົມ (ຢິວກັບຄົນຕ່າງຊາດ)" [3]*

ຄຣິສຈັກໃນສມັຍທຳອິດໃຫ້ການຍົກຍໍຢ່າງສູງແກ່ຜູ້ທີ່ເປັນຄຣູ *"ຜູ້ທີ່ທຳໜ້າທີ່ເປັນຄຣູ ເບິ່ງຄືວ່າໄດ້ຮັບການພັທນາໃນສມັຍທຳອິດ ໃນພຣະທັມໂກຣິນໂທສບັບຕົ້ນ 12:28 ທ່ານໂປໂລຈັດຄຣູເຂົ້າເປັນອັນດັບທີ່ສາມຖັດຈາກບຸກຄົນທີ່ມີຂອງພຣະຣາຊທານຈາກພຣະວິນຍານບໍຣິສຸດ ຊຶ່ງເປັນອັນດັບທີ່ຕໍ່ຈາກບຸກຄົນທີ່ມີຂອງພຣະຣາຊທານໃນການເປັນອັຄສາວົກ ແລະຜູ້ປະກາດພຣະທັມ" [4]* ເມື່ອເຮົາປຽບທຽບກັບພຣະທັມກິຈການ 13:1 ພຣະທັມເອເຟໂຊ 4:11 ພຣະທັມຕີໂມທຽວສບັບຕົ້ນ 2:7 ພຣະທັມຕີໂມທຽວ

ສບັບສອງ 1:11 ຈະເຫັນໄດ້ວ່າສຳລັບທ່ານໂປໂລແລ້ວ ໜ້າທີ່ການສິດສອນເປັນຂອງພຣະຣາຊທານຝ່າຍຈິດວິນຍານຊຶ່ງພຣະຣາຊທານໂດຍພຣະວິນຍານບໍຣິສຸດຄືກັບໜ້າທີ່ຂອງອັຄສາວົກ ແລະຜູ້ປະກາດພຣະຄຳ ອາດຈະເປັນໄດ້ທີ່ບຸກຄົນນຶ່ງມີຂອງພຣະຣາຊທານຫລາຍກວ່ານຶ່ງຢ່າງ ດັ່ງນັ້ນຈະເປັນໄດ້ວ່າບາງຄົນອາດຈະເປັນຜູ້ປົກຄອງແລະຄຣູໃນເວລາດຽວກັນ ສຳລັບທ່ານໂປໂລເປັນທັງ **"ອັຄສາວົກແລະຄຣູ"** (1 ຕີໂມທຽວ 2:7, 2 ຕີໂມທຽວ 1:11) ຈຸດມຸ່ງໝາຍຂອງຜູ້ທີ່ມີຂອງພຣະຣາຊທານໃນການເປັນຄຣູແມ່ນ *"ການເຮັດວຽກການຮ່ວມກັບພຣະວິນຍານບໍຣິສຸດໃຫ້ເກີດ ປະການທຳອິດຄື ເກີດຄຣິສຕຽນຝ່າຍວິນຍານ (1 ໂກຣິນໂທ 2:14-16) ປະການທີສອງ ເກີດຄຣິສຕຽນທີ່ເຕີບໂຕເປັນຜູ້ໃຫຍ່ (ເອເຟໂຊ 4:13) ປະການທີສາມ ເກີດຄຣິສຕຽນທີ່ມີຄວາມຮັກ (1 ເທຊະໂລນິກ 3:12)" [5]*

## 2. ການສອນສາວົກໃນຄຣິສຈັກສມັຍທຳອິດ

ທ່ານ ເຈມສ໌ ດີ. ສມາຣ໌ທ ສເນີວ່າ ຈຸດປະສົງໃນງານການສິດສອນຂອງພຣະເຢຊູທີ່ສອນສາວົກແລະຄຣິສຈັກສມັຍທຳອິດຄື ສອນຄົນທີ່ກັບໃຈໃໝ່ ມີສາມດ້ານດ້ວຍກັນທີ່ຕິດແທດກັນທີ່ບໍ່ສາມາດແຍກອອກຈາກກັນໄດ້ຄື

> *"ປະການທຳອິດ ການປະກາດຂ່າວປະເສີດໃນສະພາບຂອງການເປັນກັນເອງ ຣະຫວ່າງບຸກຄົນຕໍ່ບຸກຄົນ ບໍ່ແມ່ນເປັນການເທສນາເໝືອນຢ່າງທີ່ເຮົາຄິດຕາມທັມມະດາ ການປະກາດໃນລັກສນະນີ້ມີແກ່ນແທ້ຄວາມຈິງບໍ່ໄດ້ແຕກຕ່າງກັບການເທສນາ*
>
> *ປະການທີສອງ ເປັນສິ່ງສຳຄັນທີ່ຕ້ອງອົບຮົມສັ່ງສອນສາວົກໃນຄວາມຈິງແຫ່ງຂ່າວປະເສີດໃຫ້ສົມບູນຫລາຍຍິ່ງຂຶ້ນ ເພື່ອເຂົາຈະສາມາດຕີຄວາມໝາຍແຫ່ງຄວາມຈິງນັ້ນແກ່ຊາວໂລກທີ່ເຂົາຮ່ວມອາສັຍຢູ່*
>
> *ປະການທີສາມ ເປັນການອົບຮົມສາວົກໃຫ້ມີຄວາມຄິດແລະຈິດໃຈຕຽມພ້ອມໃນພາຣະກິຈດັ່ງທີ່ພຣະເຢຊູເຄີຍກະທຳດ້ວຍພຣະອົງເອງ" [6]*

ການສັ່ງສອນຂອງຄຣິສຈັກ ໃນສມັຍແຮກເປັນການສືບທອດເຈຕນາຄວາມຄິດຄວາມຕັ້ງໃຈແລະຄວາມຈິງທີ່ພຣະເຢຊູຄຣິສໄດ້ສັ່ງສອນໃຫ້ແກ່ສາວົກຫລືຄົນທີ່ສົນໃຈໃນການຕິດຕາມພຣະອົງເປັນພຣະຜູ້ຊ່ວຍໃຫ້ຣອດພົ້ນ ຜູ້ທີ່ເປັນນັກຮຽນມີທັງຄົນຢິວ ແລະຄົນຕ່າງຊາດ ເພື່ອເຂົາເຫລົ່ານັ້ນຈະໄດ້ມີຊີວິດໃໝ່ແລະມີສັງຄົມໃໝ່ ທີ່ມີສັມພັນທະພາບກັບພຣະເຈົ້າຢ່າງຖືກຕ້ອງຕາມຄຳສອນຂອງພຣະເຢຊູ *"ການສອນຄືກັບສາຍໂລຫິດທີ່ຈຳເປັນຕໍ່ຊີວິດຂອງຄຣິສຈັກສມັຍເລີ້ມແຮກ" [7]*

## 3. ເນື້ອຫາສາຣະແລະວິທີການສອນໃນສມັຍຄຣິສຈັກທຳອິດ

ທ່ານໂຣເບີຣ໌ຕ ຊີ. ເວີຣ໌ເລ່ຍ໌ ໄດ້ກ່າວເຖິງເນື້ອຫາແລະວິທີການສອນວ່າ

> *"ຄຣູແລະນັກເທສໃນສມັຍຄຣິສຈັກທຳອິດ ມີຄວາມຜູກພັນໃນການຕີຄວາມໝາຍເຣື້ອງພຣະຣາຊກິຈການສອນ ແລະລັກສນະຄວາມເປັນບຸກຄົນຂອງພຣະເຢຊູແກ່ບຸກຄົນທີ່ຢູ່ລອບ ໆ ພວກເຂົາ*

ເຂົາໃຊ້ວິທີການແລະຄວາມໝາຍຂອງພາສາຈາກວັທນະທັມແວດລ້ອມໃນສມັຍທີ່ເຂົາມີຊີວິດຢູ່ເປັນພື້ນຖານແລະແຫລ່ງຄວາມຮູ້ອັນສຳຄັນສຳລັບການຕີຄວາມໝາຍ" [8]

ທ່ານຣິນສັນ ກ່າວເຖິງເນື້ອຫາສາຣະຂອງການສອນວ່າ "ການສອນຂອງຄຣິສຈັກສມັຍທຳອິດສາມາດສັນນິຖານໄດ້ວ່າ ການສອນໃນຄັ້ງນັ້ນເປັນເນື້ອຫາດຽວກັນກັບທີ່ພວກເຂົາໄດ້ເຄີຍຮັບມາ ແຕ່ມີເນື້ອຫາທີ່ມີຄວາມຊັດແຈ້ງຫລາຍຂຶ້ນເນື່ອງຈາກການເປັນຂຶ້ນຈາກຄວາມຕາຍຂອງພຣະເຢຊູ" [9] ທ່ານໂປໂລເປັນຜູ້ນຶ່ງຊຶ່ງມີປະສົບການກັບພຣະເຢຊູຫລັງຈາກທີ່ພຣະອົງເປັນຂຶ້ນຈາກຄວາມຕາຍ ປະສົບການນີ້ມີຜົນຕໍ່ການສອນ ແລະການປະກາດຂ່າວປະເສີດຂອງທ່ານຢ່າງຫລວງຫລາຍ ທ່ານກ່າວວ່າ "ທີ່ຈິງຂ້າພະເຈົ້າຖືວ່າສິ່ງສາຣະພັດເປັນຂອງໄຮ້ປໂຍດ ເພາະເຫັນແກ່ສິ່ງທີ່ມີຄຸນຄ່າຫລາຍເຫລືອລົ້ນກວ່ານັ້ນອີກ ຄື ການຮູ້ເຖິງພຣະເຢຊູຄຣິສອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ເພາະເຫດພຣະອົງນັ້ນຂ້າພະເຈົ້າຈຶ່ງໄດ້ຍອມສລະສິ່ງສາຣະພັດ ແລະຖືວ່າສິ່ງເຫລົ່ານັ້ນເປັນເໝືອນຂີ້ເຫຍື້ອ ເພື່ອຈະໄດ້ອົງພຣະຄຣິສມາເປັນປະໂຍດແກ່ຂ້າພະເຈົ້າ" (ຟີລິບປອຍ 3:8) ທ່ານໂປໂລມີຄວາມຕັ້ງໃຈວ່າ "ຈະບໍ່ສະແດງຄວາມຮູ້ເຣື້ອງໃດ ໆ ໃນຖ້າມກາງພວກເຈົ້າ (ຊາວໂກຣິນໂທ) ເວັ້ນແຕ່ເຣື້ອງພຣະເຢຊູຄຣິສແລະການທີ່ພຣະອົງຊົງຖືກຄຶງໄວ້ທີ່ໄມ້ກາງແຂນນັ້ນ" (1 ໂກຣິນໂທ 2:2)

ໃນຣະຫວ່າງເວລາຂອງຄຣິສຈັກສມັຍທຳອິດນີ້ ພຣະຄຣິສທັມຄັມພີພາກພັນທະສັນຍາໃໝ່ຍັງບໍ່ທັນປາກົດເປັນຮູບເຫລັ້ມ ພຣະທັມຕ່າງ ໆ ເກືອບທຸກສບັບຣວມທັງພຣະທັມຂ່າວປະເສີດແລະພຣະທັມຈົດໝາຍຝາກສ່ວນຫລາຍຂຽນຂຶ້ນເພື່ອຈຸດປະສົງໃນການສິດສອນ ຕົວຢ່າງເຊັ່ນ ພຣະທັມຂ່າວປະເສີດມັດທາຍ ເປັນພຣະທັມທີ່ດີໃຊ້ສຳລັບການອົບຣົມຄຣິສຕຽນໃໝ່ທັງໃນສມັຍກ່ອນແລະປັດຈຸບັນ ຢ່າງໃດກໍຕາມໃນຊ່ວງຣະຍະເວລານັ້ນຄຣິສຈັກກໍມີຕຳຣາທີ່ສາມາດໃຊ້ໃນການສຶກສາຄົ້ນຄວ້າແລ້ວ ຄືພຣະຄັມພີພາກພັນທະສັນຍາເດີມ "ໃນພຣະທັມນີ້ ຜູ້ທີ່ເຊື່ອໄດ້ຄົ້ນພົບພຣະຄຣິສ ແລະພົບຄຳແນະນຳໃນການດຳເນີນຊີວິດທີ່ຈະຖວາຍກຽດຕິຍົສແກ່ພຣະເຈົ້າ" [10] ທ່ານໂປໂລກ່າວເຖິງພຣະຄັມພີນີ້ວ່າ "ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າແລະເປັນປໂຍດໃນການສິດສອນ ການກ່າວຕັກເຕືອນວ່າກ່າວ ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຣົມໃນທາງຊອບທັມ ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ" (2 ຕີໂມທຽວ 3:16, 17) "ດັ່ງນັ້ນແບບຢ່າງທາງພຣະຄັມພີສຳລັບລາຍການຂອງສາສນາສຶກສາຮຽກຮ້ອງໃຫ້ໃຊ້ທັງພັນທະສັນຍາເດີມແລະໃໝ່ເປັນຕຳຣາທີ່ພຣະເຈົ້າປະທານໃຫ້" [11]

ທ່ານແຣນດອລ໌ຟ ຄຣັມຟ໌ ມິລເລີຣ໌ ເຫັນວ່າ "ກ່ອນທີ່ມີການຂຽນພຣະທັມຂ່າວປະເສີດອັຄສາວົກໃຊ້ການສອນຢ່າງນ້ອຍ 5 ແບບ

1. ການຕີຄວາມໝາຍພຣະຄັມພີຕາມແບບຄຣິສຕຽນສຳລັບຄົນທີ່ກັບໃຈໃໝ່ແລະສຳລັບການສຶກສາແກ່ຄົນຢິວ
2. ການປະກາດຕາມແບບຣີຕຄອງຄຣິສຕຽນ ບາງທີອາດເປັນລັກສນະຂອງການຮຽນຫລັກຂໍ້ເຊື່ອເບື້ອງຕົ້ນສຳລັບຄົນທີ່ຈະຮັບບັພຕິສມາ
3. ການສອນໃນລັກສນະການນຳໃຫ້ຮັບຫລັກຂໍ້ເຊື່ອຢ່າງສັ້ນ ໆ
4. ສອນກ່ຽວກັບຊີວິດແລະຄຳສິດສອນຂອງພຣະເຢຊູ

492-4980

*5. ການສັ່ງສອນດ້ານສິລທັມໃນ "ທາງນັ້ນ" ຫລື "ທາງ" ແຫ່ງຊີວິດແລະຄວາມຕາຍ" [12]*

ທ່ານຣາວາຣດ໌ ພີ. ໂຄລສັນ ເຫັນວ່າ *"ເນື້ອຫາສາຣະການສອນຂອງອັຄຣທູຕປະກອບດ້ວຍເຣື້ອງຣາວທີ່ເຂົາໄດ້ຮັບຈາກພຣະເຢຊູທັງທາງດ້ານສາສນາແລະຈຣິຍະທັມ ຮວມທັງການຣະລຶກເຖິງຊີວິດແລະວຽກງານຂອງພຣະເຢຊູ ແລະການຕີຄວາມຫມາຍໃນເຣື້ອງຄວາມເປັນບຸກຄົນຂອງພຣະເຢຊູ ຈາກຄວາມແຈ່ມແຈ້ງທີ່ໄດ້ມາຈາກພຣະຄັມພີພາກພັນທະສັນຍາເດີມ ສລູບໄດ້ວ່າ ສິ່ງທີ່ພວກອັຄສາວົກໄດ້ສິດສອນໄວ້ເປັນເນື້ອນັຍສຳຄັນທີ່ພົບໃນພຣະຄັມພີພາກພັນທະສັນຍາໃຫມ່ໃນປັດຈຸບັນ" [13]*

## 4. ຜູ້ທີ່ເປັນຄຣູແລະມີພາຣະໃນການສິດສອນ

ພຣະເຢຊູຄຣິສເປັນຄຣູທີ່ເດັ່ນທີ່ສຸດໃນພຣະຄັມພີພາກພັນທະສັນຍາໃຫມ່ ຊຶ່ງເປັນແບບຢ່າງແກ່ຄຣິສຈັກໃນປັດຈຸບັນ ຢ່າງໄຣກໍຕາມ *"ທ່ານໂປໂລເປັນບຸກຄົນນຶ່ງໃນພຣະຄັມພີພາກພັນທະສັນຍາໃຫມ່ ທີ່ເປັນມະນຸດທີ່ມີລັກສນະທ່າທາງທີ່ຄົນເວົ້າເຖິງຫລາຍທີ່ສຸດ ທ່ານໄດ້ທຳການສອນໂດຍມີສູນກາງການຮັບໃຊ້ໃນໂຮງທັມເຫສນາ ໃນເຮືອນ ແລະໃນເຮືອນຈຳ" [14]* ທ່ານໂປໂລໄດ້ກ່າວເຖິງຕົວທ່ານເອງວ່າ *"ຂ້າພຣະເຈົ້າໄດ້ຖືກຊົງຕັ້ງໄວ້ໃຫ້ເປັນຜູ້ປະກາດແລະເປັນອັຄສາວົກ... ແລະເປັນຄຣູສອນຄວາມເຊື່ອແລະຄວາມຈິງແກ່ຄົນຕ່າງຊາດ" (1 ຕີໂມທຽວ 2:7, 2 ຕີໂມທຽວ 1:11)* ທ່ານໂປໂລຍັງໄດ້ອ້າງເຖິງການເປັນຄຣູຂອງທ່ານໃນຈົດຫມາຍທີ່ທ່ານໄດ້ສິດສອນພວກເຂົາເຖິງສິ່ງເທື່ອດ້ວຍກັນ ທ່ານໄດ້ຂຽນຈົດຫມາຍເຖິງຄຣິສຈັກໃນເມືອງເທຊະໂລນິກວ່າ *"ເຫດສະນັ້ນແຫລະ ພີ່ນ້ອງເອີຍ ຈົ່ງຕັ້ງຫມັ້ນຄົງຢູ່ແລະຍຶດຖືເອົາຄຳສອນທີ່ສືບມາຊຶ່ງພວກເຮົາໄດ້ສອນພວກເຈົ້ານັ້ນ ບໍ່ວ່າຈະເປັນທາງວາຈາຫລືທາງຈົດຫມາຍຂອງພວກເຮົາກໍດີ" (2 ເທຊະໂລນິກ 2:15)* ທ່ານໂປໂລໄດ້ຂຽນຈົດຫມາຍເຖິງຄຣິສຈັກໃນເມືອງໂກໂລຊາຍວ່າ *"ຈົ່ງຢັ່ງຮາກແລະກໍ່ຮ່າງສ້າງຂຶ້ນໃນພຣະອົງ ແລະຕັ້ງຫມັ້ນຄົງຢູ່ໃນຄວາມເຊື່ອ ຕາມທີ່ເຈົ້າທັງຫລາຍໄດ້ຮັບຄຳສັ່ງສອນມາແລ້ວ"(ໂກໂລຊາຍ 2:7)* ແລະທ່ານໂປໂລຍັງໄດ້ສິດສອນຢູ່ໃນຄຣິສຈັກທົ່ວ ໆ ໄປ (1 ໂກຣິນໂທ 4:17, ໂກໂລຊາຍ 1:28) ການສອນຢ່າງກວ້າງຂວາງນີ້ມີຄວາມສຳຄັນຫລາຍເພາະຄຣິສຕຽນເປັນບຸກຄົນທີ່ກັບໃຈໃຫມ່ຈາກສາສນາລັດທິຕ່າງ ໆ ເຂົາຍັງມີຄວາມຄິດໃນສາສນາເດີມຫລາຍຢ່າງທີ່ຈະຕ້ອງສອນໃຫ້ເຂົ້າໃຈໃນການດຳເນີນຊີວິດໃຫມ່

ໃນການບັນທຶກຂອງທ່ານລູກາໃນພຣະທັມກິຈການໄດ້ກ່າວເຖິງການສອນຂອງທ່ານໂປໂລຫລາຍຕອນດ້ວຍກັນທີ່ຄຣິສຈັກໃນເມືອງອັນຕີໂອເຂັຽ ທ່ານໂປໂລໄດ້ຮ່ວມກັບບາຣະນາບາ "ທ່ານທັງສອງໄດ້ເຄີຍປະຊຸມກັນກັບຄຣິສຈັກຕລອດນຶ່ງປີ ຈຶ່ງໄດ້ສັ່ງສອນຄົນຈຳນວນຫລາຍ" (ກິຈການ 11:26) ທີ່ເມືອງໂກຣິນໂທ "ຝ່າຍໂປໂລໄດ້ອາສັຍຢູ່ນຶ່ງປີກັບຫົກເດືອນ ສັ່ງສອນພຣະທັມຂອງພຣະເຈົ້າຖ້າມກາງເຂົາ" (ກິຈການ 18:11) ທີ່ເມືອງເອເຟໂຊທ່ານໂປໂລໄດ້ທຳການສອນຢູ່ສາມເດືອນໃນໂຮງທັມແລະໄດ້ປະຊຸມກັນໃນຫ້ອງປະຊຸມຂອງທ່ານຕີຣາໂນສອງປີ (ກິຈການ 19:8-10) ແມ່ນວ່າທ່ານໂປໂລຈະຖືກຈອງຈຳໃນກຸງໂຣມສອງປີ ທ່ານໄດ້ຕ້ອນຮັບຄົນທັງປວງທີ່ມາຫາທ່ານ "ທັງປະກາດຣາຊອານາຈັກຂອງພຣະເຈົ້າ ແລະສັ່ງສອນເຣື້ອງກ່ຽວກັບພຣະອົງເຈົ້າເຢຊູຄຣິສຢ່າງເປີດເຜີຍ ໂດຍບໍ່ມີການຂັດຂວາງ" (ກິຈການ 28:31) ແລະຍັງມີຕອນຕ່າງ ໆ ໃນພຣະທັມກິຈການທີ່ກ່າວເຖິງການສອນຂອງທ່ານໂປໂລ 15:35, 17:1-3, 10-17, 20:20, 28:23 *"ຈາກພຣະທັມຕອນຕ່າງ ໆ ທັງຫມົດນີ້ເປັນຫລັກຖານ*

*ທີ່ສແດງວ່າພາຣະກິຈສ່ວນໃຫ່ຍ່ຂອງທ່ານໂປໂລໃນງານຮັບໃຊ້ຂອງທ່ານຄືເປັນຄຣູ"* [15]

ທ່ານເປໂຕກັບໂຢຮັນເປັນອັຄສາວົກທີ່ເຮັດວຽກຮ່ວມກັນໃນການປະກາດສັ່ງສອນຂ່າວປະເສີດໃນບໍຣິເວນພຣະວິຫານແລະຕໍ່ໜ້າສະພາແຊນເຮດຣິນ ມີການອ້າງເຖິງການສິດສອນໃນພຣະທັມກິຈການສີ່ເທື່ອ (ກິຈການ 4:1-2, 18, 5:21, 28) ແມ່ນວ່າການສອນໃນທີ່ສາທາຣະນະຈະເປັນການຍາກລຳບາກ ແລະມີປັນຫາ ທ່ານເປໂຕໂຢຮັນຖືກພວກເຈົ້າໜ້າທີ່ສັ່ງກຳຊັບບໍ່ໃຫ້ສອນອອກພຣະນາມຂອງພຣະເຢຊູ ແຕ່ເພິ່ນກໍໄດ້ຮັບການຍອມຮັບຈາກຄົນໂດຍທົ່ວໄປວ່າເປັນຄຣູສອນ ແຕ່ກ່ອນເຄີຍມີຄົນຮັບເຊື່ອໃນວັນເພັນເຕຄໍສະເຕສາມພັນຄົນຫລັງຈາກທີ່ທ່ານເປໂຕກັບທ່ານໂຢຮັນສິດສອນແລ້ວ ຈຳນວນຜູ້ຊາຍເພີ່ມຂຶ້ນນັບໄດ້ປະມານຫ້າພັນຄົນ (ກິຈການ 4:4)

ນອກຈາກອັຄສາວົກຈະມີບົດບາດໃນການສອນໃນຄຣິສຈັກສມັຍແຣກແລ້ວ ຜູ້ທີ່ເປັນຄຣິສຕຽນກໍມີສ່ວນຮ່ວມໃນການສອນດ້ວຍ ບາຣະນາບາເປັນບຸກຄົນນຶ່ງທີ່ມີຄວາມເຊື່ອຢ່າງເຂັ້ມແຂງໃນສມັຍນັ້ນ *"ໃນບັນດາຜູ້ທີ່ມີຈິດໃຈເສັຽສລະ ແລະສແດງຄວາມກະຕືລືລົ້ນຢ່າງຍິ່ງທີ່ພຣະທັມກິຈການໄດ້ບັນທຶກໄວ້ເປັນຊື່ທຳອິດຂອງບັນດາຜູ້ທີ່ຮ້ອນຮົນເຖິງກັບຂາຍຊັບສິນຂອງຕົນເອງຄືບາຣະນາບາ (ກິຈການ 4:36-37)"* [16] ໃນພຣະທັມກິຈການ 13:1 ທ່ານບາຣະນາບາເປັນຄົນນຶ່ງໃນກຸ່ມຜູ້ປະກາດພຣະທັມແລະອາຈານທ່ານໄດ້ເຮັດການຮ່ວມກັບທ່ານໂປໂລ ທ່ານຢູ່ກັບໂປໂລທີ່ອັນຕິໂອເຂັຽນຶ່ງປີໄດ້ສິດສອນຄົນເປັນຈຳນວນຫລາຍ (ກິຈການ 11:26)

ທ່ານອາໂປໂລເປັນຊາວຢິວອີກຄົນນຶ່ງທີ່ເກີດໃນເມືອງອາເລັກຊັນເດັຽ ເປັນຄົນມີໂວຫານດີ ແລະມີຄວາມຊຳນານໃນທາງພຣະຄັມພີຫລາຍ ທ່ານໄດ້ຮັບການອົບຮົມໃນທາງຂອງອົງພຣະຜູ້ເປັນເຈົ້າ ແລະມີໃຈຮ້ອນຮົນ ທ່ານກ່າວສິດສອນຢ່າງຖືກຕ້ອງເຖິງເຣື້ອງພຣະເຢຊູ ການສອນຂອງທ່ານຕໍ່ມາພາຍຫລັງມີບົດບາດແລະອິດທິພົນຕໍ່ຄຣິສຈັກໃນໂກຣິນໂທ ດັ່ງທ່ານໂປໂລໄດ້ກ່າວເຖິງໃນຈົດໝາຍທີ່ຂຽນສັ່ງສອນກ່ຽວກັບເຣື້ອງແຕກແຍກໃນຄຣິສຈັກໂກຣິນໂທ ທ່ານປີຊະກີລາແລະທ່ານອາກີລາເປັນສາມີພັນລະຍາກັນມີອາຊີພເຍັບເຕັນໄດ້ໃຫ້ຄວາມຊ່ວຍເຫລືອແກ່ໂປໂລແລະຄົງຈະໄດ້ຮຽນຮູ້ຫລາຍຢ່າງຈາກທ່ານໂປໂລໃນເວລາທີ່ໄດ້ຮ່ວມອາຊີພເຍັບເຕັນນຳກັນ ທ່ານທັງສອງຫລັງຈາກທີ່ໄດ້ຟັງອາໂປໂລສິດສອນກໍໄດ້ຊ່ວຍອາໂປໂລໃຫ້ເກີດຄວາມເຂົ້າໃຈໃນເຣື້ອງພຣະເຢຊູແລະເຣື້ອງພຣະວິນຍານບໍຣິສຸດໄດ້ຢ່າງລຶກຊຶ້ງຂຶ້ນ (ກິຈການ 18: 25-26, 19:6)

ນອກຈາກຄົນຕ່າງ ໆ ທີ່ມີລາຍຊື່ກ່າວໄວ້ໃນພຣະຄັມພີພາກພັນທະສັນຍາໃໝ່ເຖິງການສອນຂອງເຂົາແລ້ວ ຍັງມີການເນັ້ນວ່າສິດຍາພິບາລຈະຕ້ອງມີໜ້າທີ່ໃນການສອນ ທ່ານໂປໂລບັນທຶກວ່າ *"ເປັນຄົນຍຶດໝັ້ນໃນຫລັກອັນທ່ຽງທັມທີ່ຖືກຕ້ອງຕາມໂອວາດຄວາມສອນ ເພື່ອຈະສາມາດເຕືອນສະຕິດ້ວຍຄຳສອນອັນມີຫລັກແລະຊີ້ແຈງແກ່ຄົນທີ່ຄັດຄ້ານຄຳສອນນັ້ນ" (ຕິໂຕ 1:9)* ທ່ານຍັງໄດ້ກ່າວເຖິງຄຸນສົມບັດຂອງຜູ້ທີ່ *"ເໝາະສົມທີ່ຈະເປັນຄຣູ" (1 ຕີໂມທຽວ 3:2)* ທ່ານຍັງໃຫ້ຄຳກັບຊັບກັບຕີໂມທຽວທີ່ເປັນສິດຍາພິບາລໜຸ່ມວ່າ *"ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ໜ້າພຍານຫລາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ" (2 ຕີໂມທຽວ 2:2)* ຈາກຂໍ້ພຣະທັມຕອນນີ້ເອງ ຈະເຫັນໄດ້ວ່າໂປໂລບໍ່ພຽງແຕ່ຈະມຸ່ງຫວັງໃຫ້ທ່ານຕີໂມທຽວຜູ້ຊຶ່ງເປັນສິດຍາພິບາລສິດສອນເທົ່ານັ້ນ ແຕ່ຍັງມີຄວາມຄາດຫວັງວ່າ ຜູ້ທີ່ໄດ້ຮັບຄຳສອນຈະສາມາດສອນຄົນອື່ນໄດ້ດ້ວຍ ຊຶ່ງເບິ່ງຄືກັບການອບຮົມຄຣູ

*"ເຮົາໄດ້ເບິ່ງດູໃນຕອນທຳອິດແລ້ວວ່າ ໃນພຣະຄັມພີພາກພັນທະສັນຍາເດີມໄດ້ວາງພາຣະອັນໜັກໃນເຣື້ອງຄວາມຮັບຜິດຊອບຂອງພໍ່ແມ່ໃຫ້ສອນລູກຫລານຂອງເຂົາ ແລະໃນພຣະຄັມພີພາກພັນທະສັນ*

*ຍາໃໝ່ໄດ້ໃຫ້ການສນັບສນຸນຄວາມຮັບຜິດຊອບນີ້ດ້ວຍ" [17]* ຜູ້ທີ່ເປັນພໍ່ແມ່ຄຣິສຕຽນທັງຫລາຍຝ່າຍສາຍເລືອດແລະຝ່າຍຈິດວິນຍານ (ຜູ້ອຸປຖັມ) ຈະຕ້ອງຮັບຜິດຊອບສິດສອນຜູ້ທີ່ຢູ່ໃນການປົກຄອງຂອງເຂົາເຖິງແມ່ນວ່າ *"ບໍ່ມີຫລັກຖານຂອງຕຳຣາສຳລັບພໍ່ແມ່ໃນການສອນລູກຫລານ ແຕ່ກໍຍັງເປັນໜ້າທີ່ຂອງພໍ່ແມ່ຄຣິສຕຽນແລະຜູ້ອຸປຖັມໃນການສິດສອນລູກຫລານໃນຄວາມເຊື່ອ" [18]* ທ່ານຕິໂຕບໍ່ໄດ້ເປັນລູກຕາມສາຍເລືອດຂອງທ່ານໂປໂລ ແຕ່ທ່ານໂປໂລກໍຍັງເອີ້ນທ່ານຕິໂຕວ່າ "ຜູ້ເປັນລູກແທ້ຂອງຂ້າພະເຈົ້າໃນຄວາມເຊື່ອດຽວກັນ" (ຕິໂຕ 1:4) ຈົດໝາຍທີ່ທ່ານໂປໂລຂຽນເຖິງທ່ານຕິໂຕກໍເປັນການສິດສອນແລະເຕືອນສະຕິໃນການເຮັດວຽກທີ່ເກາະກະເຣເຕ ທ່ານໂປໂລໄດ້ກ່າວເຖິງການສິດສອນໃນຄອບຄົວຄຣິສຕຽນສຳລັບຝ່າຍທີ່ເປັນພໍ່ແມ່ວ່າ "ຢ່າຣົບກວນບຸດຂອງຕົນໃຫ້ຂັດເຄືອງໃຈ ແຕ່ຈົ່ງອົບຣົມເຂົາດ້ວຍການຕິສອນແລະການເຕືອນສະຕິ ຕາມຫລັກຄຳສອນຂອງອົງພຣະຜູ້ເປັນເຈົ້າ" (ເອເຟໂຊ 6:4) ສຳລັບຝ່າຍທີ່ເປັນລູກທ່ານໂປໂລກ່າວວ່າ "ຈົ່ງຟັງຄວາມພໍ່ແມ່ຂອງຕົນໃນທຸກສິ່ງ ເພາະເຮັດຢ່າງນັ້ນເປັນທີ່ຊອບພຣະທັຍຂອງອົງພຣະຜູ້ເປັນເຈົ້າ" ໂກໂລຊາຍ 3:20) ໃນຈົດໝາຍທີ່ຂຽນເຖິງຄຣິສຈັກໃນເມືອງເອເຟໂຊທ່ານໂປໂລບໍ່ພຽງແຕ່ເວົ້າເຖິງທ່າທີຂອງລູກທີ່ຈະຕ້ອງເຊື່ອຟັງຢ່າງນອບນ້ອມ ຍັງໄດ້ຂຍາຍຄວາມເຖິງຄວາມຖືກຕ້ອງໃນການເຊື່ອຟັງນັ້ນ ອັນມີຂໍ້ສນັບສນຸນຈາກພຣະຄັມພີພາກພັນທະສັນຍາເດີມ "ຈົ່ງນັບຖືບິດາມານດາຂອງຕົນ ນີ້ເປັນພຣະບັນຍັດຂໍ້ຕົ້ນທີ່ມີພຣະສັນຍາໄວ້ດ້ວຍ ຄື ເພື່ອເຈົ້າຈະຢູ່ເຢັນເປັນສຸກແລະມີອາຍຸໝັ້ນຍືນທີ່ແຜ່ນດິນນີ້" (ເອເຟໂຊ 6:1-3 ທຽບກັບ ອົພຍົບ 20:12 ແລະພຣະບັນຍັດສອງ 5:16) ທ່ານຕີໂມທຽວເປັນຜູ້ນຶ່ງທີ່ໂປໂລກ່າວວ່າ "ຕັ້ງແຕ່ນ້ອຍມາແລ້ວເຈົ້າກໍຮູ້ພຣະທັມຄັມພີອັນສັກສິດ" (2 ຕີໂມທຽວ 3:15) ການອົບຣົມສິດສອນພຣະຄຳຂອງພຣະເຈົ້າທີ່ທ່ານຕີໂມທຽວມີຢູ່ນີ້ໄດ້ຮັບຈາກນາງໂລອີແມ່ຕູ້ຂອງທ່ານຕີໂມທຽວ ແລະນາງຢູນີເກແມ່ຂອງທ່ານຕີໂມທຽວ (2 ຕີໂມທຽວ 1:5)

ດັ່ງທີ່ໄດ້ກ່າວມາແລ້ວເຖິງພາຣະໜ້າທີ່ຂອງບຸກຄົນຕ່າງ ໆ ໃນພຣະຄັມພີພາກພັນທະສັນຍາໃໝ່ຊຶ່ງເປັນຄຣິສຈັກຍຸກແຮກ ເຮົາຈະເຫັນໄດ້ວ່າໜ້າທີ່ທາງການສຶກສາເປັນຂອງຄຣິສຕຽນ ໂດຍທົ່ວໄປອາດຈະມີບາງຄົນມີຂອງພຣະຣາຊທານຈາກພຣະວິນຍານບໍຣິສຸດເປັນພິເສດໃນການສອນ ແຕ່ວ່າບໍ່ມີການບັນທຶກທີ່ຊັດແຈ້ງວ່າມີຜູ້ໃດແດ່ທີ່ເຮັດການສອນຢູ່ນັ້ນໄດ້ຮັບຈາກພຣະວິນຍານບໍຣິສຸດໃນການສອນ ຢ່າງໃດກໍຕາມເຮົາບໍ່ຄວນແບ່ງແຍກວ່າໃຜເປັນຜູ້ທີ່ມີໜ້າທີ່ສອນ ຜູ້ທີ່ມີຂອງພຣະຣາຊທານເທົ່ານັ້ນຫລືຈະສອນໄດ້ຫລືວ່າຜູ້ເປັນສິດຍາພິບາລເທົ່ານັ້ນຫລືຈຶ່ງສອນໄດ້ ຈາກຂໍ້ເທັດຈິງທີ່ໄດ້ສຶກສາມາຈະເຫັນໄດ້ວ່າ ຢ່າງນ້ອຍທີ່ສຸດຄຣິສຕຽນທຸກຄົນຕ້ອງມີຄວາມຮັບຜິດຊອບໃນຄອບຄົວທີ່ຈະສອນພຣະຄຳຂອງພຣະເຈົ້າໃຫ້ແກ່ລູກຫລານຂອງຕົນ ການສອນບໍ່ໄດ້ຈຳກັດຢູ່ກັບພວກອັຄສາວົກແຕ່ພວກດຽວ ອາດຈະມີຄົນນຶ່ງຄົນໃດທີ່ມີຄວາມສາມາດທາງດ້ານນີ້ເປັນພິເສດ ຜູ້ນັ້ນກໍຈະມີພາຣະໜ້າທີ່ກວ້າງຂວາງຂຶ້ນໃນການຮັບໃຊ້ບົວລະບັດພຣະເຈົ້າໃນຄຣິສຈັກແລະແກ່ຄົນພາຍນອກ ອາດຈະມີການອົບຣົມຄຣູ ຫລືການສອນຜູ້ນຳ ເພື່ອທີ່ຈະໄປສອນຜູ້ອື່ນຕໍ່ໄປຊຶ່ງຕ່າງຝ່າຍຕ່າງຕ້ອງເຮັດວຽກຮ່ວມກັນໄປ ຈຶ່ງຈະສາມາດຕອບສນອງຄວາມຕ້ອງການທາງດ້ານຄຣິສຕຽນສຶກສາທີ່ຍັງຂາດແຄນຢູ່ໃນຄຣິສຈັກ

---

## ຂໍ້ອ້າງອີງ

ຕົວເລກທີ່ທ່ານເຫັນຢູ່ໃນວົງເລັບ [ ] ແມ່ນຂໍ້ຄວາມທີ່ອ້າງອີງມາຈາກຫນັງສືຕຳຣາເຫລົ່ານີ້


[1] Howard P. Colson, Loc, cit.

[2] Randolph Crump Miller, loc. cit.

[3] Howard P. Colson, loc. cit.

[4] Glenn Hinson, "chirstian Teaching in the Early Church" in the <u>Review and Expositor</u>, Vol 69, No. 3, Duke K. McCall ed., (Louisville: Faculty Club of the Southern Baptist Theological Seminary, 1962), p. 261.

[5] Howard P. Colson, op. cit., p.21

[6] James D. Smart, <u>The Teaching Ministry of the Church</u>, (4th ed. Philadelphia: The Westminister Prfess, 1976), pp.84-44)

[7] Glenn Hinson, op. cit., p. 258.

[8] Robert C. Worley, <u>Preaching and Teaching in the Earliest Church</u>, (Philadelphia: The Westminister Press, 1967), p. 87.

[9] Glenn Hinson, op. cit., p. 261.

[10] Howard P. Colson, loc. cit.

[11] Howard P. Colson, loc. cit.

[12] Randolph Crump Miller, loc. cit.

[13] Howard P. Colson, loc. cit. p.21.

[14] William W. Graves, The Church Teaching and Training, 2nd course, (Texas: Carib Baptist Publications, 1974), p.13.

[15] J. M. Price, Loc. cit.

[16] ພິສນຸ ອັດພິນ, ສັພທານຸກົມພຣະຄັມພີ, ເຫລັ້ມ 2 (ກຸງເທພ: ສຳນັກພິມສຸຣິຍະບັນ, 1977)ະ ໜ້າ 135.

[17] Howard P. Colson, op. cit., p.23.

[18] Randolph Crupm Miller, op. cit., p.21.

ລົ 2/12/96

# ບົດທີ 5

## ຄວາມເປັນມາຂອງ
## ການຈັດຣະບົບຄຣິສຕຽນສຶກສາ

ໃນບົດຕົ້ນ ໆ ທີ່ຜ່ານມານັ້ນ ພວກເຮົາໄດ້ຮຽນເຖິງການສຶກສາທີ່ປາກົດ ໃນພຣະທັມຄັມພີພາກພັນທະສັນຍາເດີມ ໂດຍໄດ້ສຶກສາເຖິງຄໍາສັ່ງຂອງພຣະເຈົ້າ ໃຫ້ຊາວອິສຣາເອລສອນລູກຫລານຂອງຕົນ ນອກຈາກນັ້ນ ເຮົາຍັງໄດ້ສຶກສາໃນບົດຕໍ່ມາ ຄືຄຣິສຕຽນສຶກສາ ໃນພຣະທັມຄັມພີພາກພັນທະສັນຍາໃຫມ່ ໂດຍທີ່ອົງພຣະເຢຊູຄຣິສໄດ້ຊົງເປັນແບບຢ່າງແກ່ເຮົາ ພຣະອົງຊົງເປັນພຣະບໍຣົມຄຣູທີ່ສົມບູນ ພຣະອົງຊົງເປັນແບບຢ່າງຕໍ່ເຫລົ່າອັຄສາວົກແລະຕໍ່ຜູ້ຮັບໃຊ້ໃນປັດຈຸບັນຄືກັນ ຄຣິສຈັກໃນຍຸກແຣກໄດ້ສືບທອດເຣື້ອງການສອນມາໂດຍຕລອດ ເລີ້ມຕັ້ງແຕ່ອັຄສາວົກ ໂດຍສະເພາະຢ່າງຍິ່ງທ່ານໂປໂລໄດ້ເປັນແບບຢ່າງແກ່ເຮົາໃນເຣື້ອງການສິດສອນແລະການຮັບໃຊ້ ຊຶ່ງຜູ້ຮັບໃຊ້ພຣະເຈົ້າທຸກທ່ານຄວນຈະໄດ້ ຕັ້ງໃຈສຶກສາຮຽນຮູ້ ແລະຮັບເອົາໄວ້ເປັນແບບຢ່າງຕໍ່ ໆ ໄປ ເຮົາຈະເຫັນໄດ້ວ່າ ການສຶກສາໄດ້ສືບເນື່ອງມາແຕ່ພຣະທັມຄັມພີພາກພັນທະສັນຍາເດີມ ພັນທະສັນຍາໃຫມ່ ແລະຕໍ່ ໆ ມາຈົນເຖິງປັດຈຸບັນຊຶ່ງເປັນຣະຍະເວລາອັນຍາວນານ ແລະໄດ້ຂຍາຍຂອບເຂດໃນດ້ານການສຶກສາອອກໄປຢ່າງກວ້າງຂວາງເຖິງຊາວຕ່າງຊາດ ອັນເປັນການຂຍາຍອອກໄປ ພ້ອມກັບການປະກາດຂ່າວປະເສີດແກ່ຄົນຕ່າງຊາດ ໂດຍສະເພາະຢ່າງຍິ່ງເມື່ອອີງຕາມປວັດສາດຄຣິສຈັກແລ້ວ ພົບວ່າຫລັງຈາກ ຄ.ສ.313 ເມື່ອເຈົ້າຊີວິດຄອນສະແຕນຕິນໄດ້ ປະກາດໃຫ້ສາສນາຄຣິສເປັນສາສນາປະຈໍາຊາດຂອງມະຫາຣາຊອານາຈັກໂຣມັນແລ້ວ ຄຣິສຕຽນສຶກສາໄດ້ຂຍາຍອອກໄປຍັງຕ່າງແດນ ຕ່າງປະເທດທີ່ເປັນຊົນຊາດຕ່າງ ໆ ທົ່ວໂລກ ອັນເປັນບ່ອນທີ່ບໍ່ມີໂຮງທັມສາລາ ຫລືຣະບົບການສອນດັ່ງທີ່ຊາວຢິວເຄີຍມີ ດັ່ງນັ້ນແລ້ວການສຶກສາໃນຄຣິສຈັກຈຶ່ງຖືກປັບປຣູງຮູບແບບໃຫ້ເປັນໄປ ເພື່ອຄວາມເຫມາະສົມຕາມກາລເວລາ ແລະສະຖານະການ ໃນເມື່ອຄຣິສຈັກໄດ້ຂຍາຍເຕີບໃຫຍ່ອອກໄປຢ່າງໄວ ມີຜູ້ຄົນຫັນເຂົ້າມາເປັນຄຣິສຕຽນກັນທົ່ວຣາຊອານາຈັກໂຣມັນ ທົ່ວຢູໂຣບ ແລະມີການຈັດສົ່ງມິຊຊັນນາຣີອອກໄປທົ່ວໂລກ ເພື່ອສັ່ງສອນຊົນທຸກຊາດໃຫ້ກັບໃຈຮັບເອົາຄວາມຣອດພົ້ນຈາກອົງພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ຣອດ ການສຶກສາໃນຄຣິສຈັກຈຶ່ງຈໍາເປັນຕ້ອງມີການສອນຂຍາຍຄວບຄູ່ນໍາກັນໄປ ຄຣິສຕຽນສຶກສາຈຶ່ງໄດ້ ພັທນາໄປຕາມຍຸກຕາມສະມັຍດັ່ງນີ້

### I. ການສອນຄວາມຮູ້ພື້ນຖານທາງຄຣິສສາສນາ
### (Catechumenal and Catechelical Schools)

ການສອນຄວາມຮູ້ພື້ນຖານທາງຄຣິສສາສນາຕອນຕົ້ນເປັນການສອນໂດຍໃຊ້ວິທີ "ປຸຈສາວິສັຊນາ" (Chatechism) ຄືການຮຽນການສອນແບບຖາມ-ຕອບ ສົນທະນາທັມ ຫລືອະພິປາຍສະແດງຄວາມຄິດເຫັນ ສະແດງທັມມະ ແລະຄວາມຮູ້ຄວາມເຂົ້າໃຈໃນເຣື້ອງຄໍາສອນຂອງສາສນາຄຣິສ ໂດຍຈັດການສອນອອກເປັນກຸ່ມ ໆ ຄືກຸ່ມຜູ້ຕຽມຕົວເຂົ້າຮັບບັບຕິສມາ ເພື່ອເປັນການຢືນຢັນຄວາມຫມັ້ນໃຈໃນຄວາມເຊື່ອ

ຫລືສອນກຸ່ມທີ່ຕ້ອງການເຂົ້າຮັບພິທີມະຫາສນິດ ຫລືພິທີຣະລຶກເຖິງພຣະເຢຊູຄຣິສ ໂດຍການສອນຄວາມຮູ້ພື້ນຖານເພື່ອຕຽມຕົວ ຕຽມໃຈໃຫ້ຜູ້ທີ່ເຊື່ອໃຫ້ເກີດຄວາມເຂົ້າໃຈແລະແນ່ໃຈເສັຽກ່ອນ ຈຶ່ງຈະໃຫ້ເຂົ້າໄປຮ່ວມພິທີໃນຄຣິສຈັກ "ກິຈກັມການສອນໂດຍວິທີນີ້ ມີການສອນປວັດ ການເປັນມາຂອງພຣະທັມຄັມພີ ຫລັກຄວາມເຊື່ອຂອງຄຣິສຕຽນ ສີລທັມ ແລະພຣະທັມບິດເພັງສັລເສີນ ໂດຍມີຜູ້ຂຽນໜັງສືຄູ່ມືສະບັບນ້ອຍ ໆ ເປັນປຶ້ມທຳອິດ ຊຶ່ງມີຄວາມຍາວເທົ່າກັບພຣະທັມເອເຟໂຊ ໄດ້ເອີ້ນປຶ້ມນີ້ວ່າ **"ຄຳສອນຂອງອັຄສາວົກສິບສອງຄົນ"** (The Teaching of the Twelve Apostles) [1] ປຶ້ມຄູ່ມືນີ້ໄດ້ໃຊ້ເປັນຄູ່ມືການສອນຂອງຄຣິສຈັກໃນຍຸກນັ້ນ ໄດ້ນຳພາໃຫ້ສະມາຊິກໄດ້ຮຽນ ໂດຍການທ່ອງໃຫ້ຈົດຈຳເປັນຄືກັບບົດສວດມົນກ່ອນຈະຮັບບັບຕິສມາ ຫລືໃຊ້ສວດອ້ອນວອນເພື່ອການສຳນຶກບາບ ຈາກການສອນຄວາມຮູ້ເບື້ອງຕົ້ນຂອງຄຣິສສາສນາ ໄດ້ພັທນາຂຍາຍອອກໄປເປັນທີ່ນິຍົມກັນຢ່າງກ້ວາງຂວາງ ຈົນກາຍເປັນໂຮງຮຽນ (Catechetical Schools) ແລະກ້າວໜ້າຈົນເຖິງຂັ້ນ ມະຫາວິທະຍາລັຍ ເຊັ່ນມະຫາວິທະຍາລັຍແຫ່ງອະເລັກຊານເດັຽ ໃນປະມານ ຄ.ສ.180 ການສອນທີ່ເອີ້ນວ່າ ເປັນຄວາມຮູ້ເບື້ອງຕົ້ນນີ້ ໄດ້ນຳໄປເຖິງຄວາມຮູ້ອັນກ້ວາງຂວາງ ໄດ້ຕຽມບຸກຄົນທີ່ມີຄວາມເຊື່ອແລະມີຊື່ສຽງຫລາຍຄົນໄດ້ປາກົດຂຶ້ນມາ ຕົວຢ່າງເຊັ່ນ ທ່ານເທີທູລຽນ (Tertullian) ທ່ານໄຊປຣຽນ (Cyprian) ທ່ານແອມບຣອສ (Ambrose) ທ່ານເຄລເມນ (Clement) ທ່ານອໍຣິເຈນ (Origen) ຢ່າງໃດກໍຕາມ ຫລັກການຮຽນການສອນໄດ້ພັທນາໄປຕາມຍຸກຕາມສະໄມ ໂດຍສະເພາະຢ່າງຍິ່ງ ເມື່ອມະຫາຣາຊອານາຈັກໂຣມັນໄດ້ເປີດໂອກາດໃຫ້ຜູ້ເຊື່ອໄດ້ຫລັ່ງໄຫລ ເຂົ້າມາເປັນຄຣິສຕຽນເປັນຈຳນວນຫລາຍແລ້ວ ໄດ້ມີການໃຫ້ບັບຕິສມາແກ່ເດັກນ້ອຍທີ່ເກີດໃໝ່ຢ່າງຫລວງຫລາຍ ໃນຍຸກຕໍ່ມາການບັບຕິສມາແກ່ຜູ້ໃຫຍ່ໄດ້ລົດນ້ອຍລົງ ຈຶ່ງໄດ້ຈັດຣະບົບການສອນແກ່ເດັກນ້ອຍຫລາຍກວ່າແກ່ພວກຜູ້ໃຫຍ່ ເຮັດໃຫ້ແນວການສອນ ແບບສົນທະນາທັມນີ້ ບໍ່ມີຄົນນຳມາໃຊ້ໄດ້ສູນຫາຍໄປ

## II. **ການສິດສອນໃນອາຣາມ** (Monastic)

ການສິດສອນໃນອາຣາມ ໄດ້ຂຍາຍຕົວຂຶ້ນພ້ອມ ໆ ກັບການຂຍາຍຕົວຂອງພວກນັກບວດ ໃນປະມານສັຕວັດທີ່ 6 ເຖິງສັຕວັດທີ່ 9 ຊຶ່ງເກີດການຂຍາຍອາຣາມເຂດອອກໄປຢ່າງກວ້າງຂວາງທີ່ເອີຣົບ ໂດຍອິດທິພົນຂອງ "ກຸ່ມນັກບວດເບນເນດິກ" ຜູ້ເປັນນັກບວດທີ່ມີຣະບຽບເຄັ່ງຄັດ ມີການຝຶກຝົນອົບຮົມໃຫ້ນັກບວດໄດ້ຮັບການຮຽນຮູ້ໃນອາຣາມ ໂດຍການຄັດລອກພຣະທັມຄັມພີ ໂດຍການອ່ານພຣະຄັມພີວັນລະຫລາຍ ໆ ຮອບ ເຖິງແມ່ນເວລາຮັບປະທານອາຫານກໍຍັງມີນັກບວດພັດປ່ຽນວຽນກັນອ່ານພຣະຄັມພີ ມີການທ່ອງໃຫ້ຈຳບົດສວດ ແລະຄຳອ້ອນວອນ ການສິດສອນແນວນີ້ ພາຍຫລັງໄດ້ຈັດໃຫ້ມີຣະບົບການສອນແບບໂຮງຮຽນປະຖົມ ແລະໂຮງຮຽນມັດທະຍົມ ໂດຍຜູ້ເຂົ້າຮຽນໃໝ່ເປັນຄົນທີ່ມາຈາກຂ້າງນອກອາຣາມ ຫລືເດັກນ້ອຍເຂົ້າມາຮຽນໄດ້ຮັບຄວາມຮູ້ພຣະຄັມພີ ຄວບຄູ່ໄປກັບການຮຽນທາງສິລປະ ຫລືວັນນະຄະດີ ມີການເລື່ອນຊັ້ນສູງຂຶ້ນໄປຈົນເຖິງຂັ້ນຕຽມຕົວເຂົ້າບວດເປັນນັກບວດ ໃນອາຣາມຄຣິສຕຽນມີການສຶກສາພຣະຄັມພີ ສຶກສາຫລັກຂໍ້ເຊື່ອຫລັກສາສນາສາດ ຄຳສວດອ້ອນວອນ ການເທສນາ ແລະດົນຕຣີ ຊຶ່ງຄືກັບວິທຍາລັຍພຣະຄຣິສທັມຄັມພີນັ້ນເອງ (Theological Seminary) ອາຣາມເຫລົ່ານີ້ ຕັ້ງຢູ່ຫ່າງໄກຈາກເຂດຕົວເມືອງເປັນສະຖານທີ່ງຽບສະງົບ ເປັນສະຖານທີ່ອົບຮົມດ້ານສິລທັມ ຣະບຽບ ວິນັຍ ແລະປອດພັຍຈາກເສິກສົງຄາມ ເປັນສະຖານສົງເຄາະແລະເປັນບ່ອນລີ້ພັຍໃນຍຸກນັ້ນ

## III. ການສຶດສອນໃນຄຣິສຈັກທົ່ວໄປ (Cathedral School)

ການສຶດສອນແບບນີ້ເກີດຂຶ້ນຍ້ອນວ່າ ການສອນແບບສິນທະນາທັມຕາມທົ່ວຂໍ້ I ນັ້ນ ກຳລັງເສື່ອມສູນໄປແລະຜູ້ຄົນທີ່ອາສັຍຢູ່ໃນເມືອງໃຫຽ່ຫ່າງໄກຈາກອາຣາມ ກໍເປັນການຍາກທີ່ຈະໄດ້ຮັບການຮຽນຢ່າງທົ່ວເຖິງທຸກ ໆ ວັນ ດັ່ງນັ້ນຈຶ່ງຈຳເປັນຕ້ອງມີການຈັດຕັ້ງແນວທາງການສອນຂຶ້ນ ເພື່ອທົດແທນສິ່ງທີ່ຂາດຫາຍໄປ ໂດຍສະເພາະຢ່າງຍິ່ງຄຣິສຈັກໃຫຽ່ ໆ ທີ່ມີຈຳນວນສະມາຊິກຫລາຍ ຊຶ່ງເປັນສູນຮວມຂອງປະຊາຄົມ (Communities) ທີ່ຢູ່ໃນບໍຣິເວນນັ້ນ ຈຳເປັນຢ່າງຍິ່ງຕ້ອງຈັດໃຫ້ມີຄຣິສຕຽນສຶກສາແກ່ເດັກນ້ອຍ ແລະອົບຮົມຜູ້ໃຫຽ່ຄຽງຄູ່ກັນໄປ ໃນຕອນທຳອິດນັ້ນການສຶດສອນມຸ່ງສົນໃຈແຕ່ເຣື່ອງຂອງຄຣິສສາສນາ ພ້ອມດ້ວຍເຣື່ອງສິລທັມແລະຝຶກອົບຮົມຜູ້ນຳຝ່າຍຄາຣາວາສ ຢ່າງໃດກໍຕາມໃນທີ່ສຸດ ການສຶດສອນໄດ້ຂຍາຍແລະພັທນາອອກໄປເປັນໂຮງຮຽນຊັ້ນປະຖົມ ແລະກ້າວໜ້າໄປເຖິງຂັ້ນມັດທະຍົມ ແລະໃນທີ່ສຸດກາຍເປັນໂຮງຮຽນຂອງຣັຖບາລ (Pubblic School) ທີ່ເກີດຂຶ້ນທົ່ວຢູໂຣບຕາວັນຕົກ ມະຫາວິທຍາລັຍ ຕ່າງ ໆ ໄດ້ກໍ່ຕັ້ງແລະໄດ້ພັທນາຂຶ້ນມາຈາກພື້ນຖານຂອງໂຮງຮຽນແບບນີ້ຫລາຍກວ່າ ຈາກໂຮງຮຽນທີ່ເປັນວັດອາຣາມ

## IV. ມະຫາວິທຍາລັຍໃນສະມັຍກາງ (Mediaval University)

ມະຫາວິທຍາລັຍເກີດຂຶ້ນຍ້ອນການສຶດສອນທີ່ເຂັ້ມແຂງ ທີ່ມີພື້ນຖານການສອນຂອງຄຣິສສາສນາ ມະຫາວິທຍາລັຍຫລາຍແຫ່ງໄດ້ພັທນາຂຶ້ນ ມາຈາກການສອນຂອງຄຣິສຈັກທ້ອງຖິ່ນ ຊຶ່ງຂຶ້ນຢູ່ກັບການເບິ່ງແຍງຂອງສັນຕະປາປາ (Pope) ແລະເຈົ້າອະທິການ (Bishop) ມີຄນະອາຈານຜູ້ສອນທີ່ເປັນຜູ້ນຳຄຣິສຈັກ ໃນເວລານັ້ນໄດ້ອຸທິດຕົວເພື່ອການສອນທາງສາສນາສາດ (Theology) ມະຫາວິທຍາລັຍໃນຍຸກກາງນີ້ໄດ້ຕັ້ງຕົ້ນແຕ່ແຣກ ເພື່ອການສອນສາສນາສາດຢ່າງເອົາຈິ່ງເອົາຈັງ ນຳພາໃຫ້ເກີດມີ ຜູ້ນຳສາສນາສາດຫລາຍທ່ານທີ່ມີຊື່ສຽງ ແລະມີບົດບາດພ້ອມທັງອິດທິພົນໃນການປະຕິຮູບຄຣິສຈັກໄດ້ສຳເຣັດໃນສະມັຍກາງຈົນເຖິງຍຸກສມັຍຂອງການຟື້ນຟູວິທຍາການໃໝ່ (Renaissance) ມະຫາວິທຍາລັຍທີ່ມີຊື່ສຽງເຫລົ່ານີ້ ໄດ້ພັທນາກວ້າງຂວາງອອກໄປໃນສາຂາວິຊາຕ່າງ ໆ ເຊັ່ນ ວິຊາກົດໝາຍ ແລະການແພດ ເຊັ່ນ ມະຫາວິທຍາລັຍປາລີສ (Paris) ອັອກຊ໌ຟອດ (Oxford) ແຄມບຣິດ (Cambridge) ແລະໄຮເດລເບີກ (Heidelberg) ມະຫາວິທະຍາລັຍເຫລົ່ານີ້ໄດ້ເລີ້ມຕົ້ນ ສອນສາສນາສາດກ່ອນວິຊາອື່ນ ໆ ທັງໝົດ ເປັນສະຖາບັນການສຶກສາທີ່ສ້າງຜູ້ນຳທາງສາສນາທີ່ສຳຄັນ ໄດ້ແກ່ ທ່ານໄວຄລິຟ (Wycliffe) ທ່ານນິວຕັນ (Newton) ທ່ານລູເທີ (Luther) ແລະທ່ານຄາລວິນ (Calvin) ຊຶ່ງບຸກຄົນເຫລົ່ານີ້ໄດ້ຜລິດໜັງສື ຂໍ້ຂຽນບົດຮຽນ ແລະຄຳສອນທີ່ນຳໃຫ້ເກີດການປະຕິຮູບຄຣິສຈັກໃນສະມັຍກາງ ຂໍ້ຂຽນເຫລົ່ານີ້ເປັນຫລັກຄຳສອນທາງສາສນາສາດ ແລະເປັນພື້ນຖານຂອງຄຣິສຈັກ ໃນຄນະນິກາຍຕ່າງ ໆ ໃນປັດຈຸບັນຄືກັນ

## V. ຄຣິສຕຽນສຶກສາໃນສະມັຍປະຕິຮູບຄຣິສຈັກ (Christian Education in the Reformation Era)

ການປະຕິຮູບຄຣິສຈັກໃນສະມັຍກາງນັ້ນ ເປັນເຫດການໃນປວັດສາດທີ່ນຳພາໃຫ້ເກີດການປ່ຽນ

ແປງໃນຄຣິສຈັກຢ່າງຫລວງຫລາຍ ເປັນຜົນໃຫ້ເກີດຄຣິສຈັກໂປເຕັສແຕນແຍກຕົວອອກຈາກຄຣິສຈັກຄາທໍລິກຢ່າງເດັດຂາດ ການປະຕິຮູບຄຣິສຈັກໃນເວລານັ້ນ ຈໍາເປັນຕ້ອງກ່ຽວຂ້ອງແລະອາສັຍຫລັກການໃຫມ່ທີ່ກ່ຽວຂ້ອງກັບຄຣິສຕຽນສຶກສາ ຜູ້ນໍາການປະຕິຮູບໄດ້ທໍາການແປພຣະຄັມພີອອກເປັນຫລາຍພາສາ ການສຶກສາພາສາກຣີກແລະພາສາເຮັບເຣີໄດ້ເຂົ້າມາມີບົດບາດ ເພື່ອຊ່ວຍໃຫ້ການແປພຣະຄັມພີໄດ້ຖືກຕ້ອງສົມບູນຕາມຄວາມຫມາຍດັ້ງເດີມຂອງພຣະຄັມພີຕົ້ນສະບັບກີກ ຂໍ້ຂຽນບົດຄວາມການຕີຄວາມຫມາຍພຣະຄັມພີຂອງຜູ້ນໍາການປະຕິຮູບຄຣິສຈັກໄດ້ຖືກພິມອອກ ແລະແຈກຢາຍອອກໄປຢ່າງກວ້າງຂວາງ ຄຣິສຈັກທີ່ສົນໃຈໃນການເຄື່ອນໄຫວປ່ຽນແປງໄດ້ເກີດການຟື້ນຟູ ຈົນເຖິງການປະຕິຮູບແຍກຕົວອອກຈາກຄຣິສຈັກຄາທໍລິກໄດ້ມີການຕັ້ງຫນ້າຕັ້ງຕາສຶກສາ ຕິດຕາມຂ່າວການປ່ຽນແປງ ການປະຊຸມຟື້ນຟູໃຈ ມີການສິດສອນໃຫ້ເກີດຄວາມເຂົ້າໃຈໃຫມ່ໃນເຣື່ອງຄຣິສຈັກແລະການປົກຄອງຄຣິສຈັກ ຮວມເຖິງຫລັກການດໍາເນີນວຽກງານການບໍຣິຫານຂອງຄຣິສຈັກ ພຣະຄັມພີໄດ້ຖືກເປີດອອກອ່ານຫລາຍຂຶ້ນ ມີການສອນ ມີການແປຄວາມຫມາຍໂດຍກົງຈາກພຣະຄັມພີ ແລະທໍາຄວາມເຂົ້າໃຈໄດ້ແຈ່ມແຈ້ງຖືກຕ້ອງຫລາຍຂຶ້ນທີ່ກ່ຽວຂ້ອງກັບລັກສນະຂອງພຣະເຈົ້າ ຄວາມເຊື່ອ ຄວາມຣອດພົ້ນ ການປະກາດ ແລະການປົກຄອງຄຣິສຈັກ ຜູ້ນໍາຫລາຍຄົນຈາກຫລາຍປະເທດ ຕົວຢ່າງ ທ່ານລູເທີຈາກເຢັຣະມັນ ທ່ານສວິງລີ່ຈາກສວິສເຊີແລນ ທ່ານໄວຄລີຟຈາກອັງກິດ ຈົນເຖິງເຈົ້າຊີວິດເຮັນຣີທີ່ 8 ແລະຕໍ່ມາກຸ່ມພຽວຣີຕັນ ຊຶ່ງເປັນກຸ່ມທີ່ນໍາພາໃຫ້ການປະຕິຮູບກ້າວຫນ້າຕໍ່ໄປ ຈົນທົ່ວຢູໂຣບ ແລະເຜີຍແຜ່ອອກໄປ ຈົນກະທັ້ງເຖິງອະເມຣິກາເຮັດໃຫ້ເກີດຄຣິສຈັກຂຶ້ນມາຫລາຍຄນະຫລາຍນິກາຍ ຊຶ່ງແຕ່ລະຄນະແຕ່ລະນິກາຍໄດ້ມີການສອນຫລັກຂໍ້ເຊື່ອ ແລະສອນຫລັກການປະຕິບັດຂອງຕົວເອງພ້ອມ ໆ ກັບການສອນພຣະຄັມພີ ແລະການຕີຄວາມຫມາຍພຣະຄັມພີທີ່ເນັ້ນຫນັກໄປຕາມຄວາມເຊື່ອຂອງຄນະນິກາຍນັ້ນ ໆ ແຕ່ລະຄນະມີການຈັດພິມຫນັງສືຄູ່ມື ບົດຮຽນສໍາຫລັບເດັກນ້ອຍ ແລະຜູ້ໃຫຍ່ ມີການຈັດຕັ້ງໂຮງຮຽນພຣະຄຣິສທັມຂອງແຕ່ລະຄນະ ເພື່ອຝຶກຝົນຜູ້ນໍາແລະຜລິດຜູ້ຮັບໃຊ້ ຜູ້ປະກາດ ສິດຍາພິບາລແລະອາຈານ ຈຶ່ງເຫັນໄດ້ວ່າ **"ການສຶກສາບໍ່ໄດ້ເປັນພຽງຕົ້ນເຫດໃຫ້ເກີດການປະຕິຮູບຄຣິສຈັກເທົ່ານັ້ນ ແຕ່ໂດຍອາສັຍຣະບົບການສຶກສາໄດ້ສິ່ງຜົນນໍາພາໃຫ້ຄຣິສຈັກປະຕິຮູບ ແລະໄດ້ຕັ້ງຫມັ້ນຄົງສືບຕໍ່ໄປ"** [2]

## VI **ການສຶກສາໃນຄຣິສຈັກຄາທໍລິກ** (Catholic Education)

ພາຍຫລັງການປະຕິຮູບຄຣິສຈັກໃນສມັຍກາງ ຝ່າຍໂປເຕັສຕນໄດ້ແຍກຕົວອອກຈາກຄາທໍລິກເຮັດໃຫ້ຄຣິສຈັກຄາທໍລິກເກີດການສູນເສັຽຢ່າງຫລວງຫລາຍ ອີກທັງເຫັນວ່າຝ່າຍປະຕິຮູບຄຣິສຈັກໄດ້ອາສັຍຄຣິສຕຽນສຶກສາເປັນຕົວນໍາພາສະມາຊິກໃຫ້ເກີດການຮຽນຮູ້ ເກີດການປັບປຸງປ່ຽນແປງຄຣິສຈັກຢ່າງໄວດັ່ງນັ້ນຄຣິສຈັກຄາທໍລິກ ຈຶ່ງໄດ້ຕ້ານຄືນໂດຍໃຊ້ຣະບົບການສຶກສາເປັນການໂຕ້ຕອບຄຣິສຈັກໂປເຕັສຕນ

ໃນປີ ຄ.ສ.1534 ໂດຍການນໍາພາຂອງທ່ານໂລໂຍລາ (Loyola) ໂຮງຮຽນຂອງຄນະເຢຊູອິດຊຶ່ງເປັນຝ່າຍຄາທໍລິກ ໄດ້ນໍາຜົນງານແລະຄວາມກ້າວຫນ້າສູງສຸດໃນດ້ານຄຣິສຕຽນສຶກສາ ໄດ້ຝຶກອົບຮົມຜູ້ນໍາມິຊຊັນນາຣີ ແລະໄດ້ຖືກສົ່ງອອກໄປທົ່ວໂລກ ມີການກໍ່ຕັ້ງວິທຍາລັຍສັ່ງສອນອົບຮົມພຣະຄັມພີເພື່ອຕຽມນັກສຶກສາໃຫ້ເປັນ ທະຫານຂອງພຣະຄຣິສ ຫລືທີ່ເອີ້ນວ່າ "Catholic Salvation Army" ໂດຍມີຄໍາຂວັນປຸກໃຈວ່າ **"ຂໍໃຫ້ທຸກສິ່ງເປັນສງ່າຣາສີອັນຍິ່ງໃຫຍ່ແດ່ພຣະເຈົ້າ"** (All for God's greater glory) ຜູ້ຮຽນຕ້ອງຮັບການຝຶກອົບຮົບຢ່າງນ້ອຍ 4-6 ປີ ໃນຣະດັບພື້ນຖານແລະມີການຮຽນໃນຣະດັບສູງ ຊຶ່ງຕ້ອງໃຊ້ເວລາ 7-9 ປີໂດຍເນັ້ນການສຶກສາ ດ້ານສາສນາສາດ ການຮຽນພາສາ

ລາຕິນ ເພື່ອອ່ານພຣະຄັມພີພາສາລາຕິນ ແລະຄຳສວດອ້ອນວອນຫລືຄູ່ມືຄຳສອນເປັນພາສາລາຕິນ ຊຶ່ງເອົາມາຈາກກຸງໂຣມ ຍັງມີການຝຶກຣະບຽບວິນັຍໃຫ້ເຂັ້ມແຂງ ຜົນປາກົດວ່າຄນະເຢຊູອິດໄດ້ຮຸ່ງເຮືອງຢູ່ເຖິງ 300 ປີໄດ້ສ້າງມິຊຊັນນາຣີທົ່ວຢູໂຣບ ແລະທົ່ວໂລກຊຶ່ງຜົນງານຍັງປາກົດຢູ່ໃນທຸກມື້ນີ້ ຢູ່ໃນຫລາຍ ໆ ປະເທດທົ່ວໂລກ ຈົນກະທັ່ງຄຣິສຈັກຄາທໍລິກໄດ້ກ່າວເປັນຄຳຂວັນວ່າ **"ຕັ້ງແຕ່ມີການຟື້ນຟູໃນເຣື່ອງການຮຽນການສອນນັ້ນ ບໍ່ມີພວກໃດເດັ່ນກວ່າຄນະເຢຊູອິດ ຊຶ່ງເປັນກຸ່ມທີ່ມີບົດບາດແລະມີສ່ວນໃນດ້ານການສຶກສາຫລາຍທີ່ສຸດ"** [3]

## VII ໂຮງຮຽນວັນອາທິດ (Sunday School)

ໂຮງຮຽນວັນອາທິດເປັນວຽກງານທີ່ສຳຄັນທີ່ສຸດແລະ ເປັນຜົນງານທີ່ດີເດັ່ນສູງສຸດຂອງຄຣິສຕຽນສຶກສາທີ່ປາກົດຢູ່ໃນປັດຈຸບັນນີ້ ເປັນຫນ່ວຍງານທີ່ສາມາດທຳການສິດສອນພຣະຄຳຂອງພຣະເຈົ້າ ແກ່ເດັກນ້ອຍແລະຜູ້ໃຫຍ່ໄດ້ຢ່າງທົ່ວເຖິງ ໂຮງຮຽນວັນອາທິດໄດ້ຈະເຣີນກ້າວຫນ້າສາມາດຈັດຣະບົບຣະບຽບການສຶກສາໂດຍມີຫລັກສູດ (Curriculum) ຂອງແຕ່ລະຣຸ້ນແຕ່ລະວັຍ ຕັ້ງແຕ່ເດັກນ້ອຍ ໆ ຈົນເຖິງຜູ້ເຖົ້າ ມີຄູ່ມືການສອນມີບົດຮຽນທີ່ຕໍ່ເນື່ອງກັນ ເພື່ອໃຫ້ຜູ້ຮຽນໄດ້ມີໂອກາດຮຽນທັງພຣະທັມຄັມພີເດີມ ແລະພຣະທັມຄັມພີໃຫມ່ໄດ້ຢ່າງທົ່ວເຖິງ ມີການພັທນາປັບປຸງບົດຮຽນພຣະຄັມພີໃຫ້ເຫມາະສົມຕໍ່ເຫດການ ແລະສະຖານະການໃນແຕ່ລະຍຸກແຕ່ລະສມັຍ ມີການສົ່ງເສີມຄຸນພາບດ້ານການສອນ ການຝຶກອົບຮົມຄຣູ ມີການຈັດທຳອຸປະກອນ ແລະການແນະນຳການໃຊ້ອຸປະກອນ ແລະຄູ່ມືຄຣູ ຄຣິສຈັກໂປເທັສຕານເກືອບທຸກຄນະນິກາຍໄດ້ອາສັຍຣະບົບການສຶກສາໃນວັນອາທິດນີ້ເປັນພື້ນຖານ ເພື່ອໃຫ້ການສຶກສາແກ່ສະມາຊິກຂອງຄຣິສຈັກໄດ້ຢ່າງທົ່ວເຖິງ ແລະຍັງເປັນພື້ນຖານເຮັດໃຫ້ເກີດຄຣິສຕຽນສຶກສາ ດ້ານອື່ນ ໆ ໃນຄຣິສຈັກ ຊຶ່ງພວກເຮົາຈະໄດ້ພາກັນສຶກສາໃນບົດຕໍ່ ໆ ໄປ

### ການກຳເນີດເກີດໂຮງຮຽນວັນອາທິດ

ໃນ ຄ.ສ. 1708 ທ່ານໂຣເບີຣຕ ໄຣເຄສ (Robert Raikes) ໄດ້ວ່າຈ້າງຜູ້ຍິງໃຫ້ເປັນຜູ້ສອນເດັກນ້ອຍທີ່ຫລິ້ນຢູ່ຕາມຖນົນຫົນທາງໃນແຖບເມືອງ ທີ່ກັນດານແລະຍາກຈົນ ທີ່ເມືອງຊູດທີ້ອອລເລ່ (Sooty Alley) ທ່ານໂຣເບີຣຕ ເປັນຄົນມີສິລທັມ ທ່ານເຮັດການຢູ່ໃນສຳນັກໂຮງພິມໃນເມືອງກລໍເຊສເຕີ (Gloucester) ປະເທດອັງກິດ ປາກົດວ່າມື້ນຶ່ງທ່ານໂຣເບີຣຕໄດ້ເຫັນເດັກນ້ອຍເປັນຈຳນວນຫລາຍພາກັນຫລິ້ນຢູ່ໃນສະຖານທີ່ສົກກະປົກຂາດຜູ້ຄົນສົນໃຈ ທ່ານໂຣເບີຣຕໄດ້ຕັດສິນໃຈລົງທຶນຈ້າງເອົາພວກຜູ້ຍິງບາງຄົນມາເປັນຄຣູສິດສອນເດັກນ້ອຍເຫລົ່ານີ້ ໃຫ້ອ່ານອອກຂຽນໄດ້ ໂດຍມີຄວາມຫວັງວ່າເດັກນ້ອຍເຫລົ່ານັ້ນຈະມີອານາຄົດທີ່ດີໃນພາຍຫນ້າ ບໍ່ພຽງເທົ່ານັ້ນທ່ານໂຣເບີຣຕຍັງໄດ້ນຳເອົາເດັກນ້ອຍເຫລົ່ານີ້ ໄປຄຣິສຈັກໃນວັນອາທິດ ແລະໄດ້ຈັດການສອນພຣະຄັມພີແກ່ເດັກນ້ອຍເຫລົ່ານັ້ນ ໃນຕອນເຊົ້າວັນອາທິດດ້ວຍ ປາກົດວ່າມີຜົນດີເກີດແກ່ເດັກນ້ອຍເຫລົ່ານັ້ນ ຈົນເປັນທີ່ຊາລືໄປ ທ່ານໂຣເບີຣ໌ຕ ໄດ້ພິມເຣື່ອງຣາວທີ່ເກີດຂຶ້ນໃນຫນັງສືພິມ ເມືອງກລໍເຊັສເຕີ ໄດ້ເຮັດໃຫ້ຄົນຈຳນວນຫລາຍເກີດຄວາມສົນໃຈ ຕໍ່ມາມີຫລາຍ ໆ ເມືອງໄດ້ເຮັດຢ່າງດຽວກັນ ຄືໄດ້ນຳເດັກນ້ອຍໄປຮຽນພຣະຄັມພີໃນຕອນເຊົ້າວັນອາທິດທີ່ຄຣິສຈັກກັນຢ່າງແຜ່ຫລາຍ ຈົນກະທັ້ງພຣະຣາຊີນີແຫ່ງອັງກິດໄດ້ກ່າວຍ້ອງຍໍ ດັ່ງນັ້ນການສອນໃນເຊົ້າວັນອາທິດຈຶ່ງໄດ້ເກີດຂຶ້ນແລະເປັນທີ່ນິຍົມຢ່າງສູງ ໄດ້ເລີ້ມຈັດການສອນແກ່ເດັກນ້ອຍແລະແກ່ຜູ້ໃຫຍ່ ແລະ

ໄດ້ພັທນາໂຮງຮຽນວັນອາທິດຂຶ້ນໃນພາຍຫລັງ ໃຫ້ຈະເຣີນກ້າວໜ້າມີຣະບົບຣະບຽບຫລາຍຂຶ້ນອີກ

ຄວາມເຄື່ອນໄຫວຂອງໂຮງຮຽນວັນອາທິດ (Sunday School Movement) ໄດ້ແຜ່ມາເຖິງຣັຖນິວອິງແລນ (New England) ໃນສຫະຣັຖອະເມຣິກາ ຊຶ່ງໃນເວລານັ້ນຍັງເປັນເມືອງຂຶ້ນຂອງອັງກິດ ທາງຣັຖນິວອັງແລນໄດ້ຈັດຣະບົບການສອນໃນຕອນເຊົ້າວັນອາທິດຂຶ້ນຢ່າງເກີດຜົນ ຊຶ່ງພາຍຫລັງໄດ້ກໍ່ຕັ້ງເປັນ **"ສະມາຄົມໂຮງຮຽນວັນອາທິດໃນອະເມຣິກາ"** (The American Sunday School Union) ໂຮງຮຽນວັນອາທິດໄດ້ເຜີຍແຜ່ຈົນເປັນທີ່ນິຍົມຂອງຄຣິສຈັກຕ່າງ ໆ ໂດຍທົ່ວໄປໄດ້ມີການປັບປຸງແກ້ໄຂພັທນາໂຮງຮຽນວັນອາທິດໃຫ້ມີຄວາມເຂັ້ມແຂງ ແລະສົມບູນຂຶ້ນຈົນເຖິງທຸກວັນນີ້

---

## ຂໍ້ອ້າງອີງ


[1] J. M. Price, et al., A Survey of Religious Education, (2 nd ed., New York: The Ronald Press Company, 1940), p. 54.

[2] J. M. Price, op. cit., p.62.

[3] C. W. Bardeen, Educational Reforms, (Syracuse Publisher, 1896) p. 33.

# ບົດທີ 6
# ຄຣິສຕຽນສຶກສາໃນຄຣິສຈັກ

**ຄວາມສຳຄັນ**

ເຮົາໄດ້ຮຽນຮູ້ຈັກແລ້ວວ່າ ການສຶກສາເປັນຕົວສື່ອນຳທີ່ມີບົດບາດສຳຄັນຫລາຍ ທີ່ນຳໃຫ້ເກີດການຮຽນຮູ້ ແລະການຈະເຣີນເຕີບໃຫຍ່ໃນຕົວບຸກຄົນ ໃນຄຣິສຈັກ ໃນສັງຄົມ ແລະໃນປະຊາຊາດ ດັ່ງທີ່ເຮົາໄດ້ສຶກສາມາແລ້ວໃນບົດຕົ້ນ ໆ ຄຣິສຕຽນສຶກສາໃນຄຣິສຈັກມີບົດບາດສຳຄັນຢ່າງຫລວງຫລາຍໃນການນຳພາຄຣິສຈັກໃນທຸກ ໆ ດ້ານ ແລະຊ່ວຍເຫລືອພັທນາບຸກຄົນທຸກ ໆ ຣະດັບໃຫ້ເກີດຄວາມຄິດຄວາມເຂົ້າໃຈສອດຄ້ອງພຽງກັນ

ການສຶກສາໃນຄຣິສຈັກຈະຊ່ວຍນຳພາ ຊ່ວຍພັທນາໃຫ້ສມາຊິກເກີດຄວາມເຊື່ອວາງໃຈໃນພຣະເຈົ້າ ໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນພຣະຄຳຂອງພຣະອົງ ການສຶກສາໃນຄຣິສຈັກຈະຊ່ວຍພັດທນາຕົວບຸກຄົນ ຄືຜູ້ນຳຄຣິສຈັກແລະສະມາຊິກໃຫ້ເຂັ້ມແຂງມີຄຸນພາບ ການສຶກສາໃນຄຣິສຈັກຍັງສາມາດຊ່ວຍນຳພາໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນຣະບົບການບໍຣິຫານ ການຈັດການ ແລະການດຳເນີນວຽກການແລະກິຈກັມຕ່າງ ໆ ຂອງຄຣິສຈັກ ພ້ອມກັບການຮູ້ຈັກການຂຍາຍແລະພັທນາຄຣິສຈັກໃຫ້ເກີດຄວາມເຂັ້ມແຂງ ແລະຂຍາຍຕົວອອກໄປດັ່ງຄຳອະທິຖານຂອງພຣະເຢຊູທີ່ຕັດວ່າ

*"ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່*
*ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ*
*ໃນສວັນເປັນຢ່າງໃດກໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ"* *ມັດທາຍ 6: 10*

ຈະເຫັນໄດ້ວ່າຄຣິສຈັກສາມາດຕັ້ງຢູ່ໄດ້ ກໍຕ້ອງອາສັຍປັດຈັຍນຶ່ງທີ່ສຳຄັນຄື ສມາຊິກຂອງຄຣິສຈັກຫລືບຸກຄົນແຕ່ລະບຸກຄົນໃນຄຣິສຈັກທີ່ມີຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າຢ່າງແທ້ຈິງ ແລະທີ່ຍອມປ່ຽນແປງຊີວິດໃຫ້ມີຄຸນພາບ ມີຄວາມສົນໃຈໃນການສຶກສາພຣະຄຳຂອງພຣະເຈົ້າຈົນເຖິງຣະດັບຄວາມເຂົ້າໃຈໃນພຣະຄຳຂອງພຣະເຈົ້າຢ່າງແທ້ຈິງ ເມື່ອສມານິກເຫລົ່ານີ້ມາຣວມຕົວກັນເຂົ້າເປັນຄຣິສຈັກ ກໍຈະເປັນການຖວາຍສງ່າຣາສີກຽດຕິຍົດແດ່ພຣະອົງພຣະຜູ້ເປັນເຈົ້າຢ່າງສູງສຸດ ຫາກວ່າສມາຊິກແຕ່ລະຄົນຍອມຮຽນຮູ້ ຍອມເຂົ້າຮັບການສຶກສາ ຍອມເສັຽສລະຊີວິດ ແລະຍອມບົວລະບັດຮັບໃຊ້ພຣະເຈົ້າດ້ວຍບໍຣິສຸດໃຈຄຣິສຈັກນັ້ນ ໆ ກໍຈະມີແຕ່ຄວາມເຂັ້ມແຂງ ກ້າວໜ້າໄປ

**ຈຸດປະສົງຂອງຄຣິສຕຽນສຶກສາໃນຄຣິສຈັກ**

ສມາຊິກຄຣິສຈັກນີ້ງຄຣິສຈັກໃດກໍຕາມ ຈະເກີດຄວາມເຊື່ອວາງໃຈໃນພຣະເຈົ້າ ເກີດການຮຽນຮູ້ ເກີດການປ່ຽນແປງຊີວິດ ເກີດຄວາມເຂົ້າໃຈໃນນ້ຳພຣະທັຍຂອງພຣະເຈົ້າ ແລະເກີດການຮັບໃຊ້ຕໍ່ກັນ ແລະກັນ ສມາຊິກຍ່ອມຕ້ອງດຳເນີນຊີວິດ ໂດຍປະຕິບັດຕາມຄຳສອນທີ່ປາກົດໃນພຣະຄຣິສທັມຄັມພີ ຄຣິສ ຈັກນັ້ນ ໆ ຈະເກີດຄວາມຈະເຣີນອັນພ້ອມພຽງກັນໃນທຸກ ໆ ດ້ານໃນຄຣິສຈັກ ດັ່ງນັ້ນແລ້ວຈຸດປະສົງອັນ ຍິ່ງໃຫຍ່ຂອງຄຣິສຕຽນສຶກສາໃນຄຣິສຈັກກໍເພື່ອ ສົ່ງເສີມ ພັທນາໃຫ້ເກີດຜົນປະໂຍດທາງດ້ານຝ່າຍຈິດວິນ ຍານດັ່ງທີ່ກ່າວມານີ້ ສມາຊິກທຸກຄົນ ທຸກເພດ ທຸກວັຍທຸກຣະດັບ ຕ້ອງອາສັຍຄວາມເຊື່ອ ຄວາມເຂົ້າໃຈ ແລະຫລັກການຕາມຄຳສິດສອນຂອງພຣະເຢຊູຄຣິສ ແລະເຊື່ອຟັງການຊົງນຳພາຂອງພຣະວິນຍານບໍຣິສຸດ ໂດຍທີ່ຜູ້ເຊື່ອປະຕິບັດຊີວິດຂອງຕົນໃຫ້ເຫມາະສົມຕາມນ້ຳພຣະທັຍຂອງພຣະເຈົ້າ ຮູ້ຈັກຮຽນຮູ້ການນຳພາ ຜູ້ອື່ນ (Leadership) ໃຫ້ຄວາມຮ່ວມມືຮ່ວມໃຈກັນຮັບໃຊ້ ບົວລະບັດພຣະເຈົ້າໂດຍຜ່ານທາງຄຣິສຈັກ ຕາມທີ່ພຣະເຢຊູຄຣິສໄດ້ຊົງສຖາປານາແຕ່ງຕັ້ງໄວ້ໃນໂລກນີ້

**ຄຣິສຈັກສົມຄວນຈັດຕັ້ງໃຫ້ມີຄຣິສຕຽນສຶກສາໃນແບວໃດ**

ຫາກວ່າເຮົາພາກັນສຶກສາແລະພິຈາຣະນາເຖິງລັກສນະການສຶກສາໃນຄຣິສຈັກຢ່າງສົມບູນແບບ ແລ້ວ ກໍເປັນພາບທີ່ງານຊວນຝັນ ແຕ່ຕາມສະພາບແຫ່ງຄວາມເປັນຈິງແລ້ວ ບໍ່ວ່າຄຣິສຈັກໃດກໍຕາມ ເຖິງວ່າຈະໄດ້ພຍາຍາມຢ່າງດີທີ່ສຸດແລ້ວ ກໍຄົງຈະບໍ່ສົມບູນພຽບພ້ອມທຸກປະການ ແມ່ນຢູ່ທີ່ເຮົາສາມາດ ຈະເບິ່ງເຫັນຄຣິສຈັກໃຫຍ່ ໆ ຫລາຍບ່ອນທີ່ມີຣະບົບການສຶກສາໃນຄຣິສຈັກຢ່າງເຕັມຂນາດ ຊຶ່ງຕ້ອງໃຊ້ ກຳລັງແຮງຄົນ ເງິນທຸນ ແລະຜູ້ນຳທີ່ມີຄວາມສາມາດມາບໍຣິຫານແລະຈັດຣະບົບການສຶກສາດ້ານຕ່າງ ໆ ໃຫ້ເກີດອົງການ ຫລືຫນ່ວຍງານ ຫລືພະແນກ ຊຶ່ງພໍຈະສລຸບໄດ້ດັ່ງນີ້

1. ຄຣິສຕຽນສຶກໃນເຊົ້າວັນອາທິດ (Sunday School)
2. ຄຣິສຕຽນສຶກໃນພາກຣະດູຮ້ອນ (Vaction Bible School)
3. ຄຣິສຕຽນສຶກໃນຣະຫວ່າງອາທິດ (Week Day Church School)
4. ຄຣິສຕຽນສຶກສາສຳລັບຊາວຫນຸ່ມ (Youth Fellowships)
5. ຄຣິສຕຽນສຶກສາສຳລັບຜູ້ເປັນໂສດ (Young Adult Groups)
6. ຄຣິສຕຽນສຶກສາສຳລັບຜູ້ຕັ້ງຄອບຄົວໃຫມ່ (New Coples) couples
7. ຄຣິສຕຽນສຶກສາສຳລັບພໍ່ເຮືອນແມ່ເຮືອນ (Mem's and Wemen's Groups)
8. ຄຣິສຕຽນສຶກສາສຳລັບການສຶກສາພິເສດ (Special Ministry)
9. ຄ້າຍພັກຮ້ອງ ແລະການປະຊຸມຟື້ນຟູໃຈ (Camps and Conferences)
10. ຄຣິສຕຽນສຶກສາສຳລັບຜູ້ເຊື່ອໃຫມ່ (Church Membership Classes)
11. ຄນະນັກຮ້ອງ (Choirs)
12. ການອົບຮົມຝຶກຝົນຜູ້ນຳ (Leadership Training)
13. ການຈັດຫ້ອງສມຸດເພື່ອການສຶກສາ (Church Library)
14. ການສຶກສາພຣະຄັມພີຕາມເຮືອນ (Home Bible Studies)
15. ການອົບຮົມຄນະກັມການແລະເຈົ້າຫນ້າທີ່ຄຣິສຈັກ (Boards & Committees, Officers)
16. ການບໍຣິການສົງເຄາະຂອງຄຣິສຈັກ (The General Church Services)

## ແຜນຜັງສະແດງຄວາມສັມພັນຣະຫວ່າງຄຣິສຕຽນສຶກສາແລະວຽກງານຕ່າງ ໆ ຂອງຄຣິສຈັກ



ຈາກແຜນຜັງທີ່ປາກົດຂ້າງເທິງນີ້ ແຕ່ລະຄຣິສຈັກອາດຈະເອີ້ນຫລືໃສ່ຊື່ແຕ່ລະພະແນກຕາມຄວາມເຫມາະສົມຂອງສະພາບການໃນຄຣິສຈັກຂອງຕົນ ແຕ່ລະຄຣິສຈັກສາມາດເພີ່ມເຕີມພະແນກອື່ນ ໆ ເຂົ້າໄປ ຫລືອາດຈະຕັດໃຫ້ເຫລືອນ້ອຍລົງໄດ້ ຕາມຄວາມເຫມາະສົມແລະຕາມກຳລັງຄົນຂອງຄຣິສຈັກນັ້ນ ໆ ສິ່ງທີ່ສຳຄັນທີ່ສຸດຄືວ່າ ເມື່ອຄຣິສຈັກໄດ້ຈັດໃຫ້ມີພະແນກໃດພະແນກນຶ່ງເກີດຂຶ້ນແລ້ວ ຕ້ອງຮູ້ຈັກການບໍຣິຫານງານ ຕ້ອງຮູ້ຈັກການຈັດຕັ້ງອົງການ ແລະຮູ້ຈັກຮັບຜິດຊອບດຳເນີນວຽກການໃນພະແນກຂອງຕົນ ເຮັດໃຫ້ເກີດຣະບຽບແບບແຜນ ເກີດເປັນຫມາຍ ມີການເລືອກຜູ້ນຳຂຶ້ນເພື່ອເບິ່ງແຍງຮັບຜິດຊອບ ແລະຜູ້ຮັບຜິດຊອບຕ້ອງຮູ້ຈັກຫນ້າທີ່ການງານຂອງຕົວວ່າ ຕ້ອງເຮັດຫຽັງແດ່ ເພື່ອໃຫ້ພະແນກທີ່ຕົນຮັບຜິດຊອບນັ້ນສາມາດດຳເນີນກ້າວຫນ້າໄປຕາມເປົ້າຫມາຍທີ່ໄດ້ວາງໄວ້ ຫາກວ່າທຸກ ໆ ພະແນກມີການຈັດຕັ້ງອົງການບໍຣິຫານຂຶ້ນແລ້ວ ແຕ່ລະຝ່າຍກໍຮັບຜິດຊອບງານຂອງຕົນ ແລະໃນເວລາດຽວກັນກໍເຊື່ອມໂຍງປະສານງານຕໍ່ກັນແລະກັນດຳເນີນວຽກງານໃຫ້ພ້ອມໄປນຳກັນ ເກີດການປະສານງານ ເກີດສາມັກຄີທຳກັນ ເກີດຄວາມເຊື່ອ ເກີດປະສົບການຮ່ວມກັນ ເກີດການຮຽນຮູ້ ເກີດການຊູຈິດຊູໃຈຕໍ່ກັນແລະກັນ ດັ່ງພຣະທັມໂກຣິນໂທສບັບຕົ້ນ 12:12-13

*"ເຖິງວ່າ ຮ່າງກາຍເປັນອັນດຽວ ກໍຍັງມີອະວັຍວະຫລາຍສ່ວນ ແລະອະວັຍວະເຫລົ່ານັ້ນແມ່ນຈະມີຫລາຍສ່ວນ ກໍຍັງເປັນກາຍອັນດຽວກັນສັນໃດ ພຣະຄຣິສກໍຊົງເປັນສັນນັ້ນ ເພາະວ່າເຖິງແມ່ນພວກເຮົາຈະເປັນຊາດຢິວ ຫລືຄົນຕ່າງຊາດກໍດີ ເປັນຂ້ອຍຂ້າ ຫລືເປັນອິສຣະກໍດີ ເຮົາທັງຫລາຍໄດ້ຮັບບັພຕິສມາໂດຍພຣະວິນຍານອົງດຽວ ຈຶ່ງເຂົ້າເປັນກາຍອັນດຽວກັນ ແລະພຣະວິນຍານອົງດຽວກໍຊຶມຊ່ວານຢູ່"*

ຊຶ່ງກໍ່ໃຫ້ເກີດພຣະກາຍຂອງພຣະຄຣິສຂຶ້ນຄື ຄຣິສຈັກ ໂດຍມີພຣະເຢຊູຄຣິສເປັນສີສະ ເປັນຈຸດສູນຮວມໃນຫົວໃຈຂອງຜູ້ເຊື່ອທຸກຄົນ ດັ່ງພຣະທັມເອເຟໂຊ 4:15-16

*"ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະຈະເຣີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະ ຄືພຣະຄຣິສ ເນື່ອງຈາກພຣະອົງນັ້ນ ຮ່າງກາຍທັງສິ້ນທີ່ຕິດຕໍ່ສນິດແລະຜູກພັນກັນໂດຍທຸກ ໆ ຂໍ້ຕໍ່ທີ່ຊົງປະທານ ຈຶ່ງໄດ້ຈະເຣີນໃຫຍ່ຂຶ້ນດ້ວຍຄວາມຮັກ ເມື່ອອະວັຍວະທຸກສ່ວນເຮັດຫນ້າທີ່ຕາມຄວາມເຫມາະສົມແລ້ວ"*

ຈະເຫັນໄດ້ວ່າ ການຈັດໃຫ້ມີຣະບົບຄຣິສຕຽນສຶກສາເກີດຂຶ້ນໃນຄຣິສຈັກນັ້ນ ມີຄວາມສຳຄັນຢ່າງຫລວງຫລາຍປຽບໄດ້ວ່າ ເປັນສາຍໂລຫິດທີ່ຕໍ່ເຊື່ອມໂຍງໃຫ້ອະວັຍວະສ່ວນຕ່າງ ໆ ຂອງຮ່າງກາຍ ຄືຄຣິສຈັກໄດ້ເຮັດງານຮ່ວມກັນ ເປັນຂໍ້ຕໍ່ສົ່ງເສີມຄວາມຮັກແພງ ຄວາມເຂົ້າໃຈກັນແລະກັນ ດັ່ງນັ້ນແລ້ວບຸກຄົນນຶ່ງບຸກຄົນໃດ ທີ່ມີຫນ້າທີ່ຮັບຜິດຊອບງານຈຶ່ງບໍ່ຕ້ອງແກ່ງແຍ່ງຊິງດີຊິງເດັ່ນກັນ ຫລືເພື່ອຫວັງຈະມີຫນ້າມີຕາໄດ້ເປັນຜູ້ນຳ ເພາະເຫດວ່າ ການເປັນຜູ້ນຳນັ້ນບໍ່ແມ່ນເພື່ອຮັບກຽດຕິຍົດຮັບຄຳຍ້ອງຍໍສັຣເສີນ ແຕ່ແມ່ນທີ່ສຸດນັ້ນຄື ເປັນຜູ້ຮັບໃຊ້ພຣະຜູ້ເປັນເຈົ້າ ເປັນຜູ້ຍອມເສັຽສລະ ເພື່ອນຳພາໃຫ້ຄຣິສຈັກກ້າວຫນ້າອີກຕໍ່ໄປການທີ່ຄຣິສຈັກຈະດຳເນີນໄປໄດ້ຢ່າງສະດວກ ແລະເກີດຜົນດີນັ້ນ ຕ້ອງອາສັຍຫລາຍຝ່າຍນຳກັນ ສຳຄັນທີ່ສຸດຄື ມີພຣະເຈົ້າພຣະບິດາ ພຣະເຢຊູຄຣິສ ແລະພຣະວິນຍານບໍຣິສຸດ ທັງສາມພຣະພາກຂອງພຣະເຈົ້າ

ເປັນຫລັກເປັນເອກໃນຄວາມເຊື່ອຂອງສມາຊິກ ພຣະອົງເປັນຜູ້ນຳພາເບິ່ງແຍງເຮົາ ໃນເວລາດຽວກັນ ສມາຊິກໃນທຸກພະແນກ (ສມາຊິກຜູ້ນຶ່ງຈຳເປັນຕ້ອງໄດ້ຮ່ວມຫລາຍ ໆ ພະແນກ) ທຸກຄົນຕ້ອງຮ່ວມມືກັນແລະຜັດປ່ຽນວຽກກັນເປັນຜູ້ນຳໃນພະແນກຕ່າງ ໆ ກັນ ແລ້ວແຕ່ຄວາມສາມາດຂອງຜູ້ນັ້ນ ແລະຂຶ້ນຢູ່ກັບການຊົງເອີ້ນຂອງພຣະເຈົ້າທີ່ມີຕໍ່ສມາຊິກຜູ້ນັ້ນ ໃຫ້ອອກມາເປັນຜູ້ຮັບໃຊ້ ເປັນຜູ້ຊຸກຍູ້ຊ່ວຍຊູ ເປັນຜູ້ຫນູນຫລັງໃຫ້ກຳລັງໃຈ ສນັບສນຸນທັງທາງກາຍວາຈາໃຈແລະຊັບສິ່ງຂອງພ້ອມກັບເງິນຄຳ ເພື່ອໃຫ້ການດຳເນີນງານນັ້ນເປັນໄປຢ່າງມີປະສິດທິພາບ ເມື່ອທຸກຝ່າຍທຸກພະແນກສາມາດດຳເນີນງານໄປໄດ້ດີ ຜົນດີທີ່ເກີດຂຶ້ນທັງຫມົດຈະມາປາກົດໃຫ້ເຫັນ ຢູ່ທີ່ການນມັສການພຣະເຈົ້າຊຶ່ງເປັນຈຸດຮວມສູງສຸດ ເພາະການນມັສການພຣະເຈົ້ານັ້ນ ຄືການນຳເອົາຜົນງານທຸກສິ່ງທີ່ໄດ້ເຮັດໃນທຸກພະແນກມາຖວາຍ ມາສເນີມາຂາບໄຫວ້ ມາຍ້ອງຍໍສັຣເສີນຖວາຍກຽດຕິຍົດທັງມວລແດ່ອົງພຣະຜູ້ເປັນເຈົ້າ ຊຶ່ງຖືວ່າເປັນການນມັສການພຣະເຈົ້າ (Worship) ອັນເປັນຈຸດສູນຮວມຝ່າຍວິນຍານຈິດຂອງສມາຊິກທຸກ ໆ ຄົນ ຕັ້ງແຕ່ເດັກນ້ອຍຈົນເຖິງຜູ້ໃຫຍ່

**ອົງການ** (Organization)

*ຄວາມຫມາຍຂອງຄຳວ່າ "ອົງການ" ຫມາຍເຖິງ ສູນກາງຂອງກິຈກັມຫລືວຽກການ ທີ່ຮວມຕົວປະກອບກັນຂຶ້ນເປັນຫນ່ວຍງານ ດັ່ງນັ້ນອົງການຈຶ່ງບໍ່ໄດ້ເກີດຂຶ້ນຕາມທັມຊາດ ແຕ່ເກີດຂຶ້ນໂດຍມີຜູ້ຈັດຕັ້ງ ມີຊື່ຂອງອົງການ ອົງການມີເປົ້າຫມາຍ ມີຈຸດປະສົງ ມີຫລາຍຄົນຊ່ວຍກັນເຮັດວຽກນຳກັນ ມີຄວາມຮ່ວມມືກັນ ເພື່ອໃຫ້ຜົນງານສຳເຣັດຕາມແຜນງານ ແລະຕາມເປົ້າຫມາຍທີ່ໄດ້ຕັ້ງໃຈໄວ້*

ອົງການແຕ່ລະຫນ່ວຍມີຂນາດບໍ່ເທົ່າກັນ ອາດຈະເປັນອົງການໃຫຍ່ຫລືອົງການນ້ອຍກໍໄດ້ ຂຶ້ນຢູ່ກັບຈຳນວນສມາຊິກ ແລະຄວາມຕ້ອງການຂອງສມາຊິກຄຣິສຈັກ ມີອົງການຫນ່ວຍງານຫລາຍ ໆ ຫນ່ວຍງານ ເພື່ອເຮັດວຽກງານຂອງພຣະເຈົ້າໃຫ້ສຳເຣັດດັ່ງພຣະປະສົງຂອງພຣະເຈົ້າ ຫນ່ວຍງານຕ່າງ ໆ ໃນຄຣິສຈັກດັ່ງແຜນຜັງທີ່ໄດ້ສະແດງໄວ້ ຈະດຳເນີນໄປໄດ້ຕ້ອງອາສັຍການສຶກສາ ການເຂົ້າໃຈ ການຮຽນຮູ້ ໂດຍໃຊ້ຄຣິສຕຽນສຶກສາເປັນສື່ສັມພັນ ໂດຍມີພຣະຄັມພີອັນເປັນຄຳສອນຂອງພຣະເຈົ້າເປັນສູນກາງ ເປັນເປົ້າຫມາຍ ໂດຍທີ່ທຸກ ໆ ຫນ່ວຍງານເຮັດວຽກ ຕາມຄຳສອນຂອງພຣະຄັມພີ ເພື່ອໃຫ້ນ້ຳພຣະທັຍແລະພຣະປະສົງຂອງພຣະເຈົ້າສຳເຣັດ ດັ່ງທີ່ພຣະເຢຊູຊົງອະທິຖານໃນພຣະທັມມັດທາຍ 6:10

*"ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງໃນສວັນເປັນຢ່າງໃດກໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ"*

ຈະເຫັນໄດ້ວ່າ ຄຳອະທິຖານຂອງພຣະເຢຊູໄດ້ສະແດງໃຫ້ເຫັນເຖິງຈຸດປະສົງ ແລະເປົ້າຫມາຍຂອງພຣະເຈົ້າ ຊຶ່ງໃນຖານະທີ່ພວກເຮົາເປັນສາວົກຂອງພຣະເຢຊູຄຣິສ ເຮົາກຳລັງຮ່ວມງານກັບພຣະເຈົ້າໂດຍການນຳພາຂອງພຣະວິນຍານບໍຣິສຸດ ຄຣິສຈັກຈຶ່ງເປັນອົງການໃຫຍ່ທີ່ສຸດໃນໂລກ ທີ່ພຣະເຈົ້າໄດ້ແຕ່ງຕັ້ງສຖາປນາໄວ້ ເພື່ອດຳເນີນວຽກການຂອງພຣະອົງໃຫ້ເປັນໄປຕາມຈຸດມຸ່ງຫມາຍທີ່ພຣະເຈົ້າໄດ້ວາງໄວ້ ໂດຍມີພຣະຄັມພີເປັນບັນທັດຖານ ເປັນຕົວກຳຫນົດຈຸດປະສົງຢ່າງກວ້າງຂວາງ ເພື່ອໃຫ້ຜູ້ເຊື່ອທຸກຄົນໄດ້ປະຕິບັດວຽກງານໃຫ້ເກີດຜົນໃນທຸກ ໆ ດ້ານ ທັງໃນຊີວິດປະຈຳວັນ ວຽກງານແລະການ

ຮັບໃຊ້ໃນຄຣິສຈັກ ເພື່ອຊ່ວຍເຫລືອມະນຸດທຸກຄົນທົ່ວໃຕ້ຟ້າໃຫ້ມາເຖິງຄວາມຈິງໃນພຣະເຈົ້າ ມາຮັບຄວາມຣອດພົ້ນ ເກີດການປ່ຽນແປງຊີວິດແລະຖວາຍກຽດ ຖວາຍສັນເສີນພຣະເຈົ້າໂດຍຜ່ານທາງວຽກງານແລະການຮັບໃຊ້ຂອງຄຣິສຈັກ ດັ່ງນັ້ນແລ້ວ ຂໍໃຫ້ຜູ້ນຳທຸກທ່ານຫັນມາພິຈາຣະນາເບິ່ງຄຣິສຈັກຂອງຕົນ ຫລືຫນ່ວຍງານຂອງຕົນ ທີ່ຕົນເອງຮັບຜິດຊອບຢູ່ ວ່າໄດ້ເຂົ້າໃຈເຖິງຈຸດປະສົງອັນແຈ່ມແຈ້ງນີ້ຫລືບໍ່ ເພາະວ່າການທີ່ເຮົາໄດ້ຈັດຕັ້ງໃຫ້ເກີດຄຣິສຈັກ ເກີດຫນ່ວຍງານໃນຄຣິສຈັກນັ້ນ ກໍເພື່ອໃຫ້ເປັນໄປຕາມຈຸດປະສົງທີ່ໄດ້ກ່າວໄວ້ແລ້ວທາງຂ້າງຕົ້ນ ຫາກວ່າຜູ້ນຳຫລືຜູ້ດຳເນີນວຽກການຂອງພຣະເຈົ້າບໍ່ເຂົ້າໃຈເຖິງຈຸດປະສົງອັນຖືກຕ້ອງແລ້ວ ກໍສົມທຽບກັບການເດີນເຮືອໃຫຍ່ໃນມຫາສະມຸດໂດຍບໍ່ມີເຂັມທິດນຳທາງຄືຈະໄດ້ແລ່ນໄປເລື້ອຍ ໆ ໂດຍບໍ່ຮູ້ວ່າໄປທິດທາງໃດ ໃນທີ່ສຸດກໍຈະອ່ອນກຳລັງຫມົດຄວາມອົດທົນ ເກີດຄວາມທໍ້ໃຈ ແລ້ວຄຣິສຈັກຈະຖືກປະປ່ອຍໃຫ້ລອຍເຄວ້ງຄວ້າງໂດຍບໍ່ມີຄວາມຫມາຍ ດັ່ງນັ້ນແລ້ວຜູ້ນຳຄຣິສຈັກຕ້ອງໄດ້ຈັດເວລາ ຈັດການປະຊຸມຂຶ້ນ ເພື່ອເຂົ້າໃຈເຖິງແຜນງານແລະຈຸດປະສົງຂອງພຣະເຈົ້າ ໂດຍເກີດການຈັດຕັ້ງຣະບຽບ ຈັດຕັ້ງອົງການ ຫລືຫນ່ວຍງານຂຶ້ນຢ່າງມີຈຸດມຸ່ງຫມາຍ ມີການຊັກນຳໃຫ້ສມາຊິກເກີດການຮ່ວມມືແລະມີຄວາມເຂົ້າໃຈໃຫມ່ ມີຄວາມຮູ້ສຶກຕື່ນເຕັ້ນ ມີຄວາມຫວັງ ຢາກເຫັນພຣະພອນແລະສແວງຫາການນຳພາຂອງພຣະເຈົ້າ ແຕ່ຖ້າເພາະວ່າເຮົາບໍ່ຮ່ວມມືກັບພຣະເຈົ້າ ພຣະອົງບໍ່ສາມາດອວຍພຣະພອນໄດ້ ດັ່ງນັ້ນແລ້ວ ເຮົາຕ້ອງຮວມຕົວຂຶ້ນໃຫມ່ ໂດຍທີ່ສມາຊິກແຕ່ລະຄົນຍອມຖວາຍຕົວໃຫ້ພຣະເຈົ້າໃຊ້ ຄື ເປັນອົງກອນ (Personnel) ເປັນຕົວບຸກຄົນຫລາຍ ໆ ຄົນມາປະກອບເຂົ້າດ້ວຍກັນ ທີ່ກໍ່ໃຫ້ເກີດອົງການຫລືເກີດຫນ່ວຍງານຂຶ້ນ ອົງການຈະເກີດຂຶ້ນໄດ້ແມ່ນຢູ່ທີ່ຕົວເຮົາ ແມ່ນຕົວສມາຊິກທຸກຄົນທີ່ເປັນສ່ວນປະກອບຂອງຫນ່ວຍງານຫລືຂອງອົງການໃຫຍ່ ທີ່ທຳຫນ້າທີ່ສຳພັນກັນ ຫລືເຮັດວຽກນຳກັນແລະຕໍ່ກັນແລະກັນ ດັ່ງນັ້ນແລ້ວອົງການຫລືຫນ່ວຍງານກໍຈະເກີດຂຶ້ນ ຫາກວ່າສມາຊິກບໍ່ເຂົ້າໃຈເຖິງລັກສນະຫນ້າທີ່ຂອງຕົນ ບໍ່ຍອມໃຫ້ຄວາມຮ່ວມມືກັບຜູ້ນຳ ຜູ້ນຳກໍເຮັດໄປບໍ່ໄດ້ ອົງການຫລືຫນ່ວຍງານຂອງຄຣິສຈັກກໍຈະບໍ່ເຂັ້ມແຂງຫລືອາດຈະບໍ່ເກີດຂຶ້ນມາກໍໄດ້ ໃນທາງກົງກັນຂ້າມ ຫາກວ່າສມາຊິກທຸກຄົນຍອມຮ່ວມມື ກໍເຮັດໃຫ້ຜູ້ນຳມີກຳລັງໃຈເຂັ້ມແຂງໃນການນຳພາ ພຣະເຈົ້າກໍສາມາດອວຍພອນແກ່ອົງການຫນ່ວຍງານນັ້ນ ໆ ເຮັດໃຫ້ຄຣິສຈັກເຂັ້ມແຂງເປັນປຶກແຜ່ນແຫນ້ນຫນາ ສາມາດດຳເນີນງານຍັ່ງຍືນຕໍ່ໄປອັນເປັນການຖວາຍກຽດແລະສງ່າຣາສີແດ່ພຣະເຈົ້າໃນທີ່ສູງສຸດ ແລະບົນແຜ່ນດິນໂລກພວກເຮົາຕ່າງກໍພາກພູມໃຈນຳກັນ

**ຜູ້ນຳ**

ບຸກຄົນທີ່ສຳຄັນທີ່ສຸດ ທີ່ແຕ່ລະຫນ່ວຍງານ ແຕ່ລະພະແນກ ຫລືແຕ່ລະອົງການຈະສາມາດດຳເນີນງານໄປແລະເກີດການຈະເຣີນກ້າວຫນ້ານັ້ນ ແມ່ນຕົວຜູ້ນຳ ຜູ້ນຳເປັນບຸກຄົນທີ່ສຳຄັນທີ່ສຸດ ແລະມີບົດບາດຫລາຍທີ່ສຸດ ຄືຜູ້ນຳພາ ຜູ້ນຳທີ່ດີບໍ່ວ່າຈະເປັນຍິງຫລືຊາຍ ຫາກວ່າມີຄວາມຕັ້ງໃຈຈິງ ມີຄວາມຮັກພີ່ນ້ອງມີຄວາມຮັກຄຣິສຈັກ ແລະຮັກພຣະເຈົ້າຢ່າງແທ້ຈິງ ດັ່ງທີ່ພຣະບັນຍັດຂໍ້ຕົ້ນແລະຂໍ້ໃຫຍ່ທີ່ສຸດໃນພຣະຄັມພີທີ່ໄດ້ຮຽກຮ້ອງໃຫ້ຜູ້ເຊື່ອຕ້ອງຍຶດຖືໄວ້ເປັນຫລັກ ຄື

*"ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດ ແລະດ້ວຍສຸດຄວາມຄິດຂອງເຈົ້າ.. ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ" (ມທ 22:36-39)*

ຂໍ້ບັນຍັດຂໍ້ໃຫຍ່ນີ້ເປັນຫົວໃຈແລະເປັນບັນຍັດສູງສຸດໃນຄຣິສສາສນາ ຊຶ່ງສມາຊິກຄຣິສຈັກໃດກໍຕາມມີຄວາມເຂົ້າໃຈ ແລະຖືປະຕິບັດຂໍ້ບັນຍັດນີ້ຢ່າງຖືກຕ້ອງແລ້ວ ຄຣິສຈັກນັ້ນ ໆ ຍ່ອມຈະດໍາເນີນໄປໄດ້ຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າ ແລະຈະໄດ້ຮັບພຣະພອນຢ່າງຫລວງຫລາຍ ໂດຍສະເພາະຢ່າງຍິ່ງໃນຕົວຂອງຜູ້ນໍາ ຢ່າງນ້ອຍທີ່ສຸດຕ້ອງມີຄວາມເຊື່ອແລະມີຄວາມຮູ້ສຶກທີ່ຮັກພຣະເຈົ້າ ຮັກຄຣິສຈັກ ແລະຮັກພີ່ນ້ອງຢ່າງຈິງໃຈ

ຄຣິສຈັກໃນປັດຈຸບັນນີ້ປະກອບດ້ວຍສມາຊິກຫລາຍລະດັບ ແລະມີບັນຫາໃນເຣື້ອງການຫາຜູ້ນໍາ ໂດຍສະເພາະຢ່າງຍິ່ງຄຣິສຈັກລາວໃນອະເມຣິກາ ແຕ່ແທ້ທີ່ຈິງແລ້ວບໍ່ວ່າຄຣິສຈັກໃດພາສາໃດກໍ່ຕ້ອງພົບກັບບັນຫາເຣື່ອງຂາດເຂີນຜູ້ນໍາ ເພາະວ່າເມື່ອເຮົາຮຽນຮູ້ຫນ້າທີ່ຂອງຜູ້ນໍາຢ່າງແທ້ຈິງຕາມຫລັກການແລ້ວ ຫລາຍຄົນກໍຢ້ານບໍ່ກ້າຮັບເປັນຜູ້ນໍາ ເພາະວ່າຍັງຂາດຄຸນສົມບັດທີ່ດີບາງປະການ ແລະຢ້ານວ່າບໍ່ມີຄວາມສາມາດແດ່ ບໍ່ມີປະສົບການແດ່ ເປັນຕົ້ນ

ແມ່ນຢູ່ໃນການເລືອກໃນການສັນຫາຜູ້ນໍານັ້ນ ຈໍາເປັນຕ້ອງໄດ້ຄຶດເຖິງຄຸນສົມບັດ ຄວາມເຊື່ອ ແລະການດໍາເນີນຊີວິດທີ່ມີແລະຄວາມຮັບຜິດຊອບຂອງຜູ້ທີ່ເປັນຜູ້ນໍາ ເພາະວ່າຜູ້ທີ່ຈະມາເປັນຜູ້ນໍານັ້ນແມ່ນເປັນຜູ້ນໍາຫນ້າ ນໍາຄວາມຄຶດ ແລະນໍາພາສມາຊິກໄປນໍາ ເຮົາຈຶ່ງເອີ້ນຜູ້ນັ້ນວ່າ "ຜູ້ນໍາ" (Learder) **ແຕ່ວ່າ** ທີ່ຈະຣໍຖ້າໃຫ້ໄດ້ພົບຜູ້ນຶ່ງຜູ້ໃດສົມບູນພ້ອມໃນຄຸນສົມບັດທຸກປະການນັ້ນ ກໍຄືຈະຫາບໍ່ພົບຫລືຍາກທີ່ຈະຫາໄດ້ ດັ່ງນັ້ນແລ້ວການເລືອກຫາຜູ້ນໍາຈໍາເປັນຕ້ອງໄດ້ຍອມຮັບວ່າ ໃນຖານະທີ່ເຮົາທຸກຄົນຍັງບໍ່ສົມບູນພ້ອມມູລ ຜູ້ນໍາອາດມີລັກສນະຂາດຕົກບົກພ່ອງໄປ ເຮົາຜູ້ສນັບສນູນຕ້ອງຮູ້ຈັກໃຫ້ອະພັຍຫລືເຂົ້າເສີມສ້າງ ເສີມແຮງຊ່ວຍຊູຜູ້ນໍານັ້ນທີ່ຍັງຂາດຢູ່ ສໍາລັບຕົວຜູ້ນໍາກໍຕ້ອງຮູ້ຈັກກະຕືຣືລົ້ນໃນການປັບປຸງແກ້ໄຂສ່ວນທີ່ຂາດເຂີນສ່ວນທີ່ຂາດຕົກບົກພ່ອງ ບໍ່ນິ່ງນັ່ງມິດເຊີຍ ຫລືບໍ່ດື້ອດຶງ ແຕ່ຮູ້ຈັກຟັງ ຄຶດ ເບິ່ງ ພິຈາຣະນາ ແລະປັບປຸງຕົວຢູ່ສເມີ

**ຄນະກັມການ** (Committee)

ຄນະກັມການເປັນທີມງານ ທີ່ໃຫ້ຄວາມຮ່ວມມືສົ່ງເສີມໃຫ້ຜູ້ນໍາສາມາດດໍາເນີນງານໄປໄດ້ເຖິງຄວາມສໍາເຣັດຫລືເປົ້າຫມາຍທີ່ໄດ້ຕັ້ງໃຈໄວ້ ຄນະກັມການມີຄວາມສໍາຄັນຫລາຍໃນການສເນີຄວາມຄຶດເຫັນ ໃນການອອກສຽງລົງມັດຕິຊ່ວຍໃຫ້ເກີດການຕັດສິນໃຈ ແລະເຂົ້າຮັບຜິດຊອບວຽກງານ ຕ້ອງມີການປັນງານກັນໄປເຮັດ ບໍ່ນິ່ງໃຫ້ຜູ້ອື່ນເຮັດ ເມື່ອຮັບປາກວ່າຈະເຮັດແນວໃດກໍຕາມ ບໍ່ວ່າງານໃຫຍ່ ງານຍ່ອຍ ງານອອກຫນ້າ ຫລືງານທີ່ຢູ່ເບື້ອງຫລັງ ເມື່ອຮັບປາກແລ້ວຕ້ອງເຮັດໃຫ້ດີທີ່ສຸດ ບໍ່ປ່ອຍປະນິ່ງເຊີຍ ໃຫ້ໂອກາສແລະເວລາລ່ວງເລີຍໄປ ຈົນເສັຍວຽກເສັຍການ ຫລືເປັນກັມມະການແຕ່ໃນນາມເທົ່ານັ້ນ ຄນະກັມມະການໂດຍທົ່ວໄປມີຕໍາແຫນ່ງດັ່ງນີ້

1. **ປະທານ** (ເປັນຜູ້ນໍາພາ) ເປັນຜູ້ສເນີເປົ້າຫມາຍ ເປັນຜູ້ຊັກຈູງຈິດໃຈກັມມະການໃຫ້ເປັນອັນນຶ່ງອັນດຽວກັນ ເປັນຜູ້ຮູ້ຈັກຟັງແລະຮວບຮວມເອົາຄວາມຄຶດຂອງຄນະກັມມະການເຂົ້າດ້ວຍກັນ ຮູ້ຈັກສລູບຜົນ ແລະນໍາໃຫ້ເກີດການຕັດສິນໃຈລົງມັດຕິ

2. **ຮອງປະທານ** ເປັນຜູ້ຢູ່ຄຽງຂ້າງປະທານ ຊ່ວຍເຫລືອປະທານໃນສ່ວນທີ່ຂາດເຂີນ ເຮັດວຽກງານທີ່ຈໍາເປັນ ເພື່ອໃຫ້ຫນ້າທີ່ຂອງຜູ້ເປັນປະທານສົມບູນຫລາຍຂຶ້ນ ມີຄວາມສັດຊື່ຕໍ່ປະທານ ແລະສນັບສນູນໃຫ້ຄວາມຄຶດຫລືເປົ້າຫມາຍສໍາເຣັດຜົນ ຮັບຫນ້າທີ່ແທນປະທານໃນເວລາທີ່ປະທານບໍ່ສາມາດນໍາພາກອງປະຊຸມຕໍ່ໄປໄດ້

3. **ເລຂານຸການ** ເປັນເຈົ້າໜ້າທີ່ (Officer) ຜູ້ເກັບຮັກສາຂໍ້ມູລ ຮູ້ຈັກຈົດບັນທຶກຂຽນລາຍລະອຽດລົງເປັນຫລັກການ ບັນທຶກຂໍ້ມູລຕົວເລກແລະຂໍ້ສລຸບ ບັນທຶກມັດຕິຂອງທີ່ປະຊຸມ ຈັດພິມລາຍງານແລະແຈກຈ່າຍແກ່ສມາຊິກຫລືຄນະກັມມະການ ເປັນຜູ້ແຕ່ງຈົດໝາຍຫລືຕອບຈົດໝາຍ ໃຫ້ສອດຄ້ອງກັບຂໍ້ຕົກລົງຂອງທີ່ປະຊຸມ ຮູ້ຈັກການເກັບຮອບຮອມເອກສານທັງມວລໄວ້ໃຫ້ເປັນຣະບົບຣະບຽບ ເພື່ອເປັນຫລັກຖານອ້າງອິງໃນພາຍຫລັງ

4. **ນາຍຄັງ** (Treasurer) ເປັນເຈົ້າໜ້າທີ່ຜູ້ເກັບກຳຮັກສາດ້ານງານເງິນຕາມງົບປະມານຂອງຄຣິສຈັກທີ່ໄດ້ຕົກລົງກັນໄວ້ ໃນຣະຍະເວລາທີ່ຕົນໄດ້ຮັບມອບໝາຍໃຫ້ປະຕິບັດໜ້າທີ່ນາຍຄັງ ເປັນຜູ້ເກັບຮັກສາເອກສານດ້ານການເງິນ ການໃຊ້ຈ່າຍ ເຊັ່ນ ໃບຮັບເງິນ ໃບເບີກເງິນ ເຮັດບັນຊີໃຫ້ກົງກັບຕົວເງິນທີ່ມີຢູ່ໃນຄັງ ຊຶ່ງໃນປັດຈຸບັນມັກຈະຕ້ອງກ່ຽວຂ້ອງກັບທະນາຄານແລະການເຊັນເຊັກ ໂດຍປົກຕິຄຣິສຈັກໃນປັດຈຸບັນມີຂໍ້ກຳໜົດໃຫ້ມີສອງລາຍເຊັນໃນເຊັກແຕ່ລະໃບຂອງຄຣິສຈັກ ສ່ວນລາຍເຊັກທີ່ໃຫ້ໄວ້ກັບຄຣິສຈັກມີສາມເຖິງສີ່ລາຍເຊັກ ທັງນີ້ເພື່ອໃຫ້ມີຜູ້ຮູ້ເຫັນຮັບຜິດຊອບຮ່ວມກັນກັບນາຍຄັງ ແລະເພື່ອເປັນພຍານຫລັງຖານໃນການເບີກຈ່າຍເງິນຄຳ ນອກຈາກນີ້ແລ້ວນາຍຄັງຕ້ອງຈັດທຳລາຍງານສະແດງບັນຊີລາຍລະອຽດການຮັບຈ່າຍໃຫ້ກົງກັບຈຸດປະສົງໃນການໃຊ້ຈ່າຍຕາມທີ່ຄຣິສຈັກໄດ້ລົງມັດຕິໄວ້ແຕ່ແຮກ

5. **ກັມມະການຫລືເຈົ້າໜ້າທີ່ອື່ນ ໆ** ທີ່ແຕ່ງຕັ້ງຂຶ້ນເພື່ອຮັບໃຊ້ພາຣະໜ້າທີ່ ທີ່ຈຳເປັນແລະຕາມຄວາມຕ້ອງການທີ່ມີຢູ່ໃນແຕ່ລະພະແນກ ຫາກວ່າເປັນກັມການໂດຍກົງຂອງຄຣິສຈັກແລ້ວ ມັກຈະປະກອບໄປດ້ວຍ ກັມການຕໍ່ໄປນີ້

- ກັມນະການຝ່າຍຕ້ອນຮັບ
- ກັມມະການຢ້ຽມຍາມ
- ກັມມະການຝ່າຍກິລາ ແລະການບັນເທີງ
- ກັມມະການຈັດຫາງົບປະມານ ຫລືຈັດຫາເງິນທຶນ
- ກັມມະການຮັກສາສຖານທີ່ ຕົວອາການ ແລະບໍຣິເວນຄຣິສຈັກ
- ກັມມະການຮັກສາສົມບັດຄຣິສຈັກ

ກັມມະການດັ່ງກ່າວມາແຕ່ຕົ້ນ ຕັ້ງແຕ່ປະທານຈົນເຖິງກັມມະການອື່ນ ໆ ນັ້ນ ເປັນພຽງຕົງຢ່າງໂດຍທົ່ວໄປ ທີ່ຈະນຳໄປໃຊ້ເປັນຫລັກການສຳລັບຄຣິສຈັກ ແລະພະແນກຕ່າງ ໆ ໃນຄຣິສຈັກ ຊຶ່ງປົກຕິແລ້ວແຕ່ລະພະແນກຍັງຕ້ອງໄຈ້ແຍກລາຍລະອຽດເຖິງໜ້າທີ່ຄວາມຮັບຜິດຊອບທີ່ຕ່າງ ໆ ກັນ ດັ່ງນັ້ນແຕ່ລະພະແນກອາດຈະແຕ່ງຕັ້ງຈຳນວນກັມການ ຫລືຕັ້ງຊື່ຂອງກັມມະການທີ່ແຕກຕ່າງກັນ ອັນນີ້ຂຶ້ນຢູ່ກັບຄວາມເໝາະສົມຂອງແຕ່ລະພະແນກ ແລະເຮົາຈະໄດ້ສຶກສາໃນບົດຕໍ່ ໆ ໄປ

**ບຸກຄລາກອນ** (Personnel)

ຄນະກັມມະການແລະຜູ້ເຮັດວຽກນຳກັນ ຖືວ່າເປັນບຸກຄລາກອນທີ່ພຣະເຈົ້າເອີ້ນໃຫ້ເຂົ້າມາຮັບໃຊ້ ຫາກວ່າເຮົາພິຈາຣະນາຕາມຜັງທີ່ສະແດງໃຫ້ເຫັນຂ້າງຕົ້ນນີ້ ຈະເຫັນໄດ້ວ່າຕ້ອງໃຊ້ບຸຄຄົນຈຳນວນຫລາຍເພື່ອຮັບຜິດຊອບ ບຸກຄລາກອນຮັບຜິດຊອບໃນຖານະເປັນສິດຍາພິບາຍ ເປັນຜູ້ຊ່ວຍສິດຍາພິບາລ ເປັນອາຈານ ເປັນຜູ້ນຳ ເປັນນາຍຄຣູ ເປັນຜູ້ນຳເພງ ຜູ້ຢ້ຽມຍາມ ເປັນຜູ້ເກັບກຳສິ່ງຂອງຫລືສົມບັດຂອງຄຣິສຈັກ ເປັນເລຂາ ເປັນນາຍຄັງ ເປັນກັມມະການ ຫລືແມ້ແຕ່ເປັນຜູ້ຮັກສາຄວາມສະອາດຄວາມຮຽບ

ຮ້ອຍ  ສິ່ງຕ່າງ ໆ ເຫລົ່ານີ້ທີ່ກ່າວມາແລ້ວ ມີຄວາມສຳຄັນພຽງກັນ  ໂດຍບໍ່ຕ້ອງອວດອ້າງຖານະຫລື ເອົາຕຳແໜ່ງໜ້າທີ່ໄປຂົ່ມຜູ້ອື່ນ ແຕ່ໃຫ້ທຸກຄົນຮັບໃຊ້ພຣະເຈົ້າດ້ວຍໃຈຮັກ ດ້ວຍຖ່ອມໃຈ ເປັນເຄື່ອງຫອມຖວາຍບູຊາແດ່ພຣະເຈົ້າ ເປັນຜູ້ຮັບໃຊ້ພຣະເຈົ້າດ້ວຍໃຈຮັກ  ດ້ວຍຖ່ອມໃຈ ເປັນເຄື່ອງຫອມຖາຍບູຊາແດ່ພຣະເຈົ້າ ເປັນຜູ້ຮັບໃນ້ທີ່ສັດຊື່ ແລະຖວາຍສງ່າຣາສີແດ່ພຣະອົງ

1-27-97

# ບົດທີ 7

# ຄຣິສຈັກຕ້ອງຮູ້ຈັກການຈັດຕຽມ ການວາງແຜນໂດຍຜ່ານທາງຄຣິສຕຽນສຶກສາ

**ຄຳນຳ**

ເຣື້ອງການຈັດຕັ້ງແຜນງານ ການວາງຣະບຽບ ການດຳເນີນວຽກຢ່າງມີຫລັກການ ເປັນເຣື້ອງທີ່ມີປໂຍດແກ່ຄຣິສຈັກ ເພື່ອໃຫ້ຄຣິສຈັກເກີດຄວາມກ້າວຫນ້າ ໂດຍສະເພາະຢ່າງຍິ່ງດ້ານການສຶກສາພາຍໃນຄຣິສຈັກ ຕ້ອງມີຜູ້ນຳທີ່ພຍາຍາມບາກບັ່ນຫາແນວທາງໃນການຈັດຕັ້ງ ຊຶ່ງເປັນສິ່ງທີ່ຍາກ ແຕ່ເປັນສິ່ງທີ່ຫນ້າສົນໃຈ ເມື່ອເຣົາເບິ່ງໃນດ້ານການສຶກສາພາຍໃນຄຣິສຈັກລາວໃນອະເມຣິກາ ຈະເຫັນໄດ້ວ່າຍັງຂາດເຂີນໃນທຸກ ໆ ຣະດັບ ແລະຄວາມຂາດເຂີນນີ້ກໍ່ບໍ່ສາມາດທີ່ຈະໃສ່ໂທດໃຫ້ແກ່ຜູ້ໃດໄດ້

ຫາກວ່າເຣົາມາພິຈາຣະນາເບິ່ງເຖິງບັນຫາທີ່ເຮັດໃຫ້ຄຣິສຈັກລາວບໍ່ຈະເຣີນ ບໍ່ກ້າວຫນ້າໃນດ້ານການສຶກສາ ເຣົາຈະພົບກັບຂໍ້ມູລຫລາຍປະການທີ່ເຮັດໃຫ້ການສຶກສາໃນຄຣິສຈັກລາວຕ້ອງຕິດຂັດ ຍ້ອນການຂາດເຂີນໃນເຣື້ອງຕໍ່ໄປນີ້

1. **ຄຣິສຈັກຍັງອ່ອນວັຍ** ຄຣິສຈັກລາວໃນອເມຣິກາຫາກໍເກີດມາໄດ້ບໍ່ທັນເຖິງ 20 ປີ ແລະເລີ້ມຕົ້ນຈາກປະຊາຊົນທີ່ຍາກຈົນທີ່ສຸດ ທີ່ເປັນຊາວອົບພະຍົບຫລົບລີ້ມາຈາກບ້ານເກີດເມືອງນອນເດີມ ມາຕັ້ງຖິ່ນຖານສ້າງຕົວເອງໃຫ້ເປັນຫລັກແຫລ່ງຂຶ້ນໃນອະເມຣິກາ ຊຶ່ງເປັນບ້ານເມືອງໃຫມ່ທີ່ເຣົາຮູ້ຈັກແຕ່ນ້ອຍດຽວ ມີສະພາບຊີວິດຄວາມເປັນຢູ່ທີ່ຍາກ ດ້ວຍຄວາມຈຳເປັນອັນຫລີກລ່ຽງບໍ່ໄດ້ ຄຣິສຈັກຕ້ອງປະສົບກັບຄວາມທຸກຍາກ ແລະດຳເນີນງານຄຣິສຈັກໄປຢ່າງບໍ່ເຂົ້າໃຈ ບໍ່ມີຫລັກການ ບໍ່ມີໃຜມາວາງແບບຢ່າງໄວ້ ແຕ່ວ່າຜູ້ນຳໃນຍຸກທຳອິດໄດ້ພະຍາຍາມຫາວິທີແລະແນວທາງ ເພື່ອຄຣິສຈັກທີ່ເກີດໃຫມ່ນີ້ຈະໄດ້ດຳເນີນຕໍ່ໄປ ຊຶ່ງເມື່ອປຽບທຽບກັບຄຣິສຈັກຂອງຊາວອະເມຣິກາແລ້ວ ພໍ່ປູ່ ແມ່ຍ່າຂອງເຂົາໄດ້ວາງພື້ນຖານມາເປັນເວລາຮ້ອຍ ໆ ປີ ບໍ່ແຕ່ເທົ່ານັ້ນ ພໍ່ປູ່ ແມ່ຍ່າ ຊາວອະເມຣິກາເຫລົ່ານັ້ນຍັງມີພື້ນຖານເປັນຄຣິສຕຽນມາແຕ່ເດີມ ຊຶ່ງຕົກທອດມາແຕ່ບ້ານເກີດເມືອງນອນຂອງເຂົາ ເມື່ອມາຮອດອະເມຣິກາເຂົາໄດ້ສືບທອດຄວາມເຊື່ອ ແລະຄຳສອນທີ່ມີມາແຕ່ເດີມນີ້ ໄດ້ສອນກັນຢ່າງເຂັ້ມແຂງແກ່ລູກຫລານຂອງເຂົາທີ່ມາໃຫຍ່ໃນອະເມຣິກາ ຊຶ່ງເຮັດໃຫ້ເກີດພື້ນຖານອັນຫນັກແນ່ນ ໃນເມື່ອຫັນມາເບິ່ງຄຣິສຈັກລາວເຣົາຫາກວ່າຄິດຢ່າງຜິວເຜີນແລ້ວກໍຫນ້າໃຈຫາຍຫນ້າເສົ້າໃຈ ແຕ່ວ່າໃນທາງຕົງກັນຂ້າມ ຖ້າຈະຄິດພິຈາຣະນາກັນຢ່າງຍຸຕິທັມແລ້ວ ໂດຍອາສັຍຂໍ້ມູລຕົວເລກ ແລະຫລັກການພິຈາຣະນາໃຫ້ຖີ່ຖ້ວນຈະພົບວ່າຄວາມຈະເຣີນຂອງຄຣິສຈັກລາວກໍບໍ່ດ້ອຍໄປກວ່າຊາດອື່ນ ໆ ໂດຍສະເພາະຢ່າງຍິ່ງເມື່ອຄິດຮອດເບື້ອງຫລັງການເປັນມາ ຄຣິສຈັກລາວໃນອະເມຣິກາ ໄດ້ໃຫຍ່ໄວກວ່າເມື່ອສມັຍພວກມິຊຊັ່ນນາຣີໄປປະກາດທີ່ເມືອງລາວເປັນເວລາຮ້ອຍປີ ຊຶ່ງເກີດຫມາກຜົນບໍ່ຫລາຍ ແລະກໍບໍ່ສາມາດທຽບກັບຄຣິສຈັກທີ່ເກີດຂຶ້ນໃນ

ອະເມຣິກາ ຊຶ່ງມີຄວາມໃຫຍ່ໄວກວ່າຫລາຍເທົ່າຕົວ

2. **ຂາດກໍາລັງຄົນ** ເມື່ອຄຣິສຈັກອ່ອນວັຍດັ່ງທີ່ເຮົາໄດ້ພິຈາຣະນາມາໃນຂໍ້ຕົ້ນທີ່ຜ່ານມາ ຍ່ອມເປັນສາເຫດໃຫຍ່ ທີ່ຄົນເຮົາຍັງບໍ່ທັນມີຄວາມເຂົ້າໃຈໃນເຣື່ອງການດໍາເນີນງານຄຣິສຈັກເທື່ອ ເຖິງວ່າຄຣິສຈັກໃນອະເມຣິກາຈະມີອາຍຸ 20 ກວ່າປີ ແຕ່ຄຣິສຈັກທີ່ເກີດຂຶ້ນເປັນຕົວເປັນຕົນແທ້ ໆ ກໍພຽງ 10 ປາຍປີເທົ່ານັ້ນ ຜູ້ນໍາຍັງຂາດຄວາມເຂົ້າໃຈໃນເຣື່ອງ ການຈັດຕຽມດ້ານການສຶກສາ ສະມາຊິກບໍ່ສາມາດໃຫ້ຄວາມຮ່ວມມືກັບສິດຍາພິບາລໃນເຣື່ອງການຊ່ວຍສອນ ອີກທັ້ງພື້ນຖານຄວາມຮູ້ເດີມມີບໍ່ຫລາຍ ບໍ່ເລີ້ງເຄີຍກັບຣະບົບການຮຽນການສອນ ສມາຊິກສາມັນທົ່ວໄປບໍ່ມັກອ່ານ ບໍ່ມັກຮຽນຫລື ບໍ່ມັກສອນ ມັກການມ່ວນຊື່ນຫລາຍກວ່າ ການເຂົ້າເຖິງຣະບົບຣະບຽບ ແລະການຕຽມການດ້ານການສຶກສາອີກທັງຍັງມີປະຊາຊົນອີກຈໍານວນນຶ່ງ ໂດຍສະເພາະແມ່ຍິງທີ່ຍັງອ່ານບໍ່ຄ່ອງຂຽນບໍ່ໄດ້ ເພາະວ່າບໍ່ເຄີຍຮໍ່າຮຽນມາກ່ອນ ມີຫລາຍຄົນມາເລີ້ມຮຽນ ມາຫັດອ່ານ ກ ຂ ແບບຝຶກຫັດເບື້ອງຕົ້ນ ຍ້ອນເພາະຢາກອ່ານພຣະຄັມພີ ຊຶ່ງກໍເຫັນເຖິງໃຈສັດທາໃນພຣະເຈົ້າອັນແຮງກ້າ ຈຶ່ງໄດ້ພະຍາຍາມຮຽນອ່ານ ຮຽນຂຽນ ເພື່ອຈະໄດ້ເຂົ້າໃຈພຣະທັມຄໍາສອນ ເຖິງຈະອ່ານຊ້າ ໆ ຫລືຍອມຟັງຜູ້ອື່ນອ່ານ ອັນນີ້ກໍມີຜົນນໍາໃຫ້ຄຣິສຈັກກ້າວຫນ້າຫຍັບກ້າວເລັກນ້ອຍ ຊຶ່ງເຮັດໃຫ້ຜູ້ນໍາເກີດຄວາມພາກພູມໃຈໄປຫລາຍ ດັ່ງນັ້ນຈະເຫັນໄດ້ວ່າການຂາດກໍາລັງຄົນ ແລະກໍາລັງຄວາມສາມາດຂອງຄົນນັ້ນ ເຮັດໃຫ້ຄຣິສຈັກດໍາເນີນໄປໄດ້ຊ້າ ແລະເກີດການຕິດຂັດໄປທຸກ ໆ ດ້ານ ບໍ່ວ່າຊາດໃດປະເທດໃດ ຫາກວ່າປະຊາຊົນໄດ້ຮັບການສຶກສາຢ່າງທົ່ວເຖິງແລ້ວ ການດໍາເນີນການໃນດ້ານຕ່າງ ໆ ກໍຈະໄປໄດ້ສະດວກ ເກີດຄວາມເຂົ້າໃຈກັນໄດ້ໄວເກີດຄວາມຄິດ ເກີດການຮ່ວມມື ເກີດການເສັຍສລະແລະໃນທີ່ສຸດເກີດການສ້າງສາໃຫ້ຈະເຣີນໄວ ຕົວຢ່າງອັນນີ້ເຕືອນໃຫ້ເຮົາຕ້ອງພາກັນດຸຫມັ່ນຮຽນໃຫ້ໄດ້ ເຖິງວ່າຈະໄປໄດ້ຊ້າກໍຍັງດີກວ່າຢຸດຢູ່ກັບທີ່ບໍ່ແມ່ນຫລື?

3. **ຂາດແຫລ່ງຄວາມຮູ້** (Resources) ແຫລ່ງຄວາມຮູ້ນັ້ນ ຄືກັນກັບອູ່ນໍ້າ ອູ່ເຂົ້າ ອູ່ປາ ຫາກວ່າ ຄົນເຮົາຂາດແຫລ່ງໃຫ້ນໍ້າ ຂາດເຂົ້າປາອາຫານແລ້ວ ແນ່ນອນປະຊາຊົນຄົນໃນແຖບນັ້ນກໍຈະອຶດຫຍາກບໍ່ເຂັ້ມແຂງ ບໍ່ມີແຮງບໍ່ມີກໍາລັງ ເພາະວ່າບໍ່ມີສິ່ງສິ່ງເສີມຊີວິດໃຫ້ມີກໍາລັງເຂັ້ມແຂງ ຄຣິສຈັກລາວຍັງຂາດແຫລ່ງຄວາມຮູ້ ຂາດເຂັນບົດຮຽນ ຂໍ້ຂຽນ ຂາດເງິນ ຂາດຜູ້ທີ່ມີຄວາມຮູ້ ທີ່ຍອມເສັຍສລະຮ່ວມກັນ ເພື່ອເປັນແຫລ່ງເສີມກໍາລັງໃຫ້ຄຣິສຈັກໄດ້ອີງອາສັຍ ຖ້າຫາກເຮົາຫັນມານັບເບິ່ງບົດຮຽນຄຣິສຕຽນ ທີ່ເປັນປື້ມເປັນຫນ່ວຍວ່າມີຈັກຫົວ ຄົງຈະໃຊ້ເວລາພຽງ 10 ເຖິງ 20 ນາທີກໍເວົ້າໄດ້ຫມົດວ່າມີຫຽັງແດ່ ຫາກເຮົາເບິ່ງຄຣິສຈັກຈີນ ຄຣິສຈັກເກົາຫລີ ຫລືກະທັ່ງຄຣິສຈັກຣິດສະເປນນິກ ຫນັງສືຂອງເຂົາເອົາມາໃສ່ນໍາກັນກໍຄົງຈະໄດ້ເປັນຫ້ອງສມຸດ ທີ່ມີບົດຮຽນຢ່າງນ້ອຍ ໆ ຄອບຄຸມໄປເຖິງສະມາຊິກທຸກເພດທຸກໄວແລະໃຊ້ສອນກັນໄດ້ເປັນປີ ໆ ແຕ່ທີ່ເຮົາມີຢູ່ພຽງເລັກນ້ອຍກໍຍ້ອນມີບາງຄົນຍອມເສັຍສລະພຍາຍາມໃຊ້ເວລາອັນມີຄ່າມາແປພາສາ ມາຕີພິມແຈກຍາຍໄປຄຣິສຈັກຕ່າງ ໆ ທົ່ວປະເທດ ເຖິງວ່າຍັງບໍ່ທັນດີສົມບູນ ແຕ່ກໍຍັງດີກວ່າທີ່ເຮົາເອົາແຕ່ຈົ່ມກັນໄປທຸກມື້ ໂດຍທີ່ບໍ່ເຮັດການອັນໃດໃຫ້ເກີດປໂຍດຫາກວ່າເຮົາໄດ້ຮັບບົດຮຽນທີ່ມີຄົນຊ່ວຍຂຽນສົ່ງມາໃຫ້ໃຊ້ ເຖິງວ່າຈະເປັນຂອງຄົນຊາດໃດກໍຕາມ ຖ້າຫາກວ່າເຮົາອ່ານເຂົ້າໃຈໄດ້ ແລະນໍາໄປໃຊ້ໃຫ້ເກີດຜົນໄດ້ຕາມເປົ້າຫມາຍ ເຮົາກໍສົມຄວນຈະເອົາມາປຸງແຕ່ງເສັຍໃຫມ່ໃຫ້ມັນເຂົ້າເຣື່ອງເຂົ້າຮາວ ເຂົ້າກັບຄວາມເຂົ້າໃຈຂອງຄົນລາວເຮົາ ໂດຍຮູ້ຈັກໃຊ້ພິກໄຫວແກ້ໄຂ ຈົນໃນທີ່ສຸດສະສົມເຂົ້າທີ່ລະເລັກລະນ້ອຍ ກໍຈະໄດ້ຫລາຍຂຶ້ນເລື້ອຍ ໆ ເຕີ່ມເຂົ້າມາ

4. **ຂາດເງິນທຶນສນັບສນຸນ** ເງິນເປັນຕົວສຳຄັນທີ່ມີບົດບາດໃນທຸກເຣື່ອງຊຶ່ງເປັນສິ່ງຈຳເປັນສຳລັບການມີຊີວິດໃນໂລກນີ້ ເງິນສາມາດຊື້ປັດຈັຍສິ່ງຈຳເປັນມາບຳຣຸງໃຫ້ເກີດຄວາມກ້າວຫນ້າເຂັ້ມແຂງ ແຕ່ໃນປັດຈຸບັນຄຣິສຈັກລາວຍັງຂາດເຂີນເງິນທຶນຢູ່ຫລາຍ ທີ່ເປັນດັ່ງນີ້ ຍ້ອນສາເຫດວ່າສະມາຊິກຍັງບໍ່ທັນຮູ້ ບໍ່ທັນເຂົ້າໃຈໃນເຣື່ອງການດຳເນີນງານຂອງຄຣິສຈັກ ເມື່ອບໍ່ເຂົ້າໃຈກໍເຮັດໃຫ້ການຖວາຍເປັນໄປແບບຕາມມີຕາມເກີດ ໂດຍຍ້ອນວ່າຖວາຍຫລາຍຜູ້ນຳຈະໄດ້ເງິນເດືອນຫລາຍ ໂດຍບໍ່ໄດ້ຄິດວ່າ ແທ້ຈິງແລ້ວ ເງິນທີ່ເຮົາຖວາຍນັ້ນພຽງສ່ວນນຶ່ງເທົ່ານັ້ນທີ່ນຳໄປເປັນເງິນເດືອນຂອງຜູ້ນຳ ເພື່ອຜູ້ນຳຄຣິສຈັກຈະບໍ່ຕ້ອງເປັນຫ່ວງໃນເຣື່ອງການທຳມາຫາລ້ຽງຊີພ ແຕ່ມີໃຈສງົບມຸ່ງຢູ່ກັບວຽກການຂອງຄຣິສຈັກ ເງິນທີ່ສະມາຊິກຖວາຍ ຈຳເປັນຕ້ອງເອົາສ່ວນໃຫຍ່ມາໃຊ້ໃນການດຳເນີນວຽກງານຂອງຄຣິສຈັກ ໃນການຈັດຕຽມແຜນການ ໃນການສົ່ງເສີມດ້ານການອົບຮົມ ດ້ານການຊື້ຫາບົດຮຽນ ຊື້ຫາອຸປະກອນສຳລັບເດັກນ້ອຍ ສຳລັບເຍົາວະຊົນຈົນເຖິງຜູ້ເຖົ້າ ຈະເຫັນໄດ້ວ່າພີ່ນ້ອງຊາວລາວບໍ່ໄດ້ເປັນຄົນປະຫຍັດ ໃຫ້ເຮົາສັງເກດຍາມມີການກິນລ້ຽງຊຸມກັນ ອາຫານທີ່ເອົາມາລ້ຽງກັນນັ້ນລັກເຖິງໃຈ ບໍ່ໄດ້ນ້ອຍຫນ້າໃຜ ເງິນຄຳຈ່າຍໄປນຳອາຫານການກິນນັ້ນບໍ່ເສັຍດາຍຈັກນ້ອຍ ຖືກັບວ່າເຣື່ອງກິນນີ້ເປັນເຣື່ອງໃຫຍ່ເຣື່ອງສຳຄັນ ອັນນີ້ກໍຫນ້າເຫັນໃຈຢູ່ ເພາະເຫດວ່າເປັນຄວາມເລື້ງເຄີຍກັບຮີດຄອງເດີມທີ່ຖືກັນມາ ໃຫ້ຮູ້ຈັກການຮັບຕ້ອນ ແຕ່ຫາກວ່າພີ່ນ້ອງລາວເຮົາຮູ້ຈັກເຣື່ອງການຖວາຍ ຮູ້ຈັກໃຫ້ເງິນຄຳຂອງເຮົານັ້ນໄປເກີດປໂຍດໃນພຣະຣາຊກິຈຂອງພຣະເຈົ້າ ຮູ້ຈັກມີໃຈກວ້າງຂວາງ ດັ່ງເຣື່ອງອາຫານການກິນແລ້ວ ຄຣິສຈັກລາວເຮົາກໍຈະບໍ່ມີຄວາມຮູ້ສຶກອຶດອ່ອນ ທິວໂຫຍ ດັ່ງນັ້ນສິ່ງສຳຄັນທີ່ເຮົາຈະຕ້ອງຮຽນແມ່ນຄືວ່າ ຝ່າຍສະມາຊິກຕ້ອງຮຽນຮູ້ເຣື່ອງການຖວາຍເພື່ອຄຣິສຈັກຈະບໍ່ຂາດເງິນທຶນ ເພື່ອດຳເນີນວຽກການຂອງພຣະເຈົ້າ ຝ່າຍຜູ້ນຳຕ້ອງສັດຊື່ໂດຍການຈັບຈ່າຍໃຊ້ເງິນຄຳໃນຄຣິສຈັກຢ່າງຖືກຕ້ອງ ຮູ້ຈັກໃຊ້ເງິນທີ່ສະມາຊິກຖວາຍມານັ້ນໃຫ້ເກີດປະໂຍດໃນການສົ່ງເສີມຄຣິສຈັກໃຫ້ຈະເຣີນໃຫຍ່ຂຶ້ນ

**ຄຳຊູໃຈ**

ແມ່ນວ່າສິ່ງທີ່ນຳສເນີຂ້າງເທິງຈະເປັນຄວາມຈິງທີ່ປາກົດຢູ່ໃນຄຣິສຈັກທຸກ ໆ ບ່ອນກໍຕາມ ແຕ່ກໍມີຄວາມຈຳເປັນທີ່ເຮົາຕ້ອງໄດ້ກ່າວເຖິງ ເພື່ອເປັນການພິຈາຣະນາເບິ່ງເຖິງຕົວຈິງແລະບັນຫາທີ່ເປັນສາເຫດພາໃຫ້ຄຣິສຈັກລາວໃນອະເມຣິກາຍັງຕິດຂັດຢູ່ ແຕ່ວ່າເມື່ອພິຈາຣະນາເຖິງບັນຫາແລ້ວ ເຮົາຕ້ອງມີຂໍ້ສເນີແນະເພື່ອແກ້ໄຂປັນຫາ ຫລືສາເຫດທີ່ຂັດຂວາງຢູ່ ບາງເທື່ອເຮົາຈະພົບວ່າ ບັນຫາທີ່ມີຢູ່ບໍ່ສາມາດແກ້ໄຂປັດເປົ່າອອກໄປໄດ້ພຽງຄາວດຽວ ເຮົາຈຳເປັນຕ້ອງຢູ່ນຳກັນກັບປັນຫາເຫລົ່ານັ້ນ ຂໍຢ່າໃຫ້ເຮົາທໍ້ອຶກທໍ້ໃຈ ບັນຫາບາງຢ່າງຕ້ອງໃຊ້ເວລາດົນນານກ່ອນທີ່ຈະແກ້ໄຂໄດ້ ຖ້າເຮົາສຶກສາໃຫ້ລັກໃນປວັດສາດຄຣິສຈັກທີ່ຜ່ານມາ ບໍ່ມີຍຸກໃດໃນປວັດສາດທີ່ຄຣິສຈັກບໍ່ຕ້ອງພົບກັບບັນຫາ ຄຣິສຈັກທົ່ວໂລກໃນທຸກຍຸກທຸກສມັຍຕ້ອງດຳເນີນໄປພ້ອມ ໆ ກັບບັນຫາທີ່ເກີດຂຶ້ນໃນຍຸກນັ້ນ ໆ ສິ່ງສຳຄັນທີ່ເຮັດໃຫ້ຄຣິສຈັກຍຸກຕ່າງ ໆ ໃນປວັດສາດສາມາດຜ່ານພົ້ນບັນຫາແຕ່ລະແນວມາໄດ້ນັ້ນ ຍ້ອນກຳລັງໃຈຂອງຜູ້ນຳທີ່ບໍ່ຍອມຫນ່າຍຫນີ ແຕ່ອົດທົນນານສູ້ໄປຕາມການຊົງນຳຂອງພຣະເຈົ້າ ແລະຕາມທີ່ພຣະເຈົ້າໄດ້ສັນຍາວ່າຈະບໍ່ປະຫລືທອດຖິ້ມເຮົາຈັກເທື່ອດັ່ງທີ່ພຣະເຢຊູຊົງຕັດວ່າ ຄວາມຕາຍຈະບໍ່ສາມາດມີຊັຍເຫນືອຄຣິສຈັກໄດ້ ບັນຫາທີ່ມີຢູ່ໃນຄຣິສຈັກນັ້ນບໍ່ແມ່ນພຣະເຈົ້າເປັນເຫດ ແຕ່ບັນຫາຕ່າງ ໆ ທີ່ເກີດຂຶ້ນຍ້ອນມະນຸດຜູ້ເປັນຄົນ

ບາບ ຫລືຜູ້ທີ່ຍັງບໍ່ທັນເຂົ້າໃຈໃນພຣະເຈົ້າມັກເປັນເຫດ ແລະຍັງມີມານຢູ່ເບື້ອງຫລັງ ທີ່ມັກຊັກນຳໃຫ້ເຮົາຫລົງຜິດໄປອີກ ເປັນເຫດໃຫ້ເກີດການຂັດຂວາງບໍ່ຍອມຟັງກັນ ແລະມັກແຕ່ເອົາຄວາມຄິດຂອງຕົນເອງເປັນໃຫຍ່ຝ່າຍດຽວ ໂດຍບໍ່ໄດ້ພິຈາຣະນາຄວາມຖືກຕ້ອງກັບພຣະເຈົ້າ ສິ່ງເຫລົ່ານີ້ເຮັດໃຫ້ຄຣິສຈັກອິດອ່ອນຕ້ອງມົວຫມອງ ແລະເຮັດໃຫ້ພຣະເຈົ້າເສັຍພຣະທັຍທີ່ສຸດ ໃຫ້ເຮົາພຍາຍາມທັນມາຮ່ວມມືກັນ ເຖິງວ່າເຮົາອາດຈະມີຄວາມຄິດທີ່ດີ ແຕ່ຫາກວ່າຜູ້ອື່ນຍັງບໍ່ທັນເຫັນນຳ ຍັງບໍ່ທັນເຂົ້າໃຈກໍໃຫ້ເຮົາອົດຄວາມຄິດຂອງເຮົາໄວ້ກ່ອນ ໂດຍເຮັດຕາມກັນໄປກ່ອນແລ້ວຄ່ອຍ ໆ ຈ່ອງດຶງເຂົາຄືນມາ ການທີ່ເຮົາຍອມຖ່ອມໃຈຍອມອ່ອນນ້ອມຕາມຜູ້ອື່ນໄປ ໂດຍບໍ່ໃຫ້ມີການທຳລາຍຊຶ່ງກັນແລະກັນແລ້ວ ການບາດຫມາງນໍ້າໃຈກັນກໍຈະບໍ່ເກີດຂຶ້ນ ຄຣິສຈັກກໍຈະມີຄວາມຫນັກແຫນ້ນຫມັ້ນຄົງ ໃນເມື່ອເຮົາຍອມຮັບໃຊ້ຍອມນົບນ້ອມຖ່ອມໃຈ ເມື່ອເຖິງເວລາພຣະເຈົ້າຈະຍົກເຮົາຂຶ້ນ ແລະຈະເປັນເວລາທີ່ສະມາຊິກທັງຫລາຍຈະຍອມຟັງຄວາມເຮົາ ດັ່ງນັ້ນພຣະເຢຊູຕັດໃນພຣະທັມວ່າ

*"ຜູ້ໃດທີ່ເປັນໃຫຍ່ທີ່ສຸດໃນພວກທ່ານ ຜູ້ນັ້ນຕ້ອງຮັບໃຊ້ຫມູ່*
*ຜູ້ໃດຍົກຕົວຂຶ້ນ ຜູ້ນັ້ນຈະຖືກຖ່ອຍລົງ ຜູ້ໃດຖ່ອມຕົວລົງ ຜູ້ນັ້ນຈະຖືກຍົກຂຶ້ນ"*
(ມັດທາຍ 23:11, 12)

*"ຢ່າງນັ້ນແຫລະ ຜູ້ທີ່ເປັນປາຍຈະກັບເປັນຕົ້ນ*
*ແລະຜູ້ເປັນຕົ້ນຈະກັບເປັນປາຍ"* (ມັດທາຍ 20:16)

**ການຈັດຕຽມແລະການວາງແຜນງານ**

ເຮົາໄດ້ຮຽນບົດຕົ້ນ ໆ ທີ່ຜ່ານມາ ໂດຍສະເພາະຢ່າງຍິ່ງ ບົດທີ 6 ຫນ້າ 41, 42 ເຖິງພາບແລະແຜນຜັງການຈັດຕັ້ງຫນ່ວຍງານຕ່າງ ໆ ໃນຄຣິສຈັກ ຈະເຫັນໄດ້ວ່າບົດຮຽນທີ່ຂຽນຂຶ້ນນັ້ນເພື່ອໃຫ້ນັກສຶກສາໄດ້ເຫັນພາບສົມບູນແບບຂອງຄຣິສຈັກທີ່ມີຄວາມເຂັ້ມແຂງແລ້ວ ແລະມີສມາຊິກຈຳນວນຫລາຍຮ້ອຍຫລືຈຳນວນພັນຄົນ ຈຶ່ງຈະສາມາດຈັດຫນ່ວຍງານທຸກຫນ່ວຍໃຫ້ສົມບູນ ດັ່ງນັ້ນໃນຖານະທີ່ເປັນນັກສຶກສາຈຶ່ງຈຳເປັນຕ້ອງໄດ້ຮຽນເຖິງຮູບແບບອັນຖາວອນນີ້ໄວ້ ແຕ່ສະພາບຄວາມເປັນຈິງບໍ່ວ່າຄຣິສຈັກຂອງຊາດພາສາໃດ ຊຶ່ງມີຄຣິສຈັກຂນາດເລັກ ຂນາດກາງທີ່ບໍ່ທັນສາມາດຈັດຣະບົບຫນ່ວຍງານໄດ້ທຸກຫນ່ວຍ ດັ່ງທີ່ປາກົດໃນແຜນຜັງ ຄຣິສຈັກທີ່ຍັງມີສມາຊິກນ້ອຍ ທີ່ຍັງອ່ອນແອຢູ່ ຈຳເປັນຕ້ອງເລືອກເອົາແຕ່ຫນ່ວຍງານທີ່ເຫມາະສົມມາດຳເນີນການ ໃຫ້ສອດຄ້ອງກັບສະພາບການຂອງຕົວເອງ ແລະຕາມຄວາມຕ້ອງການຂອງສະມາຊິກບາງເທື່ອຄຣິສຈັກນ້ອຍອາດຄິດວ່າບໍ່ຕ້ອງໄດ້ເຮັດຫຽັງ ເພາະຄົນເຮົາມີນ້ອຍ ອັນນີ້ບໍ່ຖືກຕ້ອງເພາະວ່າຫາກເຮົາບໍ່ເຮັດຫຽັງກໍບໍ່ມີຫຽັງເກີດຂຶ້ນ ການທີ່ຄຣິສຈັກຈະຮຸ່ງເຮືອງຂຶ້ນໄດ້ນັ້ນ ຕ້ອງອາສັຍຄວາມພຍາຍາມເຮັດແລ້ວເຮັດອີກ ຫາກບໍ່ເກີດຜົນກໍຫາທາງເຮັດແນວໃຫມ່ ເພື່ອວ່າຈະໄດ້ມີຜົນເກີດຂຶ້ນຄຣິສຈັກທີ່ຈະພົບກັບຄວາມຮຸ່ງເຮືອງນັ້ນ ຈຳເປັນຕ້ອງມີຫລັກການມີແນວຄວາມຄິດມີການຈັດວາງແຜນງານໄວ້ ໂດຍຮຽກປະຊຸມຜູ້ນຳເຂົ້າມາສເນີຄວາມຄິດເຫັນ ເປີດໂອກາສໃຫ້ຜູ້ທີ່ມີຄວາມສາມາດໄດ້ເຮັດ ຫາກວ່າຄຣິສຈັກມີຜູ້ນຳກໍຈຳເປັນຕ້ອງມີຜູ້ຕາມ ຈະເປັນຜູ້ນຳກັນຫມົດພ້ອມ ໆ ກັນໃນບາດດຽວນັ້ນເປັນໄປບໍ່ໄດ້ ແຕ່ໃຫ້ຜູ້ນຳແຕ່ລະຝ່າຍຜັດປ່ຽນກັນນຳ ຫລືແບ່ງສັນປັນສ່ວນໃຫ້ເປັນຜູ້ນຳແຕ່ລະເຣື່ອງຕ່າງ ໆ ກັນອອກໄປ ໂດຍບໍ່ມີໃຈຄິດອິດສາຢ້ານລື່ນຢາກໄດ້ຫນ້າຕາກັນ ຫລືຢາກດັງແຕ່ເທົ່ານັ້ນ ຊຶ່ງບໍ່ມີ

ປໂຍດຫຼັງແລະບໍ່ໄດ້ທູອາຍກຽດແກ່ພຣະເຈົ້າ ຫນຳຊ້ຳຄົນອື່ນເຂົາສັງເກດເບິ່ງກໍຈະຂາດຄວາມເຄົາຣົບນັບຖືໃນຕົວເຮົາ ດັ່ງນັ້ນໃຫ້ເຮົາຫັນມາພິຈາຣະນາໃນເຣື້ອງການຈັດຕຽມແຜນການວ່າຕ້ອງມີຂັ້ນຕອນໃດແດ່

1. **ຕົວເຮົາເອງ** ເຮົາຕ້ອງພິຈາຣະນາຕົນເອງໃນຖານະເປັນຜູ້ທີ່ເຂົ້າໄປຊ່ວຍງານ ຍອມຮ່ວມມືຍອມເສັຍສລະ ຍອມຖ່ອມຕົວໃຫ້ພຣະເຈົ້າໃຊ້ ເພື່ອໃຫ້ແຜນການຂອງພຣະເຈົ້າຈະໄດ້ເກີດຂຶ້ນໃນຄຣິສຈັກຂອງເຮົາ ເພື່ອສະມາຊິກອື່ນ ໆ ຈະໄດ້ມີກຳລັງໃຈໄປນຳກັນ

2. **ເພິ່ງອີງໃນພຣະເຈົ້າ** ຖ່ອມໃຈລົງຕໍ່ຫນ້າພຣະເຈົ້າ ຍອມຟັງສຽງເອີ້ນຮຽກແລະການຊົງນຳໃນພຣະເຈົ້າ ມີຄວາມເຊື່ອແລະວາງໃຈໃນພຣະເຈົ້າ ບໍ່ແມ່ນອວດຄວາມສາມາດຂອງຕົວເອງ (ສຸພາສິດ 3:5)

3. **ຍອມຟັງຄວາມຄິດເຫັນຂອງຜູ້ອື່ນ** ເຮົາຕ້ອງຍອມຮັບວ່າພຣະເຈົ້າສາມາດດົນບັນດານໃຫ້ແຕ່ລະຄົນມີຄວາມພ້ອມ ມີຄວາມສາມາດໃນດ້ານໃດດ້ານນຶ່ງ ຫາກວ່າເຮົາເປີດໂອກາສໃຫ້ເຂົາໄດ້ຝຶກແອບ ທົດລອງເຮັດ ຫາກມີສະມາຊິກຜູ້ໃດສເນີຄວາມຄິດຄວາມເຫັນໃດ ຫລືຂໍ້ແນະນຳໃດ ໃຫ້ເຮົາຮູ້ຈັກຊູໃຈຕໍ່ຜູ້ທີ່ມີຂໍ້ສເນີໃຫມ່ ພ້ອມກັບຂໍໃຫ້ລາວໄດ້ເຮັດ ໄດ້ນຳພາຜູ້ອື່ນຕາມແນວຄວາມຄິດຂອງລາວ ຫລືອາດມີການແກ້ໄຂຕົບແຕ່ງ ແບ່ງປັນໃຫ້ຄວາມຄິດນັ້ນດີຂຶ້ນ ແລ້ວຫລາຍຄົນຊ່ວຍກັນເຮັດ

4. **ຂຽນຫລັກການຫລືຂໍ້ສເນີນັ້ນອອກມາເປັນຂັ້ນເປັນຕອນໂດຍມີເປົ້າຫມາຍ** ວ່າຕ້ອງການໃຫ້ເກີດຜົນໃນດ້ານໃດ ແລ້ວເຣີ່ມດຳເນີນການໂດຍຈັບເອົາເປົ້າຫມາຍ ແຜນການນັ້ນ ແລ້ວດຳເນີນຕາມໄປຢ່າງມີຈຸດຫມາຍ ບໍ່ໂລເລ ວົກວົນໄປມາໂດຍບໍ່ມີຄວາມກ້າວຫນ້າ

5. **ຮູ້ຈັກແບ່ງວຽກງານ** ໂດຍຈັດໃຫ້ມີຜູ້ຮັບຜິດຊອບວຽກການຕາມແຜນທີ່ວາງໄວ້ ຈັດໃຫ້ເປັນຫມວດຫມູ່ໃນແຕ່ລະເຣື້ອງ ແລ້ວມອບໃຫ້ຄົນທີ່ມີຄວາມສາມາດພິເສດໃນດ້ານຕ່າງ ໆ ຮັບໄປປະຕິບັດຜູ້ທີ່ຮັບຜິດຊອບງານ ຕ້ອງປະຕິບັດງານຢ່າງຈິງຈັງ ດັ່ງທີ່ເຮົາເຮັດຖວາຍພຣະເຈົ້າ ໂດຍການຮັບໃຊ້ສະມາຊິກ ເພື່ອໃຫ້ວຽກການນັ້ນສຳເຣັດ

6. **ໃຫ້ພິຈາຣະນາຄຳຖາມເຫລົ່ານີ້ໃນການຈັດແຜນງານ**

ກ. ແມ່ນຫນ່ວຍງານດ້ານໃດທີ່ເຮົາຈະເຮັດໃຫ້ເກີດຜົນ? ມີເປົ້າຫມາຍອັນໃດ ສາເຫດອັນໃດທີ່ກໍ່ໃຫ້ເກີດການຈັດຕັ້ງວຽກການນີ້

ຂ. ຈະເຮັດຢູ່ໃສ? ສະຖານທີ່ບ່ອນໃດທີ່ເຫມາະສົມກັບຈຳນວນຄົນ ວຽກນີ້ຈັດໄວ້ສຳລັບຄົນກຸ່ມໃດ ເພດໃດ ວັຍໃດ ການສຶກສາຣະດັບໃດ

ຄ. ໃຜເປັນຜູ້ນຳ? ໃຜເປັນຜູ້ຊ່ວຍ ຜູ້ຊ່ວຍຕ້ອງຖາມຫາຜູ້ນຳເພື່ອເຮັດນຳກັນ

ງ. ຕ້ອງໃຊ້ປັດຈັຍອັນໃດ ຕ້ອງໃຊ້ເງິນຈຳນວນເທົ່າໃດ ມາຈາກໃສ ຫລືສິ່ງຂອງເຄື່ອງໃຊ້ແບບໃດ

ຈ. ຕັ້ງຕົ້ນເມື່ອໃດ? ວັນເວລາຍາວນານປານໃດ ໃຫ້ກຳຫນົດວັນ ເດືອນ ປີໃດ

ສ. ຈັດໃຫ້ມີການໂຄສະນາ ເຮົາຈະມີການປະກາດໃຫ້ເກີດຄວາມສົນໃຈ ແລະໃຫ້ມີຄວາມເຂົ້າໃຈໃນຫມູ່ສະມາຊິກໄດ້ໂດຍແນວໃດ?

ຊ. ຈັດຫາອຸປະກອນ ແລະຕຽມພ້ອມໃນເຣື້ອງບົດຮຽນ

ຍ. ບຸກຄົນຕໍ່ໄປນີ້ຕ້ອງຮູ້ຈັກຕຽມຕົວໃຫ້ພ້ອມເພື່ອໃຫ້ແຜນງານສຳເຣັດ ແມ່ນຜູ້ດຳເນີນລາຍການຜູ້ສອນ ຜູ້ໃຫ້ການອົບຣົມ ອາຈານ

7. **ການວັດຜົນ** ຈະເປັນການວັດຜົນປະຈຳປີ ຫລືການວັດຜົນໃນແຕ່ລະຫນ່ວຍງານໃນຣະຍະ

ເວລານຶ່ງ ໆ ເພື່ອກວດເບິ່ງຄວາມບົກພ່ອງ ຜູ້ນຳຕ້ອງຍອມຮັບຟັງຂໍ້ຜິດພາດເພື່ອນຳໄປແກ້ໄຂ ແລະ ເປັນບົດຮຽນໃຫມ່ສຳລັບການຈັດຕັ້ງໃນເທື່ອຫນ້າ ບໍ່ໃຫ້ເກີດການນ້ອຍໃຈງ່າຍ ຫລືຢ້ານ ອາຍ ມິດງຽບຢູ່

8. **ການວາງແຜນຣະຍະຍາວ** ຫາກວ່າຄຣິສຈັກໄດ້ປະຕິບັດຕາມຫລັກການ ແລະມີການວາງແຜນງານຣະຍະສັ້ນ ຫລືວາງແຜນການດ້ານການສຶກສາ ການປະກາດ ການນມັສການ ແລະກິຈກັມອື່ນ ໆ ແລ້ວມີການວັດຜົນງານ ຈະກໍ່ໃຫ້ເກີດການປັບປຸງແກ້ໄຂໃຫ້ດີຂຶ້ນ ແຕ່ຖ້າຄນະກັມການຜູ້ນຳຄຣິສຈັກຈະມີນິມິດຫມາຍ ແລະເບິ່ງດູອານາຄົດຂອງຄຣິສຈັກທີ່ຈະກ້າວຫນ້າໄປ ກໍຈະເຮັດໃຫ້ຮູ້ຈັກການວາງແຜນຣະຍະຍາວແລະຮູ້ວ່າອານາຄົດຂອງຄຣິສຈັກຈະຢູ່ຣອດໄສ ເປັນແນວໃດ ເຮົາຈະປັບປຸງແກ້ໄຂໃນປັດຈຸບັນເພື່ອວາງແຜນການໃນອານາຄົດຈະເກີດຄວາມຫວັງໃຈໃຫມ່ ເກີດການຕື່ນຕົວທີ່ຈະກ້າວເຂົ້າສູ່ອານາຄົດຢ່າງມີແບບແຜນຕາມທີ່ໄດ້ຕຽມການໄວ້ ເຮັດໃຫ້ສະມາຊິກຂອງຄຣິສຈັກມີຄວາມກະຕືລືລົ້ນ ບໍ່ເຫງົາບໍ່ເສົ້າຫາຍຫນ້າໄປຈາກຄຣິສຈັກ

9. **ມີຄວາມຫວັງໃຈໃຫມ່ຢູ່ສເມີ** ແຜນການທີ່ເຮົາວາງຂຶ້ນໂດຍການຮ່ວມມືຂອງສະມາຊິກແລະຜູ້ນຳຄຣິສຈັກ ຈຳເປັນຕ້ອງເປັນແຜນການສຳລັບທຸກ ໆ ຄົນໃນຄຣິສຈັກ ຈຳເປັນຕ້ອງໄດ້ເປີດເຜີຍໃຫ້ສະມາຊິກໄດ້ຮັບຮູ້ ແລະໄດ້ເຫັນນິມິດຫມາຍຮ່ວມກັນ ກໍ່ໃຫ້ເກີດຄວາມຫວັງໃຈ ກໍ່ໃຫ້ເກີດກຳລັງໃຈ ແຕ່ວ່າ ເຮົາຕ້ອງຍອມຮັບວ່າ ອັນນີ້ແມ່ນແຜນການຂອງມະນຸດທີ່ເຮັດຕາມນ້ຳພຣະທັຍພຣະເຈົ້າ ແລະຕາມການຊົງນຳຂອງພຣະເຈົ້າ ອາດມີຜູ້ບໍ່ເຂົ້າໃຈບໍ່ເຫັນນຳ ຊຶ່ງຕ້ອງໃຊ້ເວລາ ໃຊ້ຄວາມຮັກ ໃຫ້ເກີດຄວາມເຂົ້າໃຈກັນ ເພື່ອກໍ່ໃຫ້ເກີດຄວາມຫວັງໃຈໃນສິ່ງອັນດຽວກັນ ແລະນຳພາໃຫ້ຄຣິສຈັກກ້າວຫນ້າຢ່າງມີຣະບົບຣະບຽບເປັນອັນນຶ່ງອັນດຽວກັນ

10. **ຍອມອ່ອນຜ່ອນຜັນຕໍ່ກັນແລະກັນ** ແຜນການທີ່ເຮົາຈັດວາງຂຶ້ນນັ້ນ ເຮົາຕ້ອງຍອມຮັບວ່າເປັນການຈັດຕັ້ງຂຶ້ນຕາມຄວາມຄິດ ຕາມຄວາມເຂົ້າໃຈ ໃນສະພາບການທີ່ເປັນຢູ່ພາຍໃນຄຣິສຈັກ ໃນເວລານັ້ນ ໆ ການວາງແຜນການເປັນງານຈັດທຳຮູບແບບ ແຜນຜັງຂຶ້ນລ່ວງຫນ້າ ເພື່ອເຮົາຈະຮູ້ທິດທາງທີ່ເຮົາຈະກ້າວໄປຂ້າງຫນ້າ ແຕ່ວ່າໃນຣະຫວ່າງທີ່ເຮົາກຳລັງດຳເນີນການ ຕາມແຜນການທີ່ເຮົາໄດ້ຈັດທຳຂຶ້ນແລ້ວຢ່າງດີ ແຕ່ວ່າອາດຈະໄດ້ພົບເຫັນຂໍ້ບົກພ່ອງ ການຕິດຂັດຫລືການທ້ວງຕິງຈາກສະມາຊິກ ເຮົາຈຳເປັນຕ້ອງຮູ້ຈັກການອ່ອນຜ່ອນຜັນ ຍອມດັດແປງຮູບແບບແຜນການທີ່ມີຢູ່ແລ້ວນັ້ນໃຫ້ເຫມາະສົມ ໂດຍມີການຕັດທອນສິ່ງທີ່ຂັດຂວາງອອກ ມີການເພີ່ມເຕີມສິ່ງໃຫມ່ ທີ່ເຮົາເຫັນວ່າຈະສົ່ງເສີມ ໃຫ້ແຜນການທີ່ເຮົາວາງໄວ້ນັ້ນໄດ້ດີຂຶ້ນ

**ການວາງແຜນການສຶກສາທີ່ກໍ່ໃຫ້ເກີດການຈະເຣີນກ້າວຫນ້າໃນຄຣິສຈັກ**

ຈາກການສຳຣວດພົບວ່າ ຄຣິສຈັກທີ່ຈະເຣີນກ້າວຫນ້າຍ່ອມຮູ້ຈັກນຳພາໃຫ້ສະມາຊິກໄດ້ສຶກສາໄດ້ຄົ້ນຄວ້າແລະເຂົ້າໃຈເຖິງ ຫລັກການໃນການນຳພາຄຣິສຈັກ ເປັນທີ່ແນ່ນອນວ່າທຸກຄຣິສຈັກຕ້ອງການໃຫ້ເກີດການກ້າວຫນ້າ ຕ້ອງການໃຫ້ພຣະເຈົ້າອວຍພຣະພອນນຳພາ ແລະໃຫ້ສະມາຊິກເປັນນ້ຳນຶ່ງໃຈດຽວກັນ ໃນການນຳພາໃຫ້ຄຣິສຈັກເກີດຜົນແລະກ້າວຫນ້າໄປສູ່ອານາຄົດ ດັ່ງນັ້ນຄຣິສຈັກຈຶ່ງຈຳເປັນຕ້ອງຮູ້ຈັກວາງແຜນດ້ານການສຶກສາ ໃຫ້ສະມາຊິກໄດ້ຮັບການຝຶກອົມຮົມໃນດ້ານຕ່າງ ໆ ຕົວຢ່າງດ້ານການເປັນພະຍານ ດ້ານການອຸດຫນຸນ ການສົງເຄາະຊ່ອຍເຫລືອຜູ້ອື່ນ ດ້ານການບໍຣິຫານນຳພາຄຣິສຈັກ ດ້ານການຮຽນການສອນ ດ້ານການລ້ຽງດູຝ່າຍວິນຍານຈິດ ຮວມໄປເຖິງຄວາມເບີກບານ

ມ່ວນຊື່ນ ຄວາມຮັກ ຄວາມຫວັງ ແລະການຕື່ນຕົວທີ່ຈະຮັບໃຊ້ບົວລະບັດ ບຳຣຸງຄຣິສຈັກຕັ້ງແຕ່ຕົວສະມາຊິກໄປຮອດຕົວຕຶກ ອາຄານແລະບໍຣິເວນຂອງຄຣິສຈັກ

ແຕ່ຄຣິສຈັກຈະມີການສຶກສາໄດ້ ຫລືມີການຈະເຣີນກ້າວໜ້າໄປນັ້ນ ຍ່ອມຂຶ້ນຢູ່ກັບນ້ຳໃຈຂອງສະມາຊິກທີ່ຍອມຮ່ວມມື ຮ່ວມໃຈກັບຜູ້ນຳຄຣິສຈັກ ເຮົາພົບວ່າຫລາຍ ໆ ເທື່ອຜູ້ນຳຄຣິສຈັກພາກັນຄິດ ພາກັນເຮັດ ໂດຍມີຄວາມຕັ້ງໃຈຈິງ ແຕ່ສະມາຊິກບໍ່ສົນໃຈບໍ່ໃຫ້ຄວາມຮ່ວມມື ແຜນການທັງມວນທີ່ວາງໄວ້ກໍບໍ່ໄດ້ເກີດຫຽັງ ເພາະບໍ່ມີຜູ້ຍອມຮັບຮູ້ ການສຶກສາບໍ່ເກີດເພາະບໍ່ມີຜູ້ຮຽນ ຄຣິສຈັກບໍ່ມີຄວາມກ້າວໜ້າເພາະສະມາຊິກບໍ່ເຫັນເຖິງຄວາມສຳຄັນຂອງຄວາມກ້າວໜ້າ ແຕ່ເປັນພວກເມື່ອຍຫລ້າ ເຢັນຊາ ຫາກວ່າຈິດໃຈຂອງສະມາຊິກບໍ່ໄດ້ໃສ່ໃຈ ບໍ່ໄດ້ເຫັນເຖິງຄວາມສຳຄັນຂອງການສຶກສາ ການຮຽນຮູ້ ແລະການວາງແຜນການຮ່ວມກັບຜູ້ນຳແລ້ວ ຄຣິສຈັກກໍເຕີບໂຕບໍ່ໄດ້ ຜູ້ນຳທີ່ນຳພາກໍຈະນຳໄປໄດ້ບໍ່ນານ ເພາະເຮັດໄປກໍບໍ່ມີໃຜຮ່ວມມື ໃນທີ່ສຸດຜູ້ນຳຈະເກີດການອິດເໜື່ອຍແລະສມອງຕັນ ເພາະບໍ່ຮູ້ວິທີເຮັດອີກຕໍ່ໄປ ເພາະຂາດກຳລັງໃຈ ຂາດການຮ່ວມມືຈາກສະມາຊິກ ແນ່ນອນທີ່ສຸດ ຫາກວ່າເຖິງຈຸດນີ້ແລ້ວຄຣິສຈັກນັ້ນ ໆ ອາດຈະຫ່ຽວແຫ້ງ ມີຊີວິດຢູ່ບໍ່ຕາຍ ແຕ່ບໍ່ໃຫຍ່ ບໍ່ໄປໃສໄດ້

ເຖິງຢ່າງໃດກໍຕາມ ເຮົາພົບວ່າຄຣິສຈັກລາວທີ່ຕົກຢູ່ໃນສະພາບນີ້ມີຈຳນວນຫລາຍເຖິງ 90 ເປີເຊັນ ມີບາງບ່ອນທີ່ຄຣິສຈັກໄດ້ຕົກໃນສະພາບທີ່ຫ່ຽວແຫ້ງນີ້ ແຕ່ບໍ່ຍອມປະຖິ້ມຄວາມຫວັງ ຄົນຈຳນວນນ້ອຍ ໆ ທີ່ຍັງຄົງເຫລືອຢູ່ໃນຄຣິສຈັກ ຈະສາມາດເປັນເຊື້ອແປ້ງໃຫ້ຄຣິສຈັກເກີດການຟື້ນຟູຂຶ້ນໃໝ່ ແມ່ນເມັດພັນພືດແຕ່ພຽງລັກ ໆ ສາມາດເກີດຜົນ ແລະພາໃຫ້ເກີດການແຜ່ພັນຂຍາຍໃຫຍ່ຂຶ້ນໃນພາຍຫລັງໄດ້ ການຟື້ນຕົວຊນິດນີ້ ຈຳເປັນຕ້ອງອາສັຍພລັງຄວາມເຊື່ອ ຄວາມຫວັງໃຈຂອງຄົນທີ່ຍັງເຫລືອຢູ່ນັ້ນ ຣວມຕົວກັນເປັນປຶກແຜ່ນແໜ້ນໜາ ແມ່ນວ່າຈະມີສະມາຊິກພຽງ 2-3 ຄົວທີ່ເຫລືອຢູ່ກໍຕາມ ຣວມຕົວກັນອະທິຖານ ອ່ານພຣະຄັມພີ ຮ້ອງຂໍການຊ່ວຍເຫລືອຈາກພຣະເຈົ້າ ບໍ່ຍອມທໍ້ຖອຍ ບໍ່ຍອມປະຫນີຈາກ ແຕ່ເຣີ່ມຕົ້ນໃໝ່ ດ້ວຍແຜນການໃໝ່ ຈາກສິ່ງລັກ ໆ ນ້ອຍ ໆ ຄ່ອຍ ໆ ຟື້ນຕົວ ເພີ່ມກຳລັງເຂົ້າດ້ວຍກັນ ມີຈິດໃຈເຂັ້ມແຂງແລະອົດທົນນານ ລໍໃຫ້ເຖິງວັນເວລາຂອງພຣະເຈົ້າ ທີ່ຈະນຳຄົນອື່ນເຂົ້າມາຮ່ວມອີກ ຂ້າພະເຈົ້າໄດ້ເຫັນຄຣິສຈັກແບບນີ້ ທີ່ເກີດຣິດເດດອຳນາດໂດຍການນຳພາຂອງພຣະເຈົ້າ ແລ້ວເກີດການຟື້ນຕົວຢ່າງໄວ ເປັນທີ່ຫນ້າຊົມເຊີຍ ແລະເປັນທີ່ຖວາຍກຽດແກ່ພຣະເຈົ້າຢ່າງຫລວງຫລາຍ ອັນນີ້ເປັນແບບຢ່າງທີ່ດີທີ່ເຮົາຄວນຈະເອົາໄວ້ເປັນບົດຮຽນແລະປະຕິບັດຕາມ

ຂໍ້ຄິດສຳລັບທ່ານ ມີຜູ້ຫາປາຜູ້ນຶ່ງອອກຫາປາ ໃນຖຸຂອງລາວຍັງບໍ່ທັນມີປາສັກຕົວ ຄັ້ນເມື່ອໄດ້ປາຕົວນຶ່ງແລ້ວ ລາວດີໃຈຫລາຍ ກະໂດດໂລດເຕັ້ນ ເຮັດໃຫ້ມີກຳລັງໃຈຊິດເບັດຕໍ່ໄປ ເພື່ອຫວັງໄດ້ປາຕົວທີ່ສອງຕົວທີ່ສາມຕາມມາ ແຕ່ວ່າຝ່າຍແຄມນ້ຳຄົນລະຝາກ ມີຜູ້ຫາປາອີກຜູ້ນຶ່ງມີປາເຕັມຖຸ ເຂົາບັງເອີນສະດຸດລົ້ມລົງ ປາໃນຖຸຕົກລົງນ້ຳ ເຮັດໃຫ້ປາຈຳນວນຫລາຍດິ້ນຕົກນ້ຳຄືນໄປໃນໜອງ ແຕ່ຍັງມີປາເຫລືອຢູ່ສອງສາມຕົວ ເຮັດໃຫ້ລາວໃຈຮ້າຍ ປະຫນີຈາກໜອງນ້ຳ ແລະເປັນທຸກໃຈໄປຫລາຍມື້

ໃຫ້ເຮົາມາສັງເກດເບິ່ງ ຄົນແລກມີປາຕົວດຽວໃນຖຸ ແຕ່ຍັງມີຄວາມດີໃຈຫາຕໍ່ໄປ ແຕ່ຄົນທີ່ສອງມີປາໃນຖຸຫລາຍກວ່າຄົນແລກ ແຕ່ບໍ່ມີກຳລັງໃຈເຮັດຕໍ່ໄປ ໃນທີ່ສຸດຄົນໃດຈະໄດ້ຈະໄດ້ປາເມືອເຮືອນຫລາຍກວ່າກັນ

ບົດຮຽນນີ້ສອນໃຈແກ່ເຮົາວ່າ ຫາກວ່າເຫດສະດຸດໄດ້ເກີດຂຶ້ນໂດຍທີ່ເຮົາບໍ່ສາມາດຕ້ານທານໄດ້ ເຮົາຕ້ອງສແວງຫາກຳລັງໃຈໃໝ່ຈາກພຣະເຈົ້າແລ້ວຕັ້ງຕົ້ນໃໝ່ ເໝືອນດັ່ງທີ່ຂ້າພະເຈົ້າໄດ້ເຫັນມາ ຄຣິສຈັກເກີດໃໝ່ມີສະມາຊິກ 4 ຄົນ ເຂົາດີໃຈຫລາຍຕື່ນເຕັ້ນທີ່ເປີດໃໝ່ມີຄົນມາຮ່ວມກັນສີ່ຄົນ ແຕ່ຄຣິສຈັກເກົ່າທີ່ຄົນຫລົງຫາຍໄປຄົງເຫລືອ 20 ຄົນບໍ່ດີໃຈ ພາກັນຜິດຖຽງກັນ ແລະເອົາໂທດ

ໃສ່ກັນບໍ່ເກີດປໂຍດຫຽັງ ຫາກວ່າຄົນ 20 ຄົນທີ່ເຫລືອຢູ່ນີ້ມີກຳລັງໃຈຄືກັນກັບຄຣິສຈັກທີ່ມີ 4 ຄົນ ພລັງຂອງຄົນ 20 ຄົນຍ່ອມຫລາຍກວ່າຄົນ 4 ຄົນ ຫາກຄົນ 20 ຄົນນີ້ຕັ້ງກຳລັງໃຈໃຫມ່ ພຣະເຈົ້າຈະໄດ້ຮັບກຽດເພາະຄົນ 20 ຄົນນີ້ ແມ່ນຫລືບໍ່? ແລະພຣະອົງຈະເຕີມ ພຣະພອນໃຫ້ແກ່ເຂົາຢ່າງເຫລືອລົ້ນຈົ່ງຫມັ້ນໃຈເຖີດ

**ຂໍ້ສັງເກດທີ່ເຮັດໃຫ້ຄຣິສຈັກໃຫຍ່**

ມີຂໍ້ສເນີຊຶ່ງຜູ້ນຳສົມຄວນຈະພິຈາຣະນາ ຂໍ້ສເນີນີ້ໄດ້ມາຈາກການສຳຣວດຂອງ The Sunday School Board and the Home Mission Board of the Southern Baptist Convention (ໃຊ້ເວລາ 2 ປີໃນການສຳຣວດ) [1] ຄຣິສຈັກທີ່ເຕີບໃຫຍ່ໄດ້ຕ້ອງມີລັກສນະດັ່ງນີ້

1. ສິດຍາພິບາລແລະຄນະຜູ້ນຳ ມີຄວາມເສັຍສລະແລະຕັ້ງໃຈຈິງ ແລະຮ່ວມມືກັນເພື່ອໃຫ້ຄຣິສຈັກໃຫຍ່
2. ສະມາຊິກຮ່ວມມືກັບຜູ້ນຳ ແລະສົ່ງເສີມກັນແລະກັນໃຫ້ເກີດການເຕີບໂຕ
3. ຖືວ່າການອອກນຳວິນຍານຈິດຂອງຜູ້ຫລົງຫາຍ ມາເຊື່ອໃນພຣະເຢຊູຄຣິສເປັນສິ່ງແລກທີ່ຕ້ອງເຮັດແລະສຳຄັນທີ່ສຸດ
4. ມີການສອນໃຫ້ສະມາຊິກໃຫມ່ໃຫຍ່ໃນຝ່າຍວິນຍານ ຮູ້ຈັກການເປັນພະຍານ ແລະຮັບໃຊ້ວຽກການໃນຄຣິສຈັກ
5. ຄຣິສຈັກມີຣາຍການນມັສການ ມີດົນຕຣີ ມີການອົບຮົມຟື້ນຟູໃຫ້ເກີດພລັງແຫ່ງຄວາມເຊື່ອເກີດຄວາມຊົມຊື່ນຍິນດີໃນພຣະເຈົ້າ ແລະໃນຣະຫວ່າງສະມາຊິກ
6. ມີການເປັນອັນນຶ່ງອັນດຽວກັນ ຍອມຮັບຟັງກັນ ຫ່ວງໃຍແລະຮັກແພງຕໍ່ກັນແລະກັນ
7. ພຣະຄັມພີເປັນສູນກາງຂອງຄຳເທສນາແລະເປັນຄຳສອນທັງມວນ
8. ໂຮງຮຽນວັນອາທິດ ເປັນຈຸດສູນຣວມຂອງການສອນເຮັດໃຫ້ສະມາຊິກໃຫຍ່ໃນຄວາມເຊື່ອ
9. ສະມາຊິກມີການເບິ່ງແຍງຄວາມທຸກສຸກຂອງແຕ່ລະຄົນ
10. ມີການວາງແຜນການ ມີຈຸດມຸ່ງຫມາຍໃຫ້ຄຣິສຈັກເກີດການຂຍາຍຕົວໃຫຍ່ຂຶ້ນໄປກວ່າເດີມ
11. ມີຄວາມຄິດຫ່ວງໃຍຕໍ່ເພື່ອນບ້ານ ຕໍ່ສັງຄົມ ຕໍ່ຄວາມເປັນໄປທີ່ກຳລັງເກີດຂຶ້ນໃນໂລກ ໂດຍການແບ່ງປັນພຣະຄຳຂອງພຣະເຈົ້າທັງທາງຕົງແລະກາງອ້ອມ
12. ມີໃຈຮ້ອນຮົນໃນການອະທິຖານໄຫວ້ວອນ ແລະສແວງຫາການນຳພາທີ່ມາຈາກພຣະວິນຍານບໍຣິສຸດ

**ຂໍ້ສລູບ**

ບົດຮຽນບົດນີ້ ສອນເຮົາເຖິງເຣື້ອງການຈັດຕຽມ ແລະການຮູ້ຈັກວາງແຜນການຂອງຄຣິສຈັກ ຊຶ່ງແຕ່ລະຄຣິສຈັກຕ້ອງມີສິດຍາພິບາລ ຜູ້ນຳ ແລະສະມາຊິກເຂົ້າຮ່ວມມືກັນ ຮ່ວມສເນີຄວາມຄິດເຫັນແລະຮູ້ຈັກການຈັດຕຽມວາງແຜນການຂອງຄຣິສຈັກ ຊຶ່ງແຕ່ລະບ່ອນອາດຈະມີເຣື້ອງຄ້າຍຄືກັນ ຫລືແຕກ

ຕ່າງກັນໄປ ບົດຮຽນນີ້ໄດ້ໃຫ້ຄຳແນະນຳພຽງກວ້າງ ໆ ອັນເປັນພື້ນຖານຊ່ວຍເຫລືອໃຫ້ຮູ້ຈັກການວາງແຜນການຂອງຄຣິສຈັກ ຊຶ່ງໃນສະພາບຄວາມເປັນຈິງແລ້ວຄຣິສຈັກແຕ່ລະບ່ອນຢູ່ໃນຣະດັບ ຫລືສະພາບການທີ່ແຕກຕ່າງກັນ ບາງບ່ອນອາດຢູ່ໃນແດນກັນດານ ຂາດຜູ້ຄົນ ຂາດສະມາຊິກ ບໍ່ສາມາດໃຫຍ່ໃນດ້ານຈຳນວນສະມາຊິກ ເຖິງຢ່າງນັ້ນຄຣິສຈັກກໍຍັງຕ້ອງມີແຜນການຢ່າງໃດຢ່າງນຶ່ງ ທີ່ເນັ້ນໃຫ້ສະມາຊິກເກີດການເຕີບໂຕໃນຝ່າຍວິນຍານຈິດ ແລະເກີດຄວາມຮຸ່ງເຮືອງໃນດ້ານອື່ນ ໆ ທີ່ເຫມາະສົມກັບຄົນໃນທ້ອງຖິ່ນນັ້ນ ໆ ຢ່າງໃດກໍຕາມ ຄວາມເຕີບໃຫຍ່ຂອງຄຣິສຈັກເກີດຂຶ້ນໄດ້ ຍ້ອນຄວາມເຊື່ອຂອງສະມາຊິກທີ່ມີຢູ່ໃນພຣະເຈົ້າ ຄວາມຫວັງໃຈທີ່ກໍ່ໃຫ້ເກີດການຕື່ນຕົວບໍ່ໂດຍເສົ້າຫມອງ ບໍ່ອິດອ່ອນໃຈ ບໍ່ເນັ້ນແຕ່ບັນຫາ ສະມາຊິກຄຣິສຈັກຕ້ອງມີຄວາມຮັກແພງເປັນອັນນຶ່ງອັນດຽວກັນ ຍອມເສັຍສລະ ເພື່ອໃຫ້ຄຣິສຈັກເກີດການຈະເຣີນເຕີບໂຕ ທັງຫມົດນີ້ຈະເກີດຂຶ້ນໄດ້ຈຳເປັນຕ້ອງໃຊ້ຄຣິສຕຽນສຶກສາ ມາເປັນຕົວເຊື່ອມໃຫ້ເກີດການຮຽນຮູ້ ເກີດການເຂົ້າໃຈກັນໃນຄຣິສຈັກ ແລະເມື່ອສະມາຊິກຍອມຮຽນຮູ້ແລ້ວ ຜູ້ນຳກໍຈະສາມາດຈັດຕຽມການ ແລະວາງແຜນການຂອງຄຣິສຈັກໄດ້ ຖືກຕ້ອງຫລາຍຂຶ້ນ ແລະເກີດຫມາກຜົນຕາມມາພາຍຫລັງ

**ຂໍພຣະເຈົ້າອວຍພຣະພອນທຸກທ່ານທີ່ໄດ້ຮຽນບົດຮຽນນີ້**

ຮ່ 8-30-97

# ບົດທີ 8

## ຜູ້ສອນ
## ແລະ
## ແຜນການສອນ

### ນຶ່ງ. ຄໍານໍາ

ໃນລາຍການຕ່າງ ໆ ຂອງຄຣິສຈັກ ທຸກ ໆ ລາຍການທີ່ຕ້ອງກ່ຽວຂ້ອງກັບເຣື້ອງການສອນ ບໍ່ວ່າຈະເປັນຕອນເຊົ້າວັນອາທິດ ຫລືຕອນແລງວັນເສົາ ບໍ່ວ່າໂອກາດໃດກໍຕາມ ເມື່ອຕ້ອງການເອີ້ນຫາຜູ້ມາຊ່ວຍສອນເດັກນ້ອຍ ຫລືສອນຜູ້ໃຫຍ່ ສະມາຊິກສ່ວນຫລາຍໃນຄຣິສຈັກຈະຕອບວ່າ "ສອນບໍ່ໄດ້" "ສອນບໍ່ເປັນ" "ບໍ່ຮູ້ຈັກສອນ ບໍ່ມີຄວາມຮູ້ພຣະຄັມພີ" ຫລື "ຢ້ານບໍ່ກ້າສອນ" "ບໍ່ກ້າຫານພໍທີ່ຈະສອນຄົນອື່ນ" ຫລື "ບໍ່ມີເວລາ" ແທ້ທີ່ຈິງແລ້ວເຣື້ອງການສອນພຣະຄັມພີນັ້ນ ສະມາຊິກທີ່ມີຄວາມເຊື່ອແທ້ ໆ ທຸກຄົນສາມາດທີ່ຈະຝຶກແອບຕົນເອງ ໃຫ້ຮູ້ຈັກການສອນໄດ້ ສິ່ງສໍາຄັນທີ່ສຸດແມ່ນ ຄວາມເຊື່ອຄວາມຈິງໃຈ ການຍອມອຸທິດຖວາຍຕົວ ຍອມເສັຍສະລະ ຍອມອົດທົນໃນການຝຶກແອບຕົນເອງໃຫ້ຮູ້ຈັກການສອນ ອັນນີ້ເປັນສິ່ງສໍາຄັນທີ່ສຸດ ທີ່ຈະນໍາພາໃຫ້ຜູ້ນັ້ນພົບກັບຄວາມສໍາເຣັດໃນເຣື້ອງການສອນ ຜູ້ສອນທີ່ຍອມຮັບການອົບຮົມແລະຍອມຮຽນຮູ້ ຈະໄດ້ຮັບພຣະພອນໃນເຣື້ອງການສອນຢ່າງຫລວງຫລາຍ ເມື່ອເຮົາເບິ່ງຜູ້ທີ່ມີຄວາມສາມາດ ຫລືຜູ້ທີ່ມີຄວາມຊໍານິຊໍານານໃນການສອນນັ້ນ ພາກສ່ວນນຶ່ງອາດຈະເປັນຂອງປະທານຊຶ່ງເປັນພອນສວັນທີ່ພຣະເຈົ້າປະທານໃຫ້ ແຕ່ອີກພາກສ່ວນນຶ່ງ ຍ້ອນເກີດຈາກການຝຶກແອບຕົນເອງ ແລະໄດ້ຕັ້ງຕົ້ນສອນມາເປັນເວລາຫລາຍ ໆ ປີ ຈຶ່ງເຮັດໃຫ້ເກີດຄວາມຊໍານິຊໍານານຂຶ້ນມາ ເປັນເຫດໃຫ້ເກີດສະຕິປັນຍາຮູ້ຈັກສອນ ແລະ ຮູ້ຈັກການປັບປຸງແກ້ໄຂຕົນເອງໃຫ້ການສອນຂອງຕົນເອງດີຂຶ້ນໄປເປັນລໍາດັບ

ການສອນທີ່ເກີດຜົນເປັນຫົວໃຈສໍາຄັນຂອງຄວາມຈະເຣີນ ໃນທຸກ ໆ ດ້ານໃນທຸກ ໆ ພະແນກຂອງຄຣິສຈັກ ເບິ່ງໄດ້ວ່າຄຣິສຈັກທີ່ຈະເຣີນນັ້ນ ຍ້ອນມີການສຶກສາເປັນຫົວໃຈ ຊຶ່ງເປັນສິ່ນໍາພາໃຫ້ເກີດການຮຽນຮູ້ ເກີດຄວາມເຂົ້າໃຈ ແລະເກີດການພັດທະນາ ເຮັດໃຫ້ສະມາຊິກ ເກີດການໃຫຍ່ຂຶ້ນໃນຝ່າຍວິນຍານ ມີຄວາມເຊື່ອ ມີການປ່ຽນແປງຊີວິດຄຣິສຕຽນ ມີຄວາມຮັກແພງເກີດການສາມັກຄີທົມກັນ ເກີດຜູ້ນໍາ ເກີດການປະກາດເຣື້ອງຄວາມພົ້ນໃນພຣະເຢຊູຄຣິສ ແລະເກີດການຂຍາຍແຜ່ຂ່າວປະເສີດອອກໄປຢ່າງກ້ວາງຂວາງ

### ສອງ. ຜູ້ສອນ

ຜູ້ສອນຈະເປັນຜູ້ສອນທີ່ດີ ຕ້ອງເປັນຄົນດຸຫມັ່ນ ພຽນເອົາໃຈໃສ່ຕໍ່ການຮຽນເປັນຢ່າງດີເສັຍກ່ອນ ຕ້ອງເປັນຜູ້ທີ່ຍອມ ຮັບຟັງຄໍາແນະນໍາຈາກຜູ້ອື່ນ ຕ້ອງເປັນຜູ້ທີ່ມັກອ່ານ ມັກຮຽນ ມັກຈື່ຈໍາມັກຈົດບັນທຶກ

ໄວ້ ເພື່ອປັບປຸງການສອນຂອງຕົນເອງໃຫ້ດີຂຶ້ນເປັນລຳດັບ ທ່າທີຂອງຜູ້ສອນ ມີຄວາມສຳຄັນຫລາຍ ເພາະວ່າ ຜູ້ຮຽນຈະສັງເກດເບິ່ງຄວາມເວົ້າ ກິຣິຍາວາຈາ ຮວມໄປເຖິງຄວາມເຊື່ອ ແລະ ຄວາມເອົາໃຈໃສ່ຂອງຄຣູຜູ້ສອນວ່າ ມີນ້ຳໃສໃຈຈິງຫລືບໍ່ ມີຄວາມຫ່ວງໃຍ ຕໍ່ດວງວິນຍານຈິດຂອງຜູ້ຮຽນປານໃດ ໃນບົດຮຽນນີ້ຂໍແນະນຳຜູ້ສອນ 5 ປະການດ້ວຍກັນດັ່ງຕໍ່ໄປນີ້

1. **ຜູ້ສອນຕ້ອງມີຄວາມເຊື່ອ** ຜູ້ສອນພຣະຄັມພີຕ້ອງມີຄວາມເຊື່ອວ່າ ພຣະຄັມພີແມ່ນພຣະຄຳຂອງພຣະເຈົ້າ ທີ່ມີຄວາມຈິງແທ້ໃນເຣື່ອງຂອງຊີວິດ ທີ່ຈະສອນມະນຸດແລະນຳມະນຸດໄປເຖິງພຣະເຈົ້າ ຜູ້ສອນຕ້ອງເຂົ້າໃຈໃນພຣະເຈົ້າ ທີ່ໄດ້ພຍາຍາມເປີດເຜີຍນ້ຳພຣະທັຍຂອງພຣະອົງ ໂດຍຜ່ານທາງພຣະຄັມພີ ຫາກວ່າຜູ້ສອນຂາດຄວາມເຊື່ອສັດທາແລ້ວ ຜູ້ຮຽນຈະມີຄວາມເຊື່ອສັດທາໄດ້ແນວໃດ ດັ່ງທີ່ປາກົດໃນພຣະທັມລູກາ 6:39 "ຄົນຕາບອດຈະຈູງຄົນຕາບອດໄປບໍ່ໄດ້ຕີ້ ເຂົາທັງສອງຈະບໍ່ຕົກໃນຂູມຫລື" ດັ່ງນັ້ນຜູ້ສອນ ຕ້ອງມີຄວາມເຊື່ອເປັນສິ່ງສຳຄັນທີ່ສຸດ ອັນເປັນຮາກຖານແຫ່ງສາສນາສາດທີ່ຈະຕີຄວາມຫມາຍແຫ່ງຄວາມເຂົ້າໃຈ ແລະຄວາມຫມາຍແຫ່ງຄວາມເຊື່ອ ໃຫ້ຖືກຕ້ອງຕາມພຣະຄັມພີ

2. **ຜູ້ສອນຕ້ອງມີຄວາມຮູ້ໃນພຣະຄັມພີ** ເຮົາຕ້ອງຍອມຮັບວ່າ ຄຣິສຈັກໃນປັດຈຸບັນ ຍັງບໍ່ທັນມີຜູ້ທີ່ມີຄວາມຮູ້ເຕັມປ່ຽມສົມບູນຄົບຖ້ວນ ແຕ່ວ່າພໍຈະມີຜູ້ທີ່ມີຄວາມຮູ້ບ້າງ ຊຶ່ງພຽງພໍທີ່ຈະສອນຄົນອື່ນໄດ້ ດັ່ງມີຄຳກ່າວແກ້ໄວ້ວ່າ "ຄົນຕາບອດເບື້ອງດຽວ ພໍຈະຈູງ ຄົນຕາບອດສອງເບື້ອງໄດ້" ຫລື "ຄົນຕາບອດຄົນລະເບື້ອງ ກໍສາມາດນຳພາກັນໄປຈົນຮອດບ່ອນຈຸດຫມາຍປາຍທາງໄດ້" ການຮຽນນຳກັນໄປ ກໍຈະເພີ່ມຄວາມຮູ້ຄວາມເຂົ້າໃຈໃນພຣະຄັມພີຫລາຍເຕີ່ມຂຶ້ນໄປອີກ ເພາະວ່າໃນເວລາທີ່ຜູ້ສອນກຳລັງຕຽມຕົວເອງສຳລັບຈະນຳໄປສອນ ຜູ້ສອນໄດ້ອາສັຍບົດຮຽນຈາກຜູ້ທີ່ມີຄວາມຮູ້ໃນດ້ານພຣະຄັມພີ ຊຶ່ງເຂົາເຈົ້າໄດ້ຂຽນຫລືແຕ່ງມາເປັນບົດຮຽນ ເຮັດໃຫ້ຜູ້ສອນໄດ້ເຂົ້າໃຈເບື້ອງຫລັງພຣະຄັມພີ ເຂົ້າໃຈເບື້ອງຫລັງປວັດສາດພູມີສາດ ວັນນະຄະດີ ແລະ ສະຖານະການ ທີ່ເກີດຂຶ້ນໃນພຣະຄັມພີ ໃນເວລາຕຽມຕົວສອນນັ້ນເອງຜູ້ສອນຈະເກີດການຮຽນຮູ້ຈັກການຕີຄວາມຫມາຍ ຮູ້ຈັກເຊື່ອມໂຍງຄວາມຫມາຍຂອງພຣະຄຳຂອງພຣະເຈົ້າ ເຂົ້າມາເຖິງຊີວິດຄວາມເປັນຢູ່ຂອງຄົນເຮົາໃນປັດຈຸບັນ ແລະເມື່ອໄດ້ນຳບົດຮຽນມາອອກສອນຜູ້ທີ່ຮຽນນຳກໍອາດຈະມີການສເນີຄວາມຄິດເຫັນໃຫມ່ ເຮັດໃຫ້ທັງສອງຝ່າຍໄດ້ຮຽນຮູ້ນຳກັນໄປ

3. **ຜູ້ສອນຕ້ອງຮູ້ຈັກຜູ້ຮຽນ** ແມ່ນໃຜທີ່ເຮົາຈະສອນ ຜູ້ຮຽນແມ່ນເດັກນ້ອຍ ຜູ້ໃຫຍ່ ຫລືຄົນເຖົ້າຄົນແກ່ ຜູ້ມີຣະດັບມີການສຶກສາຫລືສາມັນຊົນ ການທີ່ຜູ້ສອນຮູ້ຈັກຜູ້ຮຽນ ຮູ້ຈັກຄວາມສົນໃຈຂອງຜູ້ຮຽນ ຮວມວັຍອາຍຸ ແລະສິ່ງແວດລ້ອມ ພ້ອມດ້ວຍບັນຫາທີ່ເຂົາເຈົ້າປະສົບຢູ່ ເປັນເຣື່ອງທີ່ສຳຄັນຫລາຍໂດຍສະເພາະຢ່າງຍິ່ງ ເຣື່ອງການສອນພຣະຄັມພີນັ້ນ ຄົນບາງກຸ່ມອາດຍັງບໍ່ທັນມີຄວາມເຊື່ອ ບໍ່ທັນຍອມຮັບ ຫລືອາດຈະມີການຕໍ່ຕ້ານ ກໍອາດເປັນໄດ້ ດັ່ງນັ້ນຜູ້ສອນຕ້ອງຮູ້ຈັກການຕຽມຕົວຮັບກັບສະຖານະການມີການໄຫວ້ວອນ ຂໍການນຳພາຈາກພຣະເຈົ້າ ອະທິຖານເພື່ອຜູ້ຮຽນຈະມີຈິດໃຈຈັກອ່ອນໂຍນ ເພື່ອພຣະຄຳຂອງພຣະເຈົ້າຈະເກີດຜົນໃນຜູ້ຮຽນ ຫລືໃນອີກທາງນຶ່ງ ຜູ້ຮຽນອາດຈະເປັນກຸ່ມທີ່ມີຄວາມເຊື່ອຫລາຍແລ້ວ ແລະຕ້ອງການເຫັນຄວາມກ້າວຫນ້າຂອງຄຣິສຈັກ ຕ້ອງການຮັບໃຊ້ ຕ້ອງການເຫັນຄວາມເຂັ້ມແຂງເດັດຂາດ ໃນການນຳພາຄຣິສຈັກກໍອາດເປັນໄດ້ ດັ່ງນັ້ນຜູ້ສອນ ຕ້ອງຮູ້ຈັກຕຽມຕົວ ຕຽມບົດສອນໃຫ້ເຫມາະສົມກັບຜູ້ຮຽນໃນແຕ່ລະຣະດັບ

**4. ການກະຕຽມການສອນ** ເປັນການວາງແຜນການໄວ້ລ່ວງໜ້າ ເປັນສິ່ງທີ່ສຳຄັນທີ່ສຸດ ຄື ເປັນການຈັດຕຽມເນື້ອໃນບົດທີ່ເຮົາຈະນຳໄປສູ່ຜູ້ຮຽນ ປຽບຄືກັບວ່າແມ່ບ້ານແມ່ເຮືອນ ຈັດຕຽມອາຫານໄວ້ລ້ຽງຄອບຄົວຂອງຕົນ ກ່ອນອື່ນໝົດຈຳເປັນຕ້ອງກະຕຽມ ຈັດຫາເຂົ້າປາອາຫານ ມາໄວ້ພ້ອມຢູ່ສເມີ ຫາກວ່າສິ່ງໃດຂາດເຂີນ ເຂົ້າປາອາຫານບໍ່ພຽງພໍແລ້ວ ທຸກຄົນໃນຄົວເຮືອນກໍອຶດຫິວ ໃນທຳນອງດຽວກັນ ຫາກວ່າເຮົາເປັນຜູ້ສອນ ແຕ່ບໍ່ໄດ້ຈັດຕຽມເນື້ອນັຍບົດຮຽນທີ່ເຮົາຈະສອນອອກໄປ ຜູ້ຮຽນຈະບໍ່ໄດ້ຫຍັງ? ດັ່ງນັ້ນຜູ້ສອນຕ້ອງຕຽມຕົວໃຫ້ພ້ອມ ເພື່ອໃຫ້ຜູ້ຮຽນໄດ້ອີ່ມໃຈໃນສິ່ງທີ່ເຮົາສອນ ຄືການຮູ້ຈັກຈັດຕຽມ ພາກສ່ວນຂອງຂໍ້ພຣະຄັມພີທີ່ເຮົາຈະສອນ ເພື່ອໃຫ້ຜູ້ຮຽນໄດ້ເຂົ້າເຖິງຄວາມຈິງມີຄວາມເຊື່ອ ຮັບການໂຜດໃຫ້ພົ້ນຈາກພຣະເຈົ້າ ຫລືໃຫຍ່ຂຶ້ນໃນຝ່າຍວິນຍານຈິດ ເກີດການປ່ຽນແປງໃໝ່ໃນຊີວິດ ເຖິງວ່າບໍ່ໄດ້ຫລາຍກໍຕ້ອງໃຫ້ພຽງພໍ ຕໍ່ເວລາທີ່ຜູ້ຮຽນຍອມເສັຽສະລະເວລາມາຮຽນ ການຕຽມສອນນີ້ມີຫລາຍປະການດ້ວຍກັນ ຊຶ່ງນອກເໜືອຈາກເນື້ອນັຍບົດຮຽນທີ່ເຮົາຈະສອນ ແລ້ວຍັງມີການຈັດຕຽມອຸປະກອນຢ່າງໃດຢ່າງນຶ່ງ ຕົວຢ່າງ ການພິມບົດຮຽນ ການມີຄຳຖາມຄຳຕອບ ມີຮູບພາບປະກອບ ມີການສາຍພາບແບບສະໄລ ເຄື່ອງສຽງດົນຕຣີ ຫລືເຄື່ອງກະຈ່າຍສຽງ ແລະສິ່ງອື່ນ ໆ ເປັນຕົ້ນວ່າ ຄຳປຽບທຽບອຸປມາອຸປມັຍ ຫລືເຣື່ອງພື້ນບ້ານທີ່ສາມາດນຳມາປະກອບການສອນໃຫ້ຜູ້ຮຽນເກີດຄວາມເຂົ້າໃຈໄດ້

**5. ຮຽນຮູ້ຈັກວິທີສອນ** ວິທີສອນຍ່ອມຂຶ້ນຢູ່ກັບເນື້ອນັຍທີ່ຈະສອນ ແລະມີການຕຽມການສອນໄວ້ລ່ວງໜ້າແລ້ວ ຫາກວ່າເຮົາໄດ້ຕຽມບົດຮຽນແລະໄດ້ເລືອກວິທີການສອນແລ້ວ ກໍຈະເຮັດໃຫ້ການຕຽມການສອນດຳເນີນໄປໄດ້ສະດວກແລະສຳເຣັດຜົນ ວິທີການສອນບໍ່ວ່າຈະເປັນແບບໃດຫລືວິທີໃດກໍຕາມເປັນເຣື່ອງຂອງການນຳສເນີເອົາຄວາມຈິງອອກມາໃຫ້ຜູ້ຮຽນ ໄດ້ຟັງໄດ້ຄິດ ໄດ້ພິຈາຣະນາ ໄດ້ເຂົ້າໃຈ ແລ້ວຜູ້ຮຽນອາດຈະເກີດ ຄວາມຄິດຫລືຂໍ້ສເນີແນວໃໝ່ ເກີດການຄິດຄົ້ນຄວ້າ ຕໍ່ເຕີມເຂົ້າມາອີກ ເຮັດໃຫ້ການຮຽນຮູ້ຂຍາຍຂອບເຂດ ຫລືຂຍາຍຄວາມເຂົ້າໃຈໃໝ່ ເກີດການຄົ້ນພົບສິ່ງໃໝ່ ໆ ຂຶ້ນ ທັງທາງດ້ານຄວາມຄິດ ຄວາມເຂົ້າໃຈ ເກີດການປ່ຽນແປງຊີວິດ ແລະມີພະລັງອຳນາດໃນການດຳເນີນຊີວິດຕໍ່ສືບໄປ ດັ່ງນັ້ນຜູ້ສອນຈຳເປັນຕ້ອງຮູ້ຈັກວິທີສອນ ອັນເປັນວິທີນຳສເນີບົດຮຽນ ທີ່ເຮົາຈະສອນອອກມາ ເປີດເຜີຍໃຫ້ຜູ້ຮຽນໄດ້ຮັບຮູ້ ແລະຮັບເອົາໄປເປັນຄວາມຮູ້ໃໝ່

**ສາມ. ແຜນການສອນ**

ການວາງແຜນການສອນເປັນເຣື່ອງທີ່ມີລາຍລະອຽດ ແລະມີຄວາມຍຸ່ງຍາກຫລາຍແນວ ອີກທັງຕ້ອງອາສັຍຄວາມຮູ້ຄວາມເຂົ້າໃຈ ແລະອາສັຍຄວາມສາມາດຂອງຜູ້ສອນທີ່ຈະວາງແຜນລ່ວງໜ້າ ດັ່ງນັ້ນຈຶ່ງເຫັນໄດ້ວ່າ ຄຣູຜູ້ສອນສ່ວນຫລາຍບໍ່ໄດ້ວາງແຜນການສອນໄວ້ລ່ວງໜ້າກ່ອນ ແຕ່ອາດຈະມີຄຣູບາງຄົນທີ່ວາງແຜນການສອນຣະຍະສັ້ນໄວ້ບ້າງ ຊຶ່ງໄດ້ເປັນປໂຍດຊ່ວຍໃຫ້ການສອນນັ້ນບັນລຸເຖິງເປົ້າໝາຍ ດີກວ່າຜູ້ທີ່ບໍ່ໄດ້ວາງແຜນການສອນເສັຍເລີຍ ຢ່າງໃດກໍຕາມຜູ້ສອນທີ່ດີ ມັກຈະຮູ້ຈັກການວາງແຜນການໄວ້ລ່ວງໜ້າ ແຜນການທີ່ວາງໄວ້ນີ້ ອາດຈະເປັນແຜນຜັງຢ່າງຍໍ້ ໆ ພໍທີ່ຈະຊີ້ເຖິງຈຸດໝາຍປາຍທາງໄດ້ວ່າ ຫລັງຈາກທີ່ເຮົາ ທຳການສອນ ໃນລະຍະເວລານຶ່ງແລ້ວ ເຮົາຢາກໃຫ້ເກີດຜົນສຳເຣັດໃນດ້ານໃດແດ່? ດັ່ງຕົວຢ່າງຕໍ່ໄປນີ້

☩ **ສອນສະມາຊິກທີ່ຕ້ອງການຮັບບັບຕິສມາເປັນເວລາ 3 ເທື່ອໃນເຣື່ອງດັ່ງນີ້**

1. ຄວາມຣອດພົ້ນ 1 ຊົ່ວໂມງ
2. ການເປັນສະມາຊິກ 1 ຊົ່ວໂມງ
3. ກ່ຽວກັບເຣື່ອງການຖວາຍ 1 ຊົ່ວໂມງ

ຫລັງຈາກສອນໄດ້ 3 ເທື່ອແລ້ວ ຜູ້ຮັບບັບຕິສມາໃໝ່ ຈະມີຄວາມໝັ້ນໃຈ ໃນເຣື່ອງຄວາມຣອດພົ້ນຂອງຕົນ ຮູ້ຈັກວ່າຕົວເອງເປັນສະມາຊິກ ເປັນສ່ວນນຶ່ງໃນຄຣິສຈັກ ແລະຮູ້ຈັກຮັບຜິດຊອບຕໍ່ພຣະເຈົ້າໃນເຣື່ອງການຖວາຍ

ທີ່ກ່າວມາທາງເທິງ ເປັນພຽງຕົວຢ່າງເລັກນ້ອຍ ທີ່ແນະນຳໃຫ້ຄຣູຜູ້ສອນຕ້ອງມີແຜນການສອນ ໂດຍທີ່ແຜນການສອນນີ້ ອາດຈະວາງໄວ້ພຽງສັ້ນ ໆ ທີ່ສຸດ ຄື ສອນພຽງເທື່ອດຽວ ເຄິ່ງຊົ່ວໂມງ ນຶ່ງຊົ່ວໂມງ ຫລືອາດຈະສອນສອງຊົ່ວໂມງ ຫລືສາມຊົ່ວໂມງ ກໍອາດເປັນໄດ້ ຫລືອາດຈະເປັນແຜນການສອນ ລະຍະຍາວ 3 ເດືອນ 6 ເດືອນ 1 ປີ ການກຳນົດເປົ້າໝາຍ ເພື່ອໃຫ້ແຜນການສອນເກີດຜົນສຳເຣັດ ກໍຈະແຕກຕ່າງກັນອອກໄປ ຊຶ່ງຈະໄດ້ໃຈແຍກລາຍລະອຽດຕໍ່ໄປ

**ການຕັ້ງເປົ້າໝາຍ**

ເປົ້າໝາຍຂອງການສອນໂຄງການ 3 ເດືອນ (ອາດຈະເປັນ 6 ເດືອນຫລື 1 ປີ) ເຮົາກຳລັງມີຄວາມມຸ່ງໝາຍໃໝ່ໃຫ້ຜູ້ຮຽນ ໄດ້ປະສົບຜົລສຳເຣັດ ໃນການຮຽນ ແລະເກີດຄວາມເຂົ້າໃຈໃໝ່ໃນດ້ານໃດດ້ານນຶ່ງ ພຽງ 1 ຫລື 2 ດ້ານກໍພຽງພໍແລ້ວ ຫາກວ່າເຮົາຕັ້ງເປົ້າໝາຍຫລາຍອັນ ຈະເຮັດໃຫ້ເກີດຄວາມສັບສົນປົນເປ ແລະຜູ້ຮຽນອາດບໍ່ເຂົ້າໃຈແຈ້ງ ບໍ່ສາມາດປະຕິບັດໄດ້ໝົດ

ເປົ້າໝາຍການສອນ ທີ່ໄດ້ສະເໜີໄວ້ດັ່ງຕົວຢ່າງເບື້ອງຕົ້ນ ເປັນພຽງການແນະນຳທາງຊ່ວຍ ໃຫ້ເກີດແນວຄວາມຄິດໃໝ່ ໆ ທີ່ຄຣູຜູ້ສອນຕ້ອງມີເປົ້າໝາຍ ຕ້ອງມີຄວາມແຈ່ມແຈ້ງຢູ່ໃນຕົວຂອງຜູ້ສອນເສັຽກ່ອນ ຜູ້ທີ່ເປັນຄຣູຕ້ອງມີຄວາມເຂົ້າໃຈຢ່າງເລິກຊຶ້ງ ເຖິງຂໍ້ພຣະຄັມພີ ຫລືວັກຕອນຂອງພຣະຄັມພີ ທີ່ຕົນເອງຈະທຳການສອນ ພ້ອມກັນນັ້ນຕ້ອງຮູ້ຈັກຈັບຈຸດເດັ່ນ ຫລືຈຸດສຳຄັນຂອງຂໍ້ພຣະຄັມພີໃນຕອນນັ້ນ ໆ ທີ່ສາມາດນຳມາສອນ ໂດຍຮູ້ຈັກຕັ້ງເປົ້າໝາຍອອກມາເປັນຂໍ້ຄວາມທີ່ສາມາດເຂົ້າໃຈໄດ້ແຈ້ງ ໂດຍບໍ່ຈຳເປັນທີ່ຈະຕ້ອງບອກເຖິງເປົ້າໝາຍເຫລົ່ານັ້ນແກ່ຜູ້ຮຽນ ແຕ່ວ່າຄຣູຜູ້ສອນ ຕ້ອງຮູ້ຢູ່ໃນໃຈວ່າ ຈຸດປະສົງຫລືເປົ້າໝາຍທີ່ຕົນຈະສອນນັ້ນແມ່ນຫຍັງ? ຫາກວ່າຕົວຄຣູເອງຍັງບໍ່ທັນຮູ້ວ່າ ເປົ້າໝາຍຫລືຂໍ້ຄວາມທີ່ສອນນັ້ນຈະນຳຜູ້ຮຽນໄປເຖິງໃສແລ້ວ ການສອນນັ້ນກໍຈະຜ່ານພົ້ນໄປ ຄືກັບລົມ ທີ່ຈັບຕ້ອງບໍ່ໄດ້

**ການສອນຢ່າງມີເປົ້າໝາຍຕາມທີ່ເຮົາໄດ້ຕັ້ງໄວ້** ເປົ້າໝາຍການສອນນັ້ນ ສາມາດຕັ້ງອອກມາເປັນຂໍ້ຄວາມໄດ້ ເປັນຮ້ອຍ ເປັນພັນປະການ ແຕ່ທີ່ສຳຄັນທີ່ສຸດນັ້ນ ເຮົາຕ້ອງກຳໜົດແຕ່ເປົ້າໝາຍດຽວໃນການສອນເທື່ອນຶ່ງ ເພື່ອໃຫ້ການສອນຂອງເຮົານັ້ນເກີດຜົນ ແລະສາມາດນຳຜູ້ຮຽນໃຫ້ເກີດຄວາມເຂົ້າໃຈ ຫລືເກີດປະຕິກິຣິຍາປ່ຽນແປງ ຫລືມີການຕອບສະນອງຕໍ່ການສອນຢ່າງມີເປົ້າໝາຍຂອງເຮົາ ຢ່າລືມວ່າຈຸດປະສົງທີ່ເຮົາຕັ້ງເປົ້າໝາຍ ກໍເພື່ອໃຫ້ ເຮົາສາມາດດຳເນີນການສອນອອກໄປຢ່າງມີຣະບຽບຮຽບຮ້ອຍ ເປັນເຣື່ອງເປັນລາວ ແລະດຳເນີນໄປໂດຍບໍ່ວົກວົນ ແລະບໍ່ສັບສົນ ໂດຍນຳຜູ້ຮຽນໃຫ້ເກີດຄວາມເຂົ້າໃຈ ຊຶ່ງພໍຈະກ່າວໂດຍຍໍ້ໃນບົດຮຽນນີ້ເຖິງການສອນຢ່າງມີເປົ້າໝາຍ 5 ປະການ

1. **ຕັ້ງເປົ້າໝາຍເພື່ອສອນກ່ຽວກັບຄວາມຮູ້** ອັນເປັນການສອນ ທີ່ນຳພາໃຫ້ຜູ້ຮຽນຮູ້ຈັກເຖິງເຣື່ອງລາວ ຂໍ້ເທັດຈິງ ຫລືພື້ນຖານຄວາມຮູ້ ເບື້ອງຫລັງພຣະຄັມພີ ຫລືສະພາບຊີວິດຄວາມເປັນຢູ່ ໃນສະໄໝພຣະຄັມພີເປັນຕົ້ນ

2. **ຕັ້ງເປົ້າໝາຍເພື່ອສອນໃຫ້ເກີດການປະທັບໃຈ** ໂດຽສອນທັດສະນະຄະຕິ ຄວາມຄິດເຫັນການປຽບທຽບເນື້ອນັຍຂອງພຣະຄັມພີ ໂດຍເກີດຂໍ້ຄິດແລະຄວາມປະທັບໃຈຕໍ່ຄະຕິທັມຄຳສອນຂອງພຣະຄັມພີ ແລ້ວເຮົາສາມາດນຳເອົາມາປຽບທຽບກັບຄວາມຄິດຂອງເຮົາໃນປັດຈຸບັນ ເພື່ອໃຫ້ເກີດ ຄວາມຮູ້ສຶກປະທັບໃຈ ຊຶ້ງໃຈ ເກີດການຍອມຮັບຄວາມຈິງ ເຫັນນຳກັບຂໍ້ຄວາມທີ່ໄດ້ຕັກເຕືອນສັ່ງສອນ

3. **ຕັ້ງເປົ້າໝາຍເພື່ອສອນໃຫ້ເກີດການຈື່ຈຳ** ໂດຽມີຂໍ້ພຣະຄັມພີ ມີການທ່ອງຈົດຈຳ ຂໍ້ພຣະຄັມພີໄວ້ໃນໃຈ ສາມາດບອກເລົ່າຂໍ້ຄວາມໄດ້ກັບປາກໃນພາຍຫລັງ ຫລືການຈື່ຈຳເຣື່ອງລາວໃນພຣະຄັມພີ ຊື່ຂອງບຸກຄົນຕ່າງ ໆ ຢູ່ໃນພຣະຄັມພີ ຊື່ເມືອງ ຊື່ແຂວງ ຊື່ສະຖານທີ່ ຫລືບ່ອນຕ່າງ ໆ ທີ່ມີເຫດການສຳຄັນ ໆ ເກີດຂຶ້ນໃນປວັດສາດເປັນຕົ້ນ

4. **ຕັ້ງເປົ້າໝາຍເພື່ອສອນໃຫ້ຜູ້ຮຽນເກີດການຕັດສິນໃຈ** ມີກິຣິຍາອາການ ມີການຕອບສະນອງຕໍ່ຄຳສອນ ໂດຽເກີດການຕັດສິນໃຈປ່ຽນແປງຊີວິດ ປ່ຽນແປງແນວທາງທີ່ເຄີຍປະພຶດປະຕິບັດມາກ່ອນ ມີການຕັດສິນໃຈໃໝ່ ທີ່ຈະປະຖິ້ມ ເສັ້ນທາງເດີມ ແລະ ຍິນດີເດີນຕາມ ເສັ້ນທາງໃໝ່ ຫລືອາດຈະເກີດການ ສຳນຶກເຖິງຄວາມດີ ຄວາມບໍ່ດີ ຄວາມຜິດ ແລະຄວາມຖືກຕ້ອງ ແລ້ວເກີດກຳລັງໃຈ ເກີດການຕັດສິນໃຈ ທີ່ຈະດຳເນີນຊີວິດໃນຫົນທາງໃໝ່ ທີ່ຖືກຕ້ອງຕາມນ້ຳພຣະທັຍພຣະເຈົ້າ

5. **ຕັ້ງເປົ້າໝາຍໃຫ້ຜູ້ຮຽນໄດ້ຮຽນເອົາແບບຢ່າງ** ເປົ້າໝາຍແນວນີ້ສ່ວນຫລາຍເປັນເຣື່ອງການຝຶກອົບຮົມໃນແນວປະຕິບັດ ເຊັ່ນ ໃຫ້ຜູ້ຮຽນຮູ້ຈັກການເວົ້າຕໍ່ທີ່ປະຊູມ ຮູ້ຈັກການວາງຕົວຕໍ່ໜ້າສະມາຊິກ ຮູ້ຈັກຫລັກການຫລືວິທີການອອກປຽມຢາມ ຮູ້ຈັກການເປີດຫລືປິດການປະຊູມໂດຍການອະທິຖານ ຫລືຮູ້ຈັກການຖວາຍຊັພວ່າຕ້ອງອະທິຖານຂໍ້ຄວາມໃດແດ່ ຫລືການຝຶກອົບຮົມການເປັນນາຍຄຣູສອນ ຜູ້ຮຽນຕ້ອງຮູ້ຈັກການສັງເກດ ແລະເອົາແບບຢ່າງທີ່ດີທີ່ຜູ້ສອນໄດ້ສະແດງໄວ້ ແລ້ວນຳໄປປັບປຸງຕົວເອງ ໃຫ້ຮູ້ຈັກສອນຜູ້ອື່ນຕໍ່ໄປ ຕົວຢ່າງຂອງການຮຽນຮູ້ຈັກການຮ້ອງເພັງ ເຮົາຕ້ອງຟັງຈາກຜູ້ອື່ນ ແລ້ວຮຽນເອົາສຽງຕາມແບບຢ່າງວ່າ ຕ້ອງອອກສຽງໃຫ້ເກີດຄວາມມ່ວນໜ້າຟັງ ແລະຖືກຕ້ອງຕາມຣະດັບສຽງ ຖືກຕ້ອງຕາມທຳນອງ ເປັນຕົ້ນ

ທັງ 5 ແບບທີ່ກ່າວມາຂ້າງຕົ້ນນີ້ ແຕ່ລະແບບສາມາດແຕກກະຈາຍ ອອກເປັນເປົ້າໝາຍພຽງໜ່ວຍຍ່ອຍ ໆ ອອກໄປອີກ ຊຶ່ງແຕ່ລະໜ່ວຍຫລືແຕ່ລະເປົ້າໝາຍຈະມີຄວາມລະອຽດ ສະເພາະເຈາະຈົງ ເພື່ອການສອນຂອງເຮົາຈະໄດ້ຊັດແຈ້ງ ເດັ່ນຊັດ ແຕ່ຈົ່ງຈຳໄວ້ເປັນຫລັກສຳຄັນວ່າ ບົດຮຽນບົດນຶ່ງບໍ່ຕ້ອງມີຫລາຍເປົ້າໝາຍ ແຕ່ຕ້ອງມີເປົ້າໝາຍດຽວ ເປົ້າໝາຍອັນດຽວກັນນັ້ນ ສາມາດນຳໄປສອນຊ້ຳໄດ້ ໃນຫລາຍ ໆ ບົດຮຽນ ຫລືຫລາຍ ໆ ຕອນ

# ຕົວຢ່າງການຕັ້ງເປົ້າຫມາຍ

**ເປົ້າຫມາຍເພື່ອສອນສະມາຊິກໂດຍທົ່ວໄປ**

- **ໃຫ້ສະມາຊິກໃນຄຣິສຈັກເກີດຄວາມຮັກແພງສາມັກຄີກັນ ໃນເຣື່ອງ**
  - * ການປາກ ການໃຊ້ຄຳເວົ້າ ການຖ່ອມຕົວ
  - * ການຕ້ອນຮັບເບິ່ງແຍງຜູ້ມາໃຫມ່
  - * ການນຳອາຫານມາຊຸມນຸມກັນ ການແຈກຍາຍອາຫານ
  - * ການຕົງຕໍ່ເວລາ ການບໍ່ຜິດກຳຫນົດຫມາຍ ຄຳຫມັ້ນສັນຍາ
  - * ການແບ່ງຫນ້າທີ່ໃນເຣື່ອງການຈັດຕຽມສະຖານທີ່ ການທຳຄວາມສະອາດ
  - * ການຢ້ຽມຢາມຜູ້ເກີດໃຫມ່ ຜູ້ຂຶ້ນບ້ານໃຫມ່ ຜູ້ຍ້າຍເຮືອນ ຜູ້ເຈັບເປັນ ຄົນຕາຍ

- **ໃຫ້ສະມາຊິກຮູ້ຈັກການຖວາຍ**
  - * ການຖວາຍສິບລົດ
  - * ການຖວາຍພິເສດເພື່ອວຽກການສະເພາະກິຈ
  - * ການຖວາຍເພື່ອຊ່ວຍເຫລືອຜູ້ທີ່ຂັດສົນ ການແຈກທານ ການບົວລະບັດ
  - * ການຖວາຍເວລາ ເພື່ອຮັບໃຊ້ ຕົວຢ່າງ ເປັນຜູ້ສອນໂຮງຮຽນວັນອາທິດ ເປັນຜູ້ຢ້ຽມຢາມ ເປັນຜູ້ເບິ່ງແຍງຮັກສາຄວາມສະອາດ ເປັນຜູ້ຈັດຕຽມບ່ອນປະຊຸມ ເປັນຜູ້ເຮັດເຣື່ອງການເງິນ ເປັນຜູ້ຈັດຕຽມເຣື່ອງເຄື່ອງຄົວ ແລະອື່ນ ໆ

- **ໃຫ້ສະມາຊິກດູຫມັ່ນສຶກສາພຣະຄຳຂອງພຣະເຈົ້າ**
  - * ຟື້ນຟູໃຈໃຫ້ເກີດກຸ່ມສຶກສາພຣະຄັມພີ
  - * ຟື້ນຟູໃຈໃຫ້ເກີດການອະທິຖານໄຫວ້ວອນ
  - * ເຣື່ອງການຖືສິລອົດອາຫານ
  - * ຮຽນເຣື່ອງພຣະວິນຍານບໍຣິສຸດ
  - * ຮຽນພື້ນຖານຄວາມຮູ້ຄວາມເຂົ້າໃຈກ່ຽວກັບພຣະຄັມພີພາກພັນທະສັນຍາເດີມແລະໃຫມ່
  - * ຮຽນພຣະທັມມາຣະໂກຕລອດປີ້ມ (ສອນທີ່ລະປື້ມໃນແຕ່ລະປີ ຫລືທຸກເດືອນ)
  - * ສອນໃຫ້ຮູ້ຈັກອ່ານພຣະຄັມພີທຸກ ໆ ມື້
  - * ສອນໃຫ້ສູ້ຈັກທ່ອງຈື່ຈຳຊື່ຂອງພຣະຄັມພີທຸກເປື້ມ ແລະສາມາດເລົ່າໄດ້ກັບປາກ

- **ສອນສະມາຊິກໃຫ້ມີຊີວິດຄຣິສຕຽນທີ່ດີ**
  - * ຊີວິດຄຣິສຕຽນທີ່ບໍຣິສຸດໃນຕົວເອງ
  - * ຊີວິດຄຣິສຕຽນທີ່ບໍຣິສຸດໃນຄອບຄົວ
  - * ຊີວິດຄຣິສຕຽນທີ່ບໍຣິສຸດຕໍ່ເພື່ອນບ້ານ
  - * ຊີວິດຄຣິສຕຽນ ທີ່ສັດຊື່ຕໍ່ນາຍງານ
  - * ຄວາມສັດຊື່ຕໍ່ກົດຫມາຍ ການເສັຍພາສີຢ່າງຖືກຕ້ອງ
  - * ການເບິ່ງແຍງຄອບຄົວ ໃຫ້ຂັບຕາມພຣະຄຳຂອງພຣະເຈົ້າ

* ການລ້ຽງລູກຕາມຫລັກຄຳສອນພຣະຄັມພີ
* ຄວາມເອົາໃຈໃສ່ຕໍ່ພັລຍາ ຫລືຕໍ່ສາມີ ຕາມຫລັກຄຳສອນ
* ການໂອ້ລົມ ການເວົ້າຈາຕໍ່ລູກເມັຍ (ຜົວ)

**ສອນສະມາຊິກໃຫ້ຮູ້ຈັກການຮັບໃຊ້**

* ຝຶກແອບຊາວໜຸ່ມໃຫ້ຮູ້ຈັກການຖວາຍເພງນມັສການພຣະເຈົ້າ
* ຝຶກແອບຊາວໜຸ່ມໃຫ້ຮູ້ຈັກສອນພຣະຄັມພີແກ່ເດັກນ້ອຍ
* ຝຶກແອບແມ່ເຮືອນໃຫ້ຮູ້ຈັກຈັດການປະຊຸມແມ່ເຮືອນເປັນປະຈຳໃນຄຣິສຈັກ
* ຝຶກແອບສະມາຊິກໃຫ້ອອກຢ້ຽມຢາມເພື່ອນບ້ານ ແລະນຳເຂົາມາເຂົ້າຮ່ວມຄຣິສຈັກ
* ຝຶກແອບສະມາຊິກໃຫ້ຮູ້ຈັກນຳປະຊຸມ ນຳນມັສການ
* ຝຶກແອບສະມາຊິກໃຫ້ສູ້ຈັກຣະບຽບການປະຊຸມນມັສການ
* ຝຶກແອບໃຫ້ຮູ້ຈັກແຈກຍາຍໃບປິວ ເປັ້ມພຣະຄຳຂອງພຣະເຈົ້າ
* ຝຶກແອບສະມາຊິກໃຫ້ຮູ້ຈັກຮັບຟັງປັນຫາຂອງຜູ້ອື່ນ
* ຝຶກແອບສະມາຊິກໃຫ້ເປັນພຍານໃນທີ່ປະຊຸມ
* ຝຶກແອບສະມາຊິກໃນການເປັນຄຣູສອນພຣະຄັມພີ

**ການສອນສະມາຊິກໃໝ່**

* ສອນເຣື່ອງຄວາມຮັກຂອງພຣະເຈົ້າ
* ສອນເຣື່ອງຄວາມພົ້ນ ແລະການຕາຍໄຖ່ບາບຂອງພຣະເຢຊູຄຣິສ
* ສອນເຣື່ອງຄວາມຣອດພົ້ນໂດຍຄວາມເຊື່ອ
* ສອນເຣື່ອງການກັບໃຈໃໝ່ (ຖິ້ມໃຈເກົ່າເອົາໃຈໃໝ່)
* ສອນເຣື່ອງການມີຊີວິດຄຣິສຕຽນ ທີ່ຂັບຕາມພຣະເຢຊູຄຣິສ
* ສອນເຣື່ອງການປົກປັກຮັກສາຂອງພຣະວິນຍານບໍຣິສຸດ
* ສອນເຣື່ອງຄວາມໝາຍຂອງການຮັບບັພຕິສະມາ
* ສອນເຣື່ອງການເຂົ້າເປັນສະມາຊິກໃໝ່
* ສອນເຣື່ອງການຖວາຍຊັພ ການຖວາຍເວລາຮັບໃຊ້ຄຣິສຈັກ
* ສອນໃຫ້ຮູ້ຈັກພຣະຄັມພີ ທັງພາກພັນທະສັນຍາໃໝ່ແລະເກົ່າ ໂດຍຍໍ່

**ສອນສະມາຊິກໃຫ້ເຕີບໂຕ ແລະຂຍາຍຄຣິສຈັກ**

* ການຮູ້ຈັກຈັດຕຽມງົບປະມານດ້ານການເງິນ
* ການຮູ້ຈັກຈັດຊື້ອຸປກອນ ໜັງສືຄຣິສຕຽນ ສິ່ງພິມ ເຈັ້ຽ ສໍ

**ການວາງແຜນປຸກສ້າງຄຣິສຈັກໃໝ່**

* ການຕຽມຊື້ທີ່ດິນ ເພື່ອປູກສ້າງຄຣິສຈັກ
* ການຊື້ຣົດເພື່ອໃຊ້ໃນວຽກຮັບໃຊ້ບໍຣິການສະມາຊິກ
* ການລ້ຽງດູສິດຍາພິບາລ

* ການຮູ້ຈັກໄຫວ້ວອນ ອະທິຖານເພື່ອຜູ້ນຳ
* ການເສັຍສລະ ການຖ່ອມໃຈໃນການເປັນຜູ້ນຳ
* ການເກີດຄຣິສຈັກລູກ ການຂຍາຍເປີດບ່ອນກອງປະຊຸມໃຫມ່

**ສອນສະມາຊິກໃຫ້ມີຄວາມຫວັງ ແລະຮູ້ຈັກລໍຄອຍ**

* ການຮູ້ຈັກສະແວງຫານ້ຳພຣະທັຍຂອງພຣະເຈົ້າ
* ການໄຫວ້ວອນອະທິຖານບໍ່ຂາດ
* ການຈັດຕຽມເປົ້າຫມາຍ ແລະການວາງແຜນການເພື່ອອານາຄົດ
* ການສເນີຄວາມຄິດເຫັນເພື່ອອານາຄົດ ຫລືເພື່ອປັບປຸງແກ້ໄຂ
* ການມີນ້ຳໃຈກວ້າງວາງ ເປີດໂອກາດໃຫ້ຜູ້ອື່ນໄດ້ຮັບໃຊ້
* ການສົ່ງເສີມສະມາຊິກໃຫ້ເຂົ້າຮຽນເປັນຜູ້ຮັບໃຊ້
* ການໄຫວ້ວອນເພື່ອຈະໄດ້ສິດຍາພິບານໃຫມ່

**ຕົວຢ່າງລາຍການສອນ 6 ເດືອນ**

| ສອນເທື່ອ | ຫົວຂໍ້ແລະເປົ້າຫມາຍ | ຂໍ້ພຣະທັມ |
|---|---|---|
| 1. | ພຣະຄຳຂອງພຣະເຈົ້າມີແຮງດົນໃຈຊ່ວຍແປງຊີວິດເຮົາໃຫ້ດີຂຶ້ນ | 2 ຕທ 3:14-17<br>2 ປຕ 1:19-21 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ 2 ຕທ 3:16 | |
| 2. | ພຣະຄຳຂອງພຣະເຈົ້າມີຣິດເດດໃຫ້ຊີວິດເຮົາພົບຄວາມສຳເຣັດ ຕາມນ້ຳພຣະທັຍຂອງພຣະເຈົ້າ | ອຊຢ 55:10-11<br>ຮຣ 4:12-13<br>1 ປຕ 1:22-25 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ 1 ປຕ 1:24-25 | |
| 3. | ພຣະຄຳຂອງພຣະເຈົ້າມີໄວ້ສຳລັບເຮົາ ເຣັດໃຫ້ເຮົາມີຊີວິດໃຫມ່ | ພສສ 19:7-14<br>ພສສ 119:1-16 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ພສສ 19:7-8 | |
| 4. | ພຣະຄຳຂອງພຣະເຈົ້າຊ່ວຍຜູ້ທີ່ຫລົງເສັຍໄປໃຫ້ຫັນກັບຫາພຣະເຈົ້າ (ຂໍ້ສຳຄັນ ກຈ 8:28-30, 34-38) | ກຈ 8:26-40 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ກຈ 8:35 | |
| 5. | ຈົ່ງຮັກພຣະເຈົ້າດ້ວຍສຸດໃຈ | ພບຍ 6:4-12<br>ພບຍ 6:16-17 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ 6:5 | |

| ສອນເທື່ອ | ຫົວຂໍ້ແລະເປົ້າໝາຍ | ຂໍ້ພຣະທັມ |
|---|---|---|
| 6. | ຈົ່ງເຊື່ອຟັງພຣະເຈົ້າ ແລະຮູ້ຈັກຂອບພຣະຄຸນພຣະອົງ | ພບຍ 7:12-14<br>ພບຍ 8:1-10 |
| | ຂໍ້ພຣະຄັມທ່ອງຂຶ້ນໃຈ ພບຍ 8:10 | |
| 7. | ຈົ່ງມີຄວາມໝັ້ນໃຈຢູ່ຝ່າຍພຣະເຈົ້າ | ຢຊວ 23:6-13<br>ຢຊວ 24:14-15 |
| | ຂໍ້ພຣະຄັມທ່ອງຂຶ້ນໃຈ ຢຊວ 24:15 (ຈົ່ງຕັດສິນໃຈ...) | |
| 8. | ຈົ່ງເປັນຄົນສັດຊື່ໃນພຣະເຈົ້າບໍ່ອອກຫ່າງນອກໃຈໄປຈາກພຣະເຈົ້າ | ພບຍ 3:1-5<br>1 ຊມອ 12:1-5<br>1 ຊມອ 12:20-25 |
| | ຂໍ້ພຣະຄັມທ່ອງຂຶ້ນໃຈ 1 ຊມອ 12:20 | |
| 9. | ຈົ່ງຮູ້ຈັກການຖວາຍແດ່ພຣະຜູ້ເປັນເຈົ້າ<br>ຂໍ້ພຣະຄັມທ່ອງຂຶ້ນໃຈ ພບຍ 26:10 | ພບຍ 26 ໝົດບົດ |
| 10. | ຈົ່ງເລືອກເອົາຊີວິດທີ່ມີແຕ່ພຣະພອນ<br>ຂໍ້ພຣະຄັມທ່ອງຂຶ້ນໃຈ ພບຍ 30:20 (ສະນັ້ນ...) | ພບຍ 30 ໝົດບົດ |
| 11. | ການມີຊັ້ນເໜືອຄວາມອຸກໃຈຂອງຕົນເອງ<br>(ຂໍ້ສຳຄັນ ມທ 6:25-34)<br>ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 6:33 | ມທ 6:19-34 |
| 12. | ຈົ່ງເຊື່ອແລະວາງໃຈໃນພຣະເຢຊູ<br>(ຂໍ້ສຳຄັນ ມທ 11:2, 6, 25-30)<br>ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 11:28 | ມທ 11:1-30 |
| 13. | ພຣະເຢຊູຊົງເປັນພຣະຄຣິສພຣະບຸດຂອງພຣະເຈົ້າ<br>(ຂໍ້ສຳຄັນ ມທ 16:16, 24-27)<br>ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 16:16 | ມທ 16:13-28 |
| 14. | ຢ່າເປັນເຫດໃຫ້ຜູ້ອື່ນຕ້ອງຫລົງຜິດ<br>(ຂໍ້ສຳຄັນ ມທ 6:6-9)<br>ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 18:6 | ມທ 18:1-14 |

| ສອນເທື່ອ | ຫົວຂໍ້ແລະເປົ້າໝາຍ | ຂໍ້ພຣະທັມ |
|---|---|---|
| 15. | ພຣະເຢຊູຮູ້ຕົວວ່າຖືກປອງຮ້າຍ | ມທ 26:1-56 |
| | (ຂໍ້ສຳຄັນ ມທ 26:1-2, 17-19, 26-32) | |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 26:28 | |
| 16. | ຜູ້ທີ່ປະຕິເສດພຣະເຢຊູ | ມທ 26:57-75 |
| | (ຂໍ້ສຳຄັນ 26:69-75) | |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 26:75 | |
| 17. | ພຣະເຢຊູຊົງສິ້ນພຣະຊົນເທິງໄມ້ກາງແຂນ | ມທ 27:1-56 |
| | (ຂໍ້ສຳຄັນ 27:27-44, 45-56) | |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 27:54 | |
| 18. | ພຣະເຢຊູຊົງເປັນຂຶ້ນຈາກຕາຍ | ມທ 27:57-28:20 |
| | (ຂໍ້ສຳຄັນ ມທ 28:1-10) | |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 28:19-20 | |
| 19. | ພຣະເຢຊູຊົງເປັນຜູ້ກົກແລະຜູ້ປາຍ | ພນ 1:1-20 |
| | (ຂໍ້ສຳຄັນ ພນ 1:9-19) | |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ພນ 1:3 | |
| 20. | ການເປັນຂຶ້ນຈາກຕາຍຂອງຜູ້ເຊື່ອ | 1 ທຊ 4:13-18 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ພນ 1:17ຂ-18 | |
| 21. | ຈົ່ງຖ່ອມໃຈລົງລ້ຽງລູກແກະຂອງພຣະເຈົ້າ | 1 ປຕ 5:1-11 |
| | (ຂໍ້ສຳຄັນ 1 ປຕ 5:1-5) | |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ 1 ປຕ 5:5ຂ | |
| 22. | ຈົ່ງຕັ້ງຕົ້ນຊີວິດໃຫມ່ແລະມີຊັຍ | ພນ 3:7-22 |
| | (ຂໍ້ສຳຄັນ ພນ 3:8-12, 3:15-21) | 2 ກທ 2:14-17 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ພນ 3:20-21 | |
| 23. | ຍອມທົນທຸກເພື່ອພຣະຄຣິສ | ມກ 13:3-13 |
| | (ຂໍ້ສຳຄັນ 3:9-13) | ພນ 2:8-11 |
| | (ຂໍ້ສຳຄັນ 1 ປຕ 4:12-19) | 1 ປຕ 4:12-19 |
| | ✝ ຂໍ້ພຣະຄັມທ່ອງຂຶ້ນໃຈ ມກ 13:13 | |

| ສອນເທື່ອ | ຫົວຂໍ້ແລະເປົ້າໝາຍ | ຂໍ້ພຣະທັມ |
|---|---|---|
| 24. | ພຣະເຢຊູຈະສະເດັດມາໂດຍໄວ | ພນ 22:6-21 |
| | (ຂໍ້ສໍາຄັນ ພນ 22:10-21) | ມທ 24:29-31 |
| | (ຂໍ້ສໍາຄັນ ມທ 24:29-31) | 1 ທຊ 5:1-11 |
| | ຂໍ້ພຣະຄັມທ່ອງຂຶ້ນໃຈ ມທ 24:13 | |
| 25. | ຈົ່ງດໍາເນີນຊີວິດເພື່ອເປັນພຍານທີ່ດີຂອງພຣະຄຣິສ | 1 ປຕ 3:8-22 |
| | (ຂໍ້ສໍາຄັນ 1 ປຕ 3:8-18) | 1 ປຕ 3:8-22 |
| | (ຂໍ້ສໍາຄັນ 1 ປຕ 4:7-11) | 1 ປຕ 4:7-11 |
| | ຂໍ້ພຣະຄັມທ່ອງຂຶ້ນໃຈ 1 ປຕ 3:8-9 | |
| 26. | ຈົ່ງດໍາເນີນຊີວິດໂດຍເພິ່ງການນໍາພາຂອງພຣະວິນຍານບໍຣິສຸດ | 1 ກທ 2:1-16 |
| | (ຂໍ້ສໍາຄັນ 1 ກທ 2:13-16) | |
| | ຂໍ້ພຣະຄັມທ່ອງຂຶ້ນໃຈ 1 ກທ 2:14 | |

ຂໍໃຫ້ນັກສຶກສານໍາເອົາຫົວຂໍ້ ແລະເປົ້າໝາຍເຫລົ່ານີ້ໄປສອນລອງເບິ່ງ ຂໍພຣະເຈົ້າຊົງອວຍພຣະພອນການສອນຂອງທ່ານໃຫ້ເກີດຜົນຖວາຍກຽດແດ່ພຣະອົງ ອາເມນ

ອະນິແພ່ນ
11-13-97
ຮັ 11/Oct 97

# ບົດທີ 9

## ການສອນ
## ການເລືອກວິທີສອນ

**ຄຳນຳ**

ໃນບົດຮຽນຕອນຕົ້ນຫລາຍບົດທີ່ເຮົາໄດ້ສຶກສາຜ່ານມານັ້ນ ໄດ້ມີການແນະນຳນັກສຶກສາໃຫ້ເຂົ້າໃຈເຖິງຄວາມສຳຄັນ ແລະການເປັນມາຂອງຄຣິສຕຽນສຶກສາ ໃນແຕ່ລະບົດໄດ້ສອນເຖິງເນື້ອຫາ ແລະຄວາມເຂົ້າໃຈກ່ຽວກັບການຈັດຕັ້ງຄຣິສຕຽນສຶກສາ ພ້ອມທັງຄຳແນະນຳຫລາຍປະການ ຈະເຫັນໄດ້ວ່າວຽກງານຄຣິສຕຽນສຶກສາມີລາຍລະອຽດກ່ຽວຂ້ອງກັບວຽກງານອື່ນ ໆ ທີ່ມີຢູ່ໃນຄຣິສຈັກ ຊຶ່ງຈຳເປັນຢ່າງຍິ່ງ ທີ່ຕ້ອງຈັດໃຫ້ມີການຮຽນການສອນໃນຄຣິສຈັກ ເພື່ອຈະໃຫ້ວຽກງານຫລາຍ ໆ ແນວດຳເນີນໄປໄດ້ສະດວກ ແລະຖືກຕ້ອງຕາມຈຸດປະສົງຂອງພຣະເຈົ້າ

ເຮົາຮູ້ແລ້ວວ່າ ການສຶກສາໃນຄຣິສຈັກມີຄວາມສຳຄັນຫລາຍ ແລະການຕຽມຕົວສະມາຊິກໃຫ້ມີຄວາມພ້ອມໃນດ້ານຄວາມເຊື່ອ ແລະສາມາດເຂົ້າໃຈຈຸດໝາຍຂອງພຣະເຈົ້ານັ້ນສຳຄັນທີ່ສຸດ ດັ່ງນັ້ນເຮົາຈຶ່ງຈຳເປັນຕ້ອງຮູ້ຈັກວິທີສອນ ອັນເປັນການນຳເອົາສິ່ງຕ່າງ ໆ ທີ່ເຮົາໄດ້ຕຽມໄວ້ແລ້ວນັ້ນອອກມາເປີດເຜີຍ ແນະນຳ ແລະສອນອອກມາ ໃນວິທີການສອນທີ່ຕ່າງ ໆ ກັນ ຫາກວ່າຜູ້ສອນຮູ້ຈັກຫລັກການທັງໝົດ ແລະໄດ້ຕຽມຕົວສອນມາຢ່າງດີ ໂດຍມີການຈັດຕຽມເນື້ອນັຍຂອງບົດຮຽນ ທີ່ຈະສອນຢ່າງມີເປົ້າໝາຍແລ້ວກໍຕາມ ແຕ່ບໍ່ໄດ້ມີໂອກາດສອນຈັກເທື່ອ ຫລືບໍ່ຮູ້ຈັກວິທີສອນ ການຕຽມຕົວທັງໝົດນັ້ນກໍເສັຽໄປລ້າ ໆ ໂດຍບໍ່ມີຄວາມໝາຍອັນໃດ ດັ່ງນັ້ນ **ການສອນ** ຈຶ່ງເປັນກິຣິຍາອາການ (Actions) ທີ່ສຳຄັນທີ່ສຸດທີ່ປາກົດອອກມາເພື່ອເປັນການສື່ສານເອົາຄວາມຈິງ ຫລືນຳເອົາເນື້ອນັຍທີ່ເຮົາຕຽມຕົວໄວ້ແລ້ວນັ້ນ ສົ່ງຕໍ່ໃຫ້ແກ່ຜູ້ຮຽນເພື່ອຜູ້ຮຽນຈະໄດ້ຮັບເອົາໄວ້ ແລະຈະໄດ້ນຳໄປສຶກສາພິຈາຣະນາເບິ່ງໃຫ້ເກີດຄວາມເຂົ້າໃຈ ຕາມເປົ້າໝາຍທີ່ຜູ້ສອນໄດ້ວາງໄວ້

**ການສອນ**

ການສອນມີຫລາຍແບບ ຫລາຍວິທີ ທີ່ຜູ້ສອນຕ້ອງຮູ້ຈັກ ແລະເລືອກເອົາວິທີການມາໃຊ້ໃຫ້ຖືກຕ້ອງເໝາະສົມກັບເນື້ອນັຍໃຈຄວາມທີ່ເຮົາຈະສອນ ຖ້າຜູ້ສອນເລືອກວິທີຫລືແບບທີ່ບໍ່ຖືກຕ້ອງ ບໍ່ເໝາະສົມກັບຜູ້ຮຽນແລະເຣື່ອງລາວທີ່ເຮົາຈະສອນແລ້ວ ຜູ້ຮຽນອາດເກີດຄວາມເຂົ້າໃຈຜິດ ເຮັດໃຫ້ເກີດຮຽນຮູ້ໃນສິ່ງທີ່ບໍ່ຖືກຕ້ອງ ບໍ່ເປັນໄປຕາມຄວາມມຸ່ງໝາຍຂອງຜູ້ສອນ ດັ່ງຕົວຢ່າງຕໍ່ໄປນີ້

## ຜູ້ສອນຕ້ອງການສອນໃຫ້ ຊາວຢູໂຣບ (ຜູ້ຮຽນ) ໄດ້ຮູ້ຈັກໝາກມ່ວງ (ໝາກໄມ້ເອເຊັຽ)



**ຜູ້ສອນທີ 1** ຕ້ອງການສອນໃຫ້ຮູ້ຈັກ ໝາກມ່ວງ ບັນລະຍາຍວ່າ ໝາກມ່ວງເປັນໜ່ວຍກົມມົນຍາວ ເວລາສຸກແລ້ວໜ່ວຍມີສີເຫລືອງ

**ຜູ້ຮຽນ:** ເມື່ອຟັງແລ້ວ ອາດນຶກອາດພາບໝາກກ້ວຍໄວ້ໃນສະໝອງ

ດັ່ງນັ້ນຜູ້ຮຽນ ກໍຍັງບໍ່ທັນຮູ້ເຫັນເທື່ອວ່າ ໝາກມ່ວງ ແມ່ນຫຍັງ? ມີລັກສະນະແນວໃດແທ້!

**ຜູ້ສອນທີ 2** ເອົາໜ່ວຍໝາກມ່ວງມາຖືໄວ້ຕໍ່ໜ້າຜູ້ຮຽນ ແລ້ວສົ່ງຜູ້ຮຽນ ໃຫ້ຈັບ ໃຫ້ເບິ່ງ ໄດ້ຮູ້ຈັກ ໜ່ວຍໝາກມ່ວງ

**ຜູ້ຮຽນ:** ໄດ້ເຂົ້າໃຈດີ ເມື່ອໄດ້ເຫັນ ໄດ້ຈັບຕ້ອງ ໜ່ວຍໝາກມ່ວງ





**ຜູ້ສອນທີ 3** ເອົາໜ່ວຍໝາກມ່ວງ ມາຖືໄວ້ຕໍ່ໜ້າຜູ້ຮຽນແລ້ວ ໃຫ້ຈັບບາຍ ແລ້ວໄດ້ປາດໜ່ວຍໝາກມ່ວງ ເອົາ ຕອນເນື້ອ ໝາກມ່ວງໃຫ້ຜູ້ຮຽນໄດ້ຊີມເບິ່ງ

**ຜູ້ຮຽນ:** ເຂົ້າໃຈແຈ້ງແລ້ວໃນບັດນີ້ ເພາະໄດ້ຮູ້ຈັກໝາກມ່ວງດ້ວຍປະສົບການຂອງຕົນເອງ ຜູ້ຮຽນພວກນີ້ ສາມາດນຳ ໄປສອນຜູ້ອື່ນຕໍ່ໄດ້

ຕົວຢ່າງທັງ 3 ນີ້ ທ່ານຈະເລືອກແນວການສອນແບບທີ 1 ແບບທີ 2 ຫລືແບບທີ 3 ວ່າອັນໃດດີກວ່າກັນຈາກຕົວຢ່າງຂ້າງເທິງ ຈະເຫັນໄດ້ວ່າການສື່ຄວາມໝາຍດ້ວຍຄວາມເວົ້າຢ່າງດຽວ ບາງເທື່ອຍັງບໍ່ທັນພຽງພໍ ຈໍາເປັນຕ້ອງມີຮູບພາບມາສະແດງ ຫລືນໍາເອົາຂອງຕົວຈິງມາໃຫ້ເບິ່ງ ໃຫ້ຜູ້ຮຽນໄດ້ເຫັນກັບຕາ ຫລືໄດ້ຈັບຕ້ອງ ຫລືດົມກິ່ນ ຫລືລອງຊີມເບິ່ງ ຜູ້ຮຽນຈຶ່ງຈະເກີດປະສົບການທີ່ແຈ່ມແຈ້ງໄດ້ ແລະຮຽນຮູ້ໃນສິ່ງທີ່ຖືກຕ້ອງ

ແຕ່ເຮົາຕ້ອງຍອມຮັບຄວາມຈິງວ່າ ໃນການສອນພຣະຄໍາຂອງພຣະເຈົ້ານັ້ນ ບາງເທື່ອມີຄວາມຫຍຸ້ງຍາກ ໃນການສະແຫວງຫາອຸປະກອນ ຫລືເກີດຄວາມຍາກລໍາບາກຫລາຍທີ່ຈະນໍາເອົາເຄື່ອງມືມາສະແດງໃຫ້ຜູ້ຮຽນໄດ້ເຫັນ ຫລືຈັບຕ້ອງສັມພັດ ດັ່ງຄໍາກ່າວຂອງທ່ານໂປໂລວ່າ

> "ດ້ວຍວ່າເຮົາບໍ່ໄດ້ຮັບຂ່າວປະເສີດນັ້ນຈາກມະນຸດ
> ຫລືບໍ່ມີມະນຸດຄົນໃດສອນໃຫ້ເຮົາ
> ແຕ່ເຮົາໄດ້ຮັບຂ່າວປະເສີດນັ້ນ
> ໂດຍພຣະເຢຊູຄຣິສຊົງສະແດງແກ່ເຮົາ"
> ຄາລາເຕັຽ 1:12

ປະສົບການໃນດ້ານຄວາມເຊື່ອຫລາຍຢ່າງເປັນສິ່ງທີ່ຍາກ ທີ່ຈະສອນໃຫ້ເຂົ້າໃຈດ້ວຍປະສາດສັມພັດທັງ 5 ໄດ້ ແຕ່ຢ່າງນ້ອຍທີ່ສຸດ ການມີອຸປະກອນຮູບພາບ ຈະສາມາດຊ່ວຍໃຫ້ການບັນຍາຍຂອງຜູ້ສອນ ເກີດຄວາມສົມບູນແຈ່ມແຈ້ງຫລາຍຂຶ້ນ ແລະຮຽນຮູ້ໃນສິ່ງທີ່ຖືກຕ້ອງ

ການຕັດສິນໃຈເລືອກແບບວິທີການສອນໃຫ້ເກີດຜົນຕາມເປົ້າໝາຍ ຍັງມີຄວາມສໍາຄັນທີ່ກ່ຽວຂ້ອງກັບ**ຕົວຂອງຜູ້ຮຽນ**ດ້ວຍ ຜູ້ຮຽນແຕ່ລະຄົນມີຄວາມແຕກຕ່າງກັນ (ດັ່ງຮູບພາບທີ່ທ່ານຈະໄດ້ສຶກສາໃນໜ້າຕໍ່ໄປ) ຊຶ່ງຜູ້ສອນຈໍາເປັນຕ້ອງຮູ້ຈັກຜູ້ຮຽນວ່າ (1) ຜູ້ຮຽນເປັນຄົນແນວໃດ (2) ຜູ້ຮຽນໄດ້ເຄີຍຮຽນຮູ້ແນວໃດມາແລ້ວ (3) ປະສົບການຊະນິດໃດດີທີ່ສຸດສໍາລັບຜູ້ຮຽນ

1. ຜູ້ຮຽນເປັນຄົນແນວໃດ ຜູ້ຮຽນແຕ່ລະຄົນເປັນຕົວຂອງຕົວເອງ ແຕ່ລະຄົນມີຄວາມແຕກຕ່າງກັນຈາກຄົນອື່ນ ໆ ທັງໃນດ້ານອາຍຸ ບຸຄລິກລັກສະນະ ຄວາມສາມາດໃນການຮຽນຮູ້ ແລະພອນສວັນຕ່າງຄົນຕ່າງມີຣົສນິຍົມ ພື້ນຖານແລະປະສົບການຕ່າງກັນໃນດ້ານຕ່າງ ໆ ກັນ ຄວາມແຕກຕ່າງປະຈໍາຕົວຂອງຜູ້ຮຽນມີຜົນຕໍ່ວິທີການຮຽນຂອງເຂົາ ຜູ້ສອນຈະຕ້ອງພິຈາຣະນາຂໍ້ແຕກຕ່າງເຫລົ່ານີ້ ເພື່ອຈະຮູ້ຈັກວ່າຈະສອນສິ່ງໃດ ແລະສອນຢ່າງໃດ ເພື່ອພັທນາຄວາມຊໍານານຂອງຜູ້ຮຽນ ຫລືປ່ຽນແປງທ່າທີຄວາມຄິດເຫັນ ຫລືເພີ່ມພູນຄວາມຮູ້ຂອງຜູ້ຮຽນ

2. ຜູ້ຮຽນໄດ້ເຄີຍຮຽນຮູ້ແນວໃດມາແລ້ວ ແລະເຄີຍມີປະສົບການຫຍັງ ປະສົບການສ່ວນຫລາຍເກີດຈາກປະສາທສັມຜັດ ປະສາທສັມຜັດມີ 5 ຊະນິດດ້ວຍກັນ ຄື (1) ເບິ່ງເຫັນ (2) ໄດ້ຍິນ (3) ໄດ້ກລິ່ນ (4) ຊີມຣົດ ແລະ (5) ແຕະຕ້ອງ ການຮຽນຮູ້ມັກເກີດຜົນດີຍິ່ງຂຶ້ນ ເມື່ອຜູ້ຮຽນໃຊ້ປະສາທສັມຜັດຫລາຍກວ່ານຶ່ງທາງໃນເວລາດຽວກັນ ຢ່າງໃດກໍຕາມ ຜູ້ສອນທີ່ດີຍ່ອມບໍ່ລືມວ່າ ບໍ່ແມ່ນປະສົບການທຸກຊະນິດສາມາດຮັບຮູ້ທາງປະສານສັມຜັດເທົ່ານັ້ນ (ຮູບພາບຕໍ່ໄປນີ້ເພື່ອເຕືອນໃຈຜູ້ສອນ)

## ຜູ້ຮຽນແຕ່ລະຄົນມີຄວາມແຕກຕ່າງກັນ ໃນ...

... ດ້ານອາຍຸ



... ດ້ານປະສົບການທີ່ຕ່າງກັນ



... ດ້ານບຸຄລິກລັກສະນະຕ່າງກັນ



... ດ້ານຣົສນິຍົມຕ່າງກັນ




... ຄວາມສາມາດດ້ານການຮຽນຕ່າງກັນ




... ດ້ານຄວາມສາມາດຕ່າງກັນ



ປະສົບການມີຫລາຍຊະນິດ  ບາງຊະນິດເປັນປະສົບການຊີວິດຈິງ ເຊັ່ນ ຄ້ອນທຸບນິ້ວມືເກີດຄວາມເຈັບແລ້ວຈຳໄວ້ ຫລື ການເດີນທາງທ່ອງທ່ຽວ ໄດ້ເຫັນພາບຄວາມງາມ ຄວາມຈະເຣີນ  ປະສົບການບາງຊະນິດເປັນປະສົບການແບບຈຳລອງຂຶ້ນ (ຮຽນແບບ) ຫລື ການສະແດງສົບທຽບກັບຊີວິດຈິງ  ເຊັ່ນການຫລິ້ນລະຄອນ ການສະແດງ ປະສົບການບາງຊະນິດເປັນປະສົບການທາງອ້ອມໂດຍໃຊ້ຄວາມເວົ້າຫລືສັນຍາລັກຕ່າງ ໆ ໃນການບັນລະຍາຍ ເຊັ່ນ ອ່ານໜັງສື ຫລືຟັງການບັນລະຍາຍປະສົບການທາງອ້ອມ  ບາງຢ່າງໃຊ້ການຮຽນແບບຈາກສະພາບຄວາມເປັນຈິງ ເຊັ່ນ ເບິ່ງໜັງ ຫລືເບິ່ງຮູບພາບ  ປະສົບການໂດຍຕົງມັກໃຊ້ປະສາທສັມຜັດຫລາຍທາງກວ່າປະສົບການທາງອ້ອມ

3. ປະສົບການຊະນິດໃດດີທີ່ສຸດສຳລັບຜູ້ຮຽນ ບອກບໍ່ໄດ້ວ່າປະສົບການຊະນິດໃດທີ່ດີທີ່ສຸດ ເພາະນັກຮຽນແຕ່ລະຄົນມີຄວາມແຕກຕ່າງກັນ  ແຕ່ນັກຮຽນຈະສາມາດຮຽນຮູ້ໄດ້ດີ ຈາກປະສົບການແບບທີ່ຕົນເອງເຄີຍປະສົບມາ  ເມື່ອຜູ້ຮຽນມີປະສົບການຊີວິດຈິງຫລາຍກໍຍິ່ງງ່າຍທີ່ຈະຮຽນຮູ້ຈາກປະສົບການທາງອ້ອມ ຜູ້ຮຽນທີ່ມັກຮຽນອາດມີປະສົບການຫລາຍຂຶ້ນ ເຮັດໃຫ້ຮຽນຮູ້ໄວ້ກວ່າຜູ້ບໍ່ມັກຮຽນ  ເຮົາຕ້ອງຍອມຮັບວ່າ ການຮຽນຮູ້ດ້ວຍປະສົບການໂດຍຕົງນັ້ນດີທີ່ສຸດ ແຕ່ສິ່ງທີ່ຈະຮຽນຮູ້ດ້ວຍປະສົບການໂດຍຕົງຕ້ອງໃຊ້ເວລາຫລາຍກວ່າ  ແລະເປັນໄປບໍ່ທີ່ຜູ້ຮຽນຈະຮຽນຮູ້ທຸກສິ່ງທຸກຢ່າງຈາກປະສົບການໂດຍຕົງ  ດັ່ງນັ້ນປະສົບການທາງອ້ອມຈະຊ່ວຍເຮົາໄດ້ເກີດການຮຽນຮູ້ໄດ້ຄືກັນ

**ການເລືອກຫາວິທີສອນ**

ການເລືອກຫາວິທີສອນທີ່ເຫມາະສົມກັບເນື້ອນັຍຂອງຄວາມຮູ້  ເປັນເຣື້ອງທີ່ມີຄວາມສຳຄັນຫລາຍເພາະເຫດວ່າວິທີການສອນ ທຽບຄືກັບ "ອຸປະກອນເຄື່ອງມືສື່ສານ" ທີ່ຈະນຳເອົາຄວາມຮູ້ ທີ່ເຮົາຈະສອນນັ້ນ ສົ່ງຕໍ່ຖ່າຍທອດໄປສູ່ຜູ້ຮຽນ  ຖ້າຈະປຽບກັບຊ່າງໄມ້ ທີ່ຕ້ອງການຕີຕະປູຕົວໃຫຍ່ໃສ່ໃນເນື້ອໄມ້ໜາທຶບ ຊ່າງໄມ້ນັ້ນຈຳເປັນຕ້ອງໃຊ້ຄ້ອນຕີ  ອັນເປັນເຄື່ອງມືສຳລັບຕີຕະປູໂດຽສະເພາະ ຊຶ່ງເປັນວິທີການທີ່ຖືກຕ້ອງທີ່ສຸດ ແລະເກີດຜົນໄວທີ່ສຸດ ຊ່າງໄມ້ອາດຈະບໍ່ມີອຸປະກອນດີ ເຂົາອາດຈະໃຊ້ຄ້ອນຕີເຫລັກອັນໃຫຍ່ ມາຕີຕະປູແທນຄ້ອນນ້ອຍນັ້ນ  ຊຶ່ງກໍອາດເຮັດໄດ້  ແຕ່ຄວາມສະດວກສະບາຍ ໃນການຕອກຕີຕະປູນັ້ນຈະແຕກຕ່າງກັນ  ຫລືວ່າຊ່າງໄມ້ທີ່ຕ້ອງການເລື່ອຍແຜ່ນໄມ້ອອກເປັນແຜ່ນນ້ອຍ ໆ ກໍຈຳເປັນຕ້ອງໃຊ້ອຸປະກອນແນວໃໝ່ ຄືເລື່ອຍ ມາເລື່ອຍໄມ້ອອກ ຫາກຈະເອົາຄ້ອນມາຕີໄມ້ແຍກອອກເປັນແຜ່ນກໍເປັນໄປໄດ້ຍາກ  ຜົນທີ່ໄດ້ຈະບໍ່ຖືກຕ້ອງສົມບູນ  ໃນທຳນອງດຽວກັນ ຜູ້ສອນຈຳເປັນຕ້ອງຮູ້ຈັກເລືອກວິທີສອນ ແລະຮູ້ຈັກໃຊ້ອຸປະກອນໃຫ້ເຫມາະສົມກັບເນື້ອນັຍຫລືເຣື້ອງລາວທີ່ເຮົາຈະສອນ  ຜູ້ສອນຈະຕ້ອງມີຄວາມເຂົ້າໃຈຄວາມຈິງໃນການເລືອກວິທີການສອນອີກວ່າ ວິທີການສອນນຶ່ງ ໆ ຈະເກີດຜົນໄດ້ນັ້ນຍັງຕ້ອງຂຶ້ນຢູ່ກັບເປົ້າຫມາຍ ຄວາມສາມາດຫລືຄວາມຊຳນານຂອງຜູ້ສອນ ຂນາດຂອງກຸ່ມ ເວລາແລະສຖານທີ່ ຄວາມພ້ອມດ້ານອຸປະກອນ ແລະຂຶ້ນຢູ່ກັບປັດຈັຍອື່ນ ໆ ຫລາຍປະການ  ວິທີການສອນທຸກຊະນິດມີຂໍ້ໄດ້ປຽບແລະຂໍ້ເສັຍປຽບ ດັ່ງນັ້ນຜູ້ສອນຈຳເປັນຕ້ອງພິຈາຣະນາວິທີການສອນແຕ່ລະວິທີທີ່ຕົນເລືອກໃຫ້ເຫມາະສົມ  ການສອນມີຫລາຍແບບວິທີໃຫ້ເລືອກ  ແຕ່ໃນບົດນີ້ເຮົາຈະແນະນຳວິທີທີ່ນິຍົມໃຊ້ກັນໃນກຸ່ມຂອງພວກເຮົາ  ຫວັງວ່ານັກສຶກສາຈະໄດ້ພິຈາຣະນາໃນວິທີການຕ່າງ ໆ ເພື່ອພັທນາຄວາມສາມາດຄວາມຊຳນານແລະປັບປຸງການສອນຂອງຕົນໃຫ້ມີປະສິດທິພາບດີຂຶ້ນ

**ວິທີການສອນແບບທີ່ນຶ່ງ ສອນໂດຍວິທີການບັນຍາຍ**

ການສອນແບບນີ້ເປັນແບບທີ່ນິຍົມໃຊ້ກັນແຜ່ຫລາຍທີ່ສຸດ ແລະໄດ້ໃຊ້ກັນມາດົນນານເປັນຮ້ອຍ ໆ ປີ ໂດຍສະເພາະໃນຍຸກແຮກ ໆ ທີ່ການສຶກສາຍັງບໍ່ທັນໄດ້ມີການພັທນາໃຊ້ເຄື່ອງມືອຸປະກອນສື່ສານທີ່ທັນສະໃຫມ ແລະເທຄໂນໂລຍີດ້ານການສອນຍັງບໍ່ໄດ້ຈະເຣີນຄືກັບສະໃຫມນີ້ ເຖິງວ່າໃນປັດຈຸບັນຈະມີອຸປະກອນການສອນຫລາຍແນວຫລາຍຮູບແບບ ແຕ່ກໍຍັງຕ້ອງເພິ່ງພາອາສັຍຄຳບັນຍາຍ ເພື່ອໃຫ້ເກີດການຮຽນຮູ້ແລະເກີດຄວາມເຂົ້າໃຈ ສາເຫດທີ່ຜູ້ສອນສ່ວນຫລາຍມັກໃຊ້ການບັນຍາຍ ເພາະເຫດວ່າສະດວກໃຈຜູ້ສອນ ເພາະເປັນຜູ້ເວົ້າແຕ່ຜູ້ດຽວ ຊຶ່ງສາມາດຄວບຄຸມເນື້ອຫາໃຫ້ເປັນໄປຕາມທີ່ຜູ້ສອນໄດ້ກະວາງໄວ້ແລ້ວ ແລະສາມາດສອນເນື້ອຫາໄດ້ຫລາຍແລະກ້າວຫນ້າໄດ້ໄວ ການສອນແບບນີ້ເປັນການສເນີຄວາມຮູ້ຈາກຜູ້ສອນຝ່າຍດຽວ ຜູ້ຮຽນຈົດບັນທຶກຄຳສອນໄວ້ພິຈາຣະນາຕໍ່ໄປ ການສອນແນວນີ້ໃຊ້ໃນການເທສນາ ເພາະເປັນການເວົ້າກັບຜູ້ຮຽນຫລືຜູ້ຟັງກຸ່ມໃຫຍ່ ວິທີການສອນນີ້ເຫມາະທີ່ຈະໃຊ້ໃນການເສີມບົດຮຽນ ຫລືເນັ້ນບົດຮຽນທີ່ຜູ້ຮຽນໄດ້ອ່ານຫລືສຶກສາໄປແລ້ວ ການບັນລະຍາຍຍັງໃຊ້ໄດ້ດີໃນການເລີ້ມຕົ້ນບົດຮຽນ ຫລືທົບທວນບົດຮຽນ ຊຶ່ງເປັນການກ່າວຍໍ້ ໆ ໃຫ້ໄດ້ໃຈຄວາມທີ່ສະຫລູບ



**ອຸປະກອນການສອນ**

ອາສັຍສຽງຂອງຜູ້ສອນເປັນຫລັກ ການຮູ້ຈັກເວົ້າ ການມີສຽງຂຶ້ນສູງຕ່ຳ ການມີຈັງຫວະວັກຕອນຂອງຜູ້ບັນຍາຍທີ່ດີ ຈະເຮັດໃຫ້ຜູ້ຟັງເກີດຄວາມສົນໃຈເນື້ອເຣື້ອງ ແລະສາມາດຕິດຕາມເນື້ອຫາ ແລະເກີດຄວາມເຂົ້າໃຈໄດ້ ອຸປະກອນອື່ນ ໆ ອາດຈະເປັນໄມໂຄຣໂຟນ ເຄື່ອງຂະຍາຍສຽງ ກະດານມີໄວ້ຂຽນ ຫລືເຈັ້ຽທີ່ມີໄວ້ຈົດບັນທຶກ ຫລືເຈັ້ຽທີ່ຕີພິມບົດຮຽນໂດຍສະຫລູບ ເພື່ອຜູ້ຮຽນຈະສາມາດນຳໄປສຶກສາຫາຄວາມເຂົ້າໃຈຕໍ່ໄປ

**ຂໍ້ຈຳກັດ**

ການສອນແບບບັນຍາຍ ຖ້າຫາກຜູ້ສອນບໍ່ມີສຽງທີ່ຫນ້າຟັງ ຫລືບໍ່ດັງພຽງພໍ ຫລືເວົ້າບໍ່ຖືກວັກ ບໍ່ຖືກຕອນ ຜູ້ຮຽນຈະເກີດການສັບສົນໃນສິ່ງທີ່ສອນ ຜູ້ຮຽນຈະບໍ່ສາມາດຮັບຄວາມຮູ້ໄດ້ຫລາຍ ຜູ້ຮຽນອາດຈະເກີດ ຈິດໃຈລອຍ ບໍ່ໄດ້ຟັງຜູ້ສອນຫລື ຜູ້ສອນອາດຈະໄປໄວໂພດ ເຮັດໃຫ້ຜູ້ຮຽນນຳຕາມບໍ່ທັນ ວິທີສອນແນວນີ້ ມີຂໍ້ຈຳກັດຫລາຍປະການ ໂດຍສະເພາະຢ່າງຍິ່ງແລ້ວ ຜູ້ສອນບໍ່ຮູ້ວ່າຜູ້ຟັງເຂົ້າໃຈໄດ້ຄັກແນ່ກົງຕາມຈຸດປະສົງທີ່ຜູ້ສອນກຳລັງສອນຫລືບໍ່ ແຕ່ວ່າເປັນແບບທີ່ມີຜູ້ໃຊ້ຫລາຍທີ່ສຸດ ເພາະວ່າຜູ້ສອນບໍ່ຕ້ອງຕຽມຕົວຫລາຍ ແລະເປັນແບບທີ່ລຶ້ງເຄີຍ ໃຜກໍເຮັດກັນ

## ວິທີການສອນແບບທີ່ສອງ ສອນໂດຍການເລົ່າເຣື່ອງ (Story or Illustration)

ການສອນວິທີນີ້ ໄດ້ໃຊ້ກັນມາຕັ້ງແຕ່ມະນຸດຮູ້ຈັກການສິດສອນ ບອກເລົ່າຕໍ່ກັນມາແຕ່ຄັ້ງໂບຮານ ວິທີນີ້ ມີຄວາມແຕກຕ່າງໄປຈາກການສອນແບບບັນຍາຍ ສ່ວນຫລາຍຜູ້ສອນຕ້ອງມີຈິນຕະນາການ ການເລົ່າເຣື່ອງໃຫ້ຜູ້ຟັງເກີດພາບພົດ ຫລືຄຶດເຫັນເຫດການໃນສະມອງ ໃນເວລາທີ່ຜູ້ສອນກຳລັງເລົ່າເຣື່ອງ ຄວາມຕື່ນເຕັ້ນຂອງການດຳເນີນເຣື່ອງ ຕ້ອງເປັນໄປຢ່າງມີລະບຽບ ເທື່ອລະຕອນ ເທື່ອລະຕອນ ແລະໃຫ້ຜູ້ຮຽນຮູ້ສຶກສົນໃຈ ຢາກຕິດຕາມເຣື່ອງ ຜູ້ສອນຈະບໍ່ບອກຄຳຕອບໃນຣະຫວ່າງທີ່ກຳລັງເລົ່າເຣື່ອງ ແຕ່ຈະເກັບໄວ້ໃນຕອນສຸດທ້າຍຂອງເຣື່ອງ ເພື່ອເປັນຂໍ້ໄຂໄປສູ່ຄຳຕອບ ທີ່ໜ້າສົນໃຈການສອນແບບເລົ່າເຣື່ອງນີ້ ໄດ້ໃຊ້ກັນມາດົນນານແຕ່ໂບຮານການໃນທຸກຊາດທຸກພາສາ ຊຶ່ງພຣະເຢຊູຄຣິສໄດ້ຊົງໃຊ້ວິທີການສອນແນວນີ້ຫລາຍ ໆ ເທື່ອຄືກັນ ແຕ່ເຮົາຕ້ອງຍອມຮັບວ່າ ຫລັກການເລົ່າເຣື່ອງໃຫ້ຜູ້ໃຫຍ່ຟັງບໍ່ຄືກັບໃຫ້ເດັກນ້ອຍຟັງ ຊຶ່ງມີຄວາມແຕກຕ່າງກັນຫລາຍທັງໃນດ້ານລາຍລະອຽດ ຂໍ້ຄິດ ຂໍ້ປຽບທຽບ ແລະຂໍ້ໄຂສຳຫລັບການແກ້ບັນຫາຊີວິດ ເພາະວ່າຜູ້ໃຫຍ່ແລະເດັກນ້ອຍມີຄວາມສາມາດ ໃນການຮັບຮູ້ຕ່າງລະດັບກັນ ແຕ່ສ່ວນຫລາຍແລ້ວ ຜູ້ສອນມັກໃຊ້ວິທີການເລົ່າເຣື່ອງສອນແກ່ເດັກນ້ອຍ ຫລາຍກວ່າຜູ້ໃຫຍ່ ເຖິງປານນັ້ນ ຜູ້ໃຫຍ່ກໍຍັງມັກຟັງ ການເລົ່າເຣື່ອງ



### ອຸປະກອນການສອນ

ໃຊ້ຮູບພາບ ໃຊ້ຫຸ່ນລະຄອນປະກອບການເລົ່າເຣື່ອງ ການໃຊ້ນ້ຳສຽງຂອງຜູ້ເລົ່າເຣື່ອງ ແລະການລຳດັບເຣື່ອງທີ່ບໍ່ສັບສົນວົນໄປມາ ມີຄວາມສຳຄັນຫລາຍທີ່ສຸດ ທີ່ຈະກະຕຸ້ນໃຫ້ຜູ້ຟັງສົນໃຈ ຕິດຕາມເຣື່ອງ ແລະເກີດການຈິນຕະນາກາລ ເຫັນຮູບພາບເຫດການໃນສະມອງຂອງຜູ້ຟັງ

### ຂໍ້ຈຳກັດ

ຫາກວ່າຜູ້ສອນເລົ່າເຣື່ອງວົກວົນສັບສົນໄປມາ ຜູ້ຟັງຈະບໍ່ຮູ້ຈັກຕິດຕາມເຣື່ອງ ແລະໃນທີ່ສຸດຈະຫລົງເຣື່ອງ ແລະຂາດຄວາມສົນໃຈໄປໃນທີ່ສຸດ ຫາກວ່າເຣື່ອງທີ່ເລົ່າຍາວເກີນໄປ ອາດເຣັດໃຫ້ຜູ້ຟັງເບື່ອ ຫລືລືມຄຳສອນຕອນຕົ້ນ ເຣັດໃຫ້ຜູ້ຟັງບໍ່ສາມາດເອົາຄວາມຮູ້ມາຕິດຕໍ່ກັນ ໃນທີ່ສຸດບໍ່ຮູ້ວ່າເຣື່ອງທີ່ເລົ່າມານັ້ນ ມີຈຸດປະສົງຫຍັງ ຫລືໃຫ້ຄຳສອນທີ່ໃຫ້ປໂຍດແນວໃດແດ່ ຈຳເປັນທີ່ຜູ້ສອນຕ້ອງສະຫລູບເຣື່ອງ ແລະຊີ້ເຖິງຄວາມຈິງຂອງເຣື່ອງທີ່ນຳມາສເນີ ເພື່ອນຳຜູ້ຟັງໄປເຖິງຈຸດມຸ່ງໝາຍຫລືເປົ້າໝາຍຂອງບົດຮຽນ ການໃຊ້ອຸປະກອນການສອນຈະເປັນຮູບພາບຫລືຫຸ່ນຈຳເປັນຕ້ອງມີການຝຶກແອບ ແລະວາງແຜນການສອນ ຖ້າຫາກວ່າບໍ່ມີການຕຽມສອນທີ່ດີແລ້ວ ອາດເຣັດໃຫ້ເກີດບັນຫາຫລາຍກວ່າທີ່ຈະເປັນປໂຍດໃນການສນັບສນູນບົດຮຽນ

## ວິທີການສອນແບບທີ່ສາມ ສອນໂດຍວິທີຖາມ-ຕອບ (Question and Answer)

ການໃຊ້ວິທີການສອນແບບຖາມແລະຕອບນີ້ ຜູ້ສອນຕ້ອງມີລະດັບຄວາມຮູ້ເປັນພື້ນຖານ ທີ່ກ້ວາງຂວາງພໍສົມຄວນ ຜູ້ສອນຕ້ອງມີຄວາມຮູ້ວ່າຜູ້ຮຽນ ມີຄວາມຮູ້ຢູ່ໃນລະດັບໃດ ມີປະສົບການຫຍັງແດ່ ຜູ້ສອນອາດຈະເຄີຍສິດສອນຜູ້ຮຽນມາແລ້ວໃນເຣື້ອງທີ່ຈະຕັ້ງເປັນບັນຫາ ເພື່ອເກີດຄຳຖາມແລະຄຳຕອບແກ່ຜູ້ຮຽນ ດັ່ງນັ້ນຜູ້ສອນຈະຕ້ອງຮູ້ຈັກການຕຽມຄຳຖາມໄວ້ລ່ວງໜ້າ ໃຫ້ເໝາະສົມກັບລະດັບຂອງຜູ້ຮຽນ ເພື່ອວ່າຜູ້ສອນຈະບໍ່ຕື່ນຕໍ່ຄຳຖາມທີ່ບໍ່ໄດ້ຮູ້ຈັກມາກ່ອນ ເຖິງຢ່າງໃດກໍຕາມ



ການສອນແນວນີ້ ມັກຈະເກີດບັນຫາໃນລະຫວ່າງເວລາທີ່ຮຽນ ຊຶ່ງຜູ້ຮຽນອາດຈະຕອບຄຳຖາມບໍ່ໄດ້ ຜູ້ສອນຕ້ອງຮູ້ຈັກຄວບຄຸມໃຫ້ຫ້ອງຮຽນດຳເນີນໄປຢ່າງບໍ່ຕິດຂັດ ໂດຍທີ່ຜູ້ສອນຕ້ອງຮູ້ຈັກໃຊ້ເທັກນິກໃນການປ່ຽນຄຳຖາມນັ້ນ ໃຫ້ເປັນຄຳຖາມໃໝ່ໃນອີກແງ່ມຸມນຶ່ງ ແຕ່ວ່າຍັງເປັນເຣື້ອງດຽວກັນແລ້ວ ສເນີໃຫ້ຜູ້ຮຽນຊ່ວຍກັນອອກຄວາມຄິດເຫັນ ແລ້ວຜູ້ສອນຈຶ່ງໃຊ້ວິທີສະຫລຸບ ເອົາຄວາມຄິດເຫັນຈາກທຸກ ໆ ຄົນ ຊຶ່ງອາດຈະມີບາງເທື່ອທີ່ພົບວ່າ ມີຄຳຖາມທີ່ເປັນບັນຫາ ທີ່ຜູ້ສອນແລະຜູ້ຮຽນບໍ່ສາມາດຕອບໄດ້ ກໍໃຫ້ຜູ້ສອນຮູ້ຈັກມອບໝາຍບັນຫາໃຫ້ ຜູ້ຮຽນເອົາໄປຄົ້ນຄວ້າເພີ້ມເຕີ່ມນອກເວລາຮຽນ ຊຶ່ງໃນເວລາດຽວກັນ ຜູ້ສອນກໍຕ້ອງໄປທຳການຄົ້ນຄວ້າຫາຄຳຕອບທີ່ຖືກຕ້ອງ ເພື່ອຈະນຳກັບມາຮຽນກັນໃໝ່ໃນເທື່ອໜ້າ ຫລືເພື່ອຈະໄດ້ນຳເອົາບັນຫານັ້ນມາຕັ້ງເປັນຂໍ້ສເນີໃໝ່ ແລະນຳໃຫ້ເກີດການສະຫລຸບເປັນຄວາມຮູ້ ຄວາມເຂົ້າໃຈໃໝ່ ໃນຄັ້ງຕໍ່ໄປ

### ອຸປະກອນການສອນ

ຜູ້ສອນຕ້ອງຮູ້ຈັກຕັ້ງຄຳຖາມມາກ່ອນລ່ວງໜ້າ ຄຳຖາມທີ່ຕັ້ງມາຕ້ອງກະຕຸ້ນຄວາມຄິດ ຊຶ່ງເປັນໄປໄດ້ຫລາຍຮູບແບບ ຕົວຢ່າງ ຈັດໃຫ້ມີຄຳຖາມຊຸດນຶ່ງ 5 ຂໍ້ເຖິງ 10 ຫລື 15 ຂໍ້ ແລ້ວຕັ້ງຄຳຖາມຕັ້ງແຕ່ງ່າຍທີ່ສຸດຈົນເຖິງຍາກທີ່ສຸດ ຕາມເປົ້າໝາຍທີ່ເຮົາກະວາງໄວ້ ແລ້ວໃຫ້ນັກສຶກສາຖາມກັນແລະກັນແລ້ວຜູ້ສອນເປັນຜູ້ສະຫລຸບ ໃຫ້ຜູ້ທີ່ມີປະສົບການຫລາຍຄົນມາຊ່ວຍຕອບຄຳຖາມຕາມທີ່ນັກສຶກສາສົນໃຈຢາກຖາມເປັນຕົ້ນ ຄຳຖາມຕ້ອງເປັນຄຳຖາມທີ່ສັ້ນ ແລະເຂົ້າໃຈງ່າຍ ແລະສາມາດນຳໄປສູ່ຄຳຕອບໄດ້ ຄຳຖາມແຕ່ລະຄຳຖາມ ຕ້ອງຊັດແຈ້ງ ສັ້ນແລະຕ້ອງການຄຳຕອບບໍ່ເກີນກວ່າສາມຄຳຕອບ ເພາະວ່າ ຖ້າຄຳຖາມທີ່ຕ້ອງການຄຳຕອບຫລາຍເກີນໄປຈະເຮັດໃຫ້ເກີດຄວາມສັບສົນແກ່ຜູ້ຮຽນ

### ຂໍ້ຈຳກັດ

ຄຳຖາມທີ່ຍາກຫລືທີ່ງ່າຍເກີນໄປ ເຮັດໃຫ້ຜູ້ຮຽນໜ້າເບື່ອ ຫລືບາງເທື່ອມີຜູ້ຕອບຄຳຖາມພຽງຄົນສອງຄົນ ເຮັດໃຫ້ຜູ້ອື່ນທີ່ບໍ່ໄດ້ຕອບ ບາງເທື່ອມີຜູ້ຮຽນທີ່ບໍ່ມີຄວາມເຂົ້າໃຈຫລືບໍ່ມີຄວາມຮູ້ໃນສິ່ງທີ່ກຳລັງຖາມເຮັດໃຫ້ບໍ່ເຂົ້າໃຈ ຫລືໃນຫ້ອງຮຽນມີແຕ່ຜູ້ຮຽນທີ່ມັກເຂີນອາຍບໍ່ຢາກຕອບ ເປັນຕົ້ນ

## ວິທີການສອນແບບທີ່ສີ່ ສອນໂດຍວິທີການໃຫ້ຜູ້ຮຽນໄດ້ອະພິປາຍ ສະແດງຄວາມຄິດເຫັນ (Discussion)

ການອະພິປາຍເປັນວິທີສອນວິທີນຶ່ງທີ່ຄົນນິຍົມແລະເກີດຜົນຫລາຍ ເພາະຄົນນິຍົມສົນທະນາ ແລະແລກປ່ຽນຄວາມຄິດຄວາມເຫັນກັນ ໃນການສຶກສາໂຮງຮຽນວັນອາທິດແຕ່ລະເທື່ອ ຜູ້ສອນພະຍາຍາມ



ຊ່ວຍສະມາຊິກແກ້ບັນຫາທີ່ເຂົາພະເຊີນ ແລະຊ່ວຍໃຫ້ເຂົາຕັດສິນໃຈແບບຄຣິສຕຽນຫລາຍຂຶ້ນ ແຕ່ວ່າຜູ້ສອນຈະຊ່ວຍສະມາຊິກເຫລົ່ານັ້ນໄດ້ຢ່າງໃດ ຖ້າຜູ້ສອນບໍ່ໄດ້ໃຫ້ເຂົາເວົ້າອອກມາເຖິງຄວາມຄິດທີ່ເຂົາມີຢູ່ ການໃຊ້ວິທີອະພິປາຍຈະທຳໃຫ້ຜູ້ຮຽນແຕ່ລະຄົນມີໂອກາສທີ່ຈະແບ່ງປັນຄວາມຄິດແລະປະສົບການຂອງເຂົາ ໃນການອະພິປາຍທີ່ດີ ຈະມີການແລກປ່ຽນຄວາມຄິດເຫັນ ມີການຊ່ວຍໃຫ້ເຂົ້າໃຈຄວາມຄິດຕ່າງ ໆ ຊັດແຈ້ງຂຶ້ນ ເປັນການສ້າງທັສນະຄະຕິ ແລະຕັດສິນໃຈໃນເຣື້ອງຕ່າງ ໆ ນອກຈາກນີ້ການໃຊ້ວິທີນີ້ຈະຮັກສາຄວາມສົນໃຈຂອງຊັ້ນຮຽນໄວ້ໄດ້ດີກວ່າວິທີອື່ນ ການອະພິປາຍທີ່ດີສາມາດປ່ຽນຊ່ວຍເວລາຮຽນທີ່ໜ້າເບື່ອໜ່າຍໃຫ້ເປັນປະສົບການທີ່ມີຊີວິດ ມີຄວາມເຂົ້າໃຈຊັດແຈ້ງ ແລະມີຄວາມໝາຍ ຜູ້ສອນທີ່ມີຄວາມສາມາດແລະມີປະສົບການມັກຈະໃຊ້ວິທີນີ້ເລື້ອຍ ໆ ໃນການສອນ ດັ່ງນັ້ນການອະພິປາຍຄືການທີ່ສະມາຊິກຜູ້ຮຽນໃນຫ້ອງຮຽນທຸກຄົນໄດ້ຮຽນຮ່ວມກັນ ສະແດງຄວາມຄິດຄວາມເຫັນຂອງກຸ່ມຂອງຕົນ ເພື່ອເປັນການສະແຫວງຫາຄວາມຈິງຮ່ວມກັນ ເພື່ອເກີດການຮຽນຮູ້ຫລືແກ້ໄຂບັນຫາຮ່ວມກັນ ເພື່ອໃຫ້ຜູ້ຮຽນແລະຄອບຄົວເປັນຄຣິສຕຽນທີ່ຈະເຣີນເຕີບໂຕຂຶ້ນ ຈຸດປະສົງໃນຕົວຢ່າງທີ່ຍົກຂຶ້ນມາອະພິປາຍ ບໍ່ໄດ້ເປັນການພິສູດຄວາມຖືກຜິດ ຫລືເປັນການໂຕ້ວາທີຜິດຖຽງກັນ ແຕ່ເປັນການເອົາຂໍ້ເທັດຈິງແລະຄວາມເຂົ້າໃຈ ທີ່ກ່ຽວຂ້ອງກັບທຸກຄົນໃນຫ້ອງຮຽນໃຫ້ເອົາອອກມາເບິ່ງແລະພິຈາຣະນາກັນ ບໍ່ມີໃຜເປັນຜູ້ທີ່ຮູ້ຈອງທັງໝົດ ແຕ່ເປັນໄປໄດ້ທີ່ວ່າທຸກຄົນຮູ້ຄວາມຈິງບາງຢ່າງ ເພາະສະນັ້ນເປັນສິ່ງສຳຄັນທີ່ຈະໃຫ້ສະມາຊິກຜູ້ຮຽນທຸກຄົນເຂົ້າຮ່ວມ ໃນເວລາທີ່ອະພິປາຍຜູ້ຮຽນທຸກຄົນຈະປະເມີນຄວາມຄິດເຫັນຕ່າງ ໆ ເພື່ອທຳການສະລູບແລະຕັດສິນໃຈ ການປະເມີນຄວາມຄິດເຫັນຕ່າງ ໆ ເປັນສິ່ງທີ່ມີຄຸນຄ່າໃນການສອນຂອງຄຣິສຕຽນ ເພາະສິ່ງນີ້ຈະເປັນຮາກຖານຂອງການຕັດສິນໃຈທີ່ສະລາດ ແລະການຕັດສິນໃຈຕ່າງ ໆ ເຫລົ່ານີ້ມັກຈະປ່ຽນແປງເປັນທັສນະຄະຕິ ຊຶ່ງເປັນເຫດໃຫ້ເກີດຄວາມປະພຶດຕ່າງ ໆ ທີ່ເຮັດໃຫ້ແຕ່ລະຄົນດຳເນີນຊີວິດຄຣິສຕຽນຕາມຄວາມເຊື່ອແຫ່ງພຣະຄຳຂອງພຣະເຈົ້າ

**ການອະພິປາຍແລະການໂຕ້ວາທີມີຄວາມແຕກຕ່າງກັນ** ເປັນສິ່ງສຳຄັນທີ່ຜູ້ສອນຕ້ອງຮູ້ຈັກ ເພາະວ່າບາງເທື່ອແທນທີ່ຜູ້ຮຽນຈະເຂົ້າຮ່ວມອະພິປາຍ ແຕ່ກັບກາຍເປັນໂຕ້ວາທີກັນ ຖ້າຫາກວ່າຜູ້ສອນແລະຜູ້ຮຽນບໍ່ຮູ້ຈັກຄວາມແຕກຕ່າງຣະຫວ່າງການອະພິປາຍແລະການໂຕ້ວາທີຊັດແຈ້ງແລ້ວ ອາດຈະເລີ່ມຕົ້ນດ້ວຍການອະພິປາຍ ແຕ່ຈົບລົງດ້ວຍການໂຕ້ວາທີ ການອະພິປາຍແລະການໂຕ້ວາທີມີຄວາມແຕກຕ່າງກັນດັ່ງຕໍ່ໄປນີ້

1. ໃນການອະພິປາຍຜູ້ອະພິປາຍເວົ້າສະແດງຄວາມຄິດເຫັນອອກມາຊື່ ໆ ແຕ່ການໂຕ້ວາທີເປັນການປ້ອງກັນຮັກສາຄວາມຄິດຂອງຜູ້ເວົ້າໄວ້ ບໍ່ໃຫ້ເປັນໄປຕາມຄວາມຄິດຂອງຝ່າຍກົງກັນຂ້າມ

2. ການອະພິປາຍເປັນການພະຍາຍາມທຳໃຫ້ເກີດຄວາມເຂົ້າໃຈໃຫມ່ ແຕ່ການໂຕ້ວາທີເປັນການຫາທາງພິສູດວ່າເຣື່ອງທີ່ຕົນເອົາມາເວົ້ານັ້ນຖືກກວ່າຫມູ່

3. ການອະພິປາຍເປັນການຊອກຫາຄວາມຈິງຮ່ວມກັນ ແຕ່ການໂຕ້ວາທີເປັນການເອົາຊນະຂໍ້ໂຕ້ແຍ້ງ ໂດຍຕົວເອງບໍ່ຍອມເສັຍປຽບ

4. ໃນການອະພິປາຍຈະມີການສເນີຂໍ້ຄິດເຫັນຫລາຍ ໆ ຝ່າຍ ແຕ່ການໂຕ້ວາທີສເນີຂໍ້ຄິດໃຫ້ເລືອກພຽງສອງຝ່າຍ

5. ການອະພິປາຍບໍ່ຄວນເປັນເຣື່ອງສ່ວນຕົວ ແຕ່ການໂຕ້ວາທີອາດຈະເປັນເຣື່ອງສ່ວນຕົວ

6. ການອະພິປາຍເປັນເຣື່ອງທີ່ກ່ຽວກັບການເຂົ້າໃຈຄວາມຄິດຂອງຜູ້ອື່ນ ແຕ່ການໂຕ້ວາທີກ່ຽວຂ້ອງກັບການຕໍ່ຕ້ານຄວາມຄິດ ຜູ້ອື່ນທີ່ຂັດກັບຄວາມຄິດຂອງຕົວເອງ

7. ການອະພິປາຍບໍ່ຈຳກັດຈຳນວນສະມາຊິກໃນຫ້ອງຮຽນທີ່ຈະເຂົ້າຮ່ວມສະແດງຄວາມຄິດຄວາມເຫັນ ແຕ່ການໂຕ້ວາທີຈຳກັດຈຳນວນຜູ້ເຂົ້າຮ່ວມ

8. ການອະພິປາຍເປັນສິ່ງທີ່ເວົ້າກັນຢ່າງກັນເອງ ແຕ່ການໂຕ້ວາທີເປັນເຣື່ອງເຮັດກັນຢ່າງເປັນທາງການໂດຍມີກົດຣະບຽບຫລືກະຕິກາ ຖ້າຫາກການໂຕ້ວາທີເຮັດກັນຢ່າງເປັນກັນເອງ ກໍຈະກາຍເປັນການໂຕ້ຖຽງກັນ

**ຄຸນຄ່າຂອງການອະພິປາຍ**

ວິທີການສອນແບບອະພິປາຍມີຄຸນຄ່າໃນການສອນການຮຽນຫລາຍປະການດັ່ງນີ້

1. ການອະພິປາຍເຮັດໃຫ້ສະມາຊິກຮູ້ຈັກຜະເຊີນກັບບັນຫາບາງບັນຫາ ທີ່ຜູ້ຮຽນຈຳເປັນຕ້ອງພົບໃນຊີວິດປະຈຳວັນໃນຖານະທີ່ເປັນຄຣິສຕຽນ ຜູ້ສອນຄວນໃຫ້ຄວາມສົນໃຈຊ່ວຍເຫລືອຜູ້ຮຽນຈະເຣີນເຕີບໂຕໃນການແກ້ໄຂບັນຫາບັນຫາຊີວິດທີ່ເຂົາມີຢູ່ ໂດຍມີສະມາຊິກໃນຫ້ອງຊ່ວຍກັນແກ້ໄຂແລະສນັບສນູນຊຶ່ງກັນແລະກັນ

2. ການອະພິປາຍຊ່ວຍເຮັດໃຫ້ຜູ້ຮຽນໄດ້ຂໍ້ມູລໃຫມ່ ໆ ແລະເກີດຄວາມເຂົ້າໃຈທີ່ລຶກຊຶ້ງຂຶ້ນເມື່ອຜູ້ຮຽນໄດ້ຟັງຄວາມຄິດເຫັນຈາກຫມູ່ສະຫາຍ ໃນຊັ້ນຮຽນແລະຈາກຜູ້ສອນດ້ວຍ

3. ການອະພິປາຍເຮັດໃຫ້ຜູ້ຮຽນມີໂອກາສສຶກສາພຣະຄັມພີ ຊຶ່ງກ່ຽວຂ້ອງກັບບັນຫາຊີວິດຈິງທີ່ເຂົາກຳລັງຜະເຊີນຢູ່ ໂດຍວິທີນີ້ພຣະຄັມພີແລະຂ່າວປະເສີດກໍຈະມີຄວາມຫມາຍຕໍ່ຜູ້ຮຽນຫລາຍຍິ່ງຂຶ້ນ

4. ການອະພິປາຍເຮັດໃຫ້ຜູ້ຮຽນມີໂອກາດສະແດງ ແລະທຳຄວາມເຂົ້າໃຈກັບຄວາມຄິດເຫັນຂອງຕົນໃຫ້ຊັດແຈ້ງ ໂດຍອາສັຍການອະພິປາຍທັງຫມົດຂອງຜູ້ຮຽນໃນຫ້ອງຮຽນ

5. ການອະພິປາຍເຮັດໃຫ້ຜູ້ຮຽນໄດ້ມີໂອກາດປະເມີນຄວາມຄິດຂອງຕົນເອງ ແລະແກ້ໄຂຄວາມຄິດເຫັນຂອງຕົນ ເມື່ອໄດ້ຟັງແລະພິຈາຣະນາເຖິງຄວາມຄິດຕ່າງ ໆ ໃນການອະພິປາຍທັງຫມົດ

**ຂໍ້ຈຳກັດຕ່າງ ໆ ຂອງການອະພິປາຍ**

1. ການສອນແບບອະພິປາຍບໍ່ສາມາດໃຊ້ກັບຜູ້ຮຽນກຸ່ມໃຫຍ່ໄດ້ດີ

2. ການອະພິປາຍໃນຫ້ອງຮຽນອາດຈະບໍ່ໄດ້ນຳໄປເຖິງການສະຫລູບຄວາມຄິດເຫັນ ຊຶ່ງຈະບໍ່ໄດ້ນຳໃຫ້ຜູ້ຮຽນເກີດຄວາມເຂົ້າໃຈ ແລະບໍ່ສາມາດນຳໄປໃຊ້ໃນຊີວິດປະຈຳວັນໄດ້

3. ຜູ້ຮຽນໃນຫ້ອງຮຽນອາດຈະບໍ່ມີຂໍ້ມູລ ຫລືຂໍ້ເທັດຈິງພຽງພໍສຳລັບການອະພິປາຍປັນຫານັ້ນ ໆ ເມື່ອບໍ່ມີຂໍ້ມູລພຽງພໍ ການອະພິປາຍກໍຈະບໍ່ເກີດຜົນສະຫລູບທີ່ຫນ້າເຊື່ອຖືໄດ້

4. ຂໍ້ສະຫລູບອາດຈະບໍ່ຖືກຕ້ອງ ແມ່ນວ່າຜູ້ຮຽນທັງຫ້ອງໄດ້ຕົກລົງເຫັນພ້ອມດ້ວຍກັນເຊັ່ນນັ້ນ ທັງນີ້ເພາະຜູ້ຮຽນໃນຫ້ອງບໍ່ມີຄວາມຮູ້ພື້ນຖານຊັດແຈ້ງຕາມຄວາມຈິງ ດັ່ງນັ້ນຂໍ້ສະຫລູບທີ່ເຂົາໄດ້ມາອາດໄດ້ມາຈາກຮູ້ບໍ່ຈິງຫລືໃຈອະຄະຕິ ຜູ້ສອນຈຳເປັນຕ້ອງມີຄວາມຊຳນານແທ້ຈິງ ທີ່ຈະເຂົ້າໃຈເຫດການໄດ້ທັນ ແລະສເນີຄວາມຮູ້ແລະຄວາມເຂົ້າໃຈທີ່ຖືກຕ້ອງແລະຊັດແຈ້ງໃຫ້ ເພື່ອນຳນັກຮຽນທັນຄືນມາສູ່ຄວາມຈິງ

5. ເວລາທີ່ໄດ້ຈັດໄວ້ສຳລັບສຶກສາ ອາດຈະສັ້ນເກີນກວ່າທີ່ຈະພິຈາຣະນາບັນຫານັ້ນໄດ້ຢ່າງສົມບູນ ນີ້ເປັນເຣື່ອງທີ່ຜູ້ສອນຈະຕ້ອງຕັດສິນໃຈເລືອກຫາວິທີໃຫ້ເຫມາະສົມກັບວິທີການຮຽນ

6. ຈະມີບັນຫາບາງແນວທີ່ຜົນສະຫລູບຂອງການອະພິປາຍໃນຫ້ອງຮຽນບໍ່ມີຄຳຕອບທີ່ຖືກຕ້ອງຫລືຈຸໃຈຜູ້ຮຽນ ເມື່ອເກີດມີກໍຣະນີເຊັ່ນນັ້ນ ຜູ້ສອນຕ້ອງຕັດສິນໃຈວ່າ

(1) ຄວນຈະຫາຂໍ້ມູລເພີ່ມຂຶ້ນແລະຫາເວລາເພີ່ມຂຶ້ນ ເພື່ອອະພິປາຍກ່ຽວກັບບັນຫານັ້ນຕໍ່ໄປຫລືບໍ່

(2) ຮັບເອົາບັນຫາທີ່ຍັງບໍ່ມີຄຳຕອບໄວ້ຊົ່ວຄາວກ່ອນ ແລ້ວດຳເນີນການສອນຕໍ່ໄປ

(3) ຜູ້ສອນຕ້ອງຮູ້ຈັກສັງເກດວ່າ ບັນຫາທີ່ມີຢູ່ນັ້ນທັງຫ້ອງຮຽນສົນໃຈຢ່າງລຶກຊຶ້ງຫລືບໍ່ ແລະມີທາງທີ່ຈະຊອກຫາຄຳຕອບໄດ້ຫລືບໍ່

ໃນບົດຮຽນນີ້ເຮົາໄດ້ໃຫ້ຄຳແນະນຳວິທີການສອນແຕ່ພຽງເລັກນ້ອຍ ແທ້ທີ່ຈິງແລ້ວ ວິທີການສອນມີຫລາຍຮູບແບບ ໂດຍສະເພາະຢ່າງຍິ່ງຄວາມຈະເຣີນຮຸ່ງເຮືອງຂອງວິທະຍາການ ແລະເຄື່ອງມືສື່ສານອຸປະກອນຕ່າງ ໆ ໄດ້ຊ່ວຍໃຫ້ການຮຽນການສອນແຜ່ຂຍາຍອອກໄປຢ່າງໄວ ໃນປັດຈຸບັນຜູ້ຄົນສາມາດຫາຄວາມຮູ້ຄວາມເຂົ້າໃຈທາງວິຊາສາມັນ ຫລືເຣື່ອງຣາວກ່ຽວກັບຄວາມເປັນຢູ່ໃນໂລກນີ້ໄດ້ ໂດຍຜ່ານທາງວິທະຍຸ ໂທຣະທັດ ສິ່ງທີ່ສຳຄັນແມ່ນຄອມພິວເຕີໂດຍຜ່ານທາງ Internet ແຕ່ເຮົາຕ້ອງຍອມຮັບວ່າ ການຮຽນການສອນໃນຂອບຂ່າຍຄຣິສຕຽນຂອງຊາວເອເຊັຽເຮົານັ້ນ ຍັງບໍ່ທັນກ້າວຫນ້າທັນຕໍ່ຍຸກສະໄຫມ ໂດຍສະເພາະຢ່າງຍິ່ງ ເຮົາຕ້ອງຄຳນຶງເຖິງຜູ້ຮຽນ ທີ່ມີວັຍອາຍຸສູງ ຊຶ່ງບໍ່ສາມາດທີ່ຈະນຳເຂົ້າໄປໃນການຮຽນ ການສອນຕາມຣະບອບໃຫມ່ ແຕ່ເຮົາກໍມີຄວາມຫວັງໃນຊາວຫນຸ່ມ ວ່າອານາຄົດຂອງເຂົາຈະສາມາດເຂົ້າເຖິງຫລັກການໃຫມ່ໃນເຣື່ອງການຮຽນການສອນ ແລະນຳມາເຜີຍແຜ່ໃຊ້ກັນຕໍ່ ໆ ໄປ ເພື່ອສືບທອດເຈຕນາການສອນພຣະຄຳຂອງພຣະເຈົ້າໃຫ້ກວ້າງຂວາງອອກໄປຕາມນ້ຳພຣະທັຍຂອງພຣະເຈົ້າ

**ຂໍ້ຄິດເຕືອນໃຈຄຣູຜູ້ສອນ**

- ຜູ້ສອນຕ້ອງສແວງຫາວ່າຈະສອນດ້ວຍວິທີການໃດ ທີ່ຈະເຮັດໃຫ້ຜູ້ຮຽນໄດ້ເຂົ້າໃຈ ແລະເກີດການຮຽນຮູ້ຫລາຍທີ່ສຸດໃນສິ່ງທີ່ເຮົາສອນ
- ຜູ້ສອນຕ້ອງຄິດຢູ່ສເມີວ່າ ຜູ້ຮຽນຍັງບໍ່ທັນຮູ້ຈັກເຣື່ອງທີ່ເຮົາຈະສອນ ມີຄວາມຄິດທີ່ວ່າງເປົ່າ ດັ່ງນັ້ນເຮົາຕ້ອງມີລາຍລະອຽດເປັນຂັ້ນເປັນຕອນ ເພື່ອຈະນຳຜູ້ຮຽນໃຫ້ເຂົ້າໃຈໃນບົດຮຽນຂອງເຮົາໄດ້ຫລາຍທີ່ສຸດ
- ຫາກວ່າຜູ້ຮຽນໄດ້ຮູ້ຈັກເຣື່ອງທີ່ເຮົາສອນມາແລ້ວ ແລະເຮົາຕ້ອງການສອນບົດຮຽນໃຫມ່ທີ່ກ່ຽວຂ້ອງກັບເຣື່ອງເດີມ ເຮົາຕ້ອງສະຫລູບໃຈຄວາມຍໍ້ ໆ ຂອງເຣື່ອງເດີມໃຫ້ພໍເຂົ້າໃຈເປັນຂັ້ນຕອນສັ້ນ ໆ ເພື່ອນຳຜູ້ຮຽນໃຫ້ເຂົ້າມາເຖິງບົດຮຽນໃຫມ່

- ຜູ້ສອນຕ້ອງຫາສິ່ງທີ່ໜ້າສົນໃຈ ມາກະຕຸ້ນໃຫ້ຜູ້ຮຽນຢາກຮຽນ ຊຶ່ງອາດຈະເປັນຕົວຢ່າງ ເຣື້ອງເລົ່າສູ່ກັນຟັງ ຮູບພາບ ຫລືອຸປະກອນນຳພາໃຫ້ຜູ້ຮຽນເກີດຄວາມສົນໃຈ
- ຜູ້ສອນຕ້ອງຮູ້ຈັກພິຈາຣະນາຕົວເອງ ແລະເບິ່ງບົດຮຽນທີ່ເຮົາໄດ້ສອນໄປແລ້ວວ່າ ຍັງມີຫຍັງ ແດ່ຂາດເຂີນ ທີ່ຈະປັບປຸງໃໝ່ໄດ້ໃນເທື່ອໜ້າ ໂດຍບໍ່ຄິດນ້ອຍໃຈ ຢາກເລີກ ຢາກທໍ້ຖອຍ ແຕ່ໃຫ້ເອົາປະສົບການການສອນ ໃນແຕ່ລະເທື່ອມາເປັນບົດຮຽນ ໂດຍການສັງເກດເບິ່ງຕົວຜູ້ຮຽນວ່າ ເຂົາເຂົ້າໃຈຫລືບໍ່ ແລ້ວຕົວຜູ້ສອນເອງຮູ້ສຶກແນວໃດ ໃນສິ່ງທີ່ຕົນເອງໄດ້ສອນໄປແລ້ວ

<u>**ໝາຍເຫດ**</u>

ບົດຮຽນບົດນີ້ໄດ້ຮຽບຮຽງມາຈາກ A primer for Teachers and Leaders by Leroy Ford, Nashville: Broadman Press, 1963. ແລະຈາກ Helping the Teacher by Findley B. Edge, Nashville: Broadman Press, 1959.

# ບົດທີ 10

# ການຝຶກອົບຮົມຄະນະຄຣູ

*ເຮົາກຳລັງບາກບັ່ນມຸ້ງໜ້າໄປສູ່ຫລັກຊັຍເພື່ອຈະໄດ້ຮັບຣາງວັນ*
*ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິສໃຫ້ໄປຮັບຢູ່ເບື້ອງເທິງ*
ຟີລິບປອຍ 3:14

ໃນງານລ້ຽງເພື່ອເປັນກຽດແກ່ແມ່ເຖົ້າຜູ້ນຶ່ງ ຊຶ່ງອາຍຸໄດ້ 67 ປີ ລາວຢືນຂຶ້ນກ່າວຄຳພຍານກ່ອນທີ່ຈະຮັບໂລ່ລາງວັນດີເດັ່ນຂອງການຮັບໃຊ້ວ່າ ຕລອດ 35 ປີທີ່ຜ່ານມາ ລາວບໍ່ເຄີຍຂາດການຮຽນໃນເຊົ້າວັນອາທິດ (Sunday School) ເວັ້ນແຕ່ວ່ານາງເຈັບບໍ່ສບາຍແທ້ ໆ ຈຶ່ງໄດ້ຂາດ ແລະນາງສອນເດັກນ້ອຍມາເປັນເວລາຕໍ່ເນື່ອງກັນເຖິງ 25 ປີ ບໍ່ໄດ້ຂາດ

ມີຄົນຖາມນາງວ່າ "ທ່ານເຮັດໄດ້ດີຂນາດນີ້ ມີຫຍັງແດ່ທີ່ຊ່ວຍຊຸ້ມຊູຈິດໃຈຂອງທ່ານ?"

ແມ່ເຖົ້າຕອບ "ກຳລັງໃຈຂອງຂ້ອຍ ຄື (1) ຄວາມຕັ້ງໃຈ (2) ການທີ່ມີຈິດໃຈອຸທິດຖວາຍ ແລະ (3) ການຍອມເຂົ້າຮັບການຝຶກອົບຮົມເພື່ອບໍ່ໃຫ້ຂາດຄວາມຮູ້ ແຕ່ໄດ້ເພີ່ມຄວາມຮູ້ຄວາມສາມາດຢູ່ສເມີ" ອີກສິ່ງນຶ່ງທີ່ຊ່ວຍໃຫ້ນາງບໍ່ຂາດຈາກການຮັບໃຊ້ ຄື ການເຊື່ອຟັງພຣະເຈົ້າ ແລະຍອມສຶກສາພຣະຄຳຂອງພຣະອົງຢ່າງສມ່ຳສເມີ "ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ" (2 ຕທ 3:17)

ການມີໃຈອຸທິດຖວາຍ ແລະຄວາມກະຕືຣືລົ້ນສົນໃຈໃນວຽກການຮັບໃຊ້ພຣະເຈົ້າ ໂດຍສະເພາະຢ່າງຍິ່ງດ້ານການສອນນັ້ນ ເປັນຄວາມຕັ້ງໃຈຂອງແຕ່ລະບຸກຄົນ ຖ້າຫາກໃຜກໍຕາມມີຄວາມຕັ້ງໃຈແທ້ກັບພຣະເຈົ້າ ຜູ້ນັ້ນກໍຈະມີກຳລັງແຮງທີ່ສາມາດຈະເຮັດໄດ້ ເຖິງວ່າໃນຕອນທຳອິດເຈົ້າຂອງອາດຄິດວ່າຕົນບໍ່ມີຄວາມຮູ້ຄວາມສາມາດ ແຕ່ຫາກວ່າມີຈິດໃຈອຸທິດຖວາຍແທ້ ໆ ແລ້ວ ຜູ້ນັ້ນຈະຂົນຂວາຍຮັບການຝຶກອົບຮົມ ຍອມຮຽນຮູ້ ແລະຮຽນເຮັດ ເມື່ອເປັນດັ່ງນີ້ແລ້ວ ບໍ່ນານຄວາມຊຳນານຄວາມສາມາດກໍຈະເປັນຂອງຜູ້ນັ້ນ ບໍ່ວ່າຢູ່ໃສກໍຈະໄດ້ຮັບການຍົກຍ່ອງ ແລະສາມາດຢືນຂຶ້ນສອນຜູ້ອື່ນໄດ້ທັນທີ

## ນຶ່ງ. <u>ການຝຶກອົບຮົມຄະນະຄຣູມີບົດບາດສຳຄັນໃນຣະບົບການສອນສຶກສາຂອງຄຣິສຈັກ</u>

ເມື່ອເຮົາຕ້ອງການຊອກຫານາຍຄຣູສອນຫລືຜູ້ຊ່ວຍໂຮງຮຽນວັນອາທິດເວລາໃດ ເຮົາມັກໄດ້ຍິນຄຳເວົ້າວ່າ *"ຂ້ອຍຊ່ວຍຫຍັງບໍ່ໄດ້ ເພາະບໍ່ມີຄວາມຮູ້ຄວາມເຂົ້າໃຈໃນການສອນ"* ຫລືລາງຄົນກໍອາດຈະເວົ້າວ່າ *"ຂ້ອຍບໍ່ມີການສຶກສາພໍ ບໍ່ຮູ້ຈັກຈະຊ່ວຍເຫລືອແນວໃດ"* ແມ່ນແທ້ເມື່ອເປັນແນວນີ້ແລ້ວເຮົາກໍ

ຈະບໍ່ສາມາດເຮັດຫຍັງ ເພາະວ່າຜູ້ທີ່ມີຄວາມສາມາດ ຍ່ອມເປັນຜູ້ເຄີຍໄດ້ຮັບການຝຶກອົບຮົມມາກ່ອນໃນທາງນຶ່ງທາງໃດ ສຳລັບຄຣິສຈັກຂອງພວກເຮົາທີ່ສ່ວນຫລາຍເປັນຄຣິສຕຽນຮຸ່ນທຳອິດ ຍ່ອມຊອກຫາຜູ້ທີ່ເຄີຍຜ່ານການຝຶກອົບຮົມມາກ່ອນຍາກ ດັ່ງນັ້ນຈຶ່ງມີຄວາມຈຳເປັນທີ່ຄຣິສຈັກຈະຕ້ອງເອົາໃຈໃສ່ແລະເຫັນເຖິງຄວາມສຳຄັນທາງດ້ານນີ້ ໂດຍການຊອກຫາຜູ້ທີ່ພຣະເຈົ້າໄດ້ຊົງເອີ້ນຮຽກ ເປັນຜູ້ທີ່ສົນໃຈ ຕັ້ງໃຈ ແລະຮັກທີ່ຈະຮັບໃຊ້ພຣະເຈົ້າ ແມ່ນວ່າຜູ້ນັ້ນຈະບໍ່ເຄີຍຜ່ານການຝຶກອົບຮົມມາກ່ອນ ຫລືຂາດຄວາມຮູ້ຄວາມເຂົ້າໃຈໃນການຮຽນການສອນ ເມື່ອຫາຊອກມາໄດ້ແລ້ວກໍຈັດການຝຶກອົບຮົມຄົນເຫລົ່ານັ້ນຂຶ້ນ ແມ່ນວ່າຜູ້ຊອກຫາມາໄດ້ຈະເປັນຈຳນວນນ້ອຍ ກໍບໍ່ເປັນຫຍັງ ທີ່ຈິງກັບເປັນການດີເສັຍອີກ ເພາະການຝຶກອົບຮົມຄົນຈຳນວນນ້ອຍໃຫ້ເກີດຜົນໄດ້ດີກວ່າຄົນຈຳນວນຫລາຍ ທີ່ເຮົາທັງໄປຕາມຄວາມນິຍົມ **ການຈັດໃຫ້ມີການຝຶກອົບຮົມມີຄວາມສຳຄັນຕໍ່ການປັບປຸງຣະບົບຄຣິສຕຽນສຶກສາດັ່ງນີ້**

ກ. ການຈັດໃຫ້ມີການຝຶກອົບຮົມຊ່ວຍໃຫ້ຜູ້ທີ່ເຂົ້າຮັບການອົບຮົມມີຄວາມໝັ້ນໃຈໃນພາຣະໜ້າທີ່ ແລະການປະກອບກິຈການຕ່າງ ໆ ໃນການຮັບໃຊ້ໄດ້ຜົນສຳເຣັດ ແລະເປັນຣະບົບຣະບຽບຂຶ້ນ ຜູ້ໃດທີ່ບໍ່ເຄີຍມີຄວາມຮູ້ຄວາມເຂົ້າໃຈ ກໍໃຫ້ຮຽນຮູ້ເພື່ອໃຫ້ເກີດຄວາມເຂົ້າຊັດແຈ້ງ ແລະຮູ້ຈັກວ່າຕົນຈະຮັບໃຊ້ພຣະເຈົ້າແນວໃດ ເຮັດໃຫ້ເຂົາເຈົ້າບໍ່ໄດ້ເກີດຄວາມຢ້ານກົວ ແລະເກີດຄວາມໝັ້ນໃຈໃນໜ້າທີ່ວຽກການທີ່ຮັບຜິດຊອບ *"ຈົ່ງອົດສາພຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກພຣະເຈົ້າ ເປັນຄົນງານທີ່ບໍ່ຕ້ອງອາຍ ແລະໃຊ້ພຣະທັມແຫ່ງຄວາມຈິງຢ່າງຖືກຕ້ອງ"* (2 ຕມ 2:15)

ຂ. ການຝຶກອົບຮົມເຮັດໃຫ້ເກີດການພັດທນາຄວາມຮູ້ຄວາມສາມາດຂອງຜູ້ທີ່ຕັ້ງໃຈຈະຮັບໃຊ້ພຣະເຈົ້າ ແມ່ນວ່າເຂົາເຈົ້າຈະມີພື້ນຖານນ້ອຍໃນພຣະຄັມພີມາກ່ອນ ຫລືມີຄວາມເຂົ້າໃຈໃນການສອນນ້ອຍກໍຕາມ ແຕ່ຖ້າເຂົາເຈົ້າຍອມອຸທິດຕົວໃນການຮັບການຝຶກອົບຮົມ ພຣະເຈົ້າກໍຈະເພີ່ມພູນແລະປັບປຸງຄວາມຮູ້ຄວາມສາມາດໃຫ້ ສິ່ງສຳຄັນຢູ່ທີ່ເຂົາເຈົ້າຕ້ອງເອົາໃຈໃສ່ແທ້ ແລະມີຄວາມຫິວກະຫາຍໃນການຮຽນຮູ້ສິ່ງໃໝ່ ໆ ເພື່ອພັດທນາຕົວຂອງເຂົາເຈົ້າໃຫ້ກັບກາຍເປັນພາຊນະທີ່ພຣະເຈົ້າໃຊ້ການໄດ້ *"ເຫດສະນັ້ນຖ້າຜູ້ໃດຊຳຣະຕົວໃຫ້ພົ້ນຈາກສິ່ງຊົ່ວເຫລົ່ານັ້ນ ກໍຈະເປັນເໝືອນພາຊນະອັນມີກຽດ ຕັ້ງໄວ້ຕ່າງຫາກ ຊຶ່ງເປັນປະໂຍດແກ່ເຈົ້າຂອງເຮືອນ ທີ່ຈັດໄວ້ພ້ອມແລ້ວສຳລັບການດີທຸກຢ່າງ"* (2 ຕມ 2:21)

ຄ. ການຝຶກອົບຮົມມີຄວາມສຳຄັນຕໍ່ຜູ້ສມັກໃຈຕ້ອງການຮັບໃຊ້ພຣະເຈົ້າ ຊຶ່ງມັກເປັນຄົນກຸ່ມນ້ອຍເທົ່ານັ້ນ ສມາຊິກທັມມະດາອາດຈະບໍ່ມີຄວາມສົນໃຈປານໃດ ກໍບໍ່ເປັນຫຍັງ ຄວາມມຸ່ງໝາຍຂອງການຝຶກອົບຮົມຄນະຄຣູຄື **ຝຶກຄົນກຸ່ມນ້ອຍໃຫ້ຮູ້ຈັກຮັບໃຊ້ຄົນກຸ່ມໃຫຍ່** ດັ່ງນັ້ນເຮົາບໍ່ຄວນຈະຕັ້ງຄວາມຄິດວ່າການຝຶກອົບຮົມຈະເປັນປະໂຍດຕໍ່ທຸກຄົນໝົດຄຣິສຈັກ ແຕ່ໃນທາງກົງກັນຂ້າມສິ່ງທີ່ສຳຄັນຄື ເຮົາຕ້ອງຝຶກຄົນທີ່ສມັກໃຈຊຶ່ງເປັນຄົນຈຳນວນນ້ອຍກວ່າໃຫ້ມີຄຸນພາບໃນການຮັບໃຊ້ຄົນກຸ່ມໃຫຍ່ໃນຄຣິສຈັກ ເປັນການຍາກທີ່ເຮົາຈະພັດທນາທຸກຄົນໃນຄຣິສຈັກໃຫ້ໃຫຍ່ແລະເຕີບໂຕໃນເວລາດຽວກັນ ແຕ່ເຮົາສາມາດສັງເກດຫລັກການອັນນີ້ແລະຮຽນຮູ້ໄດ້ຈາກພຣະເຢຊູຄຣິສ ພຣະອົງມັກຝຶກຄົນຈຳນວນນ້ອຍ ຈາກຝູງຊົນພຣະອົງຝຶກອົບຮົມອັຄສາວົກ 12 ຄົນ ຈາກອັຄສາວົກ 12 ຄົນພຣະອົງຝຶກອົບຮົມອັຄສາວົກ 3-4 ຄົນເປັນການສ່ວນຕົວ ແລະທ່ານໂປໂລວ່າ ທ່ານໃຊ້ເວລາສ່ວນຕົວກັບຄົນກຸ່ມນ້ອຍສອງຫລືສາມຄົນ ເພື່ອຕຽມການໄວ້ສຳລັບການໃຫຍ່ທີ່ຈະມາໃນອານາຄົດ ດັ່ງການຝຶກອົມຮົມມີຄວາມສຳຄັນໃນຄົນກຸ່ມນ້ອຍ ເພື່ອການຮັບໃຊ້ພຣະເຈົ້າໃນຄົນກຸ່ມໃຫຍ່ ລາງຄົນອາດຈະຖາມວ່າທີ່ນ້ອຍນັ້ນ ນ້ອຍປານໃດ ລາງເທື່ອກໍອາດຈະເຖິງຂນາດທີ່ຕ້ອງຝຶກອົບຮົມແບບຕົວຕໍ່ຕົວ ຕາມຄວາມສາມາດ ແລະຕາມໜ້າທີ່ການຮັບຜິດຊອບສະເພາະຄົນ

ງ. ເມື່ອການຝຶກອົບຮົມມີຄວາມສຳຄັນປານນີ້ແລ້ວ ສິດຍາພິບານຫລືຜູ້ນຳຄຣິສຈັກຈະເອົາຄວາມສາມາດມາຈາກໃສທີ່ຈະໃຫ້ມີການຝຶກອົບຮົມເກີດຂຶ້ນ ການຝຶກອົບຮົມຈັດໃຫ້ມີຂຶ້ນໄດ້ສອງໃນກໍຣະນີໃຫຍ່ ໆ

ດ້ວຍກັນຄື (1) ຈັດໃຫ້ມີຂຶ້ນໂດຍໃນຄຣິສຈັກຂອງເຮົາເອງ ໂດຍມີຄວາມມຸ່ງຫມາຍສະເພາະເຈາະຈົງ ອົບຮົມຄນະຄຣູໃນຄຣິສຈັກ ເພື່ອເພີ່ມພູນຄວາມຮູ້ຄວາມເຂົ້າໃຈໃນສິ່ງທີ່ເຂົາຂາດເຂີນ (2) ການຝຶກອົບຮົມທີ່ມີຂຶ້ນໂດຍທົ່ວ ໆ ໄປ ໃນການປະຊຸມຫລວງປະຈຳປີ ຫລືການຝຶກອົບຮົມທີ່ຫນ່ວຍງານຫລືອົງການໄດ້ຈັດຂຶ້ນ ເພື່ອຝຶກແອບຄວາມຮູ້ຄວາມຊຳນານທາງດ້ານນຶ່ງດ້ານໃດໂດຍສະເພາະ

## ສອງ. ເປົ້າຫມາຍຂອງການຈັດການຝຶກອົບຮົມຄນະຄຣູ

ເມື່ອເຮົາເວົ້າເຖິງເປົ້າຫມາຍຂອງການຝຶກອົບຮົມສ່ວນຫລາຍເຮົາມັກຈະເວົ້າເຖິງວິທີການສອນເທົ່ານັ້ນ ທີ່ຈິງແລ້ວເຮົາຕ້ອງມີຄວາມເຂົ້າໃຈວ່າເປົ້າຫມາຍຂອງການຝຶກອົບຮົມຄນະຄຣູກວ້າງຂວາງໄປກ່ວານັ້ນອີກ ການຝຶກອົບຮົມຄນະຄຣູມີເປົ້າຫມາຍ ເພື່ອຝຶກອົບຮົມໃຫ້ທຸກຄົນທີ່ມີຄວາມປະສົງໃນການຮັບໃຊ້ພຣະເຈົ້າໃນດ້ານຄຣິສຕຽນສຶກສາໃນຄຣິສຈັກ ໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນການຮັບໃຊ້ຮ່ວມກັນ ແລະປະສານງານກັນໃນການຮັບໃຊ້ໃຫ້ການສຶກສາພຣະວັຈນະຂອງພຣະເຈົ້າແກ່ສມາຊິກທຸກຄົນຂອງຄຣິສຈັກໃຫ້ບັນລຸສູ່ຄວາມສົມບູນໃນພຣະຄຣິສ ເປົ້າຫມາຍນີ້ຮວມເຖິງການຮູ້ຈັກຫນ້າທີ່ ແລະການຈັດຕັ້ງອົງການ ແລະຫນ່ວຍງານ ຫລືຫ້ອງຮຽນຕ່າງ ໆ ໃນຄຣິສຈັກ ແລະຮວມເຖິງການຝຶກອົບຮົມໃຫ້ມີຄວາມຮູ້ຄວາມສາມາດໃນການຮຽນການສອນໃຫ້ມີປະສິດທິພາບຫລາຍຍິ່ງຂຶ້ນ ດັ່ງມີສ່ວນປະກອບຕ່າງ ໆ ຂອງເປົ້າຫມາຍໃນຂ້າງລຸ່ມນີ້

1. ການຝຶກອົບຮົມມີເປົ້າຫມາຍຊ່ວຍໃຫ້ຜູ້ທີ່ຕ້ອງການຮັບໃຊ້ມີຄວາມເຊື່ອໃຫຍ່ຂຶ້ນໃນການສຶກສາພຣະວັຈນະຂອງພຣະເຈົ້າ ມີຊີວິດທີ່ຊື່ຕົງຕໍ່ໃນການປະຕິບັດຕາມພຣະວັຈນະ ແລະຫຍັ່ງຮາກເລິກໃນຄຳຫມັ້ນສັນຍາທີ່ຈະຮັບໃຊ້ພຣະເຈົ້າ

2. ການຝຶກອົບຮົມມີເປົ້າຫມາຍຊ່ວຍໃຫ້ເກີດຄວາມເຂົ້າໃຈໃນຈຸດປະສົງແລະຫລັກການຂອງຄຣິສຕຽນສຶກສາໂດຍທົ່ວໄປສຳລັບຄຣິສຈັກຂອງຕົນເອງ ແລະຮຽນຮູ້ຫລັກໃນການຮ່ວມປະຕິບັດການຮັບໃຊ້ກັບຄົນອື່ນໃຫ້ເກີດຜົນສຳເຣັດຮ່ວມກັນ

3. ການຝຶກອົບຮົມມີເປົ້າຫມາຍຊ່ວຍໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນຂບວນການສຶກສາ (ຫລືການດຳເນີນວຽກການສຶກສາ) ວ່າການຮຽນຮູ້ຈະເກີດຂຶ້ນໄດ້ແນວໃດ ມີຫລັກການໃນການຮຽນຮູ້ແນວໃດອາຍຸວັຍຂອງຜູ້ຮຽນມີລັກສນະແຕກຕ່າງກັນແນວໃດ ເພື່ອໃຫ້ຮູ້ຈັກການສອນທີ່ຕອບສນອງຄວາມຕ້ອງການຂອງຄົນໃນແຕ່ລະວັຍ

4. ການຝຶກອົບຮົມມີເປົ້າຫມາຍເພີ່ມພູນຄວາມຮູ້ຄວາມເຂົ້າໃຈໃນວິຊາຄວາມຮູ້ທີ່ຈະສອນ ແມ່ນແທ້ຜູ້ທີ່ເປັນນາຍຄຣູຜູ້ສອນຈະມີຄວາມຮູ້ພື້ນຖານມາບ້າງ ແຕ່ກໍຕ້ອງໄດ້ຮຽນຮູ້ເພີ່ມພູນຫລາຍຂຶ້ນ ເພື່ອໃຫ້ເກີດຄວາມຮູ້ຄວາມເຂົ້າໃຈທີ່ເລິກຊຶ້ງຂຶ້ນ ທີ່ຈະມີຄວາມຮູ້ແບ່ງປັນໃຫ້ກັບນັກຮຽນ

5. ການຝຶກອົບຮົມມີເປົ້າຫມາຍໃຫ້ນາຍຄຣູຜູ້ສອນໄດ້ຮຽນຮູ້ຈັກເທຄນິກເພີ່ມເຕີມໃນການສອນໃຫ້ເຫມາະສົມກັບການຮຽນຮູ້ຂອງນັກຮຽນໃນຫ້ອງຮຽນຂອງຕົນ ແລະເພີ່ມເຕີມຄວາມຊຳນານໃນວິທີການສອນ ແລະການແປຄວາມຫມາຍຂອງຄຳສອນໃຫ້ເຂົ້າກັບສະພາບຊີວິດຂອງນັກຮຽນ ເພື່ອໃຫ້ເກີດການຮຽນຮູ້ທີ່ເກີດຜົນແລະມີປະສິດທິພາບ

6. ການຝຶກອົບຮົມມີເປົ້າຫມາຍທີ່ຈະພັດທນາຄວາມສັມພັນທະພາບຂອງຜູ້ຮັບໃຊ້ຮ່ວມກັນ ໃຫ້ມີໂອກາດແລກປ່ຽນຄວາມຮູ້ຄວາມເຂົ້າໃຈແລະປະສົບການການສອນແກ່ກັນແລະກັນ ເປັນການຫນູນໃຈໃຫ້ຮູ້

ຈັກເຣັດວຽກຮ່ວມກັນໃນຄຣິສຈັກ

ສ່ວນປະກອບຕ່າງ ໆ ຂອງເປົ້າໝາຍໃນການຝຶກອົບຮົມແຕ່ລະຢ່າງເປັນຂໍ້ສເນີ ເພື່ອໃຫ້ຜູ້ຈັດການອົບຮົມມີແນວຄວາມຄິດທີ່ຈະພິຈາຣະນາເບິ່ງ ໃນການຈັດລາຍການຝຶກອົບຮົມແຕ່ລະເທື່ອ ການຈັດການຝຶກອົບຮົມແຕ່ລະເທື່ອເຮົາຕ້ອງມີຄວາມເຂົ້າໃຈວ່າ ທຸກຄົນທີ່ມີສ່ວນຮ່ວມຈະຕ້ອງໃຊ້ແຮງງານ ແລະເວລາຢ່າງຫລວງຫລາຍ ດັ່ງນັ້ນຈຶ່ງບໍ່ສົມຄວນຈັດໄປຢ່າງລ້າ ໆ ໂດຍບໍ່ເລັງເຖິງຈຸດເປົ້າໝາຍອັນໃດ ແມ່ນແທ້ມີຂໍ້ດີໃນການຈັດການຝຶກອົບຮົມມີຢູ່ສເມີ ແຕ່ຖ້າເຮົາຮູ້ຈັກວາງແຜນຢ່າງມີເປົ້າໝາຍກໍຈະບໍ່ຮູ້ສຶກໜ້າເບື່ອ ແລະຍັງສ້າງຄວາມກ້າວໜ້າແລະການຮຽນຮູ້ສິ່ງໃໝ່ ໆ ໃຫ້ແກ່ຜູ້ທີ່ໄດ້ຮັບການຝຶກອົບຮົມ

## ສາມ. <u>ການຈັດຕຽມຝຶກອົບຮົມຄນະຄຣູໃຫ້ຮູ້ຈັກວຽກການຮຽນການສອນ</u>

ຄວາມຮັບຜິດຊອບໃນເຣື່ອງການຈັດການຝຶກອົບຮົມຄນະຄຣູນັ້ນ ເປັນເຣື່ອງທີ່ແຕ່ລະຄຣິສຈັກຕ້ອງຈັດໃຫ້ມີຂຶ້ນເພື່ອພັດທນາຄຣິສຕຽນສຶກສາໃນຄຣິສຈັກຂອງຕົນ ຄຳຖາມມີຢູ່ວ່າ ໃຜແດ່ຈະເປັນຜູ້ເລີ່ມຕົ້ນໃນເຣື່ອງການຈັດຕຽມຝຶກອົບຮົມຄນະຄຣູນີ້

**1. ສິດຍາພິບາລ** ຄືອາຈານປະຈຳຄຣິສຈັກ ຕ້ອງເປັນຫົວລ້ຽວຫົວແຮງຈັດຕຽມການໃຫ້ມີການອົບຮົມ ເຖິງວ່າຕົນເອງບໍ່ສາມາດອົບຮົມຜູ້ອື່ນ ກໍຈຳເປັນຕ້ອງຊອກຫາ ເຊື້ອເຊີນເອົາຜູ້ຊຳນານມາຈາກທາງອື່ນ ມາຊ່ວຍເຫລືອໃຫ້ການອົບຮົມໃນເຣື່ອງຕ່າງ ໆ ຕາມຄວາມຕ້ອງການແລະຄວາມຂາດເຂີນຂອງຄນະຄຣູ ໃຫ້ຄນະຄຣູທີ່ມີສ່ວນໃນການຮັບໃຊ້ໄດ້ຮູ້ຮຽນ ແລະຮູ້ເຮັດ ດັ່ງພຣະທັມເອເຟໂຊ 4:12 ສອນວ່າ "ເພື່ອຈັດຕຽມໄພ່ພົນທັງຫລາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມ ເພື່ອເສີມສ້າງພຣະກາຍຂອງພຣະຄຣິສໃຫ້ຈະເຣີນຂຶ້ນ" ສິດຍາພິບານຈຳເປັນຕ້ອງເປັນຜູ້ທີ່ຮູ້ຈັກການຈັດຕຽມໃຫ້ມີການອົບຮົມສັ່ງສອນ ເພື່ອເກີດການເສີມສ້າງ ພຣະກາຍຂອງພຣະຄຣິສແມ່ນຄຣິສຈັກໃຫ້ຈະເຣີນຂຶ້ນ

**2. ຫົວໜ້າຝ່າຍການສຶກສາໃນຄຣິສຈັກ** ອາດຈະເປັນຄຣູໃຫຍ່ຂອງໂຮງຮຽນວັນອາທິດ ຫລືຫົວໜ້າຝ່າຍການຮຽນການສອນໃນຄຣິສຈັກຕ້ອງຮູ້ຈັກ ການຣິເລີ່ມຄວາມຄິດ ແລະກະຕຸ້ນໃຫ້ສິດຍາພິບາລສົນໃຈ ໃນການສແວງຫາເຣື່ອງໃຫ້ມີການຝຶກອົບຮົມ ຫາກວ່າສິດຍາພິບານເປັນຜູ້ຣິເລີ່ມແລະສົນໃຈໃນເຣື່ອງນີ້ຢູ່ແລ້ວ ຜູ້ນຳຝ່າຍການສຶກສາຕ້ອງໃຫ້ຄວາມຮ່ວມມື ກະຕືລືລົ້ນຊ່ວຍເຫລືອສິດຍາພິບາລໃນການຕິດຕໍ່ວາງແຜນງານທຸກ ໆ ດ້ານ ເພື່ອໃຫ້ງານດ້ານການຮຽນ ການສອນຈະໄດ້ເກີດຜົນສົມບູນແບບຍິ່ງຂຶ້ນ

**3. ສມາຊິກຄຣິສຈັກ** ໂດຍສະເພາະຢ່າງຍິ່ງຄຣິສຈັກນ້ອຍ ຫາຄົນທີ່ມີຄວາມສາມາດມາຊ່ວຍສອນໄດ້ຍາກ ສມາຊິກຄຣິສຈັກເປັນອົງປະກອບສຳຄັນທີ່ຈະຍອມເສັຍສລະເວລາ ແລະຍອມຮຽນຮູ້ຍອມທີ່ຈະຮຽນເຮັດໃຫ້ໄດ້ ບໍ່ດັ່ງນັ້ນແລ້ວ ການຈັດໃຫ້ມີການຝຶກອົບຮົມກໍບໍ່ເກີດປໂຍດຫຍັງ ສມາຊິກຄຣິສຈັກຈຳເປັນຕ້ອງໃຫ້ຄວາມຮ່ວມມືໃນເຣື່ອງນີ້ ບໍ່ເປັນຄົນມັກຄ້ານຫລາຍ ບໍ່ຕ້ອງຢ້ານ ແລະບໍ່ຕ້ອງອາຍ ຄວາມຈະເຣີນຈຶ່ງຈະເກີດແກ່ຄຣິສຈັກຂອງຕົນ

## ສີ່. <u>ການຝຶກອົບຮົມຄນະຄຣູຂັ້ນພື້ນຖານ</u>

ໃນການຝຶກອົບຮົມຄນະຄຣູຂັ້ນພື້ນຖານນີ້ ບໍ່ແມ່ນວ່າຜູ້ທີ່ຈະເປັນນາຍຄຣູເທົ່ານັ້ນຈຶ່ງເຂົ້າຮັບການຝຶກ

ອົບຮົມໄດ້ ແຕ່ລາງຄົນທີ່ຍັງບໍ່ໄດ້ເປັນນາຍຄຣູ ທີ່ມີຄວາມສົນໃຈໃນການຮັບໃຊ້ພຣະເຈົ້າໃນລາຍການຄຣິສຕຽນສຶກສາຂອງຄຣິສຕຈັກ ກໍຈະເຂົ້າຮັບການຝຶກອົບຮົມໄດ້ຄືກັນ ເຮົາບໍ່ຮູ້ຈັກວ່າເຮົາຈະຂາດເຂີນນາຍຄຣູຜູ້ສອນເມື່ອໃດ ແຕ່ຖ້າມີຜູ້ທີ່ສົນໃຈຮັບການຝຶກອົບຮົມໄວ້ ກໍເທົ່າກັບເຮົາໄດ້ນາຍຄຣູສຳຮອງໄວ້ ຖ້າຍາມໃດເກີດມີຄວາມຕ້ອງການຄວາມຊ່ວຍເຫລືອເມື່ອໃດ ກໍຈະມີຜູ້ທີ່ເຄີຍຜ່ານການຝຶກອົບຮົມໄວ້ແລ້ວເຂົ້າຊ່ວຍໃນວຽກການຮັບໃຊ້ໄດ້ທັນທີ ການຝຶກອົບຮົມຂັ້ນພື້ນຖານຈັດໃຫ້ມີຂຶ້ນກ່ອນທີ່ນາຍຄຣູຈະເຂົ້າຮັບໜ້າທີ່ ແລະເວລາທີ່ປັບປຸງຫ້ອງຮຽນໃຫມ່ຂອງຮອບປີການສຶກສາໃນແຕ່ລະປີ ການຝຶກອົກຮົມໂດຍທົ່ວ ໆ ໄປໃນຂັ້ນພື້ນຖານມີດັ່ງຕໍ່ໄປນີ້

1. ຝຶກອົບຮົມໃຫ້ນາຍຄຣູຜູ້ສອນຮູ້ຈັກຄວາມຮັບຜິດຊອບຂັ້ນພື້ນຖານ ຕົວຢ່າງ ການຮູ້ຈັກຕຽມສອນການຮູ້ຈັກມາສອນໃຫ້ຕົງຕໍ່ເວລາ ການຮູ້ຈັກໜ້າທີ່ຂອງຕົນແລະເຕັມໃຈປະຕິບັດໜ້າທີ່ໃຫ້ເຕັມສົມບູນ

2. ຝຶກອົບຮົມນາຍຄຣູຮູ້ຈັກຈົດບັນທຶກບັນຊີຂອງນັກຮຽນທີ່ມາຮຽນ ວ່າມີຈຳນວນຜູ້ມາຮຽນຈັກຄົນແລະຜູ້ທີ່ຂາດຮຽນຈັກຄົນ ເພື່ອການຕິດຕາມຜົນແລະການເຮັດລາຍງານຕ່າງ ໆ ສຳລັບຄວາມເຕີບໂຕກ້າວໜ້າຂອງຄຣິສຈັກ ໜ້າທີ່ນີ້ບາງເທື່ອໃຫ້ມີຜູ້ຊ່ວຍນາຍຄຣູເປັນຜູ້ເກັບກຳກໍໄດ້ ແຕ່ນາຍຄຣູປະຈຳຫ້ອງຮຽນຍັງຕ້ອງມີສ່ວນຮັບຮູ້ ແລະຕິດຕາມນັກຮຽນທີ່ຂາດບໍ່ໄດ້ມາຮຽນຫລາຍ ໆ ອາທິດ ເພື່ອຖາມຂ່າວທຸກສຸກ

3. ຝຶກອົບຮົມນາຍຄຣູໃຫ້ຮູ້ຈັກ ຄວາມຊຳນານໃຫ້ເຣື່ອງການສອນ ໂດຍການຝຶກແອບການສອນແລະໃຫ້ຄົນໃນກຸ່ມເກີດການຕິຊົມສເນີແນະ ໂດຍການເລີ້ມຝຶກສອນແກ່ຄົນກຸ່ມນ້ອຍ ໆ ເສັຍກ່ອນ ຫລືຝຶກສອນເດັກນ້ອຍເປັນຕົ້ນ ສິ່ງສຳຄັນ ຄື ຜູ້ທີ່ຈະສອນຕ້ອງຍອມຝຶກແອບ ແລະເຫັນວ່າໜ້າທີ່ຮັບຜິດຊອບຂອງຕົນມີກຽດ ອັນເປັນໜ້າທີ່ ໆ ພຣະເຈົ້າໄດ້ມອບຫມາຍໄວ້

4. ຝຶກອົບຮົມນາຍຄຣູໃຫ້ມີຄວາມຮູ້ຄວາມເຂົ້າໃຈໃນເຣື່ອງພຣະຄັມພີເພີ່ມພູນຂຶ້ນ ໃຫ້ຮູ້ຈັກການໃຊ້ຄຳສັພ ແລະຄວາມຫມາຍຂອງຄຳສັພໃນດ້ານຄວາມເຊື່ອທີ່ມີຢູ່ໃນພຣະຄັມພີ ໃຫ້ຮູ້ຄວາມເລິກຊຶ້ງຂອງຄຳເວົ້າແລະການຕີຄວາມຫມາຍໃຫ້ຂຍາຍອອກໄປຢ່າງຖືກຕ້ອງ ເພື່ອເປັນປໂຍດຕໍ່ຜູ້ຮຽນ ເຮັດໃຫ້ຜູ້ຮຽນເກີດຄວາມເຂົ້າໃຈໃນເຣື່ອງຄວາມພົ້ນແລະມີຊີວິດຝ່າຍວິນຍານຈິດ ດັ່ງນັ້ນນາຍຄຣູຜູ້ສອນຕ້ອງຝຶກແອບຕົນເອງ ອຸທິດຕົວຮຽນຮູ້ພຣະຄັມພີ ແລະຈະເຣີນເຕີບໂຕໃນຄວາມເຊື່ອ ຫາກວ່ານາຍຄຣູຜູ້ສອນບໍ່ມີຄວາມຮູ້ ແລະບໍ່ມີຄວາມຈະເຣີນເຕີບໂຕໃນຄວາມເຊື່ອ ການສອນຂອງນາຍຄຣູກໍຈະບໍ່ໄດ້ນຳຜູ້ຮຽນໃຫ້ໄປຮອດໃສໃນຄວາມເຊື່ອຝ່າຍຈິດວິນຍານ

5. ຝຶກອົບຮົມນາຍຄຣູໃຫ້ຮູ້ຈັກຄວາມສຳຄັນໃນການດຳເນີນຊີວິດຄຣິສຕຽນທີ່ເປັນແບບຢ່າງໃຫ້ກັບນັກຮຽນ ຫາກຊີວິດຂອງນາຍຄຣູບໍ່ໄດ້ຫມັ່ນຝຶກແອບຂັບຕາມຄຳສອນຊຶ່ງເປັນພຣະວັຈນະຂອງພຣະເຈົ້າແລ້ວການສອນກໍບໍ່ມີນ້ຳຫນັກ ນາຍຄຣູຈຳເປັນຕ້ອງມີຊີວິດອັນຊອບທັມ ທີ່ເປັນແບບຢ່າງນຳພາຜູ້ອື່ນໃນດ້ານຄວາມເຊື່ອ ຊຸກຍູ້ໃຫ້ຜູ້ອື່ນໃຫຍ່ຂຶ້ນໃນຊີວິດຄຣິສຕຽນ

6. ຝຶກອົບຮົມນາຍຄຣູໃຫ້ຮູ້ຈັກການສ້າງສັມພັນທະພາບອັນດີຣະຫວ່າງຜູ້ສອນກັບຜູ້ທີ່ຕົນສອນ ຄືນັກຮຽນ ການຮຽນການສອນຈະເກີດຜົນດີ ຫາກວ່າມີຄວາມສັມພັນແລະບັນຍາກາດຂອງການຮຽນມ່ວນ ສນຸກສນານ ພາກັນເພີ່ມພູນຄວາມຮູ້ທີ່ຕ່າງຄົນຕ່າງໄດ້ຮັບຈາກການຮຽນການສອນ ຈະເຮັດໃຫ້ຜູ້ສອນເກີດມີກຳລັງໃຈຢາກສອນ ແລະເຮັດໃຫ້ຜູ້ຮຽນເກີດກຳລັງໃຈຢາກຮຽນ ດັ່ງນັ້ນນາຍຄຣູຜູ້ສອນຕ້ອງຮູ້ຈັກທຳໃຫ້ຜູ້ຮຽນເກີດຄວາມຢາກຮຽນຮູ້ ແລະມີໃຈສັດທາຢາກມາຮຽນ

7. ຝຶກອົບຮົມນາຍຄຣູໃຫ້ມີຮູ້ຈັກຄວາມຮູ້ພື້ນຖານກ່ຽວກັບຄຣິສຈັກຕົນ ໃນເຣື່ອງຕໍ່ໄປນີ້

ກ. ຮູ້ຈັກພາຣະໜ້າທີ່ຂອງການເປັນສມາຊິກຂອງຄຣິສຈັກ

ຂ. ຮູ້ຈັກການຈັດຕັ້ງອົງການ ແລະການບໍຣິຫານງານຂອງຄຣິສຈັກ
ຄ. ຮູ້ຈັກການອອກໄປປະກາດຂ່າວປະເສີດ ແລະການເປັນພຍານ
ງ. ຮູ້ຈັກເປີດພຣະຄັມພີອ່ານເປັນປະຈຳ
ຈ. ຮູ້ຈັກຫລັກຂໍ້ເຊື່ອສຳຄັນ ທີ່ຄຣິສຕຽນຍຶດໝັ້ນ
ສ. ຮູ້ຈັກຜູ້ຮຽນໃນວັຍຕ່າງ ໆ ທີ່ຄຣິສຈັກມີ ເຊັ່ນ ເດັກນ້ອຍ ຊາວໜຸ່ມ ຜູ້ໃຫຍ່
ຊ. ຮູ້ຈັກຈັດຫ້ອງຮຽນ ແລະຈັດອຸປກອນການຮຽນ

## ຫ້າ. ການຝຶກອົບຮົມເມື່ອເຂົ້າຮັບໜ້າທີ່ເປັນນາຍຄຣູ

ລາງຄຣິສຈັກອາດຈະບໍ່ມີໂອກາສທີ່ຈະໃຫ້ທຸກຄົນທີ່ຮັບໜ້າທີ່ເປັນນາຍຄຣູໄດ້ຮັບການຝຶກອົບຮົມກ່ອນເຂົ້າຮັບໜ້າທີ່ ອາດເປັນເພາະຂາດຜູ້ທີ່ມີຄວາມຮູ້ຄວາມສາມາດທີ່ຈະໃຫ້ການອົບຮົມ ຫລືລາງເທື່ອບໍ່ມີໂອກາດເປີດໃຫ້ ແຕ່ທີ່ແທ້ຈິງແລ້ວເປັນສິ່ງທີ່ສຳຄັນຕໍ່ຜູ້ທີ່ເປັນນາຍຄຣູໃໝ່ ຢ່າງນ້ອຍທີ່ສຸດຄວນຈະມີການໃຫ້ການແນະນຳເປັນສ່ວນຕົວຫລາຍກວ່າທີ່ຈະຈັດໃຫ້ມີການຝຶກອົບຮົມເປັນຄົນກຸ່ມໃຫຍ່ ຄຳແນະນຳໃນເບື້ອງຕົ້ນເປັນສິ່ງທີ່ຊ່ວຍຊີ້ແນະໃຫ້ນາຍຄຣູໃໝ່ຮູ້ຈັກໜ້າທີ່ແລະເບິ່ງເຫັນຫົນທາງໃນດ້ານປະຕິບັດທີ່ເປັນຊີວິດຈິງຫລາຍກວ່າ ເຮັດໃຫ້ນາຍຄຣູຮູ້ແຈ້ງວ່າຕົວຈະຕ້ອງປະຕິບັດໜ້າທີ່ຂອງຕົນເອງແນວໃດ

ເມື່ອເຂົ້າຮັບໜ້າທີ່ແລ້ວ ກໍມີຄວາມຈຳເປັນຕ້ອງມີຜູ້ໃຫ້ຄຳປຶກສາແນະນຳໃນຣະຫວ່າງການທຳໜ້າທີ່ເປັນຄຣູ ໂດຍທົ່ວໄປຈະເປັນສິດຍາພິບາລສຳລັບຄຣິສຈັກນ້ອຍ ຄຣິສຈັກທີ່ມີຈຳນວນສມາຊິກຫລາຍຈະເປັນຄຣູໃຫຍ່ໂຮງຮຽນວັນອາທິດ ຫລືຫົວໜ້າຜູ້ເບິ່ງແຍງໃນເຣື່ອງໂຮງຮຽນວັນອາທິດ ໃນກໍຣະນີນີ້ເຮົາເຫັນໄດ້ຊັດວ່າ ຜູ້ໃດຈະເປັນສິດຍາພິບາລຫລືຄຣູໃຫຍ່ຈຳເປັນຕ້ອງມີຄວາມຮູ້ຄວາມເຂົ້າໃຈພື້ນຖານໃນເຣື່ອງຄຣິສຕຽນສຶກສາຢູ່ບ້າງ ຖ້າເປັນໄປໄດ້ຕ້ອງມີຄວາມຊຳນານແລະປະສົບການໃນການຮຽນການສອນດ້ວຍ ເພື່ອຈະສາມາດໃຫ້ຄຳແນະນຳແລະການນຳພາແກ່ນາຍຄຣູໄປໃນທິດທາງທີ່ຖືກຕ້ອງ ແລະນຳໃຫ້ເກີດການພັດທນາຄຣິສຈັກ ເຮົາເຫັນໄດ້ວ່າຖ້າຄຣິສຈັກໃດເອົາໃຈໃສ່ໃນເຣື່ອງນີ້ຈິງແທ້ແລ້ວ ນາຍຄຣູຜູ້ທີ່ຮັບໜ້າທີ່ໃນການສອນຈະມີກຳລັງໃຈຫລາຍຍິ່ງຂຶ້ນ ແລະໄດ້ຮຽນຮູ້ໃນການປະຕິບັດການໃນສະພາບການທີ່ເປັນຈິງ ຊຶ່ງເປັນຫລັກການທີ່ສຳຄັນໃນຄຣິສຕຽນສຶກສາ ຄຣິສຈັກຄວນໃຫ້ການຝຶກອົບຮົມແກ່ຜູ້ທີ່ເປັນນາຍຄຣູດັ່ງຕໍ່ໄປນີ້

(ນຶ່ງ.) **ໃຫ້ການຝຶກອົບຮົມແກ່ຜູ້ທີ່ເປັນຄຣູໃໝ່** ເປັນການແນະນຳໃຫ້ຮູ້ຈັກໜ້າທີ່ແລະຂໍ້ຄວນປະຕິບັດ ຊຶ່ງອາດຈະເຮັດເປັນລາຍການໄວ້ດັ່ງນີ້

### ຂໍ້ຄວນປະຕິບັດສຳລັບນາຍຄຣູໃໝ່

**1. ກ່ອນທີ່ຈະການສອນ**

**ກ.** ຄວນຈະຮຽນຮູ້ຈັກຫລັກສູດຫລືຊຸດບົດຮຽນທີ່ຈະສອນຢ່າງກວ້າງ ໆ ໃຫ້ຮູ້ຈັກວ່າຫລັກສູດຫລືຊຸດບົດຮຽນທີ່ກຳລັງຈະສອນນີ້ມີຄວາມມຸ່ງໝາຍອັນໃດ ແລະຕ້ອງການເນັ້ນໜັກໃນຄຳສອນດ້ານໃດ ການຮຽນຮູ້ນີ້ເພື່ອຊ່ວຍໃຫ້ນາຍຄຣູເກີດຄວາມເຂົ້າໃຈ ແລະຮູ້ຈັກທິດທາງທີ່ຕົນຈະນຳພານັກຮຽນໃນຄຳສອນຂອງແຕ່ລະບົດ ຖ້າຂາດຄວາມຮູ້ຄວາມເຂົ້າໃຈເບື້ອງຕົ້ນນີ້ແລ້ວ ການສອນບົດຮຽນໃນແຕ່ລະບົດອາດຈະບໍ່ສົ່ງເສີມ

ແລະຕໍ່ເນື່ອງກັບບົດຮຽນບົດອື່ນ ໆ

ຂ. ຈະຕ້ອງຮຽນຮູ້ຈັກນັກຮຽນໃນຫ້ອງຮຽນທີ່ຈະສອນ ຕົວຢ່າງ ນັກຮຽນມີອາຍຸຢູ່ຣະດັບໃດ ມີຜູ້ໃດບ້າງແດ່ເປັນນັກຮຽນຂອງເຮົາ ມີຫມາຍເລກໂທຣະສັບຂອງນັກຮຽນທີ່ຕິດຕໍ່ໄດ້ບໍ່ ນັກຮຽນຜູ້ໃດຮັບເຊື່ອແລ້ວແລະຜູ້ໃດຍັງບໍ່ໄດ້ຮັບເຊື່ອ ຜູ້ໃດເປັນສມາຊິກຖາວອນຂອງຄຣິສຈັກແລ້ວ ແລະຜູ້ໃດຍັງບໍ່ໄດ້ເປັນ ຂໍ້ມູລຕ່າງ ໆ ເຫລົ່ານີ້ສ່ວນຫລາຍຕ້ອງເກັບກໍາໃສ່ປື້ມທີ່ໄດ້ຈົດບັນທຶກໄວ້ ເພື່ອໃຊ້ໃນການວັດຜົນ ຫລືຕິດຕາມໃຫ້ເກີດຄວາມຈະເຣີນກ້າວຫນ້າແກ່ນັກຮຽນ

ຄ. ຖ້າເປັນໄປໄດ້ກໍຄວນຢ້ຽມຢາມຫ້ອງຮຽນນັ້ນກ່ອນນຶ່ງອາທິດລ່ວງຫນ້າ ເພື່ອໃຫ້ເກີດຄວາມລຶ້ງເຄີຍກັບນັກຮຽນ ແລະຈະໄດ້ສັມຜັສກັບສະພາບຄວາມເປັນຈິງຂອງຫ້ອງຮຽນ

## 2. ວັນອາທິດທໍາອິດທີ່ສອນ

ກ. ແນະນໍາຕົວເອງ ຂຽນຊື່ຕົວເອງເທິງກະດານ ເພື່ອໃຫ້ນັກຮຽນຈະໄດ້ຮູ້ຈັກຊື່ທີ່ສະກົດຖືກຕ້ອງ ແນະນໍາໃຫ້ຮູ້ຈັກພື້ນເບື້ອງຫລັງເລັກນ້ອຍ ແລະຮຽນຮູ້ຈັກນັກຮຽນຊື່ນັກຮຽນທຸກຄົນໃນຫ້ອງ

ຂ. ເລີ້ມຕົ້ນການສອນໂດຍມີແຜນການສອນທີ່ວາງໄວ້ລ່ວງຫນ້າຢ່າງດີ ແຜນການສອນເປັນແນວຄວາມຄິດ ທີ່ຊ່ວຍໃຫ້ນາຍຄຣູຮູ້ຈັກວ່າຈະໃຫ້ນັກຮຽນຮຽນຮູ້ຫຍັງແລະເຮັດຫຍັງໃນຫ້ອງຮຽນ ນາຍຄຣູຄວນຈະມີບົດຮຽນທີ່ໄດ້ຕຽມສອນໄວ້ແລ້ວ ແລະມີແຜນການທີ່ວາງໄວ້ເພື່ອໃຫ້ນັກຮຽນມີສ່ວນຮ່ວມຮຽນຮູ້ໃນບົດຮຽນ ເຊັ່ນຂໍ້ ທ່ອງຂຶ້ນໃຈ ຫລືຫົວຂໍ້ອະພິປາຍຕ່າງ ໆ ທີ່ໄດ້ຕັ້ງຄໍາຖາມໄວ້ແລ້ວລ່ວງຫນ້າ ການວາງແຜນໄວ້ເປັນສາຍການນໍາພາໃຫ້ນາຍຄຣູຮູ້ຈັກວ່າ ເວລາທີ່ຕົນມີຢູ່ໃນຫ້ອງຮຽນນັ້ນ ຈະໃຫ້ເກີດປໂຍດແກ່ນັກຮຽນໄດ້ແນວໃດ ການວາງແຜນໄວ້ດີກວ່າບໍ່ມີແຜນການເລີຍ ເພາະຖ້າບໍ່ໄດ້ວາງແຜນເຮັດໃຫ້ນັກຮຽນເບື່ອ ແລະບໍ່ກ້າວຫນ້າໄປໃສ ຖ້າເປັນໄດ້ໃຫ້ວາງແຜນການສອນໄວ້ລ່ວງຫນ້າ 3 ເຖິງ 4 ບົດຮຽນ

ຄ. ການສຶກສາຄູ່ມືບົດຮຽນຕ່າງ ໆ ຊ່ວຍໃຫ້ເກີດຄວາມຮູ້ພື້ນຖານແກ່ນາຍຄຣູ ແຕ່ບໍ່ແມ່ນວ່າເຮົາຈະສາມາດສອນທຸກສິ່ງທຸກຢ່າງທີ່ເຮົາໄດ້ຮຽນຮູ້ໃຫ້ຫມົດໃນບົດຮຽນດຽວ ນາຍຄຣູຕ້ອງຮູ້ຈັກວ່າ ວັນນີ້ຫົວຂໍ້ແມ່ນຫຍັງ ຄວາມຈິງຈາກພຣະວັຈນະຂອງພຣະເຈົ້າທີ່ສອນເຮົາແມ່ນຫຍັງ ໃນຄວາມຈິງນີ້ຊີ້ໃຫ້ເຮົາປະຕິບັດແນວໃດສໍາລັບຄວາມເຊື່ອຂອງເຮົາ ບໍ່ເນັ້ນຄວນຫລາຍແນວເກີນໄປເຮັດໃຫ້ນັກຮຽນສັບສົນ ແລະບໍ່ເຫັນຈຸດເດັ່ນທີ່ເຂົາຈະນໍາໄປປະຕິບັດໄດ້

ງ. ນາຍຄຣູຕ້ອງມາແຕ່ເຊົ້າກ່ອນເວລາເພື່ອຕຽມການ ໃຫ້ເບິ່ງວ່າທຸກສິ່ງທຸກຢ່າງໃນຫ້ອງຮຽນແລະອຸປະກອນຕ່າງ ໆ ທີ່ຕ້ອງໃຊ້ນັ້ນມີຄົບຖ້ວນຮຽບຮ້ອຍບໍ່ ເພື່ອໃຫ້ການຮຽນບໍ່ໄດ້ຕິດຂັດແລະຂາດຄວາມສົນໃຈຈາກນັກຮຽນ ຄວນຈະຈັດບົດຮຽນແລະໃຫ້ຕັ່ງນັ່ງເຫມາະສົມກັບວິທີການສອນທີ່ວາງແຜນໄວ້ ແລະເບິ່ງວ່າຫ້ອງສະອາດຫລືບໍ່ ຫນາວຫລືຮ້ອນໄປຫລືບໍ່ ເພາະວ່າສິ່ງຕ່າງ ໆ ເຫລົ່ານີ້ເປັນອຸປສັກແກ່ການຮຽນໄດ້ ເມື່ອນັກຮຽນມີຄວາມຮູ້ສຶກບໍ່ສະບາຍໃຈ

ຈ. ການສອນຄວນໃຫ້ມີບັນຍາກາດຂອງຄວາມເປັນກັນເອງ ຣະຫວ່າງນາຍຄຣູກັບນັກຮຽນ ນັກຮຽນກັບນັກຮຽນ ແລະໃຫ້ນັກຮຽນທຸກຄົນມີຄວາມຮູ້ສຶກຂອງການຮຽນຮູ້ຮ່ວມກັນ ໂດຍເປີດໂອກາດໃຫ້ນັກຮຽນຊ່ວຍຕອບຄໍາຖາມບ້າງ ຫລືສະແດງຄວາມຄິດເຫັນ ແຕ່ແລ້ວໃນທີ່ສຸດນາຍຄຣູຕ້ອງສາມາດນໍາພາໃຫ້ສລູບເຂົ້າກັບບົດຮຽນປະຈໍາວັນທີ່ຕົນສອນ

ສ. ນາຍຄຣູຄວນໃຫ້ການຍອມຮັບແລະໃຫ້ກຽດແກ່ນັກຮຽນທີ່ມີຜົນງານ ຫລືນັກຮຽນທີ່ມີແນວຄວາມຄິດທີ່ດີ ທີ່ຊ່ວຍໃນການເສີມສ້າງການຮຽນ ຄໍາສັ່ງຫລືຂໍ້ສເນີສິ່ງນຶ່ງອັນໃດຂອງນາຍຄຣູຕ້ອງຊັດແຈ້ງ ເມື່ອນັກຮຽນປະຕິບັດໄດ້ຖືກຕ້ອງນາຍຄຣູກໍສົມຄວນໃຫ້ການຍົກຍໍ ເພື່ອເປັນການສະແດງອອກເຖິງການຍອມ

ຮັບ ແລະເຮັດໃຫ້ນັກຮຽນມີກຳລັງໃຈໃນການຕິດຕາມບົດຮຽນ

ຊ. ນາຍຄຣູຄວນສນັບສນຸນໃຫ້ເກີດຄວາມຊ່ວຍເຫລືອນັກຮຽນທີ່ອ່ອນກວ່າໃນຫ້ອງຮຽນ ຈະເປັນດ້ານສະຕິປັນຍາພື້ນຖານຄວາມຮູ້ ກຳລັງກາຍຫລືກຳລັງໃຈ ເພື່ອເປັນແນວຄວາມຄິດຫລືແບບຢ່າງຂອງຄວາມຮັກຂອງພຣະເຈົ້າ ແລະການຮູ້ຈັກສ້າງທີມເພື່ອນຮ່ວມງານດ້ວຍກັນ

## (ສອງ.) ການໃຫ້ຄຳແນະນຳສ່ວນຕົວໃຫ້ແກ່ຜູ້ທີ່ເປັນນາຍຄຣູໃໝ່

ຜູ້ທີ່ເລີ້ມຕົ້ນເປັນນາຍຄຣູໃໝ່ຕ້ອງການຄວາມຊ່ວຍເຫລືອສເມີ ການແນະນຳສ່ວນຕົວຈາກສິດຍາພິບາລຫລືຄຣູໃຫຍ່ ຍ່ອມເປັນສິ່ງຈຳເປັນສຳລັບນາຍຄຣູໃໝ່ ການຂາດປະສົບການຂອງນາຍຄຣູມັກນຳໃຫ້ເກີດຄວາມບໍ່ໝັ້ນໃຈ ລາວເຫື່ອອາດເປັນບົດຮຽນທີ່ບໍ່ລຶ້ງເຄີຍ ທີ່ຕ້ອງການຄຳປຶກສາແນະນຳ ດັ່ງນັ້ນການໃຫ້ຄຳປຶກສາແນະນຳເປັນການສ່ວນຕົວ ເປັນສິ່ງສຳຄັນໃນການສອນແລະການຮຽນຮູ້ ທີ່ໃກ້ກັບຄວາມເປັນຈິງແລະພາກປະຕິບັດຫລາຍທີ່ສຸດ ເພາະບັນຫາບາງຢ່າງອາດເກີດຂຶ້ນໄດ້ໂດຍບໍ່ໄດ້ຄາດໝາຍໄວ້ ຜູ້ທີ່ໃຫ້ຄຳປຶກສາແນະນຳ ຄວນນຳພາໃຫ້ເກີດການຮຽນຮູ້ຮ່ວມກັນຫລາຍກວ່າ ທີ່ຈະເປັນຜູ້ຮູ້ໄປໝົດ ມີຄຳຕອບສຳລັບທຸກສິ່ງທຸກຢ່າງ ການໃຫ້ຄຳແນະນຳດ້ວຍການຮຽນຮູ້ຮ່ວມກັນເປັນການຊີ້ຊ່ອງທາງ ແລະປະສົບການໃຫ້ເກີດການຮຽນຮູ້ດ້ວຍຕົນເອງ ທຳໃຫ້ຮູ້ຈັກຄົ້ນຄວ້າແລະແກ້ໄຂບັນຫາຮ່ວມກັນ

## (ສາມ.) ການໃຫ້ຄຳແນະນຳຄູ່ມືສຳລັບອ່ານປະກອບ

ມີໜັງສືຕຳຣາຫລາຍຊະນິດນອກຈາກໜັງສືຄູ່ມືຄຣູທີ່ມີມາກັບບົດຮຽນ ແຕ່ສິ່ງທີ່ສຳຄັນທີ່ສຸດຄື ຖ້າມີໜັງສືຄູ່ມືບົດຮຽນປະກອບກັບບົດຮຽນແລ້ວ ກໍໃຫ້ອ່ານໜັງສືຄູ່ມືກ່ອນສິ່ງອື່ນ ການຄົ້ນຄວ້າຈາກແຫລ່ງອື່ນ ໆ ລາວເຫື່ອກໍ່ໃຫ້ເກີດຄວາມສັບສົນ ນອກຈາກນາຍຄຣູຈະມີພື້ນຖານຄວາມຮູ້ພໍຄວນ ຖ້າບໍ່ມີໜັງສືຄູ່ມືຄຣູກໍຕ້ອງສຶກສາບົດຮຽນໃຫ້ລຶກຫລາຍທີ່ສຸດ ແລ້ວປຶກສາຫາຄວາມຮູ້ເພີ່ມເຕີມຈາກສິດຍາພິບາລຫລືຄຣູໃຫຍ່ ຖ້າຫາກທ່ານບໍ່ມີຄວາມຄຳຕອບທີ່ເຫມາະສົມ ທ່ານກໍຈະຮູ້ຈັກຊ່ວຍຄົ້ນຄວ້າຊອກຫາຄວາມຮູ້ຄວາມເຂົ້າໃຈນັ້ນມາໄຂໃຫ້ພາຍຫລັງໄດ້ ການສຶກສາຫາຄວາມຮູ້ເພີ່ມເຕີມເປັນສິ່ງທີ່ສຳຄັນເຊັ່ນດຽວກັນ ເພາະຈະເຮັດໃຫ້ນາຍຄຣູເກີດຄວາມກະຈ່າງແຈ້ງ ແລະມີຄວາມໝັ້ນໃຈໃນການສອນ ເປັນທັມມະດາທີ່ນາຍຄຣູຕ້ອງຮຽນຫລາຍກວ່າລູກສິດ ດັ່ງນັ້ນເມື່ອເຮົາພົບເຫັນອຸປະກອນທີ່ເຫມາະສົມກັບການຄົ້ນຄວ້າ ກໍໃຫ້ສະສົມໄວ້ ໂດຍສະເພາະທີ່ເປັນພາສາລາວເພາະຊອກຫາຍາກຢູ່ ເມື່ອພົບເຫັນທີ່ໃດຄຣິສຈັກຄວນຊອກຫາໄວ້ເປັນຂອງກາງ ໂດຍຈັດໃຫ້ມີຣະບົບຫ້ອງສະມຸດ ເພື່ອສະດວກໃນການເກັບຮັກສາ ແລະຜູ້ອື່ນຈະໄດ້ມີໂອກາດສຶກສາຄົ້ນຄວ້າອີກດ້ວຍ

## (ສີ່.) ການຮຽນຮູ້ໂດຍການສັງເກດເບິ່ງຜູ້ອື່ນສອນ

ການຝຶກອົບຣົມທີ່ເກີດຜົນດີ ແມ່ນເປັນການຮຽນຮູ້ໂດຍການສັງເກດເບິ່ງຜູ້ອື່ນສອນ ການສັງເກດເບິ່ງເປັນສິ່ງທີ່ໃຫ້ຜູ້ຮັບການຝຶກອົບຣົມຮູ້ຈັກວ່າ "ແມ່ນຫຍັງ (why) ຈຶ່ງສອນແນວນັ້ນ" ແລະ "ມີການສອນແນວໃດ (how) ໄດ້ແດ່" ການສັງເກດເບິ່ງອາດເຮັດໄດ້ດັ່ງນີ້

(1) ໂດຍການເປັນຄຣູຜູ້ຊ່ວຍຂອງນາຍຄຣູທີ່ມີຄວາມຊຳນານໃນການສອນ

(2) ໃຫ້ມີການຢ້ຽມຢາມໃນຫ້ອງທີ່ມີຫລັງການສອນທີ່ດີທີ່ສຸດໃນຄຣິສຈັກ
(3) ໄປຢ້ຽມຢາມຫ້ອງຮຽນຂອງຄຣິສຈັກອື່ນ
(4) ຈັດໃຫ້ມີການຝຶກອົບຮົມຂຶ້ນເປັນພິເສດແລະເຊີນຜູ້ທີ່ມີຄວາມຊຳນານມາອົບຮົມ ແລະສອນເປັນແບບຢ່າງໃຫ້

**(ຫ້າ.) ການປະຊຸມນາຍຄຣູ**

ມີຄວາມສຳຄັນທີ່ຈະຈັດໃຫ້ມີການປະຊຸມນາຍຄຣູຂອງທຸກຫ້ອງຮຽນໃນຄຣິສຈັກ ເພື່ອເປັນການປຶກສາເຖິງການຮຽນການສອນ ບັນຫາບາງຢ່າງເຮົາອາດຈະຮຽນຮູ້ຮ່ວມກັນ ອະທິຖານຮ່ວມກັນ ການປະຊຸມທຸກເທື່ອບໍ່ສົມຄວນໃຫ້ສມາຊິກຄົນອື່ນ ໆ ມາ ຄວນເປັນການປະຊຸມພາຍໃນຄນະນາຍຄຣູແລະເຈົ້າໜ້າທີ່ໂຮງຮຽນວັນອາທິດ ການປະຊຸມຄວນຢູ່ໃນຂອບເຂດຂອງການຮຽນການສອນເທົ່ານັ້ນ ບໍ່ຄວນກາຍ ຫລືລ່ວງລ້ຳໜ້າທີ່ການງານຂອງພະແນກອື່ນ ການປະຊຸມໃນໝູ່ນາຍຄຣູດ້ວຍກັນເປັນການຊຸກຍູ້ຊູອ້ານຊູພາໃຫ້ຜູ້ຮັບໃຊ້ດ້ວຍກັນມີກຳລັງໃຈ ບາງເທື່ອເປັນການແບ່ງປັນພຣະພອນ ທີ່ໄດ້ຮັບຈາກການສອນຂອງຕົນເຮັດໃຫ້ການສອນ ແລະວຽກງານຂອງໂຮງຮຽນວັນອາທິດມີຄຸນພາບຫລາຍຍິ່ງຂຶ້ນ

**ຫົກ. <u>ການພັດທນາຄນະນາຍຄຣູ</u>**

ສິດຍາພິບານແລະຄຣູໃຫຍ່ ເປັນບຸກຄົນສຳຄັນທີ່ຈະນຳພາໃນດ້ານການຈັດການຝຶກອົບຮົມແລະຈັດຕຽມແຜນການຝຶກອົບຮົມລ່ວງໜ້າ ຕ້ອງຮູ້ຈັກສຶກສາສັງເກດວ່າການອົບຮົມໃນດ້ານໃດສຳຄັນທີ່ສຸດໃນການພັດທນາຄນະຄຣູໃນຄຣິສຈັກຂອງຕົນ ແລະຕ້ອງຈັດການຝຶກອົບຮົມໃດຂຶ້ນກ່ອນຫລືຫລັງໂດຍໃຊ້ຫລັກການດັ່ງນີ້

1. ສິດຍາພິບານແລະຄຣູໃຫຍ່ ຕ້ອງຮູ້ຈັກເວົ້ານຳສມາຊິກ ວ່າເຂົາຢາກຮຽນຮູ້ໃນເຣື່ອງໃດໂດຍສະເພາະ ຖາມນາຍຄຣູຜູ້ທີ່ສອນຜູ້ອື່ນວ່າ ເຂົາມີຄວາມຂາດເຂີນໃນດ້ານໃດ ແລ້ວສິດຍາພິບານແລະຄຣູໃຫຍ່ກໍຈະຈັດຫາການອົບຮົມໃນດ້ານນັ້ນໃຫ້ຕົງກັບຄວາມຕ້ອງການ

2. ສິດຍາພິບາລແລະຄຣູໃຫຍ່ ຕ້ອງຮູ້ຈັກການສັງເກດແລະພິຈາຣະນາເບິ່ງໂດຍກົງວ່າ ການຮຽນການສອນໃນຫ້ອງຕ່າງ ໆ ຂອງຄຣິສຈັກຍັງຂາດເຂີນຫຍັງແດ່ ຄວນພິຈາຣະນາເບິ່ງດ້ານການສອນອຸປກອນການສອນ ຄວາມຊຳນານຂອງນາຍຄຣູຜູ້ສອນ ສະຖານທີ່ ເວລາ ວັຍຂອງຜູ້ເຂົ້າມາຮຽນ ຫາກພົບວ່າມີຈຸດໃດທີ່ຂາດຕົກບົກພ່ອງ ຫລືຕ້ອງມີການເສີມສ້າງໃຫ້ດີຂຶ້ນແນວໃດ ກໍໃຫ້ຈັດການອົບຮົມໃນເຣື່ອງນັ້ນທັນທີ ໂດຍຜູ້ທີ່ມີຄວາມຊຳນານສະເພາະ

3. ສິດຍາພິບານແລະຄຣູໃຫຍ່ ຕ້ອງມີຄວາມວ່ອງໄວໃນການຮັບຮູ້ວ່າມີບ່ອນໃດ ຫລືການປະຊຸມໃດທີ່ຈັດການຝຶກອົບຮົມຂຶ້ນເປັນສ່ວນຮວມ ຈະເປັນການຝຶກອົບຮົມປະຈຳປີໃນບ່ອນໃດກໍແລ້ວແຕ່ ໃຫ້ນຳພາສມາຊິກຜູ້ສົນໃຈໄປຮັບການຝຶກອົບຮົມ ເພື່ອເປັນການເສີມສ້າງຄວາມຮູ້ຄວາມສາມາດແກ່ສມາຊິກລະຈະເປັນປໂຍດຕໍ່ວຽກການຮັບໃຊ້ໃນອານາຄົດ

4. ສິດຍາພິບານແລະຄຣູໃຫຍ່ ຄວນເຮັດວຽກນຳກັນ ໂດຍການນັ່ງລົງພິຈາຣະນາເບິ່ງເຖິງັນຫາທີ່ມີຢູ່ໃນຄຣິສຈັກ ວ່າຈຳເປັນຕ້ອງມີການສິ່ງເສີມດ້ານໃດ ໂດຍການປະຊຸມປຶກສານຳກັນ ແລ້ວຽນອອກເປັນລາຍການທີ່ເຫັນວ່າ ຄຣິສຈັກທີ່ຕົນຮັບຜິດຊອບຢູ່ນີ້ມີຄວາມຕ້ອງການອັນຈຳເປັນທີ່ສຸດດ້ານໃດ

ລ້ວໃຫ້ຕັ້ງຕົ້ນຈັດການຝຶກອົບຮົມທີ່ລະລາຍການເປັນອັນດັບໄປຕາມເວລາທີ່ເໝາະສົມ

5. ຮູ້ຈັກຮູ້ຈັກຮັບຟັງ  ຍອມຟັງຄຳຕິຊົມ  ຍອມຟັງຄວາມຈິ່ມ ຍອມຟັງບັນຫາ ຍອມຮັບຟັງຂໍ້ສເນີ ລະດີໃຈຟັງເມື່ອມີສມາຊິກມາລາຍງານເຖິງຜົນສຳເຣັດ  ສິດຍາພິບານແລະຜູ້ນຳຄຣິສຈັກຕ້ອງເປັນຄົນ ອມຮັບຟັງຄວາມທຸກສຸກດິບຂອງສມາຊິກ ແລະຂອງຜູ້ຮ່ວມງານ  ນາຍຄຣູຜູ້ສອນຈະມີຫລາຍເຣື້ອງຫລາຍ ນວມາເລົ່າສູ່ໃຫ້ຟັງ  ການຟັງຈະຊ່ວຍໃຫ້ເຮົາເຂົ້າໃຈເຖິງຖານະແລະບັນຫາຂອງເຂົາເຈົ້າ  ເມື່ອຟັງ ລ້ວ ເຮັດໃຫ້ເຮົາຮູ້ຈັກບາດກ້າວຕໍ່ໄປວ່າຈະເຮັດຫຍັງ ຈະອົບຮົມຫຍັງເພື່ອຊ່ວຍສົ່ງເສີມເຂົາເຈົ້າຕໍ່ໄປ ລະຢ່າງນ້ອຍທີ່ສຸດ ການຮູ້ຈັກຟັງເຮັດໃຫ້ຜູ້ທີ່ມາເລົ່າໃຫ້ຟັງນັ້ນເກີດຄວາມດີໃຈ ວ່າມີຮູ້ສືນໃຈເຂົາເຈົ້າ ຂົາເຈົ້າບໍ່ໄດ້ເຮັດວຽກແຕ່ລຳພັງ  ແຕ່ມີຜູ້ນຳຮັບຟັງທີ່ຢູ່ຝ່າຍເຂົາເຈົ້າ

ແລະຈະເປັນປໂຍດຕໍ່ວຽກການຮັບໃຊ້ໃນອານາຄົດ

4. ສິດຍາພິບານແລະຄຣູໃຫຍ່  ຄວນເຮັດວຽກນຳກັນ ໂດຍການນັ່ງລົງພິຈາຣະນາເບິ່ງເຖິງບັນຫາທີ່ມີຢູ່ໃນຄຣິສຈັກ ວ່າຈຳເປັນຕ້ອງມີການສົ່ງເສີມດ້ານໃດ ໂດຍການປະຊຸມປຶກສານຳກັນ  ແລ້ວຂຽນອອກເປັນລາຍການທີ່ເຫັນວ່າ ຄຣິສຈັກທີ່ຕົນຮັບຜິດຊອບຢູ່ນີ້ມີຄວາມຕ້ອງການອັນຈຳເປັນທີ່ສຸດດ້ານໃດ ແລ້ວໃຫ້ຕັ້ງຕົ້ນຈັດການຝຶກອົບຮົມທີ່ລະລາຍການເປັນອັນດັບໄປຕາມເວລາທີ່ເໝາະສົມ

5. ຮູ້ຈັກຮູ້ຈັກຮັບຟັງ  ຍອມຟັງຄຳຕິຊົມ  ຍອມຟັງຄວາມຈິ່ມ ຍອມຟັງບັນຫາ ຍອມຮັບຟັງຂໍ້ສເນີ ແລະດີໃຈຟັງເມື່ອມີສມາຊິກມາລາຍງານເຖິງຜົນສຳເຣັດ  ສິດຍາພິບານແລະຜູ້ນຳຄຣິສຈັກຕ້ອງເປັນຄົນ ຍອມຮັບຟັງຄວາມທຸກສຸກດິບຂອງສມາຊິກ ແລະຂອງຜູ້ຮ່ວມງານ  ນາຍຄຣູຜູ້ສອນຈະມີຫລາຍເຣື້ອງຫລາຍ ແນວມາເລົ່າສູ່ໃຫ້ຟັງ  ການຟັງຈະຊ່ວຍໃຫ້ເຮົາເຂົ້າໃຈເຖິງຖານະແລະບັນຫາຂອງເຂົາເຈົ້າ  ເມື່ອຟັງ ແລ້ວ ເຮັດໃຫ້ເຮົາຮູ້ຈັກບາດກ້າວຕໍ່ໄປວ່າຈະເຮັດຫຍັງ ຈະອົບຮົມຫຍັງເພື່ອຊ່ວຍສົ່ງເສີມເຂົາເຈົ້າຕໍ່ໄປ ແລະຢ່າງນ້ອຍທີ່ສຸດ ການຮູ້ຈັກຟັງເຮັດໃຫ້ຜູ້ທີ່ມາເລົ່າໃຫ້ຟັງນັ້ນເກີດຄວາມດີໃຈ ວ່າມີຮູ້ສືນໃຈເຂົາເຈົ້າ ເຂົາເຈົ້າບໍ່ໄດ້ເຮັດວຽກແຕ່ລຳພັງ  ແຕ່ມີຜູ້ນຳຮັບຟັງທີ່ຢູ່ຝ່າຍເຂົາເຈົ້າ

ສະຫງວນລິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without written permission of the writer.